
ມະໂຫສົດ
ເຫຼັ້ມ I

ມະໂຫສົດ

ຮຽບຮຽງ

ໂດຍ: ກອງບັນນາທິການ

ພິມເທື່ອທີ I

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ
ວຽງຈັນ 1991

ອຸທິນ ບຸນຍາວົງ

ແຕ້ມໂດຍ : ຄຳເພັດ ລັດຕະນະວົງ

ທະບຽນ.....໒໒໘............

ຈຳນວນ 2000 ຫົວ

ຄຳນຳ

ເລື່ອງມະໂຫສົດ ແມ່ນໜຶ່ງໃນຈຳນວນສິບຊາດຊາດົກທີ່ພະພຸດທະເຈົ້າໂຄຕົມໃຊ້ຊາດ ກ່ອນທີ່ຈະຕັດສະຣູ້ເປັນພະສຳມາສຳພຸດ ທະເຈົ້າ, ຢູ່ໃນສິບຊາດຊາດົກນັ້ນ ມີຊື່ຫຍໍ້ດັ່ງນີ້ ເຕ.ຊະ.ສຸ.ເນ.ມະພູ.ຈະ.ນາ.ວິ.ເວ. ຊາດທີ່ເກີດເປັນທ້າວມະໂຫສົດນັ້ນແມ່ນຢູ່ ອັນດັບທີ່ 5 ໃນຈຳນວນສິບຊາດ. ດັ່ງນັ້ນ, ເລື່ອງມະໂຫສົດຈຶ່ງຖື ວ່າເປັນເລື່ອງທີ່ດີມີຄະຕິປ່ຽມລົ້ນໄປດ້ວຍປັນຍາຄວາມຮູ້ ອັນສະ ຫລຽວສະຫລາດ ເປັນເລື່ອງທີ່ຍົກໃຫ້ເຫັນເຖິງຄຸນຄ່າຂອງປັນຍາວ່າເປັນສິ່ງປະເສີດ; ຄົນບູຮານລາວເຄີຍເວົ້າໄວ້ວ່າ " ເງິນເຕັມພາ ບໍ່ທໍ່ສະຫຍາເຕັມປູມ " ດ້ວຍເຫດນັ້ນມະໂຫສົດຈຶ່ງເປັນຍອດນັກປາດ ທີ່ສະຫລາດຫລັກແຫລມຜູ້ໜຶ່ງທີ່ສາມາດແກ້ໄຂເຫດການຕ່າງໆດ້ວຍສະຕິປັນຍາ.

ທາງສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສປປລາວ ເຫັນວ່າເປັນເລື່ອງອົບຮົມສັ່ງສອນໃຫ້ຄົນປະພຶດຕົນເປັນຄົນດີ ດ້ວຍ ການວາຈາໃຈ ທັງເປັນເລື່ອງຄວນແກ່ການສຶກສາຄົ້ນຄ້ວາ, ສະນັ້ນ ຈຶ່ງໄດ້ກວດແກ້ຮຽບຮຽງຈັດພິມຄືນໃໝ່ ຈາກຕົ້ນສະບັບເດີມທີ່ທ່ານ ອາ

ຈານມະຫາສິລາ ວິລະວົງ ໄດ້ລິຈະນາເອົາ ໄວ້ແລ້ວນັ້ນ.

ການກວດແກ້ຮຽບຮຽງຂອງທາງສຳນັກພິມ ໃນເທື່ອນີ້ແມ່ນ ໄດ້ ພະຍາຍາມແກ້ໄຂສະເພາະແຕ່ທາງດ້ານໄວຍາກອນ ເພື່ອໃຫ້ ສອດຄອງກັບຫລັກໄວຍາກອນໃນໄລຍະໃຫມ່, ສ່ວນເນື້ອໃນຈິດໃຈ ຂອງເລື່ອງທັງຫມົດນັ້ນ ພວກເຮົາໄດ້ຮັກສາໄວ້ຄືເກົ່າ.

ແຕ່ແນວໃດກໍຕາມ, ສະເພາະທາງດ້ານໄວຍາກອນນີ້ກໍຍັງບໍ່ທັນຖືວ່າ ໄດ້ແກ້ໄຂສົມບູນເທື່ອ ອາດຈະຍັງມີການຂາດຕົກບົກພ່ອງຢູ່, ຈຶ່ງຫວັງວ່າຈະໄດ້ຮັບຄຳຕຳນິສົ່ງຂ່າວຈາກທ່ານຜູ້ອ່ານ ແລະ ທ່ານຜູ້ ຮູ້ທັງຫລາຍ.

ວັນທີ

ສຳນັກພິມ ແລະ ຈຳຫນ່າຍປຶ້ມ ແຫ່ງລັດ

ສປປລາວ.

ຄຳນຳຂອງຜູ້ລຶດຈະບາ

ໜັງສືນິທານເລື່ອງ ມະໂຫສົດ ບັນດິດນີ້ ເປັນເລື່ອງທີ່ຄົນລາວແຕ່ບູຮານ ແລະ ຄົນຣຸ່ນເຖົ້າ ຣຸ່ນແກ່ໃນປັດຈຸບັນນີ້ ນັບຖືຫລາຍທັງຮູ້ຈັກເລື່ອງ ຮູ້ຈັກນິທານເປັນຢ່າງດີ ເພາະນິທານເລື່ອງນີ້ເປັນເລື່ອງທີ່ມີມາໃນຄຳພີ ພະໄຕຣປິດົກ ອັນເປັນໜັງສືທີ່ຍິ່ງໃຫຍ່ຂອງພຸດ ທະສາດສະໜາ.

ເລື່ອງມະໂຫສົດ ບັນດິດນີ້ ໃນຄຳພີພະໄຕຣປິດົກກ່າວວ່າ ເປັນເລື່ອງທີ່ພະເຈົ້າໂຄດົມທຽວໄຊ້ຊາດງໜຶ່ງ ໃນຈຳນວນສິບຊາດກ່ອນແຕ່ຈະໄດ້ມາເກີດຕັດສະຣູເປັນພະພຸດທະເຈົ້າ ໃນຊາດນີ້ ແລະເປັນເລື່ອງທີ່ກ່າວວ່າ ພະອົງໄດ້ພໍ່ເພັງປັນຍາ ປາລະມີໃຫ້ເຕັມບໍລິ ບູນດີ ມີປັນຍາຫລາຍກວ່າທຸກໆຊາດ ຈຶ່ງມີຄວາມເວົ້າ ສືບຕໍ່ກັນມາວ່າ "ມະໂຫສົດ ເປັນຍອດນັກປາດ ຂອງຜູ້ມີປັນຍາ " ຈົນຄົນ ລາວເຮົາ ເວລາໃຫ້ສິນໃຫ້ພອນກັນໄດ້ຖືເອົາ ເປັນຄະຕິພົດ ປະຈຳຊາດ

ວ່າ: "ໃຫ້ເຈົ້າມີປັນຍາຄື ທ້າວມະໂຫສົດ ໃຫ້ເຈົ້າມີໃຈອົດ ໃຈທົນ ຄື ທ້າວເຕມີ " ດັ່ງນີ້

ນິທານເລື່ອງ ທ້າວມະໂຫສົດ ນອກຈາກສະແດງວ່າ ມະໂຫສົດ ມີປັນຍາ ເລີດແລ້ວ ຍັງສະແດງເຖິງຄຸນຄວາມດີອີກຫລາຍຢ່າງເປັນຕົ້ນວ່າ ຄວາມກະຕັນຍູ ກະຕະເວທີ ຕໍ່ຜູ້ມີບຸນຄຸນ ຄວາມຊື່ສັດສຸດຈະລິດ ຄວາມເມດຕາ ກະລຸນາ ແລະ ຄວາມສະຫລາດອາດຫານຫຼາຍປະການ ທີ່ຄົນລາວ ແຕ່ບູຮານໄດ້ຟັງ ແລະ ນັບຖືມາ.

ແຕ່ວ່າ ນິທານເລື່ອງ ທ້າວມະໂຫສົດນີ້ ແຕ່ເດີມ ເປັນ ພາສາບາລີ ນັກປາດລາວແຕ່ບູຮານໄດ້ແປອອກມາເປັນພາສາລາວ ສຳລັບເທດໃຫ້ຄົນຟັງ ແຕ່ການແປຂອງນັກປາດ ຮຸ້ນເກົ່າກ່ອນນັ້ນ ເພິ່ນແປຍົກສັບ ຄືຍົກເອົາຄຳ ບາລີຂຶ້ນມາຄຳໜຶ່ງແລ້ວ ກໍແປຄຳລາວສະລັບກັນໄປ ເປັນຄວາມນິຍົມໃນສະໄໝເພິ່ນ ຄົນຜູ້ບໍ່ເຄີຍອ່ານເຄີຍ ຟັງທຳນອງແປຂອງເພິ່ນ ມີຄວາມເຂົ້າໃຈຍາກ ທັງພາສາ ສຳນວນ ທີ່ໃຊ້ ກໍເປັນສຳນວນເກົ່າແກ່ ແບບບູຮານ ຄົນສະໄໝໃໝ່ຫລື ເດັກນ້ອຍໃນສະໄໝນີ້ ອາດຈະບໍ່ເຂົ້າໃຈ ສະນັ້ນ ຂ້າພະເຈົ້າຈຶ່ງ ໄດ້ຮຽບຮຽງໃໝ່ ເປັນສຳນວນຄຳເວົ້າໃນປັດຈຸບັນ ທັງຕັດຄຳບາລີອອກທັງໝົດ ແຕ່ເນື້ອໃນໃຈຄວາມ ຍັງຄືເກົ່າຢູ່ຕາມເດີມ ທັງນີ້ ກໍເພື່ອໃຫ້ຄົນສະໄໝໃໝ່ ອ່ານເຂົ້າໃຈດີ ເພາະນິທານເລື່ອງ ມະ

ໂຫສົດນີ້ ເປັນເລື່ອງດີ ມີຄະຕິເຕືອນໃຈໃຫ້ຄົນປະພຶດດີ ແລະ ເປັນເລື່ອງທີ່ຄົນບູຣານ ໄດ້ຍົກຍ້ອງນັບຖືມາແລ້ວ ຈຶ່ງຄວນໃຫ້ເດັກ ນ້ອຍອະນຸຊົນຣຸ່ນຫລ້າໄດ້ອ່ານໄດ້ຟັງ ແລະ ຖືເອົາເປັນຄະຕິສຳລັບປະພຶດປະຕິບັດ ດັດຕົນໃຫ້ດຳເນີນໄປແຕ່ໃນທາງດີ ຕາມຕົວຢ່າງທີ່ທ້າວມະໂຫສົດ ໄດ້ດຳເນີນມາແລ້ວນັ້ນດ້ວຍ.

ສີລາ ວີຣະວົງສ໌

ມະໂຫສິດບັນດິດ ນັກປາດຜູ້ມີປັນຍາ

ຂໍ້ຄວາມເບື້ອງຕົ້ນ

ໃນຄັ້ງໜຶ່ງ ພະສຳມາ ສຳພຸດທະເຈົ້າ ປະທັບຢູ່ໃນວັດ ເຊຕະວັນ ໃກ້ງພະນະຄອນ ສາວັດຖີ ໃນວັນໜຶ່ງ ພິກຂຸທັງຫລາຍ ໄດ້ປະຊຸມ ສົນທະນາກັນຢູ່ສາລາໂຮງທຳ ໃນຂໍ້ສົນທະນາກັນນັ້ນ ມີຂໍ້ໜຶ່ງທີ່ພວກພະພິກຂຸປາລົບຂັ້ນວ່າ

" ໂອ ! ພະສຳມາ ສຳພຸດທະເຈົ້າ ຂອງພວກເຮົານີ້ ຊົງ ມີປັນຍາລ້ຳເລີດປະເສີດທີ່ສຸດ ພະອົງຢັ່ງຮູ້ (ນິໄສໃຈຄໍ) ບຸກຄົນ ທັງປວງທັ້ງໃນສາມໂລກ (ໂລກມະນຸດ ໂລກສວັນ ໂລກພົມ) ພະອົງມີປັນຍາ ເລິກເຊິ່ງ ສ້ຽມແຫລມວ່ອງໄວ (ທັນເຫດການ) ຕໍ່ຕ້ານຄຳເວົ້າ ມະແລມມະແຕມ ຫລືຄຳເວົ້າຂອງຄົນອື່ນໆໄດ້ໝົດ ມີພະ ໄທກະລຸນາ ທໍລະມານສັ່ງສອນ ພວກພານ (ຄົນຖືລັດທິ ສາດສະ ໜາພານ) ເຊັ່ນ ກູຕະທຳຕະພານ ເປັນຕົ້ນ ໃຫ້ມານັບຖື ໄດ້ທໍລະມານສັ່ງສອນນັກບວດ ໃນລັດທິອື່ນເຊັ່ນ ສັບພີເປັນຕົ້ນ ໃຫ້ເຫລື້ອມໃສໃນ

ສາດສະໜາຂອງພະອົງ ບໍ່ແມ່ນແຕ່ທໍ່ນັ້ນ ພະອົງເປັນນັກທໍລະ ມານ ທີ່ຍວດຍິ່ງ ໄດ້ຊົງທໍລະມານພະຍາ ມາລາທິລາດ ແລະ ອາວະ ລະ ກະຍັກຕະຫລອດຈົນ ພະການ ແລະ ພະພົມເປັນຕົ້ນ ໃຫ້ຫາຍພະຍົດ ຮ້າຍ ອີກທັງພວກໂຈນທີ່ໂຫດຮ້າຍທັງຫລາຍ ເຊັ່ນ ໂຈນ ອົງຄຸ ລິ ມານໃຫ້ຢຸດຈາກຄວາມເປັນໂຈນ ເຂົ້າມາບວດໃນພຸດທະສາດ ສະ ໜາ ຈົນໄດ້ມາຮັດເປັນພະອໍລະຫັນ ຫລຸດພົ້ນຈາກ ວັດຕະສົງສານ ໂອ່ ! ທ່ານທັງຫລາຍ ສົມເດັດພະບໍລົມ ສາດສະດາ ຂອງເຮົາ ນີ້ ຊົງມີພະປັນຍາເລີດລ້ຳທີ່ສຸດ.

ໃນຂະນະທີ່ພະສົງສົນທະນາກັນຢູ່ນັ້ນ ສົມເດັດພະພຸດທະເຈົ້າປະ ທັບຢູ່ໃນ ຄັນທະກຸຕິ ໄດ້ຍິນສຽງພະສົງ ສົນທະນາກັນດ້ວຍທິບ ພະ ໂສດ (ຫູທິບ) ຈຶ່ງສະເດັດໄປສາລາໂຮງທຳ ຕັດຖາມພິກຂຸທັງຫຼາຍ ແລະ ໄດ້ຮູ້ເລື່ອງນັ້ນແລ້ວ ຈຶ່ງຕັດວ່າ

" ນີ້ນະ ! ພິຊຸທັງຫລາຍ ເຮົາຕະຖາຄົດ ບໍ່ແມ່ນມີປັນຍາສ້ຽມ ແຫລມວ່ອງໄວ ແຕ່ໃນເວລານີ້ດອກ ! ແຕ່ຊາດກ່ອນໆ ເມື່ອເຮົາ ຍັງສ້າງປາລະມີຢູ່ນັ້ນ ກໍມີປັນວາສ້ຽມແຫລມວ່ອງໄວ ແກ້ໄຂປົດປ່ອຍ ຄົນທັງຫລາຍໃຫ້ພົ້ນໄພ ໄດ້ມາແລ້ວຄືກັນ "

ຕັດດັ່ງນີ້ແລ້ວ ກໍທົງດູດສະນິພາບ (ນິດບໍ່ປາກ) ພະສົງທັງຫຼາຍ ຢາກຟັງເລື່ອງແຕ່ກ່ອນ ພະອົງຈຶ່ງຕັດເລົ່າເລື່ອງ ທີ່ພະອົງເກີດເປັນ

ມະໂຫສົດ ໃຫ້ພະສົງທັງຫລາຍຟັງດັ່ງຕໍ່ໄປນີ້

ນິທານມະໂຫສິດຜູ້ມີປັນຍາ
ຂັ້ນຊີວິດເມື່ອຍັງເຍົາ

ແຕ່ປາງກ່ອນ ມີພະມະຫາກະສັດ ອົງໜຶ່ງ ຊົງພະນາມວ່າ ພະເຈົ້າວິເທຫະລາດ ສະເຫວີຍລາຊະສົມບັດຢູ່ນະຄອນມິຖິລາ ພະກະສັດອົງນີ້ ມີນັກປາດທີ່ຄອຍແນະນຳສັ່ງສອນໃນເລື່ອງຣິດບ້ານ ຄອງເມືອງຢູ່ 4 ຄົນ ຄື ທ່ານເສນະກະ 1 ທ່ານປະກຸຕະ 1 ທ່ານ ກາມິນ 1 ທ່ານເທວິນ 1 ຕໍ່ມາໃນຄືນໜຶ່ງ ພະເຈົ້າວິເທຫະລາດ ຊົງຝັນວ່າ ມີກອງໄຟ 4 ກອງເກີດຂຶ້ນໃນ 4 ແຈຂອງເດີ່ນພະ ລານຫລວງ ກອງໄຟ 4 ກອງນັ້ນລຸກຣຸ່ງຂຶ້ນສູງພຽງກຳແພງພະນະ ຄອນ ຄັນແລ້ວກໍມີກອງໄຟນ້ອຍກອງໜຶ່ງ ມີແສງທໍ່ກັບແສງແມງຫິ່ງ ຫ້ອຍ ເກີດຂຶ້ນໃນລະຫວ່າງກາງແຫ່ງກອງໄຟໃຫຍ່ທັງ 4 ກອງນັ້ນ ແລະບໍ່ເຫິງກອງໄຟນ້ອຍນັ້ນກໍລຸກຣຸ່ງຂຶ້ນຖ້ວມກອງໄຟໃຫຍ່ 4 ກອງນັ້ນເສຍ ແສງຂອງກອງໄຟນ້ອຍຣຸ່ງໄປທົ່ວທິບ ແລະ ແສງນັ້ນສະຫວ່າງ ທີ່ສຸດ ແມ່ນແຕ່ຂອງນ້ອຍໆທີ່ໃນພັກກາດຕົກລົງໃສ່ແຜ່ນດິນກໍເຫັນຄັກ ຄົນທັງຫລາຍພາກັນເອົາດອກໄມ້ຂອງຫອມມາບູຊາກອງໄຟນັ້ນເປັນອັນມາກ

ແລະ ໝູຄົນທັງຫລາຍທີ່ຍ່າງກາຍໄປມາ ໃນລະຫວ່າງແປວໄຟນັ້ນກໍບໍ່ເອົ້າບໍ່ຮ້ອນເລີຍ.

ໃນຄືນທີ່ພະເຈົ້າວິເທຫະລາດ ຊົງຝັນນີ້ ເປັນຄືນທີ່ທ້າວມະ ໂຫສົດ ເຂົ້າຖືປະຕິສົນທິໃນທ້ອງມານດາ ສະນັ້ນ ເມື່ອພະເຈົ້າວິເທຫະລາດ ຕື່ນບັນທົມ ກໍຕົກພະໄທຍ້ານກົວໃນຄວາມຝັນ ບໍ່ອາດຈະບັນທົມຕໍ່ໄປອີກໄດ້ ຈຶ່ງຊົງນັ່ງຄິດຈົນຮອດແຈ້ງ ພໍເຖິງເວລາພະອາທິດ ສະຫວ່າງຂຶ້ນມາແລ້ວ ນັກປາດທັງ 4 ຄົນ ກໍເຂົ້າໄປເຝົ້າທູນຖາມເຖິງສຸກຂະໄສຍາດ (ນອນສະບາຍ) ຕາມລາຊະປະເພນີວ່າ " ໂດຍທານໂທດ" ຄືນນີ້ພະບາດເປັນເຈົ້າ ບັນທົມ[1] ເປັນສຸກສະບາຍ ຫລືປະການໃດ ຂ້ານ້ອຍ

ພະເຈົ້າວິເທຫະລາດຕັດວ່າ " ບໍ່ເປັນສຸກເລີຍອາຈານ! ເພາະເຮົາຝັນປະຫລາດຫລາຍແທ້ໆ " ພວກນັກປາດທູນຖາມ "ຝັນ ແນວໃດ ຂ້ານ້ອຍ " ພະເຈົ້າວິເທຫະລາດ ກໍເລົ່າຄວາມຝັນໃຫ້ພວກນັກປາດຟັງທຸກປະການ ໃນຂະນະນັ້ນ ອາຈານເສນະກະຈຶ່ງທູນ ທວາຍ ຖວາຍວ່າ " ເທວະ ຂໍພະອົງຢ່າຕົກພະໄທຍ້ານກົວເລີຍ ຄວາມຝັນຂອງພະອົງນີ້ ເປັນສຸພະມັງຄະລະສະຫວັດດີ ແກ່ພະອົງຢ່າງເລີດລົ້ນ ຄື ພະອົງຈະໄດ້ນັກປາດອີກຜູ້ໜຶ່ງເປັນຄົນທີ່ 5 ແລະ ນັກປາດ ຄົນ

---

1 : ບັນທົມ : ນອນ

ທີ 5 ນີ້ ອາດຈະປົກກວມພວກຂ້າພະບາດທັງ 4 ເສຍຄືກັນກັບກອງໄຟນ້ອຍທໍ່ແສງຫິງຫ້ອຍ ແຕ່ຫາກມີແສງຮຸ່ງເຮືອງຖ້ວມກອງໄຟ ໃຫຍ່ທັງ 4 ກອງ ສະນັ້ນ ນັກປາດຜູ້ນີ້ ຈະບໍ່ມີຜູ້ໃດສະເໝີໄດ້ ພະ ລາຊາຕັດຖາມ " ນີ້ທ່ານອາຈານນັກປາດຄົນທີ່ວ່ານີ້ ເວລານີ້ຢູ່ໃສ ?"

ເສນະກະທູນ " ໂດຍທານໂທດ " ນັກປາດຄົນນັ້ນ ເຫັນ ຈະຫາກໍ່ມາຖືປະຕິສົນທິໃນທ້ອງມານດາໃນຄືນນີ້ ຫລືບໍ່ດັ່ງນັ້ນ ກໍ່ແມ່ນຫາກໍ່ປະສູດຈາກທ້ອງຂອງມານດາ ໃນຕອນຂ້ອນແຈ້ງຄືນນີ້ ຂ້ານ້ອຍຄວາມທີ່ອາຈານເສນະກະທວາຍນີ້ ພໍປານກັນກັບເຫັນດ້ວຍຕາທິບແຕ່ວັນນັ້ນມາ ພະເຈົ້າວິເທຫະລາດ ກໍ່ຊົງລະນຶກເຖິງຄຳທວາຍຂອງອາຈານຢູ່ສະເໝີໆ.

ຢູ່ອ້ອມໆເມືອງມິຖິລາມະຫານະຄອນນັ້ນ ມີບ້ານໃຫຍ່ໆຢູ່ນອກຜັກຕູກຳແພງພະນະຄອນອອກໄປທັງ 4 ທິດ ຄືທາງທິດໃຕ້ມີບ້ານ ໜຶ່ງຊື່ວ່າ ບ້ານທັກຂິນ, ທາງທິດຕາວັນຕົກມີບ້ານໜຶ່ງຊື່ວ່າ ບ້ານປັດສິມທາງທິດເໜືອມີບ້ານໜຶ່ງຊື່ວ່າ ບ້ານອຸດອນ, ທາງທິດຕາວັນ ອອກມີບ້ານໜຶ່ງຊື່ວ່າ ບ້ານປາຈີນ. ໃນບ້ານປາຈີນນີ້ເອງ ມີເສດຖີຢູ່ຄົນໜຶ່ງ ຊື່ ສີລິວັດທະ ເມຍຂອງທ່ານ ສີລິວັດທະ ຊື່ວ່າ ນາງສູມະນະເທວີ.

ໃນປາງນັ້ນ ທ້າວມະໂຫສົດ ໂພທິສັດ ໄດ້ຈຸຕິຈາກສະຫວັນ ຊັ້ນ

ດາວະດຶງ ລົງມາຖືປະຕິສົນທິ ໃນທ້ອງຂອງນາງສຸມະນະເທວີ ໃນຄືນພະເຈົ້າວິເທຫະລາດຝັນນັ້ນເອງ ນອກຈາກນີ້ ເທວະບຸດ ອີກ 1000 ຕົນ ກໍລົງມາເກີດ ໃນທ້ອງຂອງພະລິຍາ ແຫ່ງຄະຫະບໍດີໃນບ້ານນັ້ນຕັ້ງພັນຄົນ ໃນຄືນດຽວກັນນັ້ນ ນາງສຸມະນະເທວີ ເມື່ອ ຊົງຄັບມາຄົບຖ້ວນ 10 ເດືອນແລ້ວ ກໍປະສູດພະໂທທິສັດ ອອກມາ ມີສະລີລະຮ່າງກາຍງາມ ບໍລິສຸດຜຸດຜ່ອງ ປານທອງຄຳ ແລະ ເວລາປະສູດນັ້ນ ກໍອອກງ່າຍທີ່ສຸດ ພໍປານນ້ຳໄຫລຕົກຈາກໜ້າຜາ.

ໃນຂະນະທີ່ມະໂຫສົດພົ້ນຈາກທ້ອງແມ່ອອກມານັ້ນ ພະອິນໄດສະເດັດລົງມາຈາກສະຫວັນຊັ້ນດາວະດຶງ ເອົາແທ່ງຢາທິບມາຢັດໃສ່ ມືມະໂຫສົດໄວ້ ໂດຍບໍ່ມີຜູ້ໃດເຫັນ ມະໂຫສົດໄດ້ ເອົາແທ່ງຢາທິບນັ້ນຍື່ນໃຫ້ແມ່ ພ້ອມກັບກ່າວວ່າ : " ນີ້ແມ່ເອົາຢານີ້ໄວ້ ຖ້າຜູ້ໃດເປັນພະຍາດອັນໃດໆກໍຕາມ ຈົ່ງເອົາຢານີ້ໃສ່ " (ພະໂພທິສັດເກີດ ມາແລະ ປາກໄດ້ໂລດມີຢູ່ສາມຊາດຄື ຊາດເປັນມະໂຫສົດນີ້ 1 ຊາດເກີດເປັນພະເວດ 1 ແລະ ຊາດສຸດທ້າຍເກີດເປັນທ້າວສິທາດ 1).

ສ່ວນສິລິວັດທະ ເສດຖີ ຜູ້ເປັນບິດາ ຂອງທ້າວມະໂຫສົດ ນັ້ນເປັນພະຍາດປວດຫົວມາໄດ້ 7 ປີແລວ ເອົາຢາເຍື່ອງໃດໃສ່ກໍບໍ່ ດີຄັນໄດ້ເຫັນແທ່ງຢາທິບຂອງລູກ ກໍມີໃຈຊື່ນບານຄິດວ່າ ລູກຂອງເຮົານີ້ຄົງເປັນຜູ້ມີບຸນວາດສະໜາແນ່ນອນ ເພາະພໍແຕ່ພົ້ນທ້ອງອອກມາກໍ

ເວົ້ານຳແມ່ໄດ້ ແລະ ຖືຢາມານຳພ້ອມ ອັນຢາຂອງບຸກຄົນຜູ້ມີ ບຸນ ໃຫ້ນີ້ ຕ້ອງສັກສິດແນ່ນອນ ຄິດແລ້ວຈຶ່ງເອົາຢານັ້ນຝົນທາຫນ້າ ພາກ ພະຍາດປວດຫົວອັນເປັນມາຕັ້ງ 7 ປີນັ້ນ ກໍຫາຍໃນທັນໃດ ພໍ ປານ ນ້ຳຝົ້ງອອກຈາກໃບບົວ ແຕ່ນັ້ນມາ ກໍລືຊາປາກົດໄປທົ່ວເມືອງ ຜູ້ໃດ ເຈັບເປັນອັນໃດ ກໍມາຂໍເອົາຢານັ້ນໃສ່ ອາໄສເຫດນີ້ ທ່ານ ເສດຖີ ຈຶ່ງໃສ່ຊື່ລູກຊາຍຂອງຕົນວ່າ ມະໂຫສົດ ດ້ວຍປະການດັ່ງນີ້.

ທ່ານເສດຖີ ຮູ້ວ່າ ໃນວັນມະໂຫສົດເກີດນັ້ນ ກໍມີລູກຊາວ ບ້ານ ເກີດພ້ອມຮ່ວມວັນກັນຕັ້ງພັນຄົນ ສະນັ້ນ ທ່ານເສດຖີ ຈຶ່ງໄດ້ຈັດແຈງ ຫາແມ່ນົມໃຫ້ເດັກເຫລົ່ານັ້ນ ແລະ ໃຫ້ຊ່າງທຳເຄື່ອງເອ້ປະດັບ ໃຫ້ ທຸກໆຄົນ ເດັກພວກນັ້ນນັບແຕ່ເກີດມາ ໄດ້ເປັນຫມູ່ກິນຫມູ່ຫລິ້ນ ຮ່ວມ ກັນກັບທ້າວມະໂຫສົດ ຈົນອາຍຸໄດ້ 7 ປີ ໃນເວລາຕໍ່ມາ ມະໂຫສົດ ໄປຫລິ້ນຢູ່ເດີ່ນປີນກັບເດັກນ້ອຍພັນຄົນນັ້ນ ໄດ້ເຫັນພວກຫມູ່ ເພື່ອນ ຕາກແດດ ຕາກລົມ ໄດ້ຮັບຄວາມລຳບາກຫລາຍ ລາງເທື່ອຊ້າງ ມ້າ ແລ່ນຜ່າເດີ່ນນັ້ນມາ ພວກເດັກນ້ອຍກໍພາກັນແຕກຕື່ນ ແລ່ນຕຳກັນຈົນ ລົ້ມກໍມີ.

ຢູ່ມາໃນວັນຫນຶ່ງ ເກີດຟ້າລົມຝົນຕົກຫ່າໃຫຍ່ ໃນຂະນະທີ່ ພວມ ຫລິ້ນຢູ່ກາງເດີ່ນ ທ້າວມະໂຫສົດນັ້ນ ເປັນຜູ້ມີເຫື່ອແຮງທໍ່ກັບ ຊ້າງ ສານ ພໍເຫັນຝົນຕົກກໍຟ້າວແລ່ນເຂົ້າສາລາຫລັງຫນຶ່ງທີ່ຢູ່ໃກ້ໆຫັ້ນພວກ

ເດັກນ້ອຍທັງຫລາຍ ກໍແລ່ນຕິດຕາມໄປ ຢຽບຕີນກັນກໍມີ ຕຳກັນລົ້ມກໍມີ ຈົນຫົວເຂົ່າແຕກ ຫນ້າພາກເລີກໄປຫລາຍຄົນ ມະໂຫສົດໄດ້ເຫັນພວກຫມູ່ຄູ່ໄດ້ຮັບຄວາມລຳບາກ ກໍຄິດຢາກເຮັດສາລາ ແລະເດີ່ນຫຼິ້ນໄວ້ຈຳເພາະພວກຂອງຕົນ ຈຶ່ງບອກພວກເດັກນ້ອຍທີ່ເປັນເພື່ອນ ພັນຄົນນັ້ນ ໃຫ້ເອົາເງິນມາຄົນລະ 5 ຕຳລຶງ (ຕຳລຶງ 1 ທໍ່ກັບ 4 ບາດ) ມະໂຫສົດທ້ອນໂຮມເງິນໄດ້ແລ້ວ ຈຶ່ງຮຽກນາຍຊ່າງມາບອກໃຫ້ເຮັດສາລາສຳລັບ ເປັນບ່ອນຫລິ້ນ ແລ້ວກໍມອບເງິນພັນຕຳລຶງນັ້ນໃຫ້ນາຍຊ່າງໆ ໄດ້ຮັບເງິນແລ້ວ ກໍໄປຈັດການພາບພື້ນທີ່ ໃນ ບ່ອນມະໂຫສົດບອກເຂົາ ໄດ້ຂຶງເຊືອກກະແຜນຜັງຂອງສາລາຕາມຄວາມຊຳນິຊຳນານຂອງເຂົາ ມະໂຫສົດ ເຫັນນາຍຊ່າງຂຶງເຊືອກບໍ່ ຖືກຕ້ອງຕາມວິທີການ ແລະ ບໍ່ເປັນທີ່ພໍໃຈ ຈຶ່ງຈັບເອົາເຊືອກມາ ຂຶງເອງ ເຊືອກທີ່ມະໂຫສົດຂຶງນັ້ນ ພໍປານກັນກັບພະວິສະກຳ (ວິສະວະກອນຊັ້ນຍອດ) ລົງມາຂຶງ ຊຶ່ງນາຍຊ່າງນັ້ນບໍ່ສາມາດເຮັດໄດ້ ສະນັ້ນໃນການສ້າງສາລາຄາວນັ້ນ ມະໂຫສົດຕ້ອງເປັນນາຍຊ່າງ ເອງຄອຍບອກຄອຍແນະນຳທຸກສິ່ງທຸກຢ່າງ ນາຍຊ່າງນັ້ນເປັນແຕ່ ຄອຍເຮັດຕາມຄວາມຄິດຂອງມະໂຫສົດທໍ່ນັ້ນເອງ.

ມະໂຫສົດ ໃຫ້ເຮັດສາລາຫລັງນັ້ນ ເປັນພັກເປັນຊັ້ນຫລາຍ ຊັ້ນຫລາຍພັນ ມີຫ້ອງມີສ່ວນຄົບບໍລິບຸນ ຄືບ່ອນສຳລັບໃຫ້ສະມະນະ ພາມ

ມາພັກພາອາໄສ ເຮັດໄວ້ຂ້າງໜຶ່ງ ບ່ອນສຳລັບເກັບມ້ຽນສິ່ງຂອງໆ ພວກພໍ່ຄ້າ ທີ່ເດີນທາງມາພັກເຊົາ ເຮັດໄວ້ຂ້າງໜຶ່ງ ບ່ອນທັງຫຼາຍ ທີ່ກ່າວນີ້ ລ້ວນແຕ່ມີໜ້າມຸກຈຸດຍື່ນອອກຢ່າງວິຈິດພິດສະດານ, ເດີ່ນຫຼິ້ນກໍມີຢູ່ໃນສາລາ ຫ້ອງປະຊຸມກໍມີຢູ່ໃນນັ້ນຄົບບໍລິບຸນ ດັ່ງແລ້ວ ມະໂຫສົດ ຈຶ່ງໃຫ້ຊ່າງແຕ້ມມາແຕ້ມຮູບ ແລະ ລົງລາຍຕ່າງໆຢ່າງ ລະອຽດງົດງາມປະຫລາດຕາ ຕາມຄວາມຄິດຂອງຕົນ ຫ້ອງປະຊຸມແລະ ລົງລາຍງາມພິປານວ່າ ທໍ່ທຳມະສະພາອັນມີຢູ່ໃນສະຫວັນຊັ້ນດາວະດຶງ ນອກຈາກນີ້ ຍັງໃຫ້ຂຸດສະໄວ້ສຳລັບຈະໄດ້ໃຊ້ນ້ຳອາບກິນ ຕາມສະບາຍ ທີ່ສະນັ້ນ ມະໂຫສົດ ໃຫ້ຊ່າງດິນຈີ່ເອົາດິນຈີ່ມາກໍ່ເປັນ ຄົດໄດ້ເຖິງພັນຄົດ ແລະ ມີທ່າຂຶ້ນລົງໄດ້ເຖິງຮ້ອຍທ່າ ພາຍໃນສະກໍໃຫ້ປູກດອກບົວຕ່າງໆ ໄວ້ທຸກຊະນິດ ຕາມຂອບສະກໍໃຫ້ປູກຕົ້ນໄມ້ທີ່ເປັນດອກເປັນໝາກໄວ້ອ້ອມຮອບ ຈົນປາກົດຄ້າຍຄືກັບວ່າ ສວນດອກໄມ້ອັນຮຽກຊື່ວ່າ ນັນທະວັນ ອຸດທະຍານແຫ່ງພະອິນ ກໍປານກັນ ບັນດາຄົນທຸກຍາກປາກໝອງມາເຖິງສາລານັ້ນແລ້ວ ກໍພາກັນເຂົ້າ ພັກພາອາໄສຢູ່ກິນຫລັບນອນຕາມສະບາຍ ຜູ້ໃດວິວາດຜິດຖຽງກັນ ເຂົ້າມາເຖິງສາລານັ້ນ ມະໂຫສົດຊ່ອຍອົບຮົມຕັດສິນໃຫ້ເຫັນຜິດເຫັນ ແມ່ນຕາມລະບຽບແບບແຜນຮີດຄອງປະເພນີທຸກປະການ ໃນກາລະເວລານັ້ນ ຈຶ່ງພາກົດເປັນຄືກັນກັບວ່າ ພະພຸດທະເຈົ້າໄດ້ມາອຸບັດຕັດສະ ຮູ້

ຂຶ້ນແລ້ວໃນໂລກ.

ກ່າວເຖິງ ພະເຈົ້າວິເທຫະລາດ ໃນວັນໜຶ່ງ ພະອົງຄຶດ ເຖິງ ຄຳເວົ້າຂອງເສນະກະທີ່ທວາຍໄວ້ ຈຶ່ງໃຊ້ອຳມາດ 4 ຄົນອອກ ໄປ ສືບສວນສຶ້ງຊອມເບິ່ງຜູ້ຈະເປັນນັກປາດຄົນຖ້ວນ 5 ຕາມບ້ານໃຫ່ຍໆ ທັງ 4 ບ້ານທີ່ຢູ່ໃນ 4 ທິດແຫ່ງພົກຕູ ພະນະຄອນນັ້ນ ອຳມາດສາມ ຄົນທີ່ອອກໄປສຶ້ງຊອມໃນບ້ານທັງ 3 ນັ້ນ ບໍ່ໄດ້ເຫັນສິ່ງໃດປະຫລາດ ຜິດສັງເກດ ສ່ວນອຳມາດຜູ້ອອກໄປສຶ້ງຊອມທາງດ້ານຕາເວັນ ອອກ ນັ້ນ ໄດ້ໄປເຫັນສາລາສະນ້ຳ ແລະ ສວນດອກໄມ້ ພົນໄມ້ທີ່ ມະໂຫ ສົດສ້າງໄວ້ ງົດງາມປະຫລາດເປັນໜ້າອັດສະຈັນ ກໍຄຶດໃນໃຈ ວ່າ "ສາລາສະນ້ຳ ແລະ ສວນທີ່ເຮັດເປັນລະບຽບສວຍງາມປານນີ້ ຄົງ ຈະເປັນຂອງຄົນມີປັນຍາບອກໃຫ້ເຮັດ "ຄຶດແລ້ວ ຈຶ່ງຖາມຄົນຢູ່ ໃນ ແຖວນັ້ນວ່າ " ເຮີຍ ? ນາຍຊ່າງຄົນໃດ ? ເຮັດສາລາຫລັງນີ້ "

ພວກຊາວບ້ານບອກວ່າ "ນາຍຊ່າງບໍ່ໄດ້ເຮັດຕາມຄວາມ ຄຶດ ຂອງນາຍຊ່າງເອງດອກ ແຕ່ໄດ້ເຮັດຕາມຄວາມຄຶດຄວາມບອກຂອງ ທ້າວມະໂຫສົດ. ອຳມາດຖາມວ່າ " ມະໂຫສົດ ອາຍຸໄດ້ທໍ່ໃດ?" ໄດ້ 7 ປີເຕັມນີ້ແລ້ວ ພວກຊາວບ້ານບອກ ອຳມາດຜູ້ນັ້ນ ຈຶ່ງມາຄຶດ ຄຳ ນວນເບິ່ງ ນັບແຕ່ວັນພະມະຫາກະສັດຝັນມາ ກໍເຂົ້າໃຈໄດ້ວ່າ "ມະ ໂຫສົດນີ້ ຄົງຈະເປັນ ນັກປາດທີ່ມະຫາກະສັດຝັນແນ່ນອນ ຄັກແນ່ໃຈ

ດັ່ງນີ້ແລ້ວຈຶ່ງສົ່ງຂ່າວເຂົ້າໄປທູນພະເຈົ້າວິເທຫະລາດ ມີຂໍ້ຄວາມວ່າ " ມີເດັກນ້ອຍຜູ້ໜຶ່ງ ຊື່ມະໂຫສົດ ເປັນບຸດຊາຍຂອງສິລິວັດທະ ນະ ເສດຖີ ມີປັນຍາສະຫລາດ ໄດ້ສ້າງສາລາ ແລະ ສວນເປັນສິ່ງ ທີ່ ຄວນງຶດງໍ້ເປັນອັນມາກ ແລະ ເດັກນ້ອຍຜູ້ນັ້ນຫາກໍມີອາຍຸໄດ້ 7 ປີ ເຕັມໆ ພໍດີກັບວັນທີ່ພະອົງ ຊົງພະສຸບິນ ສະນັ້ນຈະໃຫ້ຂ້າພະບາດຮັບ ເອົານັກປາດຜູ້ນີ້ເຂົ້າໄປຫລືປະການໃດ ?"

ພະເຈົ້າວິເທຫະລາດ ໄດ້ຊົງຟັງຂ່າວນີ້ພະໄທໂສມະນັດ ເປັນທີ່ສຸດ ຈຶ່ງຕັດປຶກສາກັບອາຈານເສນະກະ ອາຈານເສນະກະນັ້ນຄິດວ່າ ຖ້ານຈະຂາບທູນໃຫ້ຮັບເຂົ້າມາ ກໍຢ້ານວ່າຕົນເອງຈະຂາດລາບ ຈຶ່ງ ຂາບທູນຄັດຄ້ານໄວ້ວ່າ " ຂໍໃຫ້ພະອົງງົດໄວ້ກ່ອນ ພິຈາລະນາ ສົ່ງ ຊອມເບິ່ງໄປອີກກ່ອນ ເພາະວ່າການເຮັດສາລາ ແລະ ສວນ ນັ້ນ ໃຜໆກໍເຮັດໄດ້ " ພະເຈົ້າວິເທຫະລາດ ໄດ້ຟັງອາຈານເສນະ ກະ ຄັດຄ້ານ ຈຶ່ງສົ່ງນາຍນັກການ (ຄົນໃຊ້ທີ່ສະນິດ) ອອກໄປບອກ ອຳ ມາດຜູ້ນັ້ນວ່າ ທ່ານຈົ່ງຢູ່ໃນບ້ານນັ້ນກ່ອນຢ່າຟ້າວກັບມາສົ່ງຊອມເບິ່ງ ປັນຍາຂອງມະໂຫສົດຕໍ່ໄປອີກ ຖ້າເຫັນວິເສດປະຫລາດແນວໃດແລ້ວ ຈຶ່ງສົ່ງຂ່າວມາໃຫ້ເຮົາຮູ້ " ອຳມາດຜູ້ນັ້ນ ກໍຄອຍຢູ່ໃນບ້ານນັ້ນຕໍ່ໄປ

ບັນຫາແຫລວຄາບຊີ້ນ

ໃນຄາວນັ້ນ ມີແຫລວຕົວໜຶ່ງ ຄາບຕ່ອນຊີ້ນ ບິນມາທາງ ອາກາດ ພວກເດັກນ້ອຍຕັ້ງພັນທີ່ເປັນບໍລິວານຂອງມະໂຫສົດ ເຫັນກໍພາກັນແລ່ນໄລ່ລັດທາງນັ້ນທາງນີ້ ປະສົງຈະໃຫ້ແຫລວວາງຕ່ອນຊີ້ນທາງຕານັ້ນແນມແຕ່ແຫລວ ທາງຕີນນັ້ນແລ່ນ ຈຶ່ງພາໃຫ້ຕຳຕໍຕຳຫີນ ລາງຄົນກໍຢຽບຕີນກັນລົ້ມເປັນລະເນລະນາດ ໄດ້ຮັບຄວາມເຈັບປວດ ໄປຕາມໆກັນ ທ້າວມະໂຫສົດເຫັນດັ່ງນັ້ນ ຈຶ່ງລຸກແລ່ນໄປໄລ່ນຳເອົາແຕ່ບໍ່ໄດ້ແຫນໜ້າຂຶ້ນຟ້າຫລຽວເບິ່ງແຫລວ ຫລຽວເບິ່ງແຕ່ເງົາແຫລວທີ່ເຫັນຢູ່ທາງດິນ, ມະໂຫສົດແລ່ນໄວພໍປານລົມພັດ ໂດຍຢຽບ ເງົາຂອງແຫລວ ແລ້ວກໍຕົບມືຮ້ອງນາບຂຶ້ນໜັກແຮງ ສຽງຮ້ອງຂອງ ມະໂຫສົດນັ້ນ ເປັນຄືວ່າແທງເຂົ້າໄປໃນຫົວອົກຂອງແຫລວໆຕົກໃຈ ຕື່ນກໍເລີຍວາງຕ່ອນຊີ້ນນັ້ນລົງມາ ມະໂຫສົດ ເອົາມືຮັບ ຕ່ອນຊີ້ນນັ້ນໄວ້ໄດ້ໂດຍບໍ່ໃຫ້ຕົກດິນ ຄົນທັງຫລາຍເຫັນດັ່ງນັ້ນ ກໍພາກັນຮິບໂຮສັນລະເສີນຄວາມສະຫລາດ ແລະ ຄວາມສາມາດຂອງມະໂຫສົດ ເປັນແຊວງ ອຳມາດຜູ້ນັ້ນ ໄດ້ເຫັນກໍສົ່ງຂ່າວເຂົ້າໄປທູນພະລາຊາ ອາຈານເສນະກະ ກໍທູນຄັດຄ້ານໄວ້ຄືແຕ່ກ່ອນ.

ບັນຫາຂະໂມຍລັກງົວ

ຢູ່ມາໃນວັນໜຶ່ງ ມີຊາຍຄົນໜຶ່ງຢູ່ບ້ານປາຈິມ ໄປຊື້ງົວມາຈາກບ້ານໜຶ່ງ ຄັນໄດ້ງົວແລ້ວ ກໍຈູງງົວມາເຖິງບ່ອນໜຶ່ງ ເລີຍປ່ອຍງົວໃຫ້ກິນຫຍ້າ ສ່ວນຕົນເອງໄປເຊົາແຮງຢູ່ໃຕ້ຕົ້ນໄມ້ ແລ້ວກໍເລີຍເຄີ້ມຫລັບໄປໃນຂະນະນັ້ນ ມີໂຈນຄົນໜຶ່ງ ມາລັກເອົາງົວຂອງຊາຍ ຄົນນັ້ນໄປ ຊາຍຄົນນັ້ນຕື່ນຂຶ້ນຫລຽວເຫັນໂຈນກຳລັງຈູງງົວໄປ ກໍ ຟ້າວແລ່ນຕິດຕາມໄປ ພໍທັນແລ້ວກໍດຶງເອົາງົວຕົນໄວ້ ຝ່າຍໂຈນຖຽງ ວ່າ "ງົວຂອງກູເປັນຫຍັງມຶງຈຶ່ງມາດຶງໄວ້ " ເຈົ້າຂອງງົວກໍຖຽງ ວ່າ " ງົວຂອງກູມຶງມາລັກໄປ " ຄົນທັງສອງຖຽງກັນມາເຖິງສາ ລາຂອງມະໂຫສົດໆ ຈຶ່ງບອກໃຫ້ຄົນທັງສອງເຂົ້າມາໃນສາລາມະໂຫສົດ ພໍແລເຫັນຄົນທັງສອງກໍຮູ້ທັນທີວ່າໃຜເປັນໂຈນ ໃຜເປັນເຈົ້າຂອງງົວ ແຕ່ມີຄວາມປະສົງຈະໃຫ້ຄົນທັງຫລາຍຮູ້ແຈ້ງໃນເຫດການນັ້ນຈຶ່ງຖາມຜູ້ເປັນໂຈນນັ້ນວ່າ "ເຈົ້າໄດ້ງົວຕົວນີ້ມາແຕ່ໃສ? " ໂຈນບອກວ່າ" ງົວຕົວນີ້ເປັນງົວລູກຄອກຂອງຂ້າພະເຈົ້າເອງ"

ມະໂຫສົດ " ເຈົ້າເອົາຫຍັງໃຫ້ມັນກິນ "

ໂຈນບອກ " ຂ້າພະເຈົ້າເອົາເຂົ້າປຽກໃຫ້ມັນກິນ ແລະ ຫມາກຖົ່ວກໍໃຫ້ກິນແດ່ "

ມະໂຫສົດ ໃຫ້ບັນທຶກຄຳບອກຂອງໂຈນນັ້ນໄວ້ແລ້ວ ຖາມຊາຍຜູ້ເປັນເຈົ້າຂອງງົວວ່າ " ງົວຕົວນີ້ ເຈົ້າໄດ້ມາແຕ່ໃສ ? " ເຈົ້າຂອງງົວບອກວ່າ " ຂ້າພະເຈົ້າ ຊື້ມາຈາກບ້ານນັ້ນ ຊື້ຈາກຄົນຊື່ນັ້ນ ມີຊາວບ້ານຮູ້ເຫັນນຳຫລາຍຄົນ "

ມະໂຫສົດ " ເຈົ້າເອົາຫຍັງໃຫ້ມັນກິນ "

ເຈົ້າຂອງງົວບອກ " ຂ້າພະເຈົ້າເປັນຄົນທຸກຍາກ ບໍ່ມີຂອງດີໆ ໃຫ້ມັນກິນ ໃຫ້ກິນແຕ່ຫຍ້າເທົ່ານັ້ນ, ທ້າວມະໂຫສົດໄດ້ບັນທຶກຖ້ອຍ ຄຳຂອງຊາຍຄົນນັ້ນໄວ້ແລ້ວ ຈຶ່ງໃຫ້ຄົນໄປເອົາໃບປະຍົງ (1) ມາຍ່ອງໃສ່ນ້ຳຮ່າຍເຂົ້າປາກງົວໃຫ້ກິນ, ງົວໄດ້ກິນນ້ຳ ໃບປະຍົງແລ້ວກໍຮາກອອກມາມີແຕ່ຫຍ້າແນວດຽວ, ມະໂຫສົດ ຈຶ່ງຕັດສິນໃຫ້ເຈົ້າຂອງ ງົວໄດ້ງົວຂອງຕົນຄືນ, ຄົນທັງຫລາຍກໍພາກັນທຸມຕີຕະຖີບຊາຍໂຈນ ນັ້ນຈົນເກືອບຕາຍແລ້ວກໍປ່ອຍໄປ.

---

(1) ປະຍົງ ເປັນຕົ້ນໄມ້ຊະນິດໜຶ່ງ ຈຳພວກໄມ້ພຸ່ມຕົ້ນແລະ ໃບຄ້າຍຄືຕົ້ນດອກແກ້ວ ດອກເປັນຊໍ່ສີເຫລືອງ ໃບໃຊ້ເຮັດຢາໃຫ້ ຮາກ ປະຍົງມາຈາກຄຳບາລີວ່າປິຍັງຄູ ສັນສະກິດວ່າ ປະລິຍັງ ຄູ.

ບັນຫາເລື່ອງຍິງທຸກຍາກ

ມີຍິງທຸກຍາກຜູ້ໜຶ່ງມາອາບນ້ຳໃນສະ ຂອງມະໂຫສົດເມື່ອ ຈະລົງອາບໄດ້ປົດເຄື່ອງເອ້ອັນເຮັດດ້ວຍຝ້າຍສີຕ່າງໆອອກໄວ້ເທິງ ຜ້າຫົ່ມຂອງຕົນ ແລ້ວກໍລົງອາບນ້ຳ ໃນຂະນະນັ້ນ ມີຍິງສາວຄົນ ໜຶ່ງເດີນມາເຫັນເຄື່ອງເອ້ ຂອງຍິງຄົນທຸກນັ້ນ ກໍຄິດຢາກໄດ້ຈຶ່ງຫຍິບຂຶ້ນມາເບິ່ງ ທາງປາກກໍຮ້ອງຖາມວ່າ " ເອື້ອຍເຄື່ອງເອ້ຂອງເຈົ້າອັນນີ້ງາມແທ້ໆນໍ່ ເຈົ້າເຮັດໝົດຝ້າຍທໍ່ໃດ ? ຂ້ອຍຢາກເຮັດຄືກັນ ນີ້ຂ້ອຍຂໍລອງໃສ່ເບິ່ງ ຊິໄດ້ບໍ ? ມັນຊິໜັກຫລາຍປານໃດ?"

ຍິງຄົນນັ້ນຖືໃຈຊື່ ຈຶ່ງບອກວ່າ " ລອງໃສ່ເບິ່ງແມ້ " ຍິງສາວເອົາສາຍເອ້ນັ້ນສຸບໃສ່ຄໍແລ້ວ ກໍຍ່າງໜີເສີຍຝ່າຍຍິງເຈົ້າຂອງເຫັນດັ່ງນັ້ນ ກໍຟ້າວຂຶ້ນມາຈາກສະແລ່ນນຳໄປທັນແລ້ວຈັບເຊິງແພ ຂອງສາວນັ້ນດຶງໄວ້ ທາງປາກກໍເວົ້າວ່າ " ອີ່ນາງ ມຶງເອົາເຄື່ອງ ເອ້ຂອງກູໄປທາງໃດ " ນາງສາວຜູ້ເປັນໂຈນຖຽງວ່າ "ຂ້ອຍບໍ່ ໄດ້ເອົາຂອງເຈົ້າມານາ ອັນນີ້ມັນແມ່ນເຄື່ອງເອ້ຂອງຂ້ອຍຕ່າງຫາກ "

ພວກຄົນທັງຫລາຍຊຶ່ງຢູ່ໃນທີ່ນັ້ນ ໄດ້ເຫັນຍິງທັງສອງຖຽງກັນ ກໍ ຫຸ້ມ
ໄປເບິ່ງ ແລະ ສໍ້ຖາມ ຈົນສຽງດັງຟົດຟື້ນັ້ນ ທ້າວມະໂຫສົດ ພວມ
ຫລິ້ນຢູ່ກັບພວກເດັກນ້ອຍ ໄດ້ຍິນສຽງຍິງທັງສອງຖຽງກັນມາໃກ້ພັກຕູ
ສາລາ ຈຶ່ງຮ້ອງຖາມໄປວ່າ " ແມ່ນສຽງອີ່ຫຍັງກັນເວີ້ຍ " ເມື່ອຮູ້
ສຽງຜູ້ຍິງຖຽງກັນ ຈຶ່ງບອກໃຫ້ຄົນທັງສອງນັ້ນເຂົ້າມາໃນສາລາ ແຕ່
ພໍຫລຽວເຫັນຫນ້າ ມະໂຫສົດກໍຮູ້ທັນທີໂລດວ່າ ຜູ້ໃດເປັນໂຈນ ຜູ້ໃດ
ບໍ່ເປັນ ແຕ່ເພື່ອຈະໃຫ້ຄົນທັງຫລາຍຮູ້ແຈ້ງເຫັນຈິງນໍາ ຈຶ່ງຖາມ ຍິງ
ທັງສອງນັ້ນວ່າ " ພວກເຈົ້າ ຈະຍອມໃຫ້ຂ້ອຍຕັດສິນໃຫ້ບໍ ? ຍິງ
ທັງສອງຕອບວ່າ" ເອີ ຍອມ" ແລ້ວມະໂຫສົດ ຈຶ່ງຖາມຍິງຜູ້ ເປັນ
ໂຈນນັ້ນກ່ອນວ່າ : ເຄື່ອງເອ້ອັນນີ້ເຈົ້າເອົາອັນໃດອົບໃຫ້ມັນ ຫອມ
ຍິງໂຈນບອກວ່າ " ຂ້າພະເຈົ້າເອົາດອກໄມ້ຫອມທຸກຢ່າງມາ ອົບ
ກິ່ນ" ມະໂຫສົດຖາມເຈົ້າຂອງເຄື່ອງເອ້ວ່າ "ເຈົ້າເດ ? ເອົາ
ເຄື່ອງຫອມອັນໃດມາອົບ " ຜູ້ຍິງເຈົ້າຂອງບອກວ່າ " ຂ້າພະເຈົ້າ
ເປັນຄົນທຸກຍາກບໍ່ໄດ້ມີດອກໄມ້ຫອມຫລາຍແນວມາອົບ ຂ້າພະ ເຈົ້າ
ເອົາແຕ່ດອກປະຍົງແນວດຽວທໍ່ນັ້ນມາອົບ" ມະໂຫສົດໄດ້ຟັງດັ່ງ ນັ້ນ
ຈຶ່ງໃຫ້ຄົນເອົາຊາມໃສ່ນ້ຳມາເອົາສາຍເຄື່ອງເອ້ນັ້ນລົງແຊ່ ແລ້ວຫາ
ຄົນຜູ້ຊໍານານໃນເລື່ອງກິ່ນມາດົມພິສູດເບິ່ງວ່າ ຈະແມ່ນກິ່ນອັນໃດ ?
ຄົນຜູ້ຊໍານານກິ່ນດົມເບິ່ງແລ້ວ ຈຶ່ງບອກວ່າ ແມ່ນກິ່ນດອກປະຍົງຢ່າງ

ດຽວ ບໍ່ມີກິ່ນດອກໄມ້ແນວອື່ນປົນເລີຍ ສະນັ້ນ ຄຳບອກຂອງຍິງສາວ ຈຶ່ງບໍ່ເປັນຄວາມຈິງ ດ້ວຍເຫດນີ້ ຍິງຄົນທຸກກໍໄດ້ເຄື່ອງເອ້ຂອງ ຕົນ ຄືນ ທ້າວມະໂຫສົດ ຈຶ່ງສັ່ງສອນຍິງສາວຄົນນັ້ນ ບໍ່ໃຫ້ເຮັດແນວບໍ່ດີຕໍ່ ໄປ ແຕ່ນັ້ນມາຊື່ສຽງຂອງມະໂຫສົດ ກໍລືຊາພາກົດທົ່ວໄປ.

ບັນຫາເລື່ອງກໍ້ຝ້າຍ

ມີຍິງຄົນໜຶ່ງ ເປັນຄົນເຝົ້າໄຮ່ຝ້າຍ ຍິງຄົນນັ້ນໄດ້ເອົາປຸຍຝ້າຍມາເຂັນເປັນເສັ້ນແລບໆ ແລ້ວກໍມ້ວນເຂົ້າເປັນກໍ້ໄວ້ ວັນໜຶ່ງໄດ້ມາອາບນ້ຳທີ່ສະຂອງ ມະໂຫສົດ ລາວໄດ້ເອົາກໍ້ຝ້າຍນັ້ນວາງໄວ້ ເທິງກອງສິ້ນຂອງຕົນ ແລ້ວກໍລົງໄປອາບນ້ຳ ມີຍິງຄົນໜຶ່ງເດີນທາງ ມາເຫັນເລີຍລັກເອົາກໍ້ຝ້າຍນັ້ນໄປ ຍິງເຈົ້າຂອງຂຶ້ນຈາກສະກໍແລ່ນ ນຳໄປທັນຍາດເອົາກໍ້ຝ້າຍນັ້ນໄວ້ ຍິງຜູ້ເປັນໂຈນກໍຖຽງວ່າເປັນຂອງຕົນ ແລ້ວທັງສອງຄົນກໍຖຽງກັນມາເຖິງພັກຕູສາລາ ມະໂຫສົດໆ ເຫັນຍິງທັງສອງຖຽງກັນມາ ກໍຮູ້ທັນທີວ່າ ໃຜເປັນໂຈນ ແຕ່ເພື່ອຢາກໃຫ້ຄົນທັງສອງເຫັນຈິງນຳ ຈຶ່ງຖາມຍິງຜູ້ເປັນໂຈນວ່າ "ນີ້ເວລາເຈົ້າ ກໍ້ຝ້າຍ ເຈົ້າເອົາອັນໃດເຮັດແກນໄວ້ທາງໃນ " ຍິງຜູ້ເປັນໂຈນບອກ " ຂ້າພະເຈົ້າເອົາໃບໝາກຝ້າຍເຮັດແກນ " ມະໂຫສົດ ຖາມຍິງຜູ້ເປັນເຈົ້າຂອງວ່າ "ເຈົ້າເດ ? ເວລາກໍ້ຝ້າຍເຈົ້າເອົາອັນ ໃດເຮັດແກນໄວ້ທາງໃນ" ຍິງເຈົ້າຂອງບອກວ່າ " ຂ້າພະເຈົ້າ ເອົາ

ໃນໜມາກພັບເຮັດແກນ "

ມະໂຫສົດ ໃຫ້ບັນທຶກຄຳຕອບຂອງຍິງທັງສອງໄວ້ແລ້ວ ຈຶ່ງ ໃຫ້ກໍ້ຝ້າຍນັ້ນອອກ ກໍໄດ້ເຫັນໃນໜມາກພັບຢູ່ທາງໃນສົມຕາມຄຳ ບອກຂອງຍິງຜູ້ເຈົ້າຂອງ ຍິງນັ້ນກໍໄດ້ກໍ້ຝ້າຍຄືນ ພວກຄົນທັງຫລາຍ ຈຶ່ງພາກັນສັລະເສີນປັນຍາຂອງມະໂຫສົດ ເປັນອັນມາກ.

ຂັບທາຍາດລູກກັນ

ຄັ້ງໜຶ່ງ ມີຍິງຄົນໜຶ່ງອູ້ມລູກໄປອາບນ້ຳ ທີ່ສະມະໂຫສົດ ນາງໄດ້ເອົາລູກນອນໄວ້ເທິງກອງຜ້າອ້ອມ ແລ້ວກໍລົງໄປອາບນ້ຳ ຂະນະນັ້ນມີນາງຍັກຂິນີຕົວໜຶ່ງມາເຫັນເດັກນ້ອຍຄົນນັ້ນ ກໍຄິດຢາກກິນ ຈຶ່ງແປງເພດ ເປັນຄົນເຂົ້າມາຖາມວ່າ " ສ່ຽວ ? ນີ້ ແມ່ນລູກ ຂອງເຈົ້າຫວະ ? ເປັນໜ້າຮັກແທ້ງເນີ ? ຂ້ອຍຂໍອູ້ມຈັກໜ້ອຍແດ່ເດີ" ວ່າແລ້ວກໍເຂົ້າມາອູ້ມເອົາເດັກນ້ອຍນັ້ນ ທຳທ່າຈູບຊົມດົມຂະ ນ່ອມ ແລ້ວກໍເລີຍອູ້ມແລ່ນໜີໄປ ແມ່ຂອງເດັກນ້ອຍເຫັນຈັ່ງຊັ້ນ ກໍຟ້າວຂຶ້ນຈາກສະແລ່ນນຳໄປທັນດຶງເຊີງຜ້ານາງຍັກນັ້ນໄວ້ ທາງປາກກໍ ຮ້ອງວ່າ " ມຶງຊິເອົາລູກຂອງກູໄປໃສ ?" ນາງຍັກຂິນີບໍ່ຍອມວາງ ໃຫ້ຖຽງວ່າ "ອ້າວນີ້ ມັນລູກຂອງກູ ລູກຂອງມຶງນີ້ເຫີງ ?" ແລ້ວທັງສອງ ກໍຖຽງກັນຍາດລູກກັນມາຈົນໃກ້ພັກຕູສາລາ ມະໂຫສົດ ຫລຽວເຫັນຍິງທັງສອງຍາດລູກກັນ ແລະ ຖຽງກັນມາ ກໍຮູ້ທັນທີໂລດ ແລ້ວຈຶ່ງຖາມວ່າ " ພວກເຈົ້າຈະຍອມໃຫ້ຂ້ອຍຕັດສິນໃຫ້ບໍ ?ຍິງທັງສອງ

ຕອບວ່າຍອມ ມະໂຫສົດ ຈຶ່ງເອົາໄມ້ຂີດແຜ່ນດິນໃຫ້ເປັນຄອງ ຊື່ ຍາວໆ ແລ້ວໃຫ້ເອົາເດັກນ້ອຍຈັບຂາຂ້າງໜຶ່ງ ແລ້ວມະໂຫສົດ ຈຶ່ງ ບອກວ່າ " ເອົາ! ໃຫ້ເຈົ້າທັງສອງດຶງຍາດກັນ ຜູ້ໃດດຶງເອົາເດັກ ກາຍເສັ້ນຂີດນີ້ໄປໄດ້ ກໍເປັນລູກຂອງຜູ້ນັ້ນ "ພໍຂາດຄຳຍິງທັງ ສອງ ກໍດຶງຍາດກັນ ໃນຂະນະທີ່ຍິງທັງສອງດຶງເດັກຍາດກັນນັ້ນ ເດັກ ໄດ້ ຮັບຄວາມເຈັບປວດກໍຮ້ອງໄຫ້ຈົນສຸດແຮງ ຝ່າຍຍິງຜູ້ເປັນແມ່ເຫັນລູກ ເຈັບ ແລະ ຮ້ອງດັ່ງນັ້ນ ກໍມີຄວາມສົງສານປານອົກຊິແຕກ ຈຶ່ງວາງ ລູກເສຍແລ້ວອອກມາຢືນໄຫ້ຢູ່ ທ້າວມະໂຫສົດ ຈຶ່ງຖາມຄົນທັງຫລາຍ ວ່າ "ທຳມະດາ ຄົນທີ່ບໍ່ເປັນແມ່ ມີຫົວໃຈອ່ອນອີດູຕໍ່ເດັກນັ້ນຫລືແນວ ໃດ? ພວກຄົນທັງຫລາຍຕອບວ່າ " ທຳມະດາແມ່ແທ້ຕ້ອງມີຫົວ ໃຈ ອ່ອນອີດູກູນາຕໍ່ລູກເປັນທີ່ສຸດ " ມະໂຫສົດ ຈຶ່ງວ່າ "ເອີ ! ຖ້າຈັ່ງ ຊັ້ນພວກທ່ານກໍຈົ່ງເບິ່ງເອົາເອງ ຍິງຜູ້ທີ່ຍາດເອົາເດັກໄດ້ນັ້ນ ເປັນ ບໍ່ແມ່ນແມ່ຂອງເດັກຍິງຜູ້ທີ່ວາງເດັກນີ້ແຫລະເປັນແມ່ ເພາະມີຄວາມ ອີດູລູກ ສ່ວນຍິງຜູ້ນັ້ນເປັນຍັກຂີນີ ເພາະມັນບໍ່ມີຄວາມເມດຕາປານີຕໍ່ ເດັກເລີຍ " ເວົ້າແລ້ວ ມະໂຫສົດ ຈຶ່ງຖາມຍັກນັ້ນວ່າ " ເປັນ ຫຍັງເຈົ້າຈຶ່ງມາລັກເອົາລູກຂອງເຂົາ " ຍັກຕອບວ່າ ຂ້າພະ ເຈົ້າ ຈະເອົາໄປກິນ ມະໂຫສົດ : "ເຈົ້າເປັນຄົນຊົ່ວຕັ້ງແຕ່ນີ້ຕໍ່ໄປ ເຈົ້າ ຢ່າເຮັດອີກເລີຍ ເພາະວ່າແຕ່ຊາດກ່ອນໆ ເຈົ້າໄດ້ເຮັດບາບກຳໄວ້

ຈຶງໄດ້ມາເກີດເປັນຍັກຂິນີຈົ່ງຊ໌ ແລະ ເຈົ້າຈະມາເຮັດບາບ ດັ່ງ ນີ້ ຍິງຜູ້ເປັນແມ່ຂອງເດັກ ໄດ້ລູກຂອງຕົນຄືນແລ້ວ ກໍລາມະໂຫສິດກັບຄືນ ໄປບ້ານຂອງຕົນ.

ຂັບຫາເລື່ອງຍາດເມັຍກັນ

ໃນຄັ້ງໜຶ່ງ ມີຊາຍຄົນໜຶ່ງຊື່ໂຄທະການ ເປັນຄົນເຕັ້ຍຕ່ຳແລະດຳ (ປານທາໝືນໝັ້ນ) ໂຄທະການໄປອາໄສຮັບຈ້າງຢູ່ເຮືອນຫລັງໜຶ່ງເຫິງນານເຖິງ 7 ປີ ເຈົ້າຂອງເຮືອນ ຈຶ່ງຍົກລູກສາວຜູ້ຊື່ ວ່ານາງທິຄະຕາລະໜະ ໃຫ້ເປັນເມຍ ເມື່ອໂຄທະການ ໄດ້ເມຍ ແລ້ວກໍຢາກພາເມຍໄປຢາມປູ່ຢາມຍ່າ ຈຶ່ງບອກເມຍໃຫ້ຈັດແຈ່ງແຕ່ງເອົາເຂົ້າຂອງ ໄປຕ້ອນປູ່ຍ່າຕາມສົມຄວນ ແລ້ວກໍພາກັນອອກເດີນ ທາງໄປ ພໍໄປເຖິງແມ່ນ້ຳ ແມ່ໜຶ່ງຫລວງເບິ່ງນ້ຳນັ້ນກວ້າງຫລາຍ ສອງຜົວເມຍເປັນຄົນຢ້ານນ້ຳບໍ່ຫານຈະຂ້າມ ຈຶ່ງພາກັນເຊົາຢູ່ແຄມຝັ່ງແມ່ນ້ຳນັ້ນ ໃນຂະນະນັ້ນ ມີຊາຍຄົນໜຶ່ງ ຊື່ທີຄະປິດຖີ ຊາຍຄົນນີ້ ເປັນຄົນສູງຫລັງຍາວເດີນໂຍກໆມາທີ່ນັ້ນ ສອງຜົວເມຍເຫັນຈຶ່ງຖາມ ວ່າ "ສ່ຽວໆ ! ນ້ຳນີ້ເລິກ ຫລື ຕື້ນ" ອ້າຍສັນຫລັງຍາວເຫັນສອງ ຜົວເມຍເປັນຄົນຢ້ານນ້ຳ ບໍ່ຫານຈະຂ້າມຈຶ່ງຕົວະສົ່ງໄປເລີຍວ່າ "ໂທ! ເລິກຫລາຍແທ້ໃດ! ທັງແຂ້ກໍຮ້າຍ " ສອງຜົວເມຍຖາມ: " ຊັ້ນ

ເຮັດຈັ່ງໃດ ເຈົ້າຈັ່ງຂ້າມໄປໄດ້" ໄດ້ລະບໍ່ ເພາະຂ້ອຍເຄີຍໄປມາ ພວກແຂ້ ແລະ ປາຮ້າຍຄຸ້ນເຄີຍກັບຂ້ອຍແລ້ວ ມັນບໍ່ທຳຮ້າຍ ເຮົາດອກ "ສອງຜົວເມຍ" ຖ້າຈັ່ງຊັ້ນ ຂໍຄວາມກະລຸນາເອົາພວກ ຂ້ອຍຂ້າມແດ່" ອ້າຍສັນຫລັງຍາວ" ໄດ້! ໄດ້! ບໍ່ເປັນຫຍັງ" ສອງ ຜົວເມຍດີໃຈ ຈິ່ງແກ້ຫໍ່ເຂົ້າອອກໃຫ້ອ້າຍສັນຫລັງຍາວກິນ ຄັນແລ້ວເຂົາຈຶ່ງຖາມວ່າ " ໃຜຊິຂ້າມໄປກ່ອນ" ອ້າຍໂຄຫະການຈິ່ງບອກ ໃຫ້ເມຍຂ້າມໄປກ່ອນ ອ້າຍສັນຫລັງຍາວຍົກນາງທິຄະຕາລະຫະຂຶ້ນ ໃສ່ບ່າແລ້ວ ກໍພານາງຂ້າມໄປໄດ້ຫນ້ອຍຫນຶ່ງ ມັນກໍຄູເຂົ່າລົງເອົາ ຫົວເຂົ່າເດີນໄປ ທຳໃຫ້ເຫັນວ່ານ້ຳພັນເລິກຫລາຍ ອ້າຍໂຄຫະການຢືນເບິ່ງຢູ່ແຄມຝັ່ງ ເຫັນຈັ່ງຊຸ້ນກໍຄຶດຢູ່ແຕ່ໃນໃຈວ່າ "ໂຫ! ນ້ຳນີ້ ເລິກຫລາຍແທ້ງ ! ແຕ່ຫມໍ່ນັ້ນສູງກ່ວາເຮົາຕັ້ງເກືອບວາ ກໍຍັງ ເກືອບຖ້ວມຄໍ ສຳພີປານເຮົາເຮັດແນວໃດຊິຂ້າມໄດ້".

ອ້າຍຫລັງຍາວ ພໍພານາງທິຄະຕາລະຫະ ໄປເຖິງກາງແມ ນ້ຳກໍເວົ້າກ້ຽວນາງວ່າ " ເຈົ້າຊິໄປຢູ່ນຳບັກເຕັ້ຍແຫລັ້ນເຮັດ ຫຍັງນ້ອງຫລ້າ ! ໄປຢູ່ນຳອ້າຍດີກ່ວາ ອ້າຍຈະບໍ່ໃຫ້ນ້ອງທຸກຍາກເລີຍ" ນາງທິຄະຕາລະຫະ ໄດ້ຟັງຄຳເລົ້າໂລມຂອງອ້າຍສັນຫລັງຍາວ ກໍເລີຍມີໃຈມັກຮັກ ຍອມຕົກລົງປົງໃຈນຳວ່າ "ເອົາແຕ່ອ້າຍເປັນ " ແລ້ວກໍພາກັນຂຶ້ນຝັ່ງ ທັງສອງຄົນມີຫນ້າຍິ້ມແຍ້ມຕໍ່ກັນດ້ວຍຄວາມດີໃຈ

ປະຖິ້ມອ້າຍໂຄທະການໄວ້ຝັ່ງພຸ້ນ ບໍ່ນຳນາງເມຍຍັງຮ້ອງເຢີ້ຍ ພົວເກົ່າຂອງຕົນອີກຊ້ຳ ແລ້ວທັງສອງຄົນກໍພາກັນໜີໄປ.

ຝ່າຍໂຄທະການ ເຫັນເມຍຂອງຕົນໜີໄປນຳຊາຍຊູ້ ແລ້ວກໍ ມີຄວາມເຈັບແຄ້ນໃຈເປັນທີ່ສຸດ ແລ່ນລົງໄປຝັ່ງນ້ຳວ່າຈະຂ້າມ ໄປນຳກໍບໍ່ກ້າຂ້າມຊ້ຳພັດແລ່ນຂຶ້ນມາ ແລ້ວກໍແລ່ນກັບລົງໄປອີກຫລາຍ ຫລົບຫລາຍເທື່ອ ພົນສຸດທ້າຍຕັດສິນໃຈເດັດຂາດວ່າ ເປັນຕາຍຢ່າງໃດກໍຕ້ອງໄປໃຫ້ໄດ້ ຈຶ່ງກັ້ນໃຈໂດດລົງນ້ຳ ແຕ່ພໍລົງໄປແລ້ວ ຈຶ່ງຮູ້ວ່ານ້ຳນັ້ນຕື້ນໆ ໝໍກໍເລີຍລຸຍຂ້າມໄປ ແລະ ແລ່ນຕິດຕາມໄປທັນ ໂຄທະການຮ້ອງໃສ່ໝົດແຮງວ່າ "ເຮີຍ ອ້າຍໂຈນ ມຶງຈະເອົາເມຍກູໄປໃສ? " ອ້າຍສັນຫລັງຍາວຕອບວ່າ "ເມຍມຶງຢູ່ໃສ ? ນີ້ເມຍ ຂອງກູເອງຕ່າງຫາກ ມຶງບໍ່ຕ້ອງມາກ່ຽວ " ໂຄທະການບໍ່ຟັງສຽງລູ່ເຂົ້າໄປດຶງແຂນເມຍຂອງຕົນໄວ້ ແລ້ວທັງສອງຄົນກໍຍາດເມຍກັນຜິດຖຽງກັນມາຈົນເຖິງພັກຕູສາລາຂອງມະໂຫສົດໆ ຈຶ່ງໃຫ້ນຳເອົາຄົນ ທັງສາມນັ້ນ ເຂົ້າມາຖາມຊາບຂໍ້ຄວາມແລ້ວ ຈຶ່ງແຍກຄົນທັງສາມນັ້ນໄວ້ຄົນລະບ່ອນ.

ມະໂຫສົດ ໃຫ້ເອົາອ້າຍທີຄະປິດຖິ (ອ້າຍສັນຫລັງຍາວ) ເຂົ້າກ່ອນວ່າ "ເຈົ້າຊື່ຫຍັງ ? ເຮັດການແນວໃດ ? ເມຍຂອງເຈົ້າ ຊື່ໃດ? ແລະ ພໍ່ແມ່ຂອງເມຍເຈົ້າຊື່ໃດ ?

ອ້າຍທີຄະປົກຖີ ບອກຊື່ຂອງຕົນໄດ້ ແຕ່ບໍ່ຮູ້ຊື່ຂອງນາງທີຄະ ຕາລະຫະ ແລະ ຊື່ພໍ່ແມ່ຂອງນາງ ຈຶ່ງບອກໄປຕາມທີ່ຕົນຄິດອອກ ມະໂຫສົດ ກໍໃຫ້ບັນທຶກໄວ້, ແລ້ວຈຶ່ງໃຫ້ເອົາອ້າຍຕ້ຍເຂົ້າມາ ຖາມອ້າຍຕ້ຍໂຄຫະການ ກໍບອກຊື່ຂອງຕົນ, ຊື່ເມຍ ແລະ ຊື່ພໍ່ເຖົ້າແມ່ເຖົ້າໃຫ້ມະໂຫສົດຟັງແລ້ວ ມະໂຫສົດ ກໍໃຫ້ບັນທຶກໄວ້ເສັດແລ້ວ ຈຶ່ງເອົານາງທີຄະຕາຫະລະ ເຂົ້າມາຖາມ ນາງກໍບອກຊື່ຂອງຕົນ ແລະ ຊື່ພໍ່ຊື່ແມ່ຂອງຕົນຕາມເປັນຈິງ ແລ້ວກໍໃຫ້ຈົດບັນທຶກໄວ້ຄືກັນ ຄັນຖາມທັງສາມຄົນແລ້ວຈຶ່ງເອົາຄຳໃຫ້ການຂອງຄົນທັງສາມມາປຽບ ທຽບກັນ; ມະໂຫສົດ ຖາມຄົນທັງຫລາຍ ເຊິ່ງຢູ່ໃນທີ່ນັ້ນວ່າ: ຄຳໃຫ້ການຂອງນາງຄົນນີ້ ສົມກັບຄຳໃຫ້ການຂອງຊາຍຄົນໃດ ? ຄົນທັງຫລາຍຕອບວ່າ ສົມກັບຄຳໃຫ້ການຂອງອ້າຍຕ້ຍ" ມະໂຫສົດ ຈຶ່ງປະກາດວ່າ "ເອີ ! ຖ້າຈັ່ງຊັ້ນ ພວກທ່ານທັງຫລາຍກໍຈົ່ງຮູ້ເທາະວ່າ ອາຍທີຄະປົກຖີ ເປັນໂຈນ ອ້າຍຕ້ຍໂຄຫະການ ເປັນຜົວຂອງນາງແທ້" ວ່າແລ້ວມະໂຫສົດ ຈຶ່ງຖາມອ້າຍສັນຫລັງຍາວວ່າ "ເຈົ້າລັກ ເມຍເຂົາມາແມ່ນບໍ ?" ອ້າຍສັນຫລັງຍາວກໍຮັບວ່າ "ແມ່ນຂ້ານ້ອຍ " ເອີ ! ຕັ້ງແຕ່ນີ້ຕໍ່ໄປເຈົ້າຢ່າເຮັດແບບນີ້ອີກ ມະໂຫສົດສັ່ງສອນອ້າຍສັນຫລັງຍາວແລ້ວ ກໍມອບນາງທີຄະຕາລະຫະ ໃຫ້ນາຍໂຄຫະການໆ ໄດ້ເມຍຂອງຕົນຄືນ ກໍສັນລະເສີນປັນຍາຂອງມະໂຫສົດເປັນອັນມາກ

ພ້ອມທັງອ່ວຍໄຊໃຫ້ພອນແກ່ມະໂຫສົດ ແລ້ວກໍພາເມຍຂອງຕົນຫນີໄປ

ຝ່າຍອຳມາດ ທີ່ພະເຈົ້າວິເທຫະລາດ ຈິງຕັ້ງໄວ້ໃຫ້ຄອຍ ສັ້ງຊອມເບິ່ງເຫດການຄວາມເຄື່ອນໄຫວຂອງມະໂຫສົດ ໄດ້ເຫັນ ເຫດການທັງມວນນັ້ນແລ້ວ ກໍສົ່ງລາຍງານເຂົ້າໄປຖວາຍພະເຈົ້າວິເທຫະລາດທຸກໆເທື່ອຄືແຕ່ກ່ອນ ພະເຈົ້າວິເທຫະລາດ ກໍຫົງປຶກສານຳ ອາຈານເສນະກະ ແລະ ອາຈານເສນະກະກໍທູນຄັດຄ້ານໄວ້ທຸກໆຄັ້ງ .

ບັນຫາເລື່ອງລົດ

ໃນຄາວນັ້ນ ມີຊາຍຄົນໜຶ່ງຂີ່ລົດມາຈອດໄວ້ແຄມທາງ ສ່ວນຕົນເອງ ແວະເຂົ້າໄປຖ່າຍອຸດຈາລະໃນປ່າຂ້າງທາງ ໃນຂະນະນັ້ນພະອິນທີ່ຢູ່ໃນສະຫວັນເທວະໂລກ ຊົງຄຶດວ່າຈະສົ່ງເສີມປັນຍາຂອງ ມະໂຫສົດໃຫ້ລືຊາໄປທົ່ວໂລກ ຈຶ່ງສະເດັດລົງມາແປງເພດເປັນໂຈນລັກເອົາລົດຂອງຊາຍຄົນນັ້ນໄປ ຝ່າຍເຈົ້າຂອງລົດອອກຈາກປ່າ ບໍ່ເຫັນລົດຂອງຕົນກໍຫລຽວຊ້າຍຫລຽວຂວາ ເຫັນຄົນລັກເອົາໄປກໍແລ່ນ ຕິດຕາມໄປນຳ ແລະ ເມື່ອໄປທັນຈຶ່ງຍາດເອົາລົດຂອງຕົນໄວ້ ຝ່າຍພະອິນກໍຖຽງວ່າ "ລົດຄັນນີ້ແມ່ນລົດຂອງເຮົາ ລົດຂອງທ່ານບໍ່ແມ່ນ ຄັນນີ້" ແລ້ວທັງສອງກໍຖຽງກັນມາຈົນເຖິງໃກ້ພັກຕູສາລາຂອງ ມະໂຫສົດໆຈຶ່ງໃຫ້ຮຽກຄົນທັງສອງນັ້ນເຂົ້າມາ ມະໂຫສົດພໍມາບເຫັນຄົນທັງສອງ ກໍຮູ້ທັນທີວ່າຜູ້ໃດເປັນເຈົ້າຂອງລົດ ທັງຮູ້ລະອຽດວ່າຊາຍ ຜູ້ລັກລົດນັ້ນເປັນພະອິນ ມາຈາກສະຫວັນ ຄັນຮູ້ດັ່ງນີ້ແລ້ວ ຈຶ່ງຖາມຄົນທັງສອງວ່າ " ທ່ານທັງສອງຈະຍອມໃຫ້ເຮົາຕັດສິນໃຫ້ບໍ ?" ຄົນ

ທັງສອງກໍຍອມ ເມື່ອຕົກລົງກັນແລ້ວ ທ້າວມະໂຫສົດ ຈຶ່ງໃຫ້ຄົນຂອງ
ຕົນຂຶ້ນຂັບລົດໄປ ແລ້ວບອກໃຫ້ຊາຍທັງສອງທີ່ຖຽງກັນນັ້ນແລ່ນນຳລົດ
ໄປ ຜູ້ໃດແລ່ນໄປທັນລົດກໍເປັນຂອງຜູ້ນັ້ນ ແລ້ວຄົນທັງສອງກໍແລ່ນຕິດ
ຕາມລົດໄປ ຊາຍຜູ້ເຈົ້າຂອງລົດແລ່ນນຳລົດໄປໄດ້ໜ້ອຍໜຶ່ງ ນີ
ຄວາມເມື່ອຍລ້າອ່ອນກຳລັງ ບໍ່ສາມາດທີ່ຈະແລ່ນນຳລົດຕໍ່ໄປໄດ້ກໍຢຸດ
ເສຍ ສ່ວນພະອິນແລ່ນໄປທັນລົດແລ້ວ ກໍຈັບທ້າຍລົດແລ່ນຕາມ ໄປບໍ່
ໄດ້ມີຄວາມອິດເມື່ອຍແຕ່ຢ່າງໃດ ຈົນຕະຫລອດເວລາລົດແລ່ນກັບຄືນ
ມາກໍບໍ່ໄດ້ວາງທ້າວມະໂຫສົດເຫັນດັ່ງນັ້ນ ຈຶ່ງຕັດສິນວ່າຊາຍ ຜູ້ແລ່ນ
ນຳລົດບໍ່ທັນເປັນເຈົ້າຂອງລົດ ແລະ ບອກໃຫ້ຄົນທັງຫລາຍຮູ້ອີກວ່າ"
ທ່ານທັງຫລາຍເບິ່ງເອົາ ຊາຍຜູ້ແລ່ນຕິດຕາມລົດໄປຈົນຕະຫລອດກັບ
ມານັ້ນ ບໍ່ໄດ້ສະແດງອາການອິດເມື່ອຍແຕ່ປະການໃດ ເຫື່ອກໍບໍ່ອອກ
ເລີຍຈັກເມັດທັງຕາກໍບໍ່ພັບຈັກເທື່ອ ຊາຍຜູ້ນັ້ນຕ້ອງແມ່ນເທບພະ ເຈົ້າ
ມາຈາກສະຫວັນເປັນແນ່ " ມະໂຫສົດກ່າວດັ່ງນີ້ແລ້ວ ຈຶ່ງຖາມຊາຍ
ຜູ້ນັ້ນວ່າ " ທ່ານເປັນພະອິນທາທິລາດແປງເພດເປັນມະນຸດແມ່ນບໍ?
" ພະອິນຕອບວ່າ "ເອີ ! ແມ່ນແລ້ວ ທ່ານນັກປາດ " ເຫດ ໃດ
ພະອົງຈຶ່ງເຮັດແນວນີ້ " ມະໂຫສົດຖາມ " ຂ້າພະເຈົ້າຕ້ອງ ການ
ຢາກສະແດງປັນຍາຂອງທ່ານໃຫ້ໂລກເຫັນ " ພະອິນບອກແລ້ວກໍສະ
ແດງເທວານຸພາບເຫາະຂຶ້ນໄປເທິງອາກາດ ກ່າວສັນລະເສີນປັນຍາ

ຂອງມະໂຫສົດໃຫ້ຊາວໂລກເຫັນເປັນສິ່ງອັດສະຈັນ ຈຶ່ງສະເດັດ ກັບ ໄປສູ່ເມືອງສະຫວັນໃນທັນໃດນັ້ນເອງ.

ຝ່າຍອຳມາດຜູ້ຄອຍສົ້ງຊອມເບິ່ງປັນຍາຂອງມະໂຫສົດເຫັນເຫດອັດສະຈັນນັ້ນແລ້ວ ຈຶ່ງກັບເຂົ້າໄປໃນພະນະຄອນກາບທູນພະເຈົ້າ ວິເທຫະລາດດ້ວຍຕົນເອງວ່າ " ຂ້າແຕ່ພະບາດເປັນເຈົ້າອົງປະເສີດ ທ້າວມະໂຫສົດບັນດິດນັ້ນ ຕັດສິນຖ້ອຍຄວາມຖືກຕ້ອງດີທີ່ສຸດ ຈິນ ພະອິນທາທິລາດໄດ້ມາທົດລອງ ແລະ ມະໂຫສົດກໍຍັງໄດ້ຕັດສິນໃຫ້ ພະອິນເປັນຝ່າຍເສຍ ເປັນໜ້າອັດສະຈັນຫລືອທີ່ສຸດ ເມື່ອເປັນດັ່ງ ນີ້ ພະອົງຍັງຈະເຫັນວ່າ ມະໂຫສົດບໍ່ເປັນບຸລຸດຜູ້ວິເສດຢູ່ ຫລື ?".

ພະເຈົ້າວິເທຫະລາດໄດ້ສະດັບຄຳກາບບັງຄົມທູນຂອງອຳ ມາດ ຈຶ່ງຕິດຖາມອາຈານເສນະກະວ່າ "ທ່ານອາຈານ ! ເຮົາຄວນ ຈະ ຮັບເອົາມະໂຫສົດເຂົ້າມາໄດ້ຫລືປະການໃດ ?" ອາຈານເສນະກະ ທູນວ່າ "ຂໍໄດ້ໂຜດທົດລອງເບິ່ງຕໍ່ໄປໃຫ້ແນ່ນອນອີກກ່ອນຂ້ານ້ອຍ " ເມື່ອອາຈານເສນະກະທູນຄັດຄ້ານດັ່ງນີ້ ພະເຈົ້າວິເທຫະລາດກໍ ຈິງ ເສີຍບໍ່ໄດ້ຕັດຄຳອັນໃດອີກຕໍ່ໄປ.

ບັນຫາທ່ອນໄມ້

ຢູ່ມາວັນໜຶ່ງ ພະຍາວິເທຫະລາດ ມີພະປະສົງຈະທົດລອງ ປັນຍາຂອງມະໂຫສົດ ດ້ວຍພະອົງເອງ ຈຶ່ງສັ່ງໃຫ້ນາຍຊ່າງຊ່ຽນ ໄມ້ແຄນທ່ອນໜຶ່ງ ທາງກົກກັບທາງປາຍໃຫ້ທໍ່ກັນ ແລ້ວສົ່ງອອກໄປ ປະທານໃຫ້ຊາວບ້ານປາຈີນ ພ້ອມກັບມີພະບັນຊາຕັດສັ່ງໄປວ່າ ໃຫ້ຊາວປາຈີນພິຈາລະນາເບິ່ງໃຫ້ຮູ້ວ່າ ທາງໃດເປັນກົກທາງໃດເປັນ ປາຍໝາຍໄວ້ໃຫ້ຄັກແນ່ ແລ້ວສົ່ງເຂົ້າມາໃຫ້ເຮົາພະອົງ ຖ້າຊາວ ບ້ານນັ້ນຫາກບໍ່ຮູ້ວ່າທາງໃດເປັນກົກ ທາງໃດເປັນປາຍແລ້ວເຮົາຈະໄໝຊາວບ້ານເປັນເງິນພັນຕຳລຶງ ພວກຊາວບ້ານເມື່ອໄດ້ຮັບໄມ້ ແຄນທ່ອນນັ້ນແລ້ວ ກໍພາກັນມາພິຈາລະນາເບິ່ງ ແຕ່ບໍ່ຮູ້ວ່າ ທາງໃດເປັນກົກ ທາງໃດເປັນປາຍ ຈຶ່ງພາກັນເອົາໄມ້ແຄນທ່ອນນັ້ນໄປຫາວັດທະນະເສດຖີ ຈຶ່ງໃຫ້ນຳມະໂຫສົດມາພິຈາລະນາເບິ່ງ ມະໂຫສົດ ຈັບເອົາໄມ້ທ່ອນນັ້ນ ຂຶ້ນມາຊັ່ງເບິ່ງດ້ວຍມືຂອງຕົນ ກໍເຂົ້າໃຈວ່າທາງນີ້ເປັນກົກ ທາງນີ້ເປັນປາຍ ແຕ່ມີຄວາມປະສົງຈະໃຫ້ຄົນທັງຫຼາຍເຫັນ

ຈີງນຳ ຈຶ່ງໃຫ້ຄົນເອົາອ່າງມາໜ່ວຍໜຶ່ງໃສ່ນ້ຳໃຫ້ເຕັມ ມະໂຫສົດ
ຈຶ່ງເອົາເຊືອກມາຜູກບ່ອນກາງຂອງໄມ້ທ່ອນນັ້ນ ແລ້ວຍົກຂຶ້ນຢ່ອນລົງ
ໃນອ່າງນ້ຳ ສົ້ນໄມ້ທີ່ເປັນທາງກົກກໍຈົມລົງກ່ອນ ສ່ວນສົ້ນທີ່ເປັນທາງ
ປາຍຄ່ອຍໆຈົມລົງທີ່ຫລັງ ມະໂຫສົດຈຶ່ງຖາມຄົນທັງຫລາຍວ່າ ຕາມ
ທຳມະດາໄມ້ແມ່ນທາງກົກມັນໜັກຫລືວ່າທາງປາຍມັນໜັກ "ຄົນທັງ
ຫລາຍຕອບວ່າ: ທ່ານບັນດິດ ! ທາງກົກຕ້ອງໜັກກວ່າທາງ ປາຍ
ແນ່ນອນ" " ເອີ ຖ້າຈຶ່ງຊັ້ນພວກທ່ານຈຶ່ງເບິ່ງນຳກັນໃຫ້ດີຄື ໄມ້ທ່ອນ
ນີ້ ສົ້ນທີ່ຈົມລົງກ່ອນນັ້ນແຫລະເປັນທາງກົກ ສົ້ນທີ່ຈົມລຸນເປັນ ທາງ
ປາຍ " ພວກຊາວບ້ານພາກັນກຳນົດຈົດຈຳໄວ້ແລ້ວ ກໍສົ່ງເຂົ້າ ໄປ
ຖວາຍພະລາຊາສົມເດັດພະເຈົ້າວິເທຫະລາດ ກໍມີພະໄທຍິນດີ ຕັດ
ຖາມວ່າ ຜູ້ໃດເປັນຜູ້ຮູ້ຈັກທາງກົກ ທາງປາຍຂອງໄມ້ທ່ອນນີ້ "ທ່ານ
ມະໂຫສົດ ຂ້ານ້ອຍ ພວກຊາວບ້ານທູນພະເຈົ້າວິເທຫະລາດ ກໍ ຍິ່ງ
ທົງພະໂສມະນັດ ເປັນອັນມາກ.

ເລື່ອງຫົວພິຫລ້ອນ

ໃນວັນຫນຶ່ງພະເຈົ້າວິເທຫະລາດ ໃຫ້ສົ່ງຫົວພິຫລ້ອນສອງ ຫົວອອກໄປໃຫ້ຊາວບ້ານປາຈີນພິຈາລະນາເບິ່ງວ່າ ຫົວໃດເປັນຫົວຂອງຜູ້ຊາຍ ຫົວໃດເປັນຫົວຂອງຜູ້ຍິງ ຖ້າຮູ້ແລ້ວກໍໃຫ້ສົ່ງເຂົ້າໄປບອກຖ້າບໍ່ຮູ້ພວກຊາວບ້ານຈະຕ້ອງຖືກປັບໃຫມເປັນເງິນພັນຕໍາລຶງ ພວກຊາວບ້ານໄດ້ພາກັນພິຈາລະນາເບິ່ງຢ່າງຖ້ວນຖີ່ແລ້ວ ແຕ່ກໍ່ບໍ່ຮູ້ເລີຍວ່າຫົວໃດເປັນຫົວຂອງຜູ້ຍິງ ຫົວໃດເປັນຫົວຂອງຜູ້ຊາຍ ຈຶ່ງພາກັນໄປຖາມມະໂຫສົດ ທ້າວມະໂຫສົດ ຈຶ່ງບອກວ່າ " ທໍາມະດາດູກຫົວຂອງ ຜູ້ຍິງມີຄອງນໍາກະດູກຫົວຄົດໄປມາ

ສ່ວນດູກຫົວຂອງຜູ້ຊາຍ ຄອງແຊກນັ້ນຊື່ທ່ານທັງຫລາຍຈຶ່ງບອກສົ່ງເຂົ້າໄປໂລດ ວ່າຫົວນີ້ເປັນຫົວຂອງຜູ້ຊາຍ ຫົວນີ້ເປັນຫົວຂອງຜູ້ຍິງ" ພວກຊາວບ້ານກໍານົດຫມາຍຕາມທີ່ມະໂຫສົດບອກ ໄວ້ແລ້ວ ກໍສົ່ງເຂົ້າໄປຖວາຍພະລາຊາ ພະເຈົ້າວິເທຫະລາດ ຊົງຊາບ

ຂໍ້ຄວາມນັ້ນແລ້ວ ຈຶ່ງຕັດຖາມຊາວບ້ານວ່າ "ໃຜບອກພວກທ່ານ ຈຶ່ງ
ຮູ້ ຫລືພວກທ່ານຫາກຮູ້ເອງ" ມະໂຫ ສິດບອກຂ້ານ້ອຍ ພວກຊາວ
ບ້ານຫລາຍທູນ ສົມເດັດພະເຈົ້າວິເທຫະລາດ ໄດ້ຊົງສະດັບກໍມີພະ ໄທ
ໂສມະນັດ ເປັນທີ່ສຸດ ຈຶ່ງຕັດປຶກສານຳອາຈານເສນະກະງ ກໍ່ທູນຄັດ
ຄ້ານໄວ້ຕາມເຄີຍ.

ບັນຫາເລື່ອງງົວ

ຢູ່ມາວັນໜຶ່ງ ພະເຈົ້າວິເທຫະລາດ ໃຫ້ພວກມະຫາເລັກໄປຈັບເອົາງົວມາສອງຕົວ ແລ້ວໃຫ້ສົ່ງອອກໄປໃຫ້ຊາວບ້ານປາຈີນພິ ຈາລະນາເບິ່ງວ່າ ຕົວໃດເປັນຕົວຜູ້ ຕົວໃດເປັນຕົວແມ່ ຄັນຮູ້ແລ້ວ ໃຫ້ສົ່ງເຂົ້າມາຖ້າຫາກບໍ່ຮູ້ວ່າຕົວໃດເປັນຕົວຜູ້ຕົວໃດເປັນຕົວແມ່ແລ້ວ ເຮົາຈະປັບໃໝເປັນເງິນພັນຕຳລຶງ ພວກຊາວບ້ານພິຈາລະນາເບິ່ງແລ້ວກໍບໍ່ຮູ້ຈັກຈິ່ງພາກັນໄປຖາມມະໂຫສົດ ທ້າວມະໂຫສົດຊີ້ແຈງວ່າ "ທຳມະດາງົວຕົວຜູ້ນັ້ນ ປາຍຫາງມັນໃຫຍ່ ສ່ວນງົວຕົວແມ່ນັ້ນ ປາຍຫາງມັນຮຽວ(ນ້ອຍ) ຫົວຂອງງົວຕົວຜູ້ນັ້ນໃຫຍ່ ຫົວຂອງງົວຕົວແມ່ນັ້ນນ້ອຍ ຫົວຂອງງົວຕົວຜູ້ມີລາຍວຽນຮອບ ຫົວງົວຕົວແມ່ເສັ້ນລາຍນັ້ນບໍ່ວຽນ ຮອບເປັນຂາດງຢູ່ ແລະ ຕາງົວຕົວແມ່ນັ້ນກໍມົນ ທ່ານທັງຫລາຍຈົ່ງ ບອກສົ່ງເຂົ້າໄປຕາມທີ່ມະໂຫສົດບອກສົມເດັດພະເຈົ້າວິເທຫະລາດ ໄດ້ຊົງສະດັບ ກໍມີພະໄທຊື່ນຊົມຍິນດີ ຕັດສັນລະເສີນປັນຍາປາລະມີ ຂອງທ້າວມະໂຫສົດບໍ່ໄດ້ຂາດພະໂອດ (ບໍ່ໄດ້ຂາດປາກ).

ບັນຫາເລື່ອງງົວອຸສຸພະລາດ

ວັນໜຶ່ງພະເຈົ້າວິເທຫະລາດ ມີພະລາຊະອາຍາ ສົ່ງໄປ ບອກຊາວບ້ານປາຈີນວ່າ ໃຫ້ຊາວບ້ານປາຈີນຫາງົວອຸສຸພະລາດຂາວ ທີ່ມີເຂົາຢູ່ສົ້ນນ່ອງ ມີໜອກຢູ່ຫົວ ແລະ ຮ້ອງວັນລະ 3 ເວລາສົ່ງເຂົ້າມາໃຫ້ເຮົາ ຖ້າຫາບໍ່ໄດ້ ເຮົາຈະລົງໂທດໄໝຊາວບ້ານພັນຕຳ ລຶງ ພວກຊາວບ້ານໄດ້ຮັບພະລາຊະອາຍາສັ່ງດັ່ງນັ້ນ ຈຶ່ງໄປຖາມທ້າວມະໂຫສົດໆ ຈຶ່ງວ່າ ພວກທ່ານຈົ່ງສົ່ງໄກ່ຜູ້ຂາວເຂົ້າໄປຖວາຍພະລາຊາເສຍ ເພາະວ່າຄຳທີ່ພະອົງຕັດວ່າໃຫ້ມີເຂົາຢູ່ສົ້ນນ່ອງນັ້ນແມ່ນເດືອຍຂອງໄກ່ນັ້ນເອງ ທີ່ວ່າໃຫ້ມີໜອກຢູ່ຫົວນັ້ນແມ່ນຫອນຂອງໄກ່ ແລະ ທີ່ວ່າຮ້ອງວັນລະ 3 ເວລານັ້ນ ບໍ່ແມ່ນສົ່ງດອກ ແມ່ນໄກ່ຂັນຕາມເວລານັ້ນເອງ ພວກຊາວບ້ານໄດ້ຟັງມະໂຫສົດບອກ ກໍຈັດສົ່ງໄກ່ຜູ້ຂາວເຂົ້າໄປຖວາຍພະລາຊາ ພະເຈົ້າວິເທຫະລາດກໍຊົງຕັດສັນລະ ເສີນປັນຍາຂອງທ້າວມະໂຫສົດເປັນອັນມາກ.

ບັນຫາແກ້ວມະນີ

ພະເຈົ້າວິເທຫະລາດ ພະອົງມີແກ້ວມະນີຢູ່ໜ່ວຍໜຶ່ງ ຊຶ່ງເປັນນິລະດົກຕົກທອດມາແຕ່ສົມເດັດ ພະເຈົ້າກຸດສະລາດ ແກ້ວໜ່ວຍນັ້ນເປັນຄົດມີ 8 ຄົດ ຝ້າຍເກົ່າທີ່ຮ້ອຍຢູ່ໃນແກ້ວນັ້ນ ໄດ້ຂາດອອກເຫິງແລ້ວ ແລະ ກໍບໍ່ມີຜູ້ໃດຈະເອົາຝ້າຍທີ່ຄາຢູ່ໃນຄົດແກ້ວນັ້ນອອກ ໄດ້ແລ້ວຮ້ອຍຝ້າຍໃໝ່ໃສ່ ພະເຈົ້າວິເທຫະລາດຈຶ່ງສົ່ງແກ້ວມະນີໜ່ວຍນັ້ນໄປໃຫ້ຊາວບ້ານປາຈີນບອກວ່າ ໃຫ້ເອົາຝ້າຍເກົ່ານັ້ນອອກ ແລ້ວຮ້ອຍຝ້າຍໃໝ່ໃສ່ ຖ້າຄຶດເອົາອອກ ແລະ ຮ້ອຍເຂົ້າໃໝ່ບໍ່ໄດ້ແລ້ວຈະໃສ່ໂທດໄໝພັນຕຳລຶງ ພວກຊາວບ້ານບໍ່ສາມາດຈະເອົາອອກໄດ້ ແລະ ຈະຮ້ອຍໃໝ່ກໍບໍ່ໄດ້ໝົດປັນຍາ ຈຶ່ງພາກັນໄປຫາມະໂຫສົດໃຫ້ເອົານ້ຳເຜິ້ງມາຮ່າຍໃນຮູແກ້ວ ທັງສອງສົ້ນ ແລະ ໃຫ້ຟັ່ນຝ້າຍແດງທີ່ຈະຮ້ອຍໃໝ່ເສັ້ນໜຶ່ງ ເອົານ້ຳເຜິ້ງທາສົ້ນຝ້າຍທີ່ຟັ່ນໃໝ່ນັ້ນແລ້ວເອົາແກ້ວໄປວາງໄວ້ທາງມົດງ່າມທ່ຽວ ເອົາສົ້ນຝ້າຍທີ່ທານ້ຳ ເຜິ້ງແຫຍ່ຈຸໄວ້ຊື່ຮູແກ້ວ ພໍມົດງ່າມຖືກກິນນ້ຳເຜິ້ງກໍພາກັນເຂົ້າໄປກິນຕາມ

ຮູແກ້ວ ໃນຂະນະທີ່ເຂົ້າໄປກິນກໍກັດຝ້າຍເກົ່າອອກຫມົດ ເວລາ ມັນຈະກັບຄືນອອກມາມັນກໍດຶງເອົາສົ້ນຝ້າຍໃຫມ່ທີ່ມີນ້ຳເຜິ້ງນັ້ນມານຳ ພໍສົ້ນຝ່າຍພົ້ນອອກມາທາງຂ້າງນີ້ແລ້ວ ມະໂຫສົດກໍໄລ້ມົດອອກ ແລ້ວເອົາແກ້ວຫນ່ວຍນັ້ນໄປໃຫ້ຊາວບ້ານສົ່ງເຂົ້າຖວາຍພະລາຊາສົມເດັດພະເຈົ້າວິເທຫະລາດ ຊົງຊາບວ່າ ມະໂຫສົດເປັນຜູ້ຄິດຫາວິທີ ເອົາຝ້າຍເກົ່າອອກ ແລະ ຮ້ອຍຝ້າຍໃຫມ່ແທນໄດ້ ກໍມີພະໄທຊື່ນຊົມຍິນດີເປັນທີ່ສຸດ ແລ້ວກໍຕັດປຶກສາກັບອາຈານເສນະກະໆ ກໍທູນຄັດຄ້ານໄວ້ຕາມເຄີຍ.

ບັນຫາງົວເຖິກອອກລູກ

ໃນວັນໜຶ່ງ ພະເຈົ້າວິເທຫະລາດ ຄິດຈະລອງປັນຍາຂອງ ມະໂຫສົດ ຈຶ່ງສັ່ງໃຫ້ເຈົ້າພະນັກງານເອົາໝາກຖົ່ວໃຫ້ງົວເຖິກໃຫ່ຍຕົວໜຶ່ງກິນ ໃຫ້ມັນກິນຫລາຍໆຈົນທ້ອງໃຄ້ກັນກັບງົວມີລູກ ແລະ ໃຫ້ເອົານ້ຳເຂົ້າໜົ້ນມາທົດຕາມຕົວໃຫ້ທົ່ວ ແລ້ວສົ່ງອອກໄປໃຫ້ ຊາວບ້ານປາຈີນ ພ້ອມກັບມີພະລາຊະດຳລັດສັ່ງໄປວ່າ ໃຫ້ຊາວບ້ານພິທັກຮັກສາງົວມຸງຄູນອຸສຸພະລາດຕົວນີ້ໄວ້ ຈົນກວ່າມັນອອກ ເມື່ອມັນອອກລູກແລ້ວ ຈຶ່ງສົ່ງເຂົ້າໄປໃຫ້ເຮົາພ້ອມທັງລູກຂອງມັນ ຖ້າຄິດແກ້ ໄຂໃຫ້ງົວອຸສຸພະລາດອອກລູກບໍ່ໄດ້ແລ້ວ ຈະໄຫມພັນຕຳລຶງ ພວກ ຊາວບ້ານໄດ້ຮັບພະລາຊະບັນຊາສັ່ງດັ່ງນັ້ນ ບໍ່ມີປັນຍາທີ່ຈະຄິດແກ້ໄຂ ໄດ້ຈຶ່ງພາກັນໄປຫາມະໂຫສົດ ເລົ່າຂໍ້ຄວາມທັງໝົດໃຫ້ມະໂຫສົດ ຟັງ ມະໂຫສົດຟັງພະລາຊະບັນຊານັ້ນແລ້ວ ກໍຄິດໃນໃຈວ່າ " ບັນຫາຂໍ້ນີ້ເປັນບັນຫາປຽບທຽບ" ຄິດແລ້ວຈຶ່ງຫາຄືນຜູ້ສະຫລາດມີປັນຍາ ສາມາດກາບທູນພະລາຊາໄດ້ວ່ອງໄວມາຜູ້ໜຶ່ງ ແນະນຳບອກສອນ ໃຫ້

ເຂົ້າໃຈຂໍ້ຄວາມທີ່ຈະກາບທູນທຸກປະການ ແລ້ວສັ່ງວ່າ ທ່ານຈົ່ງເຮັດພົມໃຫ້ຫຍຸ້ງປົກໜ້າ ແລ້ວເດີນຮ້ອງໄຫ້ເຂົ້າໄປໃນພະລາຊະວັງເມື່ອມີຄົນຖາມຢ່າເວົ້ານຳເຂົາ ເມື່ອໃດພະກະສັດຕັດສັ່ງໃຫ້ເຂົ້າໄປເຝົ້າ ແລະ ຕັດຖາມຈຶ່ງກາບທູນຕາມຂໍ້ຄວາມທີ່ເຮົາບອກໄວ້ ມະໂຫ ສົດແນະນຳດັ່ງນີ້ແລ້ວ ຊາຍຄົນນັ້ນກໍທຳກິລິຍາໂສກເສົ້າເຮັດພົມ ໃຫ້ຫຍອງຫຍຸ້ງລົງມາປົກໜ້າເດີນຮ້ອງໄຫ້ເຂົ້າໄປໃນພະລາຊະວັງຜູ້ໃດຖາມກໍບໍ່ປາກ ຈົນພະເຈົ້າວິເທຫະລາດໄດ້ທອດພະເນດເຫັນອາການປະຫລາດຂອງຊາຍຄົນນັ້ນ ຈຶ່ງຕັດສັ່ງໃຫ້ເຂົ້າໄປເຝົ້າ ແລະຕັດຖາມວ່າ " ທ່ານຮ້ອງໄຫ້ໂສກເສົ້າດ້ວຍເລື່ອງອັນໃດ " ຊາຍຄົນນັ້ນຈຶ່ງກາບທູນວ່າ "ໂດຍທານໂທດ ທານຊີວິດດຽວນີ້ບິດາຂອງຂ້າພະບາດທົງຄັບມີລູກໃນທ້ອງແກ່ແລ້ວ ຈະອອກລູກແຕ່ອອກບໍ່ໄດ້ ໄດ້ຮັບຄວາມທົນທຸກທໍລະມານໄດ້7 ວັນນີ້ແລ້ວ ຂໍພະອົງຜູ້ຊົງມະຫາກະຣຸນາ ອັນເປັນທີ່ເພິ່ງຂອງຂ້າພະບາດ ໂຜດໄດ້ບອກມະໂຍບາຍ ໃຫ້ບິດາຂອງຂ້າພະບາດອອກລູກໃນຄາວນີ້ດ້ວຍ ພະເຈົ້າວິເທຫະລາດ ໄດ້ທົງສະດັບຄວາມກາບທູນຂອງຊາຍຄົນນັ້ນ ເຫັນຜິດປະເພນີຈຶ່ງຕັດວ່າ" ເຮີຍຜູ້ຊາຍຊິໃດທີ່ຈະເຄີຍອອກລູກ ເຈົ້າມາເວົ້າແນວບ້າໆບໍ່ເຄີຍ ໄດ້ຍິນຈັກເທື່ອ " ຊາຍຄົນນັ້ນກາບທູນວ່າ" ຂໍທານໂທດ ! ຖ້າພະອົງຕັດວ່າ ຜູ້ຊາຍບໍ່ເຄີຍມີລູກແລ້ວ ກໍເຮັດແນວໃດຊາວບ້ານປາຈີນ ຈຶ່ງຈະ

ໃຫ້ງົວເຖິກໃຫ່ຍທີ່ພະອົງສົ່ງອອກໄປນັ້ນອອກລູກໄດ້ ເພາະທຳມະດາ
ວ່າງົວເຖິກບໍ່ຫ່ອນເຄີຍອອກລູກຈັກເທື່ອຂ້ານ້ອຍ "ພະເຈົ້າວິເທ ຫະ
ລາດໄດ້ຊົງສະດັບຄຳຕອບຂອງຊາຍຄົນ ນັ້ນ ກໍເຂົ້າໃຈໃນ ຄວາມ
ຫມາຍ ຈຶ່ງຕັດຖາມເຂົາວ່າ " ເອີ ! ບັນຫາປຽບທຽບຂໍ້ນີ້ແມ່ນໃຜ
ບອກໃຫ້ເຈົ້າ " ມະໂຫສົດບັນດິດບອກໃຫ້ຂ້ານ້ອຍ ຊາຍຄົນນັ້ນ ທູນ
ແລ້ວ ພະເຈົ້າວິເທຫະລາດ ກໍທົງພໍພະໄທ ອັດສະຈັນໃຈໃນປັນ ຍາ
ຂອງມະໂຫສົດເປັນຢ່າງຍິ່ງ.

ບັບຫາຫຸງເຂົ້າ

ວັນໜຶ່ງ ພະເຈົ້າວິເທຫະລາດ ມີພະບັນຊາສັ່ງອອກໄປຫາຊາວບ້ານປາຈີນວ່າ ໃຫ້ຊາວບ້ານປາຈີນຫຸງເຂົ້າສົ່ງເຂົ້າມາໃຫ້ເຮົາ ແວລາຈະຫຸງນັ້ນໃຫ້ກະທຳໃຫ້ຖືກຕ້ອງຕາມຂໍ້ບັງຄັບ 8 ປະການຄື:

1. ຢ່າຫຸງດ້ວຍເຂົ້າສານ (ຄືຢ່າໃຊ້ເຂົ້າສານ)
2. ຢ່າຫຸງດ້ວຍນ້ຳ (ຄືຢ່າໃຊ້ນ້ຳ)
3. ຢ່າຫຸງດ້ວຍໝໍ້ (ຄືຢ່າໃຊ້ໝໍ້)
4. ຢ່າຫຸງດ້ວຍເຕົາ (ຄືຢ່າໃຊ້ເຕົາ)
5. ຢ່າຫຸງດ້ວຍໄຟ (ຄືຢ່າໃຊ້ໄຟ)
6. ຢ່າຫຸງດ້ວຍຟືນ (ຄືຢ່າໃຊ້ຟືນ)
7. ເມື່ອຫຸງແລ້ວຢ່າໃຫ້ຜູ້ຍິງ ຫລືຜູ້ຊາຍນຳເຂົ້າມາໃຫ້ເຮົາ
8. ເມື່ອນຳເຂົ້າມາ ກໍຢ່າມາຕາມທາງ

ຫຸງເຂົ້າຖືກຕ້ອງຕາມຫລັກ 8 ປະການນີ້ແລ້ວ ຈິ່ງຈະພົ້ນ ໂທດ

ຖ້າຫຸງບໍ່ຖືກຕ້ອງຕາມຫລັກ 8 ປະການນີ້ແລ້ວເຮົາຈະໃຫ້ຊາວບ້ານ ເປັນເງິນພັນຕຳລຶງ ພວກຊາວບ້ານໄດ້ຮັບພະລາຊະບັນຊາ ດັ່ງນັ້ນແລ້ວ ກໍຄຶດບໍ່ອອກວ່າ ຈະເຮັດແນວໃດ ຈຶ່ງພາກັນໄປຖາມມະໂຫສົດ ໆ ບອກວ່າ ທີ່ພະລາຊາສັ່ງມາວ່າ:

1. ບໍ່ໃຫ້ຫຸງເຂົ້າດ້ວຍເຂົ້າສານນັ້ນ ໃຫ້ເອົາເຂົ້າປາຍມາຫຸງ
2. ບໍ່ໃຫ້ຫຸງດ້ວຍນ້ຳນັ້ນ ໃຫ້ຕັ່ງເອົານ້ຳໝອກມາຫຸງ
3. ບໍ່ໃຫ້ຫຸງດ້ວຍໝໍ້ນັ້ນ ໃຫ້ເອົາກະທະມາຫຸງ
4. ບໍ່ໃຫ້ຫຸງດ້ວຍເຕົານັ້ນ ໃຫ້ຂຸດຫລັກເອົາ
5. ບໍ່ໃຫ້ຫຸງດ້ວຍໄຟນັ້ນ ບໍ່ໃຫ້ເອົາໄຟທຳມະດາ ແຕ່ໃຫ້ເຮັດໄມ້ສີໄຟສີເອົາ
6. ບໍ່ໃຫ້ຫຸງດ້ວຍຟືນ ໃຫ້ເອົາໃບຕອງແຫ້ງມາດັງຫຸງ
7. ບໍ່ໃຫ້ຜູ້ຍິງຫລືຜູ້ຊາຍເອົາໄປນັ້ນ ໃຫ້ຄົນກະເທີຍເອົາໄປ
8. ເມື່ອເອົາເຂົ້າໄປບໍ່ໃຫ້ໄປຕາມທາງນັ້ນ ເພີ່ນບໍ່ໃຫ້ໄປຕາມທາງຫລວງ ສະນັ້ນຕ້ອງໄປຕາມທາງນ້ອຍ ກະເທີຍນຳເຂົ້າຫຸງ ນັ້ນເຂົ້າໄປຖວາຍຕາມທີ່ນທາງນ້ອຍ ພະເຈົ້າວິເທຫະລາດຕັດຖາມພວກທີ່ເອົາເຂົ້າຫຸງ ເຂົ້າໄປຖວາຍຊາບວ່າ ເປັນຄວາມຄຶດຂອງ ມະໂຫສົດ ກໍມີພະໄທຍິນດີ ອິ່ງສັນລະເສີນປັນຍາ.

ບັນຫາຝັ້ນເຊືອກ

ວັນໜຶ່ງ ພະເຈົ້າວິເທຫະລາດ ຈິ່ງມີພະບັນຊາສັ່ງອອກ ໄປຫາຊາວບ້ານປາຈີນອີກວ່າ " ພະອົງຢາກໄດ້ເຊືອກມາແຂວນໂອ້ນ ຊາເຊືອກເກົ່າມີຢູ່ໃນພະລາຊະວັງຂາດໄປແລ້ວ ໃຫ້ຊາວບ້ານຝັ້ນເຊືອກດ້ວຍດິນຊາຍມາໃຫ້ເສັ້ນໜຶ່ງ ຖ້າຝັ້ນມາບໍ່ໄດ້ເຮົາຈະໃສ່ໂທດ ຊາວບ້ານຕາມທີ່ເຄີຍກຳນົດໄວ້ ພວກຊາວບ້ານໄດ້ຮັບພະບັນຊາດັ່ງ ນັ້ນແລ້ວ ບໍ່ຮູ້ຈະເຮັດແນວໃດ ຈຶ່ງພາກັນໄປຖາມມະໂຫສົດໆບອກ ວ່າເລື່ອງນີ້ເປັນບັນຫາຕ້ອງໃຊ້ຄົນຜູ້ສະຫລາດສະຫລຽວເຂົ້າໄປທູນ ພະລາຊາ ບອກຊາວບ້ານດັ່ງນີ້ແລ້ວ ຈຶ່ງໃຊ້ຄົນຜູ້ສະຫລາດຄົນໜຶ່ງເຂົ້າທູນພະລາຊາ ມະໂຫສົດບອກວ່າ " ທ່ານຈຶ່ງເຂົ້າໄປທູນພະລາ ຊາຂໍຕົວຢ່າງເຊືອກດິນຊາຍເກົ່ານຳພະລາຊາມາເບິ່ງກ່ອນ" ຊາຍ ຄົນນັ້ນໄດ້ຮັບຄຳບອກສອນຂໍ້ຄວາມທີ່ຈະກາບທູນ ພະລາຊາຈາກ ມະໂຫສົດແລ້ວ ກໍເຂົ້າໄປທູນພະເຈົ້າວິເທຫະລາດວ່າ "ຂໍເດຊະພະປາລະມີປົກເກົ້າ ການທີ່ພະອົງສັ່ງໃຫ້ຊາວບ້ານຝັ້ນເຊືອກດິນຊາຍເຂົ້າ ມາ

ຖວາຍນັ້ນ ດຽວນີ້ພວກຊາວບ້ານກໍຍິນດີ ປະຕິບັດຕາມພະລາຊະ ບັນຊາຢູ່ແລ້ວ ແຕ່ພວກຊາວບ້ານຍັງບໍ່ຮູ້ລັກແນ່ວ່າ ພະອົງຕ້ອງການເສັ້ນນ້ອຍໃຫ່ຍທໍ່ໃດ ຈຶ່ງໃຫ້ຂ້າພະບາດເຂົ້າມາທູນ ຂໍຕົວຢ່າງເຊືອກເກົ່າໄປເບິ່ງ ໄດ້ຈັກສອກໜຶ່ງ ຫລືພຽງສາມສີ່ນິ້ວກໍເອົາ".

ພະລາຊາຕັດຕອບວ່າ ເຊືອກເກົ່າຂອງເຮົາບໍ່ມີດອກ ຊາຍຄົນນັ້ນທູນວ່າ " ຂໍເດຊະ ! ຖ້າເຊືອກເກົ່າອັນເປັນຕົວຢ່າງບໍ່ມີ ແລ້ວຈະໃຫ້ຊາວບ້ານຟັ້ນເຊືອກໃຫມ່ມາຖວາຍໄດ້ຢ່າງໃດ ຂ້ານ້ອຍ".

ພະລາຊາ ໄດ້ຟັງຄຳຕອບຂອງຊາຍຄົນນັ້ນ ຈຶ່ງຕັດຖາມວ່າ"ຄຳຕອບແບບນີ້ໃຜບອກໃຫ້ທ່ານ" ມະໂຫສົດບັນດິດບອກ ຂ້ານ້ອຍ ຊາຍຄົນນັ້ນກາບທູນ ພະລາຊາໄດ້ຟັງກໍມີພະໄທຊື່ນຊົມຍິນດີເປັນຢ່າງຍິ່ງ.

ບັນຫາສະໂບກຂະລະນີ

ເທື່ອຫນຶ່ງ ສົມເດັດພະເຈົ້າ ວິເທຫະລາດ ໄດ້ມີພະລາຊະ ບັນຊາສັ່ງອອກໄປໃຫ້ຊາວບ້ານປາຈີນວ່າ " ເຮົາຢາກລົງອາບນ້ຳ ໃນສະໂບກຂະລະນີ ອັນເຕັມໄປດ້ວຍດອກບົວຊະນິດຕ່າງໆໃຫ້ຊາວບ້ານປາຈີນຈັດສົ່ງສະຊະນິດນັ້ນເຂົ້າໄປໃນພະລາຊະວັງ ຖ້າຈັດສົ່ງ ເຂົ້າໄປບໍ່ໄດ້ເຮົາຈະໃຫມເປັນເງິນພັນຕຳລຶງ ພວກຊາວບ້ານໄດ້ຮັບ ພະລາຊະບັນຊານັ້ນແລ້ວ ຈຶ່ງໄປບອກມະໂຫສົດໆ ໃຫ້ເລືອກຫາເອົາຄົນທີ່ສະຫລາດມາຫລາຍໆຄົນ ບອກສອນຄົນຈຳພວກນັ້ນເປັນຂໍ້ ຄວາມຫລາຍຢ່າງແລ້ວສັ່ງວ່າ ພວກທ່ານຈົ່ງພາກັນໄປຫລິ້ນນ້ຳຈົນໃຫ້ ຕາແດງ ຜ້າປຽກພົມປຽກແລ້ວ ຖືເອົາເຊືອກ ແລະ ໄມ້ຄ້ອນເຂົ້າ ໄປເຝົ້າພະເຈົ້າວິເທຫະລາດ ແລ້ວຈຶ່ງກາບທູນຕາມທີ່ເຮົາບອກເຖິ້ນຄົນພວກນັ້ນເຮັດຕາມມະໂຫສົດບອກ ແລ້ວກໍເຂົ້າໄປກາບທູນພະເຈົ້າ ວິເທຫະລາດ "ຂໍເດຊະພວກຂ້າພະບາດ ໄດ້ພາກັນເອົາສະໂບກ ຂະ

ລະນິເຂົ້າມາຖວາຍພະອົງ ຕາມພະກະແສຮັບສັ່ງ ແຕ່ວ່າສະ ໜ່ວຍ ນັ້ນເປັນສະທີ່ເຄີຍຢູ່ປ່າ ຄັນມາເຫັນພະນະຄອນ ເຫັນຄ້າຍ ເຫັນຄູ ເຫັນກຳແພງເມືອງ ກໍເລີຍຕື່ນແລ່ນກັບຄືນ ພວກຂ້າພະບາດດັ່ງ ໄວ້ ເຊືອກຂາດ ແລະ ນຳໄລ່ຕີດີງແກ່ທີ່ໃດມັນກໍບໍ່ມາ ຈຶ່ງໄດ້ມາກາບທູນ ຂໍໃຫ້ພະອົງສັ່ງສະໂບກຂະລະນິໜ່ວຍທີ່ຢູ່ໃນວັງແຕ່ເກົ່ານັ້ນອອກ ໄປ ໃຫ້ພວກຂ້າພະບາດໆ ຈະໄດ້ເອົາຜູກທຽມກັນກັບສະໜ່ວຍໃຫ່ມແລ້ວ ຄ່ອຍໆຊູເຂົ້າມາຖວາຍຂ້ານ້ອຍ " ພະເຈົ້າວິເທຫະລາດ ຕັດວ່າ " ຮ້ອາຍ ! ໃຜຊິເຄີຍເອົາສະເກົ່າອອກໄປຜູກທຽມກັບສະໜ່ວຍ ອື່ນ ໄດ້ຈັກເທື່ອ ເຮົາບໍ່ເຄີຍເຮັດດອກ ແລະ ກໍເຮັດບໍ່ໄດ້ຊ້ຳ ພວກຊາວ ບ້ານທູນວ່າ "ຂໍພະລາຊະທານອະໄພຍະໂທດ ! ຖ້າພະອົງບໍ່ສັ່ງສະ ໜ່ວຍເກົ່າອອກໄປໃຫ້ພວກຂ້າພະບາດບໍ່ໄດ້ ພວກຂ້າພະບາດກໍບໍ່ສາ ມາດສິ່ງ ສະໜ່ວຍໃໝ່ເຂົ້າຖວາຍໄດ້ຄືກັນ "

ພະເຈົ້າວິເທຫະລາດ ໄດ້ຫັງຟັງຄຳກາບທູນຂອງຊາວບ້ານກໍຫົງ ຍິ້ມຫົວແລ້ວຕັດຖາມວ່າ "ອຸບາຍເລື່ອງນີ້ ແມ່ນໃຜບອກພວກເຈົ້າ " ມະໂຫສົດບັນດິດ ຂ້ານ້ອຍ" ພວກຊາວບ້ານທູນ ພະເຈົ້າວິເທ ຫະ ລາດ ໄດ້ຊົງສະດັບ ກໍພໍພະໄທເປັນຢ່າງຍິ່ງ (ບັນຫາເລື່ອງສອນ ອຸ ທະຍານ ຄືກັນກັບບັນຫາເລື່ອງສະໂບກຂະລະນິ).

ຂັ້ນມະໂຫສົດເຂົ້າຮັບລາຊະການ

ເມື່ອສົມເດັດພະເຈົ້າວິເທຫະລາດ ໄດ້ທົດລອງປັນຍາຂອງ ມະໂຫສົດຫລາຍບົດຫລາຍຂໍ້ມາເປັນເວລາເຫິງນານແລ້ວ ດັ່ງນີ້ ແລະເທື່ອສຸດທ້າຍນີ້ ພະອົງກໍໄດ້ຕັດປິກສານຳອາຈານເສນະກະອີກ ອາຈານເສນະກະກໍທູນຄັດຄ້ານໄວ້ຕາມເຄີຍ ສົມເດັດພະເຈົ້າວິເທ ຫະລາດ ໄດ້ຟັງຄຳຄັດຄ້ານຂອງອາຈານເສນະກະດັ່ງນັ້ນແລ້ວ ຈຶ່ງ ມາດຳລິໃນພະໄທວ່າ ມະໂຫສົດນີ້ມີປັນຍາລ້ຳເລີດປະເສີດແທ້ ແມ່ນຈະເວົ້າຈະຈາສິ່ງໃດກໍຖືກຕ້ອງສາມາດແກ້ບັນຫາຕ່າງໆ ທີ່ເຮົາທົດລອງໄດ້ທຸກຂໍ້ທຸກປະການ ເມື່ອເປັນດັ່ງນີ້ ທູລະອັນໃດທີ່ເຮົາຕ້ອງຟັງ ຄຳຄັດຄ້ານຂອງອາຈານເສນະກະ ເຮົາຕ້ອງນຳເອົາມະໂຫສົດເຂົ້າມາຢູ່ໃນພະລະຊະວັງໃຫ້ຈົນໄດ້ "ຊົງດຳລິດັ່ງນີ້ແລ້ວ ຈຶ່ງສະເດັດຂຶ້ນ ຂີ່ມ້າພະທີ່ນັ່ງອອກໄປບ້ານປາຈີນພ້ອມດ້ວຍຫມູ່ເສນາອາມາດເປັນ ອັນມາກ ຄັນໄປເຖິງທົ່ງນາບ່ອນຫນຶ່ງ ມ້າພະທີ່ນັ່ງຂອງພະລາຊາ ເລີຍພະລາດຢຽບຂຸມຂີ້ຕະໂຫລກລັບແຕກເຈັບຕີນເດີນບໍ່ໄດ້ສະດວກ ພະ

ອົງຈຶ່ງສະເດັດກັບຄືນພະນະຄອນ ຝ່າຍອາຈານເສນະກະໄດ້ ຊາບຂ່າວວ່າ ສົມເດັດພະເຈົ້າວິເທຫະລາດ ສະເດັດອອກໄປຮັບເອົາມະໂຫສົດ ແຕ່ຕ້ອງສະເດັດກັບຄືນ ເພາະມ້າພະທີ່ນັ່ງພະລາດຕິກ ຫລຸມອື່ຕະໂຫລກຈົນລັບແຕກຈຶ່ງເຂົ້າໄປເຝົ້າທູນເຢີຍວ່າ " ຂໍພະລາຊະທານອະໄພໂທດ ! ເທັມບໍ ! ຂ້າພະບາດວ່າແລ້ວ ຢ່າຟ້າວໄປຮັບເອົາເຂົ້າມາ ກໍບໍ່ຟັງຄວາມຂ້າພະບາດ ນີ້ພໍອອກໄປກໍເຫັນໂທດແລ້ວ " ສົມເດັດພະເຈົ້າວິເທຫະລາດ ໄດ້ຟັງຄຳອາຈານເສນະກະ ທູນສຽດສີດັ່ງນັ້ນ ກໍເລີຍມິດບໍ່ຕັດຄຳໃດ.

ຢູ່ມາວັນໜຶ່ງ ພະລາຊາໄດ້ຕັດປຶກສານຳອາຈານເສນະກະ ວ່າ " ທ່ານອາຈານ ! ເຮົາຄວນຈະໄປຮັບເອົາມະໂຫສົດເຂົ້າມາ ຫລືປະການໃດ ? "

ເສນະກະທູນວ່າ "ຂໍເດຊະ ການເລື່ອງນີ້ ພະອົງຢ່າໄດ້ ສະເດັດໄປເອງເລີຍ ແຕ່ຄວນສົ່ງຄຳສັ່ງເປັນບັນຫາອອກໄປວ່າ " ວັນກ່ອນໆນັ້ນເຮົາໄດ້ອອກມາຫາເຈົ້າແຕ່ມ້າຂອງເຮົາພະລາດຕິກ ອື່ຕະໂຫລກລັບແຕກມາບໍ່ໄດ້ ສະນັ້ນໃຫ້ເຈົ້າຜູ້ເປັນນັກປາດ ສົ່ງມ້າ ອັດສະດອນ ຫລືມ້າເສດຖະດອນມາໃຫ້ເຮົາ " ໃຫ້ພະອົງມີພະ ລາຊະອາດຍາສົ່ງອອກໄປທຳນອງນີ້ ຖ້າມະໂຫສົດມີປັນຍາແທ້ກໍຄົງເຂົ້າໃຈໃນບັນຫານີ້ ແລ້ວກໍຈະເຂົ້າມາເຝົ້າຝ່າຍພະບາດເອງ ຫລືບໍ່ດັ່ງ ນັ້ນ

ກໍຄືງໃຫ້ບິດາເຂົ້າມາເຝົ້າ, ມ້າອັດສະດອນນັ້ນແມ່ນຕົວ ມະໂຫສົດ ເອງ ສ່ວນມ້າເສດຖະດອນແມ່ນບິດາຂອງມະໂຫສົດ" ເມື່ອອາຈານເສນະກະທູນດັ່ງນີ້ ພະເຈົ້າວິເທຫະລາດ ກໍຊົງຈັດການຕາມນັ້ນ ມະໂຫສົດຄັນໄດ້ຟັງຄຳລາຊະທູດທີ່ພະເຈົ້າແຜ່ນດິນສົ່ງອອກໄປບອກ ກໍເຂົ້າໃຈຄວາມໝາຍຂອງບັນຫານັ້ນ ໂດຍຕະຫລອດວ່າ ພະເຈົ້າແຜ່ນດິນມີພະໄທປະສົງຈະໃຫ້ຕົວເອງເຂົ້າໄປເຝົ້າ ຈຶ່ງໄປບອກບິດາອະທິບາຍເລື່ອງທີ່ພະເຈົ້າແຜ່ນດິນສົ່ງລາຊະທູດມາບອກ ໃຫ້ບິດາ ຮູ້ທຸກປະການ ຄັນແລ້ວຈຶ່ງບອກວ່າ " ໃຫ້ພໍ່ຖືເອົາອຸບໄມ້ຈັນໃສ່ ເນີຍໃສ ແລະ ເນີຍແຂ້ນ ເຂົ້າໄປຖວາຍພະລາຊາ ກັບພວກບໍລິວານ ກ່ອນ ເມື່ອພະລາຊາຊົງຮັບຕ້ອນປາໄສນຳ ແລະ ເຊີນໃຫ້ນັ່ງໃນ ທີ່ອັນສົມຄວນ ກໍໃຫ້ພໍ່ນັ່ງຢູ່ກ່ອນ ເມື່ອລູກເຂົ້າໄປໃນທີ່ນັ້ນ ແລະຫລຽວເບິ່ງພໍ່ໃຫ້ພໍ່ລຸກຈາກທີ່ນັ່ງທັນທີໂລດ ແລ້ວບອກໃຫ້ລູກໄປນັ່ງແທນ ບັນຫານີ້ເປັນບັນຫາເລິກແລບທີ່ສຸດ " ເມື່ອມະໂຫສົດແນະນຳພໍ່ດັ່ງ ນີ້ແລ້ວ ທ່ານວັດທະນະເສດຖີກໍຈັດການຕາມແຜນນັ້ນ ຄັນເຂົ້າໄປເຖິງພະລາຊະວັງກາບຖວາຍບັງຄົມແລ້ວ ພະເຈົ້າວິເທຫະລາດກໍຕັດເຊີນໃຫ້ທ່ານເສດຖີໃຫ້ນັ່ງໃນບ່ອນໜຶ່ງ ອັນເໝາະສົມກັບຕຳແໜ່ງແລ້ວພະອົງໄດ້ຕັດຖາມທ່ານເສດຖີວ່າ "ເອີ ! ນີ້ ທ່ານເສດຖີ ລູກຊາຍຂອງທ່ານຢູ່ໃສລະບໍ່ມາບໍ ? " ຂໍພະລາຊະທານ ອະໄພຍະໂທດ !

24/VII

ພອນມານຳຫລັງ ຂ້ານ້ອຍ ທ່ານເສດຖີທູນ ເມື່ອພະລາຊາໄດ້ຍິນວ່າ ມະໂຫສົດພອນມານຳຫລັງກໍດີພະໄທທີ່ສຸດ.

ຝ່າຍມະໂຫສົດ ເມື່ອເຂົ້າໄປເຝົ້າພະເຈົ້າແຜ່ນດິນໃນ ວັນນັ້ນ ທ້າວໄດ້ແຕ່ງຕົວຢ່າງຈີບງາມທີ່ສຸດ ແລ້ວກໍຂຶ້ນຂີ່ລົດທີ່ເອ້ຢ່າງດີ ພ້ອມດ້ວຍເດັກໆພັນຄົນເປັນຫມູ່ຂອງຕົນ ພໍໄປເຖິງພະລາຊະວັງ ໄດ້ ເຫັນລໍຕົວຫນຶ່ງກິນຫຍ້າຢູ່ແຄມປະຕູພະລາຊະວັງ ຈຶ່ງບອກໃຫ້ຄົນໃຊ້ ຂອງຕົນຜູ້ແຂງແຮງມັດເອົາລໍຕົວນັ້ນ ຜູກຂາມັດປາກບໍ່ໃຫ້ຮ້ອງ ແລະ ດີ້ນໄດ້ ແລ້ວກໍໃຫ້ເອົາສາດກະລາ (ສາດທີ່ສານດ້ວຍຕອກ) ມາຫຸ້ມມັດໃຫ້ດີຫາມເຂົ້າໄປນຳ ເວລານັ້ນປະຊາຊົນຊາວ ພະນະຄອນ ໄດ້ພາກັນຫລັ່ງໄຫລມາຄອຍຖ້າເບິ່ງທ້າວມະໂຫສົດ ຈົນເຕັມເດີ່ນພະ ລານເພາະໃຜໆກໍໄດ້ຊາບຂ່າວຢູ່ແລ້ວວ່າ ທ້າວມະໂຫສົດລູກຊາຍ ຂອງທ່ານວັດທະນະເສດຖີ ແຕ່ພໍເກີດອອກມາກໍຖືແທ່ງຢາສັກສິດອອກ ມານຳ ແລະ ກໍມີປັນຍາສະຫລຽວສະຫລາດສາມາດແກ້ບັນຫາຕ່າງໆ ທີ່ພະເຈົ້າ ແຜ່ນດິນສົ່ງອອກໄປທົດລອງໄດ້ທຸກຂໍ້. ຂະບວນຂອງມະ ໂຫສົດມາເຖິງປະຕູພະລາຊະວັງ ແລ້ວກໍໄດ້ຢຸດຢູ່ທີ່ນັ້ນກ່ອນ ແລ້ວມະໂຫສົດຈຶ່ງສົ່ງຄົນເຂົ້າໄປກາບທູນ ຂໍອະນຸຍາດໃຫ້ໄຂປະຕູ ພະລາຊະວັງ

ພະເຈົ້າແຜ່ນດິນ ພໍໄດ້ຊາບວ່າ ມະໂຫສົດມາເຖິງປະຕູພະລາຊະວັງແລ້ວ ກໍມີພະໄທເບີກບານ ຕັດສັ່ງວ່າ "ໃຫ້ມະໂຫສົດລູກ ຊາຍ

ຂອງເຮົາເຂົ້າມາໂລດ ! ເຂົ້າມາໂລດ ! " ທ້າວມະໂຫສົດ ໄດ້ຮັບພະບໍລິລາຊານຸຍາດດັ່ງນັ້ນ ກໍພາບໍລິວານຂອງຕົນເຂົ້າໄປໃນ ພະລາຊະວັງ ຂຶ້ນໄປເທິງພາສາດຖວາຍບັງຄົມພະບໍລິກະສັດແລ້ວ ກໍຢືນຢູ່ໃນທີ່ສົມຄວນບ່ອນໜຶ່ງ ພະມະຫາກະສັດທອດພະເນດເບິ່ງ ມະໂຫສົດ ພ້ອມກັບທົງແຍ້ມຫົວແລ້ວຕັດບອກໃຫ້ນັ່ງ ໃນທີ່ສົມຄວນຕາມ ໃຈປະສົງ ທ້າວມະໂຫສົດຈຶ່ງຫລຽວມາເບິ່ງບິດາຂອງຕົນ. ສິວັດທະ ມະເສດຖີ ເຫັນລູກຊາຍຫລຽວເບິ່ງກໍເຂົ້າໃຈຕາມທີ່ໄດ້ສັນຍາໄວ້ ຈຶ່ງລຸກຈາກບ່ອນນັ່ງຂອງຕົນແລ້ວ ຮຽກໃຫ້ມະໂຫສົດມານັ່ງ " ເຊີນລູກມານັ່ງບ່ອນນີ້ ເສດຖີບອກມະໂຫສົດກໍໄປນັ່ງເທິງບ່ອນນັ່ງຂອງພໍ່ ໃນຂະນະນັ້ນພວກຄົນໂງ່ບໍ່ມີປັນຍາ ແລະ ນັກປາດທັງ 4 ກໍພາກັນຕົບມືຫົວຂວັນມະໂຫສົດຂຶ້ນຢ່າງຊ່ວາແຊວ ແລະ ອາຈານເສນະກະ ກໍໄດ້ເວົ້າຂຶ້ນວ່າ: ຈົບເນາະ ນັກປາດຂອງພະມະຫາກະສັດສົມຄວນແລ້ວບໍ? ທີ່ໃຫ້ບິດາຂອງຕົນລຸກຈາກບ່ອນນັ່ງ ແລ້ວໂຕໄປນັ່ງແທນ; ນີ້ມັນແມ່ນຄົນອົນທະພານແທ້ໆ ! ເປັນຫຍັງຄົນທັງຫລາຍຈຶ່ງພາກັນສັນລະເສີນວ່າເປັນນັກປາດໄດ້.

ສົມເດັດພະເຈົ້າວິເທຫະລາດ ເຫັນຄົນທັງຫລາຍຫົວຂວັນ ເຢີ້ຍຫຍັນມະໂຫສົດ ກໍມີພະໄທເສົ້າສະລົດ ພະພັກໜ້ອມລົງ ຄັນແລ້ວມະໂຫສົດຈຶ່ງທູນຖາມພະລາຊາວ່າ "ຂໍທານໂທດໃຕ້ຝ່າລະອອງພະບາດ

ເປັນຫຍັງພະອົງຈຶ່ງມີພະພັກໝື່ນໝອງບໍ່ເບີກບານ ຂ້ານ້ອຍ"

" ເອີ ! ເຈົ້າຜູ້ເປັນນັກປາດ ! ເມື່ອແຕ່ກ່ອນເຮົາຍັງບໍ່ ໄດ້ເຫັນໜ້າເຈົ້າ ເຮົາກໍຄິດຮັກເຈົ້າພໍໃຈໃນເຈົ້າເປັນອັນມາກແຕ່ເມື່ອໄດ້ເຫັນໜ້າເຈົ້າແລ້ວ ກໍເລີຍຮູ້ສຶກບໍ່ພໍໃຈ " ພະລາຊາຕັດ ບອກຕາມຈິງ ພະອົງໄດ້ເຫັນອັນໃດ ຈຶ່ງໄດ້ມີພະໄທປ່ຽນແປງໄປຢ່າງນັ້ນ " ມະໂຫສົດຖາມ " ຍ້ອນເຈົ້າໃຫ້ພໍ່ລຸກຈາກບ່ອນນັ່ງ ແລ້ວເຈົ້າໄປນັ່ງແທນນັ້ນເອງ " ພະລາຊາບອກ "

ມະໂຫສົດຖາມ " ອັ້ນຊື່ວ່າພໍ່ແລ້ວ ຕ້ອງປະເສີດກວ່າລູກ ໃນທຸກໆກໍລະນີ ຫລືຂ້ານ້ອຍ"

" ປະເສີດກວ່າ ໃນທຸກໆກໍລະນີ" ພະລາຊາບອກມະໂຫສົດຈຶ່ງທູນວ່າ " ເອີ ! ຊັ້ນການທີ່ພະອົງສົ່ງຄຳສັ່ງອອກໄປບອກໃຫ້ສົ່ງມ້າອັດສະດອນ ຫລືມ້າເສດຖະດອນ (ມ້າວິເສດ ຫລືພໍ່ຂອງມ້າວິເສດ) ເຂົ້າມາຖວາຍນັ້ນ ແມ່ນແນວນີ້ " ມະໂຫສົດທູນດັ່ງນັ້ນແລ້ວ ຈຶ່ງໃຫ້ຄົນໄປເອົາລໍມາວາງລົງໃກໆພະລາຊາແກ້ສາດທໍ່ອອກ ແລ້ວທູນຖາມພະລາຊາວ່າ " ຂໍເດຊະ ! ລໍໂຕນີ້ ລາຄາທໍ່ໃດ ຂ້ານ້ອຍ " ພະລາຊາ "ປະມານຈັກ 8 ຕຳລຶງທໍ່ນັ້ນແລ້ວ ມະໂຫສົດ "ຖ້າຢ່າງນັ້ນ ມ້າອັດສະດອນ ຊຶ່ງເກີດຈາກພໍ່ທີ່ເປັນລໍມີລາຄາທໍ່ໃດ ຂ້ານ້ອຍ"

" ໂອລາຄາແພງທີ່ສຸດ ກຳນົດບໍ່ໄດ້ດອກ " ພະລາຊາບອກ

" ນີ້ແຫລະຂ້ານ້ອຍ " ມະໂຫສົດວ່າ "ທຳອິດພະອົງບອກວ່າພໍ່ປະເສີດກ່ວາລູກໃນທຸກກໍລະນີ ຖ້າຫາກເປັນຢ່າງນັ້ນແທ້ ລໍຕົວນີ້ ກໍຕ້ອງປະເສີດກ່ວາມ້າອັດສະດອນ ລາຄາແພງກ່ວາມ້າອັດສະ ດອນ ເພາະວ່າ ລໍ (1) ເປັນພໍ່ຂອງມ້າອັດສະດອນ, ຖ້າພໍ່ປະເສີດກ່ວາລູກໃນທຸກກໍລະນີ ຄືດັ່ງພະອົງວ່າແລ້ວ ລໍຕົວນີ້ກໍປະເສີດກ່ວາມ້າ ອັດສະດອນເປັນແນ່ແທ້ ສະນັ້ນ ຖ້າພະອົງເຫັນວ່າ ພໍ່ດີກ່ວາລູກໃນທຸກກໍລະນີແລ້ວ ກໍຂໍໃຫ້ພະອົງຮັບເອົາພໍ່ຂອງຂ້າພະບາດໄວ້ສາ ! ແຕ່ຖ້າເຫັນວ່າລູກດີກ່ວາກໍມີແລ້ວ ກໍຈຶ່ງຮັບເອົາຂ້າພະບາດໄວ້; ນັກ ປາດທັງ 4 ຄົນຂອງພະອົງນັ້ນ ພະອົງໄດ້ມາແຕ່ໃສ ບັນທາພຽງທໍ່ນີ້ ຍັງຄິດບໍ່ຊອດ ແລ້ວຍັງພາກັນຫົວຂ້ວນ ຂ້ານ້ອຍດ້ວຍ, ໂອ ! ນັກປາດທັງ 4 ຂອງພະອົງມີປັນຍາຫນ້າອັດສະຈັນແທ້ໆ

ເມື່ອມະໂຫສົດກ່າວແກ້ຖ້ອຍຄຳທັງປວງ ສ້ຽງສຸດລົງແລ້ວ ສົມເດັດພະເຈົ້າວິເທຫະລາດ ກໍຊົງພໍພະໄທ ມີພະພັກຍິ້ມແຍ້ມແຈ່ມ ໃສປານແກ້ມຊິໂຢດ, ຝ່າຍພວກເສນາອາມາດລະຊະບໍລິວານທີ່ ເຝົ້າແຫນຢູ່ໃນທີ່ນັ້ນ ກໍພາກັນສະແດງຄວາມຊື່ນຊົມຍິນດີຕົບມືຮ້ອງສົ່ງສຽງ

---

(1) ມ້າອັດສະດອນເປັນມ້າດີແລ່ນໄວທີ່ສຸດ ແຕ່ສະໄຫມບູຮານ ຈຶ່ງຖືວ່າມ້າອັດສະດອນເປັນມ້າປະເສີດ ແຕ່ແທ້ຈິງແລ້ວ ມ້າອັດສະດອນເປັນມ້າປະສົມ ຄືແມ່ເປັນມ້າທຳມະດາ ແຕ່ພໍ່ເປັນມ້າລໍ.

ສາທຸການ ລາວຄົນກໍເອົາຜ້າຜູກໃສ່ປາຍໄມ້ສາວ ໃຫ້ເປັນທຸງ ແລ້ວຍົກຂຶ້ນແກ່ວງ ສະແດງຄວາມຍິນດີເປັນທີ່ສຸດ ສ່ວນນັກປາດເກົ່າທັງ4 ຄົນນັ້ນ ພາກັນນັ່ງເຮັດຫນ້າຫມ້ອມຢູ່ ບໍ່ສາມາດຈະເງີຍຫນ້າເບິ່ງ ຜູ້ໃດໄດ້.

ມີຄວາມຖາມວ່າ ເຫດໃດມະໂຫສົດ ຈຶ່ງເຮັດແນວນີ້ ຊຶ່ງ ເປັນການຖືທຸ່ມບິດາຂອງຕົນຄືກັບວ່າເປັນຄົນອະກະຕັນຍູຕໍ່ບິດາ ຂໍ້ນີ້ ເພິ່ນແກ້ວ່າ ມະໂຫສົດບໍ່ໄດ້ທຳການດູຫມິ່ນດູແຄວນບິດາເລີຍ ແຕ່ການ ທີ່ເຮັດໄປແນວນັ້ນ ກໍເພື່ອແກ້ບັນຫາຂອງພະລາຊາ ໃນຂໍ້ທີ່ພະອົງ ສັ່ງອອກໄປວ່າ ໃຫ້ມະໂຫສົດສົ່ງມ້າອັດສະດອນເຂົ້າມາໃຫ້ ຫລືບໍ່ດັ່ງນັ້ນກໍໃຫ້ສົ່ງມ້າເສດຖະດອນ (ພໍ່ຂອງມ້າອັດສະດອນ) ເຂົ້າມາແລະອີກປະການຫນຶ່ງ ກໍເພື່ອສະແດງປັນຍາຄວາມສາມາດຂອງຕົນໃຫ້ ນັກປາດທັງ 4 ຄົນນັ້ນ ເຫັນແຈ້ງດ້ວຍຕົນເອງ.

ຄັນເສັດສ້ຽງການກ່າວແກ້ບັນຫາ ແລະ ມະຫາຊົນທັງຫລາຍມິດສຽງລົງແລ້ວ ສົມເດັດພະເຈົ້າວິເທຫະລາດ ຈຶ່ງຊົງຈັບເອົາພະເຕົ້ານ້ຳທອງຄຳຢາດລົງໃສ່ຝ່າມືຂອງສີວັດທະນະເສດຖີ ຂໍເອົາມະໂຫສົດໄວ້ເປັນພະໂອລົດ ແລ້ວກໍພະລາຊະທານບ້ານປາຈີນໃຫ້ເປັນສິດເດັດຂາດແກ່ທ່ານເສດຖີ ພ້ອມທັງອະນຸເສດຖີພັນຄົນກໍມອບໃຫ້ເປັນ ບໍລິວານດ້ວຍ ນອກຈາກນີ້ພະອົງຍັງໄດ້ພະລາຊະທານເຄື່ອງປະດັບ ສັບ

ພະອາພອນອອກໄປໃຫ້ແກ່ນາງສຸມມະນະເທວີມານດາຂອງມະໂຫສົດ ນຳອີກ ສີລິວັດທະນະເສດຖີຂາບຖວາຍບັງຄົມພະມະຫາກະສັດ ແລ້ວກໍລຸກຂຶ້ນອຸ້ມກອດຈູບຈົມລູກຊາຍຂອງຕົນ ແລະ ສັ່ງສອນວ່າ " ລູກເອີຍ ! ຕັ້ງແຕ່ນີ້ຕໍ່ໄປລູກໄດ້ເປັນຂ້າຫັດຖະບາດຂອງພະກະສັດແລ້ວ ລູກຢ່າໄດ້ປະມາດ ຈົ່ງປະຕິບັດລາຊະການໃຫ້ເປັນທີ່ຖືກຕ້ອງຕາມພະລາຊະປະສົງທຸກປະການເຖີດ " ມະໂຫສົດຂາບບິດາແລ້ວຕອບວ່າ" ຂໍພໍ່ຢ່າໄດ້ວິຕົກເລີຍ ແລ້ວສີລິວັດທະນະເສດຖີກໍຖວາຍບັງຄົມ ລາພະເຈົ້າວິເທຫະລາດກັບຄືນມາບ້ານຂອງຕົນ.

ຄັນສີລິວັດທະນະເສດຖີ ທູນລາກັບໄປແລ້ວ ສົມເດັດພະເຈົ້າ ວິເທຫະລາດ ຈິ່ງຕັດກັບມະໂຫສົດວ່າ "ເອີ ! ນີ້ລູກ !ລູກຕ້ອງການເປັນຂ້າຫລວງເຮືອນໃນ ຫລືຈະເປັນຂ້າຫລວງເຮືອນນອກ "ມະໂຫສົດທູນວ່າ " ຂ້າພະບາດມີພັກພວກບໍລິວານຫລາຍຈະຢູ່ໃນພະລາຊະວັງເຫັນຈະບໍ່ສະດວກ ຂໍຮັບພະລາຊະທານເປັນຂ້າຫລວງເຮືອນນອກຂ້ານ້ອຍ ເມື່ອມະໂຫສົດທູນດັ່ງນີ້ ພະເຈົ້າວິເທຫະລາດກໍໃຫ້ຈັດແຈ່ງຫາເຮືອນຫລັງໃຫ່ຍໆ ຢູ່ນອກພະລາຊະວັງໃຫ້ມະໂຫສົດ ແລະ ພະລາຊະທານເບັ້ຍຫວັດເງິນປີ ເສື້ອຜ້າໃຫ້ແກ່ມະໂຫສົດຕະຫລອດເຖິງບໍລິວານ ແລະ ຄົນໃຊ້ຖ້ວນທຸກໆຄົນ ນັບແຕ່ນັ້ນມາ ມະໂຫສົດກໍ ໄດ້ເປັນຂ້າລາຊະການໃນພະລາຊະສຳນັກຂອງພະມະຫາກະສັດປະຕິບັດ

ລາຊະການເປັນປົກຕິສືບມາ.

ບັນຫາເລື່ອງແກ້ວຢູ່ປາຍຕານ

ເວລານັ້ນ ມີແກ້ວມະນີໜ່ວຍໜຶ່ງ ຢູ່ໃນຮັງກາທີ່ເທິງປາຍຕານ ແລະ ກົກຕານຕົ້ນນັ້ນ ຢູ່ແຄມຝັ່ງສະທີ່ຢູ່ໃກ້ພັກຕູ ພະນະຄອນ ທາງດ້ານໃຕ້ ເງົາຂອງແກ້ວໜ່ວຍນັ້ນ ລົງມາພາກົດຢູ່ໃນສະຄົນທັງຫຼາຍເລີຍເຂົ້າໃຈວ່າແກ້ວໜ່ວຍນັ້ນມີຢູ່ໃນສະ ຈຶ່ງພາກັນເຂົ້າມາທູນ ພະເຈົ້າແຜ່ນດິນໆ ຈຶ່ງຕັດສັ່ງໃຫ້ອາຈານເສນະກະອອກໄປເອົາ ແກ້ວໜ່ວຍນັ້ນມາໃຫ້ ອາຈານເສນະກະ ໄດ້ເກນເອົາຄົນອອກໄປ ສະນ້ຳໃນສະນັ້ນຈົນບົກແຫ້ງແລ້ວລົງ ໄປຊອກເອົາແກ້ວແຕ່ກໍບໍ່ໄດ້ເຫັນ ແກ້ວໜ່ວຍນັ້ນເລີຍ ຄົນເປີ່ງນ້ຳຄືນໃສ່ສະໃຫ້ເຕັມຄືເກົ່າກໍຫລຽວ ເຫັນແກ້ວໃນສະນັ້ນອີກ ເສນະກະກໍເກນຄົນໃຫ້ສະນ້ຳນັ້ນຊອກຫາແກ້ວອີກທຳດັ່ງນີ້ຫລາຍເທື່ອຫລາຍທີແຕ່ກໍບໍ່ໄດ້ແກ້ວຕາມທີ່ຕ້ອງການ ສົມເດັດພະເຈົ້າວິເທຫະລາດຕັດສັ່ງໃຫ້ເສນະກະ ໄປເອົາແລ້ວໃນສະບໍ່ໄດ້ສົມຫວັງ ຈຶ່ງຕັດຮຽກມະໂຫສົດເຂົ້າມາຖາມວ່າ " ເຈົ້າຍັງຈະຄິດອ່ານເອົາແກ້ວໃນສະມາໃຫ້ພໍ່ໄດ້ບໍ ?" ມະໂຫສົດທູນວ່າ "ຂໍເດຊະ ! ສ່ຳ

ພິຈະລິດເອົາແກ້ວໃນສະນັ້ນ ມັນບໍ່ຍາກດອກ ຂໍເຊີນພະອົງສະເດັດ ໄປນຳ ຂ້າພະບາດໆຈະເອົາຖວາຍໂດຍບໍ່ຍາກເລີຍ "ທູນດັ່ງນີ້ແລ້ວ ມະໂຫສົດກໍພາພະເຈົ້າວິເທຫະລາດສະເດັດອອກໄປທີ່ສະຫນ່ອຍ ມີ ແກ້ວຢູ່ໃນສະກໍຮູ້ທັນທີໂລດວ່າ ແກ້ວມີຢູ່ເທິງປາຍຕານຕ່າງຫາກບໍ່ໄດ້ ມີຢູ່ໃນສະເລີຍ ເຂົ້າໃຈດັ່ງນີ້ແລ້ວ ຈຶ່ງທູນພະມະຫາກະສັດວ່າ "ໂດຍ ທານໂທດ ! ແກ້ວມະນີນັ້ນບໍ່ໄດ້ມີຢູ່ໃນສະດອກ ! "ໂຢ້ວ ! ມັນ ເຫັນຢູ່ໃນນ້ຳຈັ່ງຊີ້ເປັນຫຍັງຈຶ່ງວ່າບໍ່ມີ " ພະລາຊາຕັດ "ຖ້າພະອົງ ຍັງສົງໄສ ຂ້າພະບາດຈະທົດລອງໃຫ້ທອດພະເນດ" ມະໂຫສົດ ທູນ ແລ້ວມະໂຫສົດຈຶ່ງເອົາຊາມອ່າງໃຫຍ່ໃສ່ນ້ຳມາວາງລົງໃນທີ່ນັ້ນແລ້ວ ກໍທູນພະລາຊາວ່າ " ໂດຍທານໂທດ ! ຖ້າພະອົງຍັງສົງໄສ ວ່າ ແກ້ວມີຢູ່ໃນສະແລ້ວ ກໍຂໍເຊີນທອດພະເນດເບິ່ງຊາມອ່າງນີ້ ຈະເຫັນ ແກ້ວຫລືບໍ ? " ພະເຈົ້າວິເທຫະລາດ ທອດພະເນດເຫັນເງົາແກ້ວ ຢູ່ໃນຊາມອ່າງ ຈຶ່ງຕັດຖາມມະໂຫສົດວ່າ " ເອີ ! ລູກຖ້າຢ່າງນັ້ນ ແກ້ວຫນ່ວຍນີ້ມັນຢູ່ໃນບ່ອນໃດ ?"

" ຂໍພະລາຊະທານໂທດ ! ຂ້າພະບາດເຫັນວ່າແກ້ວນີ້ມີຢູ່ ໃນ ຮັງກາເທິງປາຍຕານ " ມະໂຫສົດກາບທູນດັ່ງນີ້ແລ້ວ ກໍໃຊ້ຊາຍຄົນ ຫນຶ່ງຂຶ້ນໄປເອົາແກ້ວຢູ່ໃນຮັງກາເທິງປາຍຕານລົງມາຖວາຍ ພະລາ ຊາ ຄົນທັງຫລາຍເຫັນດັ່ງນັ້ນ ກໍພາກັນສັນລະເສີນປັນຍາ ມະໂຫສົດ

ອອກຈີນຊ່ວາແຊວ ແລ້ວກໍພາກັນວ່າໃຫ້ເສນະກະວ່າ ອາຈານເສນະກະນີ້ບອກໃຫ້ສະນ້ຳຊຸດຝັ່ງສະເນື່ອຍລ້າໆ ບໍ່ເຫັນໄດ້ຄວາມເລີຍຝ່າຍສິນເດັດພະເຈົ້າວິເທຫະລາດຊົງໂສມະນັດເປັນອັນມາກ ຈຶ່ງ ພະລາຊະທານແກ້ວມຸກດາອັນເປັນເຄື່ອງປະດັບຄໍແຫ່ງ ພະອົງໃຫ້ມະໂຫສົດ ແລະ ຊົງປະທານກ້ອງຂາແກ້ວມຸກດາໃຫ້ພວກເດັກນ້ອຍພັນຄົນທີ່ເປັນບໍລິວານຂອງມະໂຫສົດນັ້ນດ້ວຍ ພະອົງຕັດວ່າ ເຮົາປະທານໃຫ້ເປັນເຄື່ອງປະດັບສຳລັບໃສ່ເຂົ້າມາເຝົ້າ ເມື່ອເຂົ້າມາເຝົ້າເທື່ອໃດ ຈຶ່ງໃສ່ເຄື່ອງ ປະດັບນີ້ເຂົ້າມາ ພະມະຫາກະສັດ ພະລາຊະທານ ລາງວັນສຳເລັດແລ້ວ ກໍຊົງຕັ້ງມະໂຫສົດເປັນເສນາບໍດີ (ເປັນລັດຖະມົນຕີ) ຕັ້ງແຕ່ວັນນັ້ນມາ.

24 / VII
ຫ້າມຈຳໜ່າຍ

ບັນຫາເລື່ອງກະປອມກ່າ

ຢູ່ມາວັນໜຶ່ງ ສົມເດັດພະເຈົ້າວິເທຫະລາດ ສະເດັດອອກ ໄປປະພາດພະລາຊະອຸທະຍານ ພ້ອມດ້ວຍມະໂຫສົດ ເວລານັ້ນມີ ກະປອມກ່າຕົວໜຶ່ງວອຍຢູ່ຫົວເສົາໃກ້ຜັກຕູ ພະລາຊະອຸທະຍານກະປອມຕົວນັ້ນເມື່ອເຫັນພະລາຊາຊາສະເດັດມາກໍລົງມາຈາກຫົວເສົາ ມາໝອບຢູ່ທີ່ແຜ່ນດິນ, ພະເຈົ້າວິເທຫະລາດໄດ້ທອດພະເນດເຫັນ ກິລິຍາຂອງກະປອມດັ່ງນັ້ນ ຈຶ່ງຕັດຖາມມະໂຫສົດວ່າ "ນີ້! ມະໂຫສົດ! ກະປອມຕົວນີ້ ມັນເຮັດຫຍັງແນວນີ້ " ຂໍພະລາຊະທານອະໄພໂທດ! ກະປອມຕົວນີ້ມັນສະແດງຄວາມເຄົາລົບຕໍ່ພະອົງ ຢາກຄົບຫາສະ ມາຄົມເປັນຂ້າຂອງພະອົງ ມະໂຫສົດທູນ" ເອີ ! ຖ້າມັນຕ້ອງການຄົບຫາສະມາຄົມກັບເຮົາໆ ກໍຈະບໍ່ໃຫ້ມັນເສຍປຽບ ເຈົ້າຈຶ່ງຈັດແຈ່ງຊັບສົມບັດໃຫ້ມັນ " ພະລາຊາຕັດສັ່ງ.

" ຂໍພະລາຊະທານໂທດ ! ທຳມະດາສັດເດຍລະສານສາມັນບໍ່ຕ້ອງການຊັບສົມບັດອີສັງດອກ ມັນຕ້ອງການແຕ່ອາຫານທໍ່ນັ້ນ ຖ້າຈະ

ຊົງພະກະລຸນາກໍຈຶ່ງພະລາຊະທານແຕ່ອາຫານໃຫ້ມັນກໍພໍແລ້ວ" ມະໂຫສົດທູນ " ກະປອມມັນກິນຫຍັງ " ພະລາຊາຖາມ "ໂດຍ ທານໂທດ ! ມັນກິນແຕ່ຊີ້ນທໍ່ນັ້ນ" ພະເຈົ້າວິເທຫະລາດ ໄດ້ຟັງມະ ໂຫສົດບອກ ຈຶ່ງພະລາຊະທານເງິນໃຫ້ຊື້ຊີ້ນມາໃຫ້ກະປອມກິນວັນ ລະເຄື່ອງມາສົກ (ປະມານວັນລະ 3 ອັດ ຫລື 6 ສະຕາງ)ແລ້ວ ຕັ້ງຊາຍຄົນຫນຶ່ງໄວ້ໃຫ້ເປັນຜູ້ຈັດຊີ້ນມາໃຫ້ມັນ ຢູ່ມາໃນວັນຫນຶ່ງເປັນ ວັນສິນ ຊາຍຄົນນັ້ນໄປຫາຊື້ຊີ້ນບໍ່ໄດ້ ຈຶ່ງເອົາທອງແດງລາຄາເຄື່ອງ ມາສົກນັ້ນມາເຈາະເອົາເຊືອກຮ້ອຍແຂວນຄໍໃຫ້ມັນ ກະປອມຕົວນັ້ນ ອາໃສເຫດທີ່ວ່າມີຊັບເຄື່ອງມາສົກແຂວນຄໍທໍ່ນັ້ນ ກໍເກີດຄວາມຈອງ ຫອງຖືຕົວຄຶດວ່າ ".ເອີ ! ມັນຈະມີຊັບມາກແຕ່ພະເຈົ້າວິເທຫະລາດບໍ ? ກູກໍມີຄືກັນ" ດັ່ງນີ້ແລ້ວກໍບໍ່ລົງມາເຄົາລົບພະມະຫາກະສັດ ມີແຕ່ ຍົກຄໍເບີດຢູ່ເທິງຫົວເສົາ ສົມເດັດພະເຈົ້າວິເທຫະລາດທອດພະ ເນດເຫັນກິລິຍາຂອງກະປອມດັ່ງນັ້ນ ຈຶ່ງຖາມມະໂຫສົດວ່າ " ນີ້! ມະໂຫສົດ ! ກະປອມຕົວນີ້ບໍ່ລົງມາຈາກເສົາຄືແຕ່ກ່ອນ ມັນເປັນຍ້ອນເຫດອັນໃດ ?"

ມະໂຫສົດທູນວ່າ " ຂໍພະລາຊະທານໂທດ ! ໃນວັນສິນທີ່ແລ້ວມານີ້ຄົນຊື້ຊີ້ນເຫັນຈະບໍ່ໄດ້ຊີ້ນມາໃຫ້ມັນ ຈຶ່ງເອົາເງິນເຄື່ອງມາສົກນັ້ນຜູກແຂວນຄໍມັນໄວ້ ກະປອມຕົວນີ້ບໍ່ເຄີຍມີຊັບ ເມື່ອມາໄດ້ຊັບທໍ່ນັ້ນ ກໍ

ເລີຍເກີດຄວາມຈອງຫອງອວດອ້າງວ່າ " ຕົວມີຊັບສະເໝີ ພະອົງຈຶ່ງບໍ່ໄດ້ລົງມາຖວາຍບັງຄົມ " ພະເຈົ້າວິເທຫະລາດ ຈຶ່ງຕັດ ຖາມຜູ້ລ້ຽງກະປອມໆກໍກາບທູນເໝືອນດັ່ງມະໂຫສົດໄດ້ບອກມາແລ້ວເມື່ອພະອົງໄດ້ຟັງຈຶ່ງດຳລິວ່າ " ເອີ ! ມະໂຫສົດ ນີ້ບໍ່ເຫັນວ່າໄດ້ ຖາມຜູ້ໃດ ອອກມາສວນນີ້ພ້ອມກັບເຮົາແລ້ວມາເວົ້າເລື່ອງຫົວໝົດນີ້ປານວ່າໄດ້ເຫັນມາກ່ອນ ເອີ ! ຊ່າງຮູ້ຈັກນິໄສຂອງກະປອມໄດ້ ໜ້າອັດສະຈັນແທ້ໆ " ຊົງດຳລິແລ້ວ ກໍເກີດຄວາມເຊື່ອໝັ້ນໃນປັນ ຍາຂອງມະໂຫສົດເປັນຢ່າງຍິ່ງ ຈຶ່ງພະລາຊະທານສ່ວຍສາອາກອນ ອັນເກັບໄດ້ຈາກບ້ານທັງສີ່ທີ່ຢູ່ໃກ້ພັກຕູ ພະນະຄອນທັງສີ່ທິດນັ້ນ ໃຫ້ແກ່ມະໂຫສົດ ແລ້ວຊົງພິໂລດຈະໃຫ້ທຳໂທດກະປອມຕົວນັ້ນ ມະໂຫ ສົດຈຶ່ງທູນຂໍອະໄພໂທດກະປອມວ່າ " ຂໍທານໂທດ ! ກະປອມມັນເປັນສັດເດຍລະສານບໍ່ມີປັນຍາ ຂໍພະອົງຈົ່ງອະໄພໃຫ້ມັນເສຍ " ພະລາຊາກໍປະທານອະໄພໂທດໃຫ້ຕາມຄວາມຮ້ອງຂໍຂອງມະໂຫສົດ.

ເລື່ອງພະນາງອຸທຸມພອນ

ໃນຄາວນັ້ນ ມີຊາຍໜຸ່ມຄົນໜຶ່ງ ຊື່ປົງຄຸຕະລະເປັນຄົນ ຊາວເມືອງມິຖິລາ ຊາຍໜຸ່ມຄົນນີ້ໄດ້ໄປຮຽນໜັງສືຢູ່ໃນສຳນັກຂອງ ອາຈານທິສາປາໂມກເມືອງຕັກກະສີລາ ແລະ ໄດ້ເປັນສິດຕົນຢູ່ໃນ ສຳນັກຂອງອາຈານ ທຳນຽມຂອງອາຈານທິສາປາໂມກເມືອງຕັກກະ ສີລານັ້ນ ຖ້າອາຈານມີລູກສາວຕ້ອງຍົກລູກສາວໃຫ້ເປັນພັນລະຍາຂອງ ລູກສິດຕົ້ນກ່ອນ. ສະນັ້ນອາຈານທິສາປາໂມກຈຶ່ງໄດ້ຍົກລູກສາວຂອງ ຕົນໃຫ້ປົງຄູຕະລະ ຜູ້ເປັນສິດຕົນ ຕາມທຳນຽມ ແຕ່ໜຸ່ມປົງຄູ ຕະລະເປັນຄົນກາລະຂິນີມີບຸນວາດສະໜານ້ອຍ ບໍ່ຄູ່ຄວນກັບນາງກຸມາລີ ຜູ້ມີບຸນວາດສະໜາຫລາຍ ຈຶ່ງບັງເອີນໃຫ້ຄິດຊັ່ງນາງນັ້ນເປັນ ທີ່ສຸດ ແຕ່ກໍ່ຂັດອາຈານບໍ່ໄດ້ຈຳເປັນຕ້ອງໄດ້ຮັບເອົາສະນັ້ນເວລາເຂົ້ານອນ ເມື່ອນາງຂຶ້ນໄປນອນເທິງຕຽງນຳປົງຄຸຕະລະໆ ກໍລຸກລົງມາ ນອນຢູ່ພື້ນ ຄັນນາງລົງມານອນຢູ່ພື້ນນຳເຂົາກໍຫລົບຂຶ້ນໄປນອນເທິງ ຕຽງ ເປັນຢູ່ດັ່ງນີ້ຕະຫລອດ 7 ວັນ ເມື່ອຄົບ 7 ວັນແລ້ວຊາຍໜຸ່ມກໍເຂົ້າ ໄປລາອາຈານກັບຄືນມາເມືອງຂອງຕົນ ສ່ວນນາງກູມາລີຜູ້ເປັນເມຍ

ນັ້ນກໍຕິດຕາມມານຳ ເວລາມານຳທາງກໍບໍ່ໄດ້ເວົ້າຈານຳກັນ ເລີຍແມ່ນແຕ່ຄຳດຽວ ເມື່ອເດີນທາງໄກຈາກເມືອງຕັກກະສີລານາ ແລ້ວຊາຍຫນຸ່ມໄດ້ເຫັນຫມາກເດື່ອຕົ້ນຫນຶ່ງ ເປັນຫມາກສຸກແດງເຮື່ອ ຢູ່ແຄມທາງ ເຂົາມີຄວາມຫິວເຂົ້າຫລາຍ ຈຶ່ງຂຶ້ນໄປກິນນາງກຸມາລີ ມີຄວາມຫິວເຂົ້າຄືກັນ ຈຶ່ງຮ້ອງຂໍໃຫ້ຊາຍຫນຸ່ມປິດຖິ້ມລົງມາໃຫ້ກິນ ປິວດູຕະລະໄດ້ຕອບນາງວ່າ "ຕີນມີເຈົ້າ ບໍ່ມີຫວະ ? ເປັນຫຍັງບໍ່ ຂຶ້ນມາກິນເອງ " ນາງກຸມາລີ ໄດ້ຍິນດັ່ງນັ້ນຈຶ່ງປີນຂຶ້ນໄປຫາເກັບ ກິນເອງ ຝ່າຍຊາຍຫນຸ່ມພໍເຫັນນາງຂຶ້ນໄປເທິງຕົ້ນໄມ້ກໍຟ້າວລົງມາເອົາຮຽວຫນາມສູມຕົ້ນເດື່ອໄວ້ແລ້ວກໍຟ້າວຫນີໄປ ເມື່ອເຂົາຈະຫນີ ເຂົາໄດ້ຮ້ອງຂຶ້ນວ່າ " ເທື່ອນີ້ກູພົ້ນທຸກແລ້ວ" ສ່ວນນາງກຸມາລີ ຢາກລົງຈາກຕົ້ນເດື່ອກໍລົງບໍ່ໄດ້ ໄດ້ຮ້ອງໄຫ້ຢູ່ເທິງຕົ້ນເດື່ອນັ້ນ.

ໃນວັນນັ້ນ ສົມເດັດພະເຈົ້າວິເທຫະລາດ ໄດ້ສະເດັດອອກ ໄປປະພາດພະລາຊະອຸທະຍານ ຄັນເຖິງເວລາຄ້າຍຄ່ຳ ກໍສະເດັດ ຂຶ້ນປະທັບຄໍຊ້າງກັບເຂົ້າມາພະນະຄອນ ມາເຖິງລະຫວ່າງກາງທາງໄດ້ທອດພະເນດເຫັນນາງສາວນັ່ງຮ້ອງໄຫ້ຢູ່ເທິງຕົ້ນເດື່ອ ກໍມີພະໄທຄິດມັກ ຈຶ່ງໃຊ້ອຳນາດຄົນສະນິດໄປຖາມເບິ່ງ ກໍໄດ້ຊາບຄວາມວ່ານາງຖືກສາມີຖິ້ມປະຫນີໄປແລ້ວ ພະອົງຈຶ່ງຂີ່ຊ້າງເຂົ້າໄປໃຕ້ຕົ້ນເດື່ອ ຮັບເອົານາງຂຶ້ນຫລັງຊ້າງ ພາເຂົ້າໄປໃນພະນະຄອນ ແລ້ວທົງຕັ້ງນາງ

ໄວ້ເປັນອັກຄະມະເຫສີ ພະລາຊະທານນາມໃຫ້ວ່າ ອຸທູມພອນລາຊະເທວີ (ປ. ອຸທຸມພອນ ແປວ່າ ຕົ້ນເດື່ອ)

ຢູ່ມາວັນໜຶ່ງ ສົມເດັດພະເຈົ້າວິເທຫະລາດ ກັບພະນາງອຸ ທຸມພອນ ສະເດັດປະທັບລາຊະລົດອອກໄປທ່ຽວຫລິ້ນສວນອຸທະຍານ ໃນວັນນັ້ນພວກເຈົ້າໜ້າທີ່ໄດ້ເກນຊາວບ້ານທີ່ຢູ່ໃກ້ພັກຕູ ພະນະຄອນນັ້ນອອກໄປກັ້ນຖາງຫົນທາງທີ່ຈະສະເດັດ ໜຸ່ມປົງຄຸຕະລະທີ່ປະນາງ ອຸທູມພອນຖິ້ມໄວ້ຕົ້ນເດື່ອນັ້ນ ກໍຖືກເກນໄປຖາງທາງດ້ວຍ ເຂົານຸ່ງຜ້າເໜັບຕ່ຽວຈຳກົ້ນ ຖືພ້າຖາງຫຍ້າຢູ່ແຄມທາງທີ່ເຮັດບໍ່ທັນແລ້ວ ກໍພໍດີພະເຈົ້າແຜ່ນດິນສະເດັດມາເຖິງ ພະນາງອຸທຸມພອນໄດ້ເຫັນ ຊາຍໜຸ່ມຄົນນັ້ນຖາງຫຍ້າຢູ່ກໍຈື່ໄດ້ ນາງຈຶ່ງມາຄິດຮ່ຳຮອນໃນໃຈວ່າ"ຊາຍໜຸ່ມຄົນນີ້ເປັນກາລະຂິນີບໍ່ສາມາດຈະທະລົງສີລິໄວ້ໄດ້ ຈຶ່ງປະກູ ຖິ້ມໄວ້ທີ່ຕົ້ນໝາກເດື່ອແລ້ວໜີມາ ກູຄິດວ່າມັນໄປຮອດຊິໃດແລ້ວ ບາດທີ່ແທ້ໂລດມາຖາງຫຍ້າຢູ່ທີ່ນີ້ເອງ" ພະນາງເຈົ້າອຸທູມພອນຄິດດັ່ງ ນີ້ແລ້ວກໍອົດຫົວບໍ່ໄດ້ ສົມເດັດພະເຈົ້າວິເທຫະລາດ ໄດ້ທອດພະ ເນດເຫັນພະນາງອຸທູມພອນຫົວຈຶ່ງຕັດຖາມວ່າ " ເອີຍ ! ເຈົ້າຫົວຂັນຫຍັງ " .

ພະນາງທູນວ່າ " ຂໍພະລາຊະທານ ! ຊາຍຄົນທີ່ຖາງຫຍ້າຢູ່ນີ້ເປັນຜົວເກົ່າຂອງຂ້ານ້ອຍ ປະຂ້ານ້ອຍຖິ້ມໄວ້ຕົ້ນເດື່ອແລ້ວໜີ ໄປ

ຂ້ານ້ອຍເຫັນຫນ້າເຂົາແລ້ວກໍຄິດວ່າ ເຂົາເປັນຄົນກາລະຂີນີບໍ່ ສາມາດຮັກສາສີລີອັນເປັນນຶ່ງຂ້ອນໄວ້ໄດ້ ຈຶ່ງຖິ້ມຂ້ານ້ອຍຫນີ ຂ້າ ນ້ອຍຄິດວ່າເຂົາເປັນແນວໃດ ເຂົາໄປໃສແຕ່ແລ້ວກໍມາເຫັນຖາງຫຍ້າ ຢູ່ຫນີ້ ຂ້ານ້ອຍເລີຍອົດຫົວຂ້ອນບໍ່ໄດ້ ".

ພະລາຊາຕັດວ່າ "ເຈົ້າເວົ້າຂີ້ຕົວະ ມັນຫົວແນວອື່ນຕ່າງຫາກ! ເອົ້າ! ບອກມາຕາມຈິງ ຫົວຫຍັງ ? ຖ້າບໍ່ບອກຈະຟັນຖິ້ມດຽວນີ້ " ຕັດແລ້ວພະອົງກໍຄວາເອົາພະແສງດາບມາຖືໄວ້ ພະນາງອຸທຸມ ພອນຕົກພະໄທສະດຸ້ງເຍືອກ ກາບທູນຂໍພະລາຊະທານອະໄພໂທດວ່າ "ຖ້າພະອົງບໍ່ເຊື່ອຂ້ານ້ອຍແລ້ວກໍ ເຊີນຖາມນັກປາດລອງເບິ່ງ ຂ້ານ້ອຍ"

ພະລາຊາຕັດຖາມອາຈານເສນະກະວ່າ " ນີ້ ! ທ່ານອາຈານ ຄຳທີ່ນາງອຸທຸມພອນເວົ້ານີ້ ທ່ານເຊື່ອບໍ ? ຂ້າພະບາດບໍ່ເຊື່ອ ເລີຍ ແມ່ນໃຜຊິຖິ້ມຜູ້ຍິງງາມປານນີ້ຫນີໄປໄດ້" ເສນະກະທູນ. ພະລາ ຊາ ໄດ້ຟັງເສນະກະກາບທູນດັ່ງນັ້ນ ກໍຊົງດຳລິວ່າ "ອື ! ເສນະກະ ນີ້ເຊື່ອບໍ່ໄດ້ຈະຕ້ອງຖາມມະໂຫສົດເບິ່ງກ່ອນ " ຊົງດຳລິດັ່ງນີ້ແລ້ວຈຶ່ງງວກມາຖາມມະໂຫສົດວ່າ "ມະໂຫສົດຄຳທີ່ນາງເວົ້ານັ້ນ ເຈົ້າເຊື່ອບໍ ?"

ມະໂຫສົດ :" ໂດຍທານໂທດ ! ຂ້າພະບາດເຊື່ອເພາະ ວ່າ ກາລະຂີນີ (ຄວາມຊົ່ວ) ກັບສີລີ (ຄວາມດີ) ມັນຢູ່ໄກກັນຄືຟ້າ ກັບ

ດິນ ບໍ່ດົ່ງນັ້ນກໍຄືກັບກັບຝັ່ງມະຫາສະມຸດ ຟາກພຸ້ນກັບຟາກນີ້, ທຳມະດາ ຜູ້ຊາຍທີ່ມີອາດສະຫນາຕໍ່າຄອຍນັ້ນ ບໍ່ອາດຈະຢູ່ຮ່ວມກັບສັດຕີຜູ້ມີສີລີໄດ້ ຝ່າຍສັດຕີກໍຄືກັນ ຖ້າບຸນນ້ອຍ ວາດສະຫນານ້ອຍແລ້ວ ກໍບໍ່ອາດຈະຢູ່ຮ່ວມກັບຊາຍຜູ້ມີສີລີໄດ້ ກາລະຂີນີກັບສີລີນີ້ຢູ່ໄກກັນແທ້ ສະນັ້ນຂໍ້ຄວາມທີ່ພະນາງອຸທຸມພອນກາບທູນນັ້ນ ຂ້າພະບາດເຫັນວ່າເປັນຈິງແທ້ "

ພະເຈົ້າວິເທຫະລາດ ໄດ້ຟັງມະໂຫສົດກາບທູນ ກໍຫາຍພະ ພິໂລດ ຈິ່ງດຳລິວ່າ "ອື ! ຖ້າເຮົາເຊື່ອແຕ່ເສນະກະບໍ່ອາໄສມະໂຫສົດແລ້ວ ກໍຈະຫລົງຂ້ານາງແກ້ວນີ້ຖືມລ້າໆ ເຮົາໄດ້ນາງນັ້ນກໍ ຍ້ອນມະໂຫສົດນັ້ນເອງ " ຈິ່ງດຳລິແລ້ວ ຈິ່ງພະລາຊະທານຊັບໃຫ້ມະໂຫສົດເງິນແສນຕຳລຶງເປັນລາງວັນ ຝ່າຍພະນາງອຸທຸມພອນ ຈິ່ງຫມອບລົງແປະຝ່າພະບາດ ພະລາຊະສາມີທູນວ່າ "ຂ້າແຕ່ພະຈອມເກດປົກເກົ້າປົກກະຫມ່ອມ ຂ້າພະບາດໄດ້ຫລຸດພົ້ນຈາກຄວາມຕາຍໃນ ຄາວນີ້ ກໍຍ້ອນມະໂຫສົດ ສະນັ້ນ ຂ້າພະບາດຂໍພະລາຊະທານພອນພິເສດຢ່າງຫນຶ່ງ ຂໍພະອົງໄດ້ຊົງພະກະລຸນາ ຄືຂ້າພະບາດຂໍຕັ້ງມະໂຫ ສົດນີ້ໄວ້ໃນຖານະເປັນນ້ອງຮ່ວມອຸທອນ ແລະ ນັບແຕ່ວັນນີ້ເປັນຕົ້ນ ໄປຖ້າຂ້າພະບາດໄດ້ຮັບປະທານອາຫານ ສິ່ງໃດແນວອັນເປັນຂອງແຊບແລ້ວ ຂ້າພະບາດຂໍປະທານໃຫ້ນ້ອງຊາຍໄດ້ຮັບປະທານນຳ ເພາະ

ຂອງແຊບຂ້າພະບາດບໍ່ສາມາດຈະຮັບປະທານແຕ່ຜູ້ດຽວໄດ້ ປະການໜຶ່ງເວລາຂ້າພະບາດສົ່ງຂອງອອກໄປປະທານໃຫ້ນ້ອງຊາຍນັ້ນ ຈະເປັນເວລາໃດໆກໍຕາມ ຂໍຢ່າໃຫ້ນາຍພັກຕູຫ້າມເລີຍເປັນອັນຂາດ "

ສົມເດັດພະເຈົ້າວິເທຫະລາດຈຶ່ງວ່າ " ເອີຕາມໃຈເຈົ້າ "ສະນັ້ນ ນັບແຕ່ນັ້ນມາ ພະນາງຊຸທຸມພອນຈະສົ່ງຂອງອັນໃດໆອອກໄປໃຫ້ມະໂຫສົດ ຈະເປັນເວລາຄ່ຳມືດເດິກດື່ນປານໃດກໍຕາມ ນາຍພັກ ຕູບໍ່ອາດຂັດຂືນໄດ້ ຕ້ອງໄຂພັກຕູພະລາຊະວັງໃຫ້ຜູ້ຮັບໃຊ້ອອກໄປ ໄດ້ຕາມສະບາຍທຸກເທື່ອ.

ບັນຫາເລື່ອງແບ້ກັບໝາ

ຢູ່ຕໍ່ມາໃນວັນໜຶ່ງ ສົມເດັດພະເຈົ້າວິເທຫະລາດ ສະເຫວີຍອາຫານສຳເລັດແລ້ວພະອົງສະເດັດເດີນຢຽດແຄ່ງຢຽດຂາຫລິ້ນຢູ່ທີ່ ລະບຽງພາສາດຊັ້ນເທິງ ໄດ້ທອດພະເນດອອກໄປທາງພະເບັງ ຊອນ (ປ່ອງຢ້ຽມ) ກໍໄດ້ເຫັນແບ້ກັບໝາ ເກີດເປັນມິດຮັກແພງກັນ ໂດຍແບ້ໄປຄາບຊີ້ນຈາກເຮືອນຄົວຫລວງມາໃຫ້ໝາກິນ ແລະ ໝາ ໄປຄາບເອົາຫຍ້າຈາກໂຮງຊ້າງມາໃຫ້ແບ້ກິນ, ທຳອິດກໍ່ສົດ ທັງສອງນີ້ຈະເກີດຄວາມຮັກແພງກັນນັ້ນ ມີເລື່ອງເລົ່າມາວ່າ ວັນໜຶ່ງ ແບ້ໄປທ່ຽວຫາກິນ ຄັນໄປເຖິງໂຮງຊ້າງເຫັນຟ່ອນຫຍ້າຂຽວໆ ກໍອົດບໍ່ ໄດ້ຈຶ່ງເຂົ້າໄປລັກຄາບເອົາຟ່ອນຫຍ້າມາກິນຝ່າຍຄວານຊ້າງ (ຄົນລ້ຽງຊ້າງ) ຫລຽວເຫັນກໍຈັບເອົາໄມ້ຄ້ອນຟາດລົງຫລັງແບ້ງ ຖືກຕີໄດ້ຮັບຄວາມເຈັບປວດ ກໍວາງຟ່ອນຫຍ້າແລ່ນໜີໄປ ຄວານຊ້າງອີກ ຄົນໜຶ່ງແບກຄ້ອນໄດ້ກໍແລ່ນໄລ່ຕີອີກ ແບ້ແລ່ນແອ່ນຫລັງເຊຊັດເຊ ຊາຍມາເຖິງຝາພະນັງຂ້າງພາສາດເລີຍນອນແອ່ນຫລັງຢູ່ທີ່ນັ້ນ ໃນເວລາ

ນັ້ນມີໝາໂຕໜຶ່ງເປັນໝາທ່ຽວຫາກິນກະດູກ ແລະໜັງຢູ່ແຄມໂຮງຄົວຫລວງນັ້ນ ເມື່ອພໍ່ຄົວ ເຮັດອາຫານເຄື່ອງສະເຫວີຍຂອງພະ ລາຊາເສັດແລ້ວ ກໍອອກໄປນັ່ງພັກຜ່ອນຢູ່ຂ້າງນອກໂຮງຄົວ ໝາໂຕນັ້ນຖືກກິ່ນອາຫານ ກໍບໍ່ສາມາດທີ່ຈະອົດກັ້ນຄວາມຢາກໄດ້ ແລະ ເມື່ອຫລຽວເຂົ້າໄປໃນໂຮງຄົວກໍບໍ່ເຫັນມີຄົນມັນຈຶ່ງລັກເຂົ້າໄປເອົາ ປາກຍູ້ຝາຊີ່ທີ່ງວຳເຄື່ອງສະເຫວີຍໄວ້ນັ້ນຕົກອອກແລ້ວ ກໍຄາບເອົາ ຕ່ອນຊີ້ນໄດ້ເຕັມປາກຈະແລ່ນອອກມາ ພໍ່ຄົວໄດ້ຍິນສຽງດັງກ໊ອກແກ໊ກຟ້າວແລ່ນເຂົ້າໄປ ຄັນເຫັນໝາພວມຄາບເອົາຊີ້ນ ກໍອັດປັກຕູໂຮງຄົວໄວ້ແລ້ວຈັບເອົາຄ້ອນໄລ່ຕີໝາ ຟາດລົງຈົນສຸດແຮງເກີດສຸດແລ້ວແຕ່ຈະຖືກບ່ອນໃດ ໝາຖືກຕີມີຄວາມເຈັບປວດເຫລືອກຳລັງກໍວາງຕ່ອນຊີ້ນຮ້ອງຈົນສຸດສຽງ ແລະ ບຸໜົ້ນອອກປ່ອງໄດ້ ພໍ່ຄົວບໍ່ໜຳໃຈຍັງ ໄຂຜັກຕູນຳໄລ່ຕີອີກ ຈົນໝາຢູ່ບໍ່ໄດ້ຍົກຂາຂ້າງໜຶ່ງຂຶ້ນແລ່ນແອ່ນ ຫລັງເຂົ້າມາບ່ອນແບ້ນອນຢູ່ ແບ້ເຫັນໝາຈຶ່ງຖາມວ່າ "ນີ້ສ່ຽວ ! ເປັນຫຍັງໂຕຈຶ່ງຍົກຂາຂ້າງໜຶ່ງແລ່ນເຮັດຫລັງແອ່ນມາຈັ່ງຊີ້ ບໍ່ແມ່ນ ໂຕເປັນລົມເຈັບຄັດໃນກາຍບໍ ? "

ໝາໄດ້ຟັງຈຶ່ງກັບຖາມແບ້ວ່າ "ຊັ້ນໂຕເດ້ ເປັນຫຍັງມາ ນອນແອ່ນຫລັງຢູ່ໜີ້ ບໍ່ແມ່ນເປັນລົມເຈັບໃນກາຍຄືກັນບໍ ? ແບ້" ບໍ່ແມ່ນດອກ ! ເຮົາບໍ່ໄດ້ເປັນລົມເປັນແລວງສັງດອກ ແຕ່ວ່າເຮົາຖືກຄວາມ

ຊ້າງຕີເກືອບຕາຍ " ແລ້ວແບ້ກໍເລົ່າຄວາມຫລັງໃຫ້ຫມາຟັງ ຫມາກໍເລົ່າເລື່ອງຂອງໂຕໃຫ້ແບ້ຟັງຄືກັນ ຄັນແລ້ວແບ້ຈຶ່ງຖາມຫມາວ່າ" ນີ້ສ່ຽວ ! ໂຕຈະສາມາດເຂົ້າໄປໂຮງຄົວອີກໄດ້ບໍ ?"

ຫມາ "ໂອຍ ! ບໍ່ໄດ້ແລ້ວ ຖ້າໄປກໍແມ່ນຕາຍທໍ່ນັ້ນແລ້ວ"ແລ້ວຫມາກໍຖາມແບ້ວ່າ "ໂຕເດຈະສາມາດໄປໂຮງຊ້າງອີກໄດ້ບໍ ?"ແບ້ "ເຫັນຊິຍາກເຕັມທີ ຖ້າຂືນໄປກໍຄົງຕາຍຄືກັນ "ຫມາ" ເອີ ! ຖ້າບໍ່ໄດ້ ເຮົາຈັ່ງໃດຈຶ່ງຊິໄດ້ອາຫານມາກິນ" ແບ້ຕອບ" ວິທີຈະ ຊອກອາຫານມາກິນ ເພື່ອບໍ່ໃຫ້ຕາຍນັ້ນ ມີຢູ່ແຕ່ວ່າເຮົາກັບໂຕຕ້ອງມາສາບານກັນກ່ອນ ເປັນສ່ຽວເຫີຍເກີຍຮັກບໍ່ປະຖິ້ມກັນກ່ອນ ແລ້ວເຮົາຈະບອກອຸບາຍໃຫ້ " ຫມາຮັບຮອງແລ້ວ-ແບ້ກໍບອກອຸບາຍໃຫ້ວ່າ " ນີ້ສ່ຽວຕັ້ງແຕ່ນີ້ຕໍ່ໄປໃຫ້ໂຕໄປໂຮງຊ້າງພວກຄວານຊ້າງເຫັນໂຕ ກໍຄົງຈະບໍ່ສົງໄສ ຄົງເຂົ້າໃຈວ່າຫມາມັນບໍ່ກິນຫຍ້າ ແຕ່ເມື່ອລັບ ຕາຄວານຊ້າງແລ້ວ ໃຫ້ໂຕຄາບເອົາຟ່ອນຫຍ້າມາໃຫ້ເຮົາ ຝ່າຍເຮົາກໍຈະໄປໂຮງຄົວພວກພໍ່ຄົວ ເຫັນກໍຄົງຈະບໍ່ສົງໄສຄືກັນ ຄົງໄວ້ໃຈ ວ່າແບ້ມັນບໍ່ກິນຊີ້ນ ກິນປາ ຄັນພົ້ນລັບຕາພໍ່ຄົວແລ້ວ ເຮົາກໍຈະຄາບ ເອົາອາຫານມາໃຫ້ໂຕ ເຮົາມາແລກປ່ຽນອາຫານກັນແບບນີ້ເທາະ ! " ເມື່ອແບ້ບອກອຸບາຍແບບນີ້ຫມາກໍເຫັນດີນຳ ແຕ່ນັ້ນມາຫມາກໍໄປໂຮງຊ້າງຄາບຫຍ້າມາໃຫ້ແບ້ ແລະ ແບ້ກໍໄປໂຮງຄົວລັກຄາບເອົາ ຊີ້ນ

ເອົາປານາໃຫ້ໝາທັງສອງສັດຈຶ່ງເປັນເພື່ອນກັນຮັກແພງສະນິດ ສະໜົມກັນ ແລະ ບໍ່ບຽດບຽນກັນຄືແຕ່ກ່ອນ.

ສົມເດັດພະເຈົ້າວິເທຫະລາດ ໄດ້ທອດພະເນດເຫັນກິລິຍາ ອາການຂອງສັດທັງສອງດັ່ງນັ້ນ ກໍປະຫລາດພະໄທ ຈຶ່ງຣຳເພິງວ່າ " ເປັນຫຍັງແບ້ກັບໝານີ້ ແຕ່ກ່ອນມາມັນເປັນສັດຕູກັນ ບາດດຽວນີ້ມັນຢູ່ນຳກັນຮັກແພງກັນ ເປັນການປະຫລາດຫລາຍບໍ່ເຄີຍເຫັນມາ ເລີຍເອົາເຫາະ ! ເຮົາຈະເອົາເລື່ອງນີ້ຕັ້ງເປັນບັນຫາ ຖາມພວກ ນັກປາດທັງ 5 ຄົນລອງເບິ່ງ ໃຜຈະມີປັນຍາດີກວ່າກັນ ຜູ້ໃດແກ້ບໍ່ ໄດ້ຄິດບໍ່ອອກເຮົາຈະຂັບໄລ່ຜູ້ນັ້ນໜີຈາກພະລາຊະສຳນັກບໍ່ເອົາໄວ້ ແຕ່ຖ້າຜູ້ໃດແກ້ໄດ້ເຮົາກໍຈະໃຫ້ລາງວັນແຕ່ວ່າວັນນີ້ ຄ່ຳແລ້ວບໍ່ມີເວ ລາຈະຖາມໄດ້ ເອົາໄວ້ມື້ອື່ນກ່ອນ " ນີ້ແມ່ນຄວາມດຳລິຂອງພະ ເຈົ້າວິເທຫະລາດ.

ຮຸ່ງເຊົ້າມາ ເມື່ອພວກນັກປາດທັງ 5 ເຂົ້າໄປເຝົ້າຕາມ ລະບຽບ ສົມເດັດພະເຈົ້າວິເທຫະລາດ ຈຶ່ງມີພະລາຊະອາດຍາຕັດຖາມນັກປາດທັງ 5 ຄົນນັ້ນເປັນບັນຫາວ່າ "ນີ້ທ່ານທັງຫລາຍຜູ້ເປັນ ນັກປາດ ເຮົາຂໍຖາມຄືວ່າສັດສອງຈຳພວກໃນໂລກນີ້ ແຕ່ກ່ອນເຄີຍເປັນສັດຕູກັນ ບໍ່ເຄີຍຖືກັນສະໜິດສະໜົມກັນເລີຍຈັກເທື່ອ ແມ່ນແຕ່ຈະຍ່າງນຳກັນກໍບໍ່ໄດ້ພໍເຈັດກ້າວ ແຕ່ມາດຽວນີ້ສັດທັງສອງນັ້ນເກີດເປັນ

ມິດໄມຕີກັນດ້ວຍອາຫານ ນີ້ມັນແມ່ນສັດຈຳພວກໃດ ? ທ່ານທັງຫຼາຍ
ຈົ່ງຊ່ວຍກັນແກ້ໄຂໃຫ້ແຈ້ງຂາວໃນວັນນີ້ ນີ້ແນະ = ! ທ່ານທັງຫຼາຍ
ບັນຫາທີ່ເຮົາຖາມນີ້ ຖ້າຜູ້ໃດແກ້ໄຂບໍ່ໄດ້ໃນວັນນີ້ ເຮົາຈະໄລ່ຜູ້ ນັ້ນ
ອອກຈາກລາຊະການບໍ່ໃຫ້ຢູ່ໃນສຳນັກຂອງເຮົາ ເພາະເຮົາບໍ່ ຕ້ອງ
ການຄົນທີ່ບໍ່ມີປັນຍາ "

ເວລານັ້ນ ອາຈານເສນະກະເປັນຈານຜູ້ໃຫ່ຍກ່ວາຫມູ່ແລະນັ່ງຢູ່
ທາງຫນ້າຫມູ່ ສ່ວນມະໂຫສົດເປັນຜູ້ນ້ອຍນັ່ງຢູ່ຫລັງສຸດຫມູ່ ມະໂຫສົດ
ໄດ້ຟັງພະດຳລັດຖາມ ກໍຍັງພິຈາລະນາບັນຫານັ້ນບໍ່ທັນອອກ ຈຶ່ງ ຄິດ
ໃນໃຈວ່າ "ພະກະສັດອົງນີ້ກໍບໍ່ເຫັນວ່າມີປັນຍາຫລັກແຫລມພິປານໃດ
ແທ້ຈິງກໍເປັນຄົນແບບໂງ່ ທຳມະດາການທີ່ຈະຄິດຕັ້ງບັນຫາດ້ວຍປັນ
ຍາຂອງຕົນເອງນັ້ນ ເຫັນຈະເປັນໄປບໍ່ໄດ້ຕ້ອງແມ່ນເຫັນເຫດ ຢ່າງ
ໃດຢ່າງຫນຶ່ງເປັນແນ່ ເລື່ອງນີ້ຖ້າເຮົາໄດ້ເວລາຈັກວັນຫນຶ່ງ ເຮົາ
ຈະສືບສວນຫາຕົ້ນເຫດໃຫ້ຈົນໄດ້ ຈຳເປັນເຮົາຕ້ອງຫານະໂຍ ບາຍ
ໃຫ້ອາຈານເສນະກະທູນຂໍເວລາຄິດຈັກຫນຶ່ງວັນ ກໍຄົງໄດ້ການ" ນີ້
ແມ່ນຄວາມຄິດໃນໃຈຂອງມະໂຫສົດ.

ສ່ວນນັກປາດອີກ 3 ຄົນຄື ທ່ານປະກຸຕະ, ທ່ານກາມິນ ແລະ
ທ່ານເທວິນ ຄິດຫຍັງບໍ່ອອກເລີຍມິດພິປານເຂົ້າຖ້ຳ ແຕ່ອາຈານ ເສ
ນະກະນັ້ນ ໄດ້ຫລຽວຫນ້າເບິ່ງມະໂຫສົດ ຄິດວ່າ " ມະໂຫສົດຈະ

ຄິດໄດ້ຫລືບໍ່ໄດ້ ! ເມື່ອເສນະກະຫລຽວມາເບິ່ງມະໂຫສົດ ກໍຫລຽວ ເບິ່ງຕອບ ແລະ ໃຫ້ນະໂຍບາຍດ້ວຍແສງຕາວ່າ ຍັງຄິດບໍ່ທັນໄດ້ ຂໍເວລາຈັກວັນໜຶ່ງກ່ອນ ເສນະກະກໍເຂົ້າໃຈຄວາມໝາຍ ຄັນ ແລ້ວ ເສນະກະກໍຫັນໜ້າໄປຫາພະລາຊາ ພີຕີຫົວອົ້ນໝົດແຮງເພາະເປັນຄົນທີ່ໄດ້ລຶ້ງເຄີຍກັບພະລາຊາມາເຫິງແລ້ວ "ຮ້າ ຮ້າງ ? ຂໍພະລາຊະການອະໄພໂທດ ! ພະລາຊະບັນຫາທີ່ພະອົງຊົງພະກະລຸນາ ຕັດຖາມນີ້ ຖ້າພວກຂ້າພະບາດທັງ 5 ຄົນແກ້ບໍ່ໄດ້ພະອົງຈະຂັບໄລ່ພວກຂ້າພະບາດອອກໜີຈາກພະລາຊະວັງແທ້ຫລື?"

" ເອີແທ້ ເຮົາບໍ່ໄດ້ເວົ້າລ້າງເລີຍ " ພະລາຊາຕັດຕອບ. ຂໍພະລາຊະທານອະໄພໂທດ ! ພະລະຊະບັນຫານີ້ ເປັນມະຍຸ້ມ · ມະຍ້ອຍມືດໆມົວໆບໍ່ແຈ້ງຂາວ ຖ້າຢູ່ໃນກາງປະຊາຊົນມີຄົນອົນອົວຫລາຍຢ່າງນີ້ ກໍບໍ່ສາມາດຈະຄິດໃຫ້ອອກ ຕ້ອງຢູ່ບ່ອນສະງັດມິດມີ້ຈຶ່ງຈະຄິດອອກ ເພາະສະນັ້ນພວກຂ້າພະບາດຂໍເວລາ ຄິດຈັກວັນໜຶ່ງ ກ່ອນແລ້ວຈຶ່ງຈະເຂົ້າມາແກ້ຖວາຍໃຫ້ຊົງຊາບ -" ເສນະກະທູນ

" ເອີ ຕາມໃຈພວກເຈົ້າ ຈະໃຫ້ໂອດໄວ້ວັນໜຶ່ງກ່ອນກໍໄດ້ ແຕ່ຕ້ອງແກ້ໄຂໃຫ້ໄດ້ແທ້ງ ຖ້າບໍ່ໄດ້ຈໍາເປັນຕ້ອງຖືກໄລ່ອອກແນ່ນອນ . ພວກນັກປາດທັງ 4 ຮັບພະລາຊະໂອງການແລ້ວ ກໍພາກັນຖວາຍບັງຄົມ ລາລົງຈາກຜາສາດມາເຖິງກາງສະໜາມ ອາຈານເສນະກະ

ຈຶ່ງບອກເພື່ອນທັງສາມວ່າ " ບັນຫາທີ່ພະມະຫາກະສັດຖາມນີ້ ເລິກ ລັບສັບສົນຫລາຍແທ້ໆ ພວກທ່ານຢ່າເປັນໃຈ ໄປເຖິງເຮືອນແລ້ວໃຫ້ ພາກັນຟ້າວຄິດພິຈາລະນາຫາຂໍ້ແກ້ໄຂໃຫ້ໄດ້ ບໍ່ດັ່ງນັ້ນພວກເຮົາ ຈະ ໄດ້ຮັບອັນຕະລາຍເປັນອັນມາກ ເສນະກະສັ່ງພວກເພື່ອນທັງສາມດັ່ງ ນີ້ແລ້ວ ກໍຊວນກັນອອກຈາກພະລາຊະວັງກັບໄປເຮືອນຂອງໃຜ ຂອງ ລາວ ສ່ວນມະໂຫສົດອອກຈາກເຝົ້າພະມະຫາກະສັດແລ້ວ ກໍແວະໄປ ຫາພະນາງອຸທຸມພອນ ທູນຖາມວ່າ " ຂ້າແຕ່ພະພີ່ນາງ ວານນີ້ ກໍດີ ຫລືວັນນີ້ກໍດີ ພະມະຫາກະສັດສະເດັດໄປບ່ອນໃດແດ່ ?" ພະນາງ ອຸທຸມພອນບອກວ່າ "ວານນີ້ເມື່ອພະອົງສະເຫວີຍພະອາຫານແລ້ວຢຸດ ທອດພະເນດຢູ່ບ່ອນປ່ອງຢ້ຽມ ເປັນເວລາເຫິງນານ" ມະໂຫສົດໄດ້ ຟັງພະນາງບອກກໍຄິດໃນໃຈວ່າ ບາງທີພະມະຫາກະສັດອາດຈະເຫັນ ເຫດອັນໃດອັນໜຶ່ງໃນທີ່ນັ້ນເປັນແນ່ " ຄິດແລ້ວຈຶ່ງຊວນພະນາງ ອຸ ທຸມພອນຂຶ້ນໄປເບິ່ງບ່ອນພະລາຊາຢຸດຢືນທອດພະເນດ ກໍໄດ້ ເຫັນ ໝາກັບແບ້ແລກປ່ຽນອາຫານກັນ ມະໂຫສົດເຫັນເຫດອັນນັ້ນແລ້ວ ກໍ ເຂົ້າໃຈລັກແນ່ວ່າ ເລື່ອງນີ້ເອງທີ່ພະລາຊາຕັ້ງເປັນບັນຫາຖາມເມື່ອ ແນ່ໃຈດັ່ງນີ້ແລ້ວ ກໍກັບເມືອເຮືອນຂອງຕົນ.

ຝ່າຍນັກປາດ 3 ຄົນຄື ທ່ານປະກຸດະ, ທ່ານກາມິນ, ແລະເທ ວິນ ເມືອເຖິງເຮືອນແລ້ວ ກໍນັ່ງຄິດນອນຄິດຢູ່ຕະຫລອດວັນແຕ່ກໍຄິດບໍ່

ອອກວ່າບັນຫານີ້ມີຄວາມໝາຍຢ່າງໃດ ມີຄວາມອຸກອັ່ງໃນໃຈ ເປັນທີ່ສຸດ ຈຶ່ງພາກັນໄປຫາອາຈານເສນະກະງຖາມວ່າ " ພວກທ່ານຄິດອອກແລ້ວບໍ?"

" ຄິດບໍ່ອອກເລີຍອາຈານ " ເພື່ອນທັງສາມບອກ" ເອີ! ເມື່ອຄິດບໍ່ອອກດັ່ງນີ້ ຈະບໍ່ຖືກຂັບໄລ່ໜີຈາກພະລາຊະວັງຫລື ? ນີ້! ພວກທ່ານຈະເຮັດແນວໃດ " ເສນະກະຖາມຊ້ຳ. "ຄິດບໍ່ເຫັນເລີຍ ອາຈານໝົດປັນຍາແລ້ວພວກຂ້າພະເຈົ້າ ຈຶ່ງໄດ້ມາຫາອາຈານ ອາຈານຄິດເຫັນແນວໃດ ກໍກະລຸນາບອກດ້ວຍຈະເປັນພະຄູນສູງສຸດ " ເອີ້ ! ເຮົາຊິໄດ້ຫຍັງມາບອກ ເຮົາເອງກໍຍັງຄິດບໍ່ເຫັນຄືກັນ" ເສນະກະວ່າ

" ອ້ວາຍ ! ແຕ່ອາຈານຍັງຄິດບໍ່ອອກແລ້ວ ຈະໃຫ້ພວກຂ້າພະເຈົ້າຄິດໄດ້ຈັ່ງໃດ ? ມື້ວານນີ້ກໍເຫັນອາຈານທູນພະລາຊາຢ່າງ ທະນົງອົງອາດວ່າ ຈະແກ້ບັນຫານີ້ໄດ້ໂດຍບໍ່ຍາກ ບັດນີ້ແກ້ບໍ່ໄດ້ ພວກເຮົາຈະບໍ່ແຈບຫລື ? ຢ່າງໃດພະລາຊາກໍຕ້ອງຊົງພິໂລດເປັນ ແນ່ດຽວນີ້ກໍໃກ້ຈະເຖິງເວລາເຂົ້າເຝົ້າແລ້ວອາຈານ ຈະຄິດຢ່າງໃດ " ພວກສາມຄົນຕໍ່ວ່າ.

ເສນະກະບອກວ່າ "ບັນຫານີ້ມັນເລິກແລບຫລາຍລຳພັງແຕ່ພວກເຮົາທັງສີ່ຄົນຄົງຄິດບໍ່ອອກແນ່ນອນ ເມື່ອເປັນດັ່ງນີ້ ພວກເຮົາຈະມາ

ມົວຖືຕົວວ່າເປັນຜູ້ໃຫ່ຍຢູ່ເຮັດຫຍັງ ພວກເຮົາຄວນຈະໄປຖາມມະໂຫສົດເບິ່ງ ມະໂຫສົດເຖິງແມ່ນເປັນເດັກນ້ອຍແຕ່ເຂົາກໍມີປັນຍາດີບາງທີເຂົາອາດແກ້ບັນຫານີ້ໄດ້ " ອາຈານເສນະກະເວົ້າແລ້ວກໍຊວນໝູ່ໄປຫາມະໂຫສົດທີ່ເຮືອນ ບອກຄົນໃຫ້ເຂົາບອກມະໂຫສົດວ່າອາຈານທັງ 4 ມາຫາ ເມື່ອໄດ້ຮັບອະນຸຍາດຕາມທຳນຽມແລ້ວ ອາຈານທັງ 4 ກໍເຂົ້າໄປຫາມະໂຫສົດໆ ເຊີນໃຫ້ນັ່ງໃນບ່ອນອັນສົມຄວນຕາມລຳດັບກັນແລ້ວອາຈານເສນະກະ ຈຶ່ງອອກປາກຖາມມະໂຫສົດວ່າ" ນີ້ທ່ານຜູ້ເປັນນັກປາດ ບັນຫາທີ່ພະມະຫາກະສັດຖາມນັ້ນ ທ່ານຄິດອອກແລ້ວຫລືຍັງ ສ່ວນພວກເຮົາທັງ 4 ຄົນນີ້ຄິດບໍ່ເຫັນເລີຍ "

ມະໂຫສົດ ຄິດເຫັນແລ້ວ ບັນຫານີ້ຖ້າເຂົາຄິດບໍ່ໄດ້ ຄົນອື່ນໆ ບໍ່ມີຜູ້ໃດດອກຈະຄິດໄດ້ " ຖ້າຈັ່ງຊັ້ນກໍຂໍກະຣຸນາບອກພວກເຮົາ ດ້ວຍພວກເຮົາຄິດບໍ່ອອກເລີຍ "ເສນະກະອ້ອນວອນມະໂຫສົດຄິດໃນ ໃຈວ່າ "ຖ້າເຮົາບໍ່ບອກພຣະມະຫາກະສັດ ກໍຈະທົງພິໂລດຂັບໄລ່ພວກ ນີ້ເສຍຈາກພະນະຄອນ ພວກທັງ 4 ຄົນນີ້ ກໍ່ຈະໄດ້ຮັບຄວາມລຳບາກທຸກຍາກເພາະເປັນຄົນໂງ່ ຢ່າເທາະ ! ເຮົາຈະຊ່ວຍເຫລືອ ບອກໃຫ້ແຕ່ພໍບໍ່ໃຫ້ຈົບຫາຍ ກໍແລ້ວກັນ " ຄິດແລ້ວມະໂຫສົດກໍບອກໃຫ້ອາຈານທັງ 4 ນັ່ງຢູ່ບ່ອນຕ່ຳກ່ວາຕົນແລ້ວຍົກມືຂຶ້ນນົບຣຽມເອົາຄາ ຖາອັນເປັນຂໍ້ຄວາມແກ້ບັນຫານັ້ນຄົນລະບົດ ໂດຍບໍ່ໄດ້ບອກຄວາມ ອະທິ

ບາຍໃຫ້ແຈ່ມແຈ້ງເລີຍ ບອກແຕ່ພໍເປັນບັນຫາໃຫ້ພະມະຫາກະສັດຊົງເຂົ້າພະໄທເອົາເອງ ວ່ານັກປາດທັງ 4 ຄົນນັ້ນຮູ້ບັນຫາຂອງພະອົງ ແລະ ພວກນັກປາດທັງ 4 ຄົນນັ້ນ ກໍບໍ່ເຂົ້າໃຈຄວາມຫມາຍ ຫຍັງເລີຍ ເປັນແຕ່ຮຽນເອົາໃຫ້ໄດ້ກັບປາກພໍໄປວ່າ ໃຫ້ພະມະຫາກະສັດຟັງທໍ່ນັ້ນ ແລ້ວມະໂຫສົດກໍສັ່ງແນບນຳພວກນັກປາດທັງ 4 ວ່າ ເມື່ອພະລາຊາຕັດຖາມພວກທ່ານ ຢ່າໄດ້ຕົກອົກຕົກໃຈ ຈຶ່ງກ່າວແກ້ບັນຫາຕາມທີ່ເຮົາບອກນີ້ຄົນລະບົດກໍແລ້ວກັນ ບອກແລ້ວພວກທັງ 4 ຄົນ ກໍລາກັບເມືອເຮືອນຂອງຕົນ.

ໃນວັນຮຸ່ງເຊົ້າມາ ພວກນັກປາດທັງ 5 ຄົນກໍເຂົ້າໄປເຝົ້າ ພະລາຊາຕາມທີ່ນັດຫມາຍໄວ້ ເມື່ອນັ່ງຮຽບຮ້ອຍແລ້ວ ສົມເດັດພະເຈົ້າວິເທຫະລາດກໍຕັດຖາມອາຈານເສນະກະກ່ອນຜູ້ອື່ນວ່າ " ເປັນ ຈັ່ງໃດອາຈານ ! ບັນຫາທີ່ເຮົາຖາມນັ້ນຄິດໄດ້ແລ້ວບໍ ? "ເສນະ ກະກາບທູນ " ຂໍພະລາຊະອາດຍາບໍ່ພົ້ນເກົ້າ ! ຖ້າຂ້າພະບາດບໍ່ຮູ້ຄິດບໍ່ອອກແລ້ວ ແມ່ນໃຜຈະຄິດອອກໄດ້ "

ພະລາຊາ "ເອີ ! ຖ້າຮູ້ກໍລອງວ່າມາເບິ່ງເຮົາຈະຟັງ "ແລ້ວເສນະກະກໍກາບທູນຕາມທີ່ໄດ້ຮຽນມາຈາກມະໂຫສົດເປັນຄຳ ປະໂຫຍກຄາຖາບາລີ ຊຶ່ງມີໃຈຄວາມເປັນພາສາລາວວ່າ " ພວກ ເສນາອາມາດ ຂ້າລາຊະການທັງຫລາຍ ມັກກິນຊີ້ນແບ້ບໍ່ມັກກິນຊີ້ນຫມາ

ເລີຍ ດຽວນີ້ແບ້ກັບໝາເກີດເປັນມິດຮັກແພງກັນ " ຕາມຄວາມແກ້ນີ້ ເສນະກະບໍ່ຮູ້ຈັກຄວາມໝາຍຈັກດີ້ ວ່າໄປຕາມບົດປາລີ ທີ່ມະໂຫສົດບອກທີ່ນັ້ນ ພະລາຊາໄດ້ຊົງຟັງກໍເຂົ້າພະໄທວ່າ ອາຈານເສ ນາກະຮູ້ຈັກບັນຫາ ແລະ ເຂົ້າໃຈດີ ຈຶ່ງຕັດຖາມທ່ານປະກູຕະຕໍ່ໄປ.

ປະກູຕະກາບທູນວ່າ " ຂໍພະລາຊາທານອາດຍາບໍ່ພົ້ນເກົ້າຄົນຄື ຂ້າພະບາດນີ້ກໍຊິບໍ່ມີປັນ ຍາຊັ້ນບໍ ? ປັນຍາຂອງຂ້າພະບາດກໍມີຢູ່ ຄືກັນ " ທູນດັ່ງນີ້ແລ້ວກໍກ່າວແກ້ບັນຫາຕາມທີ່ຮຽນມາຈາກ ມະໂຫສົດວ່າ " ຄົນທັງຫລາຍເອົາໜັງແບ້ມາເຮັດເປັນເຄື່ອງປູຮອງຫລັງມ້າ ເພື່ອຈະໄດ້ນັ່ງສະບາຍ ແຕ່ໜັງໝານັ້ນເຂົາບໍ່ເອົາມາເຮັດ ດອກ ດຽວນີ້ແບ້ກັບໝາເກີດຮັກແພງກັນ " ປະກູຕະທູນດັ່ງນີ້ ແຕ່ກໍບໍ່ ຮູ້ຄວາມໝາຍຫຍັງເລີຍ ພະມະຫາກະສັດໄດ້ຊົງຟັງກໍເຂົ້າພະໄທ ວ່າ ອາຈານປະກູຕະຮູ້ເລື່ອງດີຄືກັນ ຈຶ່ງຕັດຖາມທ່ານກາມິນຕໍ່ໄປ ທ່ານກາມິນກາບທູນວ່າ " ຂໍພະລາຊະທານ ! ສັດທີ່ມີເຂົາແວ້ນ ແທ້ແລ້ໄປທາງຫລັງເຂົາຮຽກວ່າແບ້ ແລະ ແບ້ເປັນສັດກິນຫຍ້າ ສ່ວນໝານັ້ນກິນຊີ້ນກິນປາ ດຽວນີ້ແບ້ກັບໝາເປັນສ່ຽວກັນ " ພະລາຊາ ໄດ້ຊົງຟັງກໍເຂົ້າພະໄທວ່າ ທ່ານກາມິນກໍຮູ້ດີຄືກັນ ແລ້ວກໍຕັດຖາມ ທ່ານເທວິນຕໍ່ໄປ ເທວິນກາບທູນວ່າ " ຂໍເດຊະ! ທຳມະດາຂອງແບ້ມັນກິນແຕ່ຫຍ້າ ແລະ ໃບໄມ້ທີ່ນັ້ນ ສ່ວນໝາເປັນສັດກິນຊີ້ນກິນປາເປັນ

ຕົນວ່າ ຊີ້ນກະຕ່າຍຊີ້ນແບ້ ມັນແຮງມັກ ແຕ່ມາບັດນີ້ຫມາກັບແບ້ ໄດ້ເກີດເປັນມິດສະຫາຍກັນແລ້ວ "ທ່ານເຫວີນກາບທູນດັ່ງນີ້ ແຕ່ກໍບໍ່ ຮູ້ຈັກຄວາມຫມາຍຂອງຄຳຕອບນັ້ນເລີຍ ແຕ່ພະມະຫາກະສັດກໍເຂົ້າພະໄທວ່າ ທ່ານເຫວີນຮູ້ເລື່ອງນັ້ນເປັນຢ່າງດີ ລັນແລ້ວພະອົງຈຶ່ງ ຕັດຖາມມະໂຫສົດວ່າ " ນີ້! ທ່ານມະໂຫສົດ ບັນຫາທີ່ເຮົາຖາມ ນັ້ນທ່ານເຂົ້າໃຈດີຫລືຢ່າງໃດ ? "

ມະໂຫສົດທູນວ່າ " ຂໍພະລາຊະທານ ! ຄົນອື່ນໆບັນດາທີ່ມີ ຢູ່ໃນໂລກນີ້ ບໍ່ມີຜູ້ໃດດອກທີ່ຈະຮູ້ແຈ້ງແທງຕະຫລອດໃນບັນຫານີ້ ໄດ້ນອກຈາກຂ້າພະບາດຄົນດຽວຂ້ານ້ອຍ " ເອີ ! ຖ້າຢ່າງນັ້ນ ທ່ານຈົ່ງອະທິບາຍໃຫ້ມັນແຈ້ງຂາວເບິ່ງດູ? ພະລາຊາຕັດ ແລ້ວມະໂຫສົດກໍກາບທູນວ່າ " ຂ້າແຕ່ມະຫາລາດ ແບ້ເປັນສັດສີ່ຕີນມີເລັບໄດ້ແປດເລັບ ເມື່ອມັນໄປເອົາອາຫານມານັ້ນ ມັນລັກເອົາມາຄືແບ້ໄດ້ ລັກເອົາຊີ້ນມາໃຫ້ຫມາກິນ ແລະ ຫມາກໍໄປລັກເອົາຫຍ້າມາໃຫ້ແບ້ ກິນເອົາແລກປ່ຽນອາຫານກັນໂດຍວິທີນີ້ ພະບາດເປັນເຈົ້າສະເດັດຢູ່ລະບຽງຜາສາດໄດ້ທອດພະເນດເຫັນສັດທັງສອງນັ້ນ ເປັນມິດຮັກ ແພງກັນດ້ວຍເລື່ອງອາຫານນີ້ເອງ " ສົມເດັດພະເຈົ້າວິເທຫະລາດ ໄດ້ຊົງສະດັບປີກປາດທັງ 5 ແກ້ບັນຫາຂອງພະອົງໄດ້ທຸກໆຄົນ ກໍຊົງໂສມະນັດ ແລະ ເຂົ້າພະໄທວ່າ ພວກນັກປາດທັງຫມົດນັ້ນຕອບບັນ ຫາ

ໄດ້ດ້ວຍສະຕິປັນຍາຂອງຕົນບໍ່ໄດ້ຮູ້ເລີຍວ່າ ພວກທ່ານນັກປາດ ທັງ 4 ຮຽນຄຳຕອບບັນຫາມາຈາກມະໂຫສົດ ຈຶ່ງຊີງສັນລະເສີນນັກປາດທັງ 4 ທ່ານວ່າ ເປັນຜູ້ມີປັນຍາເລີດສະເຫນີກັນ ແລ້ວພະລາດ ຊະທານຍົດທຽມດ້ວຍມ້າອັດສັນດອນໃຫ້ຄົນລະເຫລັ້ມ ກັບບ້ານສ່ວຍ ຄົນລະບ້ານ.

ຝ່າຍພະນາງອຸທຸມພອນລາຊະເທວີ ພະນາງຮູ້ດີວ່ານັກປາດ ທັງ 4 ຄົນນັ້ນ ແກ້ບັນຫາໄດ້ຍອນອາໄສມະໂຫສົດ ແລະ ພະລາຊາ ມາຊົງພະລາດຊະທານລາງວັນໃຫ້ສະເຫມີກັນດັ່ງນີ້ບໍ່ສົມຄວນເລີຍ.ຄວນຈະພະລາດຊະທານໃຫ້ມະໂຫສົດຫລາຍກ່ວາຫມູ່ຈະຖືກຕ້ອງ ເມື່ອພະນາງຮູ້ ແລະ ຄິດດັ່ງນີ້ ຈຶ່ງເຂົ້າໄປທູນພະລາດຊະສາມີຖາມວ່າ"ຂ້າແຕ່ມະຫາລາດລາຊາ ບັນຫາທີ່ພະອົງຕັດຖາມນັ້ນ ແມ່ນຜູ້ໃດແກ້ ໄດ້ຂ້ານ້ອຍ " ນັກປາດຂອງເຮົາແກ້ໄດ້ຫມົດທັງ 5 ຄົນ " ພະລາຊາຕັດຕອບ - "ຂໍພະລາຊະທານອະໄພໂທດ ! ບໍ່ແມ່ນວ່າພວກທັງ 4 ຄົນນັ້ນຮຽນຄຳຕອບຈາກມະໂຫສົດບໍ ? ຂ້ານ້ອຍ" ພະນາງຖາມອີກ.

ເລື່ອງນັ້ນອ້າຍບໍ່ຮູ້ເລີຍ " ພະລາຊາບອກ ຂໍພະລາຊະທານ ! ໃນເລື່ອງນີ້ຂ້າພະບາດໄດ້ຮູ້ມາວ່າ ພວກນັກປາດທັງ 4 ຄົນນັ້ນ ໄດ້ຮຽນເອົາຄຳຕອບບັນຫາມາຈາກມະໂຫສົດ ນ້ອງຊາຍຂອງຂ້າ ພະບາດ ເພາະມະໂຫສົດເຫັນວ່າພວກທັງ 4 ຄົນນັ້ນຈະຖືກລົງ ພະລາ

ຊະອາດຍາໄລ່ໜີຈາກພະນະຄອນ ກໍມີຄວາມສົງສານຈຶ່ງໄດ້ບອກ ຂໍ້ຄວາມໃຫ້ພິມາແກ້ເອົາຕົວລອດ ພະລາຊະອາດຍາທໍ່ນັ້ນ ສະນັ້ນການທີ່ພະອົງພະລາຊະທານລາງວັນ ໃຫ້ສະເໜີກັນນັ້ນ ຂ້າພະບາດ ຈຶ່ງເຫັນວ່າເປັນການບໍ່ສົມຄວນເລີຍ ຄວນແທ້ຕ້ອງໃຫ້ມະໂຫສົດຮັບຫຼາຍກ່ວາ" ເລື່ອງນີ້ມະໂຫສົດບໍ່ໄດ້ບອກຈັກຄຳເລີຍ ຂ້າຍເຂົ້າໃຈ ວ່າພວກເຫລົ່ານັ້ນຄິດໄດ້ເອງຕາມປັນຍາຂອງຕົນ ຈຶ່ງໄດ້ພະລາຊະທານໃຫ້ສະເໜີກັນ " ຕັດດັ່ງນີ້ແລ້ວກໍສັນລະເສີນປັນຍາຂອງມະໂຫ ສົດເປັນອັນມາກ.

ປັນຫາເລື່ອງຊັບກັບປັນຍາ

ຢູ່ມາໃນວັນໜຶ່ງ ສົມເດັດພະເຈົ້າວິເທຫະລາດ ມີພະປະສົງຈະຖາມປັນຫານຳພວກນັກປາດທັງໃນເລື່ອງທີ່ວ່າ ຊັບກັບປັນຍາ ອັນໃດຈະປະເສີດກ່ວາກັນ ເພາະປັນຫາເລື່ອງນີ້ມີຄົນສໍ້ຖາມກັນມາ ເຫິງແລ້ວ ແຕ່ກໍບໍ່ມີຜູ້ໃດແກ້ໄຂໃຫ້ຕົກແຕກລົງໄດ້ ສະນັ້ນເມື່ອນັກປາດທັງ 4 ຄົນເຂົ້າໄປເຝົ້າປະຕິບັດລາຊະການຕາມລະບຽບແລ້ວ ພະອົງຈຶ່ງມີພະລາຊະໂອງການຕັດຖາມອາຈານເສນະກະຊຶ່ງເປັນຜູ້ໃຫ່ຍ ກ່ວາໝູ່ວ່າ " ນີ້ທ່ານອາຈານ ! ເຮົານີ້ມີຄວາມປະສົງຢາກຖາມປັນຫາຂໍ້ໜຶ່ງນຳທ່ານຊິໄດ້ບໍ ? "ຂໍພະລາຊະທານ ພະມະຫາກະລຸນາ ໄດ້ໂພດເກົ້າ ຂໍເຊີນຖາມໂລດ ຂ້ານ້ອຍເສນະກະກາບທູນດ້ວຍ ຄວາມອົງອາດ ພະລາຊາຈຶ່ງຕັດຖາມວ່າ "ນີ້ ! ທ່ານອາຈານ ຄົນ ສອງຈຳພວກທີ່ຢູ່ໃນໂລກນີ້ຄືຄົນຈຳພວກໜຶ່ງເປັນຄົນມີປັນຍາ ແຕ່ບໍ່ມີ ຊັບອີກຈຳພວກໜຶ່ງເປັນຄົນມີຊັບແຕ່ບໍ່ມີປັນຍາ ຄົນສອງຈຳພວກນີ້ໃຜຈະປະເສີດກ່ວາກັນ "ຄວາມຈິງປັນຫາຂໍ້ນີ້ ອາຈານເສນະກະເຄີຍ ໄດ້

ແກ້ໄຂຢ່າງຊຳນິຊຳນານມາແລ້ວ ໂດຍຖືເອົາຂ້າງຜູ້ທີ່ມີຊັບວ່າ ປະເສີດກວ່າຄົນມີປັນຍາ ສະນັ້ນ ທ່ານເສນະກະຈຶ່ງກາບທູນໄດ້ ຢ່າງວ່ອງໄວວ່າ " ຂ້າແຕ່ພະມະຫາລາຊະອົງເປັນໃຫຍ່ຍິ່ງ ຂ້າພະບາດຂໍກາບທູນວ່າ ຄົນທຸກໆຄົນໃນໂລກນີ້ຈະເປັນຄົນພານ ຄົນໂງ່ກໍ ຕາມເປັນນັກປາດສະຫລາດຫລັກແຫລມກໍຕາມ ມີສິລະປະວິຊາການຄວາມຮູ້ຕ່າງໆກໍຕາມ ຈະເກີດໃນຕະກູນສູງ ຫລືຕ່ຳກໍຕາມ ຖ້າວ່າບໍ່ມີ ຊັບແລ້ວກໍຈຳເປັນຕ້ອງຍອມເປັນຂ້ອຍຮັບໃຊ້ຂອງຄົນຜູ້ມີຊັບ ສ່ວນຄົນຜູ້ມີຊັບນັ້ນ ເຖິງແມ່ນຈະເປັນຄົນໂງ່ ຄົນຈ້າບໍ່ມີເຊື້ອແນວແຖວພັນ ເປັນຄົນມີຕະກູນ ຢ່າງໃດໆກໍຕາມ ກໍໄດ້ເປັນນາຍໃຊ້ສອຍຄົນມີຕະກູນສູງຄົນເປັນນັກປາດຫລືຄົນທີ່ມີວິຊາຄວາມຮູ້ແຕ່ຫາກບໍ່ມີຊັບນັ້ນສະເຫມີໄປດ້ວຍເຫດນີ້ ຂ້າພະບາດຈຶ່ງວ່າຄົນມີຊັບນັ້ນແຫລະປະເສີດກວ່າຄົນ ມີປັນຍາ "

ສົມເດັດພະເຈົ້າວິເທຫະລາດ ໄດ້ຊົງຟັງເສນະກະກາບທູນດັ່ງນີ້ຈຶ່ງຜິນພະພັກມາຕັດຖາມມະໂຫສົດ ຊຶ່ງນັ່ງຢູ່ສຸດຫມູ່ ພໍປານກັນກັບພະບວດໃຫມ່ ແຕ່ນັກປາດສາມທ່ານນັ້ນ ພະອົງບໍ່ໄດ້ຕັດຖາມ ຕັດ ຖາມມະໂຫສົດໂດຍວ່າ " ນີ້! ມະໂຫສົດລູກຊາຍຂອງເຮົາ! ເຈົ້າເຫັນວ່າຈັ່ງໃດ ? ຄົນມີຊັບກັບຄົນມີປັນຍາໃຜປະເສີດກວ່າກັນ? ເສນະກະເອົາວ່າຄົນ ມີຊັບປະເສີດກ່ວາ ສ່ວນເຈົ້າເຫັນວ່າໃຜປະ ເສີດ

ລອງວ່າມາເບິ່ງ "

ມະໂຫສິດກາບທູນວ່າ " ຂໍພະລາຊະທານ ພະມະຫາກະລຸ ນາ ຂ້າພະບາດເຫັນວ່າອັນຄົນບາບ ຄົນໂງ່ທີ່ບໍ່ມີປັນຍານັ້ນ ເຖິງແມ່ນ ມີຊັບສົມບັດສິງຄານບໍລິວານຂຶ້ນຫລາຍໆແລ້ວ ຍ່ອມເປັນ ຄົນມືວ ເມົາຫລົງລືມຄວາມຜິດຄິດວ່າເຮົາເປັນຜູ້ມັ່ງມີເປັນຜູ້ປະເສີດ ມີຍົດມີ ສັກສູງ ແລ້ວຄິດຢາກເຮັດອັນໃດກໍເຮັດໄປຕາມໃຈຕົວ ໂດຍບໍ່ຢ້ານບາບ ຢ້ານກຳ ບໍ່ຢ້ານຄວາມຜິດເລີຍ ເພາະນິໄສຂອງຄົນພານຄົນໂງ່ ນັ້ນ ແລເຫັນເຫດການແຕ່ໃກ້ໆໃນຊາດນີ້ ເຂົາບໍ່ໄດ້ເຫັນໄກເລີຍ ສະນັ້ນ ຄົນຈຳພວກນີ້ເມື່ອມືວເມົາຫລົງໄຫລຢູ່ນຳລາບຍົດຄວາມຮັ່ງມີແລະກະທຳ ຄວາມຊົ່ວລົງໄປແລ້ວ ຜົນຂອງຄວາມຊົ່ວທີ່ເຂົາທຳນັ້ນແຫລະຈະລ້າງຜານເຂົາເອງທັງໃນປັດຈຸບັນນີ້ ແລະ ໃນອະນາຄົດອີກດ້ວຍ ຄືເຂົາຈະຕ້ອງໄດ້ຮັບຄວາມເດືອດຮ້ອນ ຄວາມທົນທຸກທໍລະມານຄວາມເສຍຊື່ສຽງ ຄວາມອັບຍົດອົດອາຍນາໆປະການທັງນີ້ກໍຍ່ອມບໍ່ມີປັນຍາພິຈາລະນາຫາເຫດຜົນຫລົງໃຊ້ອຳນາດ ເພາະອາໄສຊັບນັ້ນ ສະນັ້ນ ຄົນບໍ່ມີປັນຍາຈຶ່ງນັບວ່າເປັນຄົນໂງ່ຄົນພານຂ້ານ້ອຍ" ສົມເດັດ ພະເຈົ້າວິເທຫະລາດ ໄດ້ຊົງຟັງມະໂຫສິດຖະແຫລງແກ້ ຈຶ່ງງວກ ຫນ້າມາຕັດຖາມເສນະກະອີກວ່າ "ເຮີຍ! ທ່ານເສນະກະມະໂຫສິດເຂົາວ່າຄົນມີປັນຍາປະເສີດກວ່າຄົນມີຊັບ ຂໍ້ຄວາມທີ່ມະໂຫສິດວ່າມາ ນີ້

ທ່ານເຫັນວ່າແມ່ນຫລືບໍ ແມ່ນວ່າມາເບິງ"

" ເສນະກະ ! ໂດຍທານໂທດ ມະໂຫສິດນີ້ເປັນເດັກ ນ້ອຍປາກຍັງບໍ່ທັນຫມົດກິ່ນນ້ຳນົມຊິຮູ້ຈັກຫຍັງ ຂ້າພະບາດຈະຂໍກາບທູນໃຫ້ເຫັນກັບຕານີ້ແຫລະວ່າ ຄົນມີປັນຍາກັບຄົນມີຊັບໃຜຈະດີກວ່າກັນ ຄືຕົວຢ່າງ ໂຄວິນທະເສດຖີ ທີ່ຢູ່ໃນນະຄອນມິຖິລາເຮົາໃນທຸກວັນນີ້ ນີ້ແຫລະອີຕາໂຄວິນລາວບໍ່ຮູ້ຫຍັງເລີຍ ສິລະປະວິຊາອັນໃດກໍບໍ່ຮູ້ ຫນັງສືໂຕທໍ່ຊ້າງລາວກໍອ່ານບໍ່ອອກ ລູກຊາຍລູກສາວກໍບໍ່ມີຮູບຮ່າງກໍຂີ້ຮິະ ເວລາອ້າປາກເວົ້ານ້ຳລາຍໄຫລຣາດຄາງລົງມາຫມົດໃນຕົນຕົວລາວ ບໍ່ມີຫຍັງດີເລີຍ ແຕ່ລາວເປັນຄົນມີຊັບຫລາຍ ເປັນມະຫາເສດຖີ · ມີເງິນເຖິງ 80 ໂກດ ລາວອາໄສຊັບນັ້ນ ຈຶ່ງມີຄົນນັບຖືມີຊື່ສຽງມີຄົນເກງກົວຈົນມີສາວໃຊ້ຮູບຫລໍ່ປານນາງຟ້ານັ່ງຖືດອກບົວແຫລ້ຄອຍເຊັດນ້ຳລາຍທີ່ໄຫລອອກຈາກປາກນັ້ນຂ້າງລະຄົນ ເຫັນບໍ ? ເວລາທ່ານເສດຖີອ້າປາກເວົ້ານ້ຳລາຍໄຫລຣາດຄາງລົງ ສາວງາມທັງສອງນັ້ນກໍເອົາດອກບົວເຊັດໄວ້ແລ້ວໂຍນຖິ້ມອອກທາງປ່ອງຢຽມ ເມືອ ພວກນັກເລງເຫລົ້າຢາກໄດ້ດອກບົວໄປທັດຫູ ຫລືເອົາໄປແລກເຫລົ້າກິນກໍພາກັນມາເຮືອນເສດຖີ ຮ້ອງຂໍ້ນໃສ່ທ່ານເສດຖີວ່າ " ຂໍທ່ານມະຫາເສດຖີຈົ່ງຈະເລີນ" ທ່ານເສດຖີໄດ້ຍິນກໍຮ້ອງຖາມວ່າ "ພວກ ທ່ານຕ້ອງການອີຫຍັງ " ພຽງທໍ່ນີ້ ນ້ຳລາຍກໍໄຫລຣາດຄາງລົງແລ້ວສາວ

ງານທັງສອງກໍເອົາດອກບົວເຊັດຖຸມອອກປ່ອຍຢູ່ຮົມ ພວກນັກ ເລງ ເຫລົ້າເອົາດອກບົວນັ້ນໄປລ້າງນ້ຳໃຫ້ສະອາດແລ້ວກໍເອົາໄປຂາຍ ຊື້ ເຫລົ້າກິນ ນີ້ເຫັນບໍ ? ອີ່ຕາໂຄວິນເສດຖີ ບໍ່ມີປັນຍາຫຍັງເລີຍ ແຕ່ ລາວມີຊັບຈຶ່ງມີຄົນນັບຖືເຖິງປານນີ້ ຂ້າພະບາດຈຶ່ງວ່າຄົນມີຊັບ ນັ້ນ ແຫລະ ປະເສີດກວ່າຄົນມີປັນຍາ "

ພະເຈົ້າວິເທຫະລາດ "ວ່າຈັ່ງໃດມະໂຫສົດ ? ເສນະກະເຂົາ ວ່າ ຄົນມີຊັບປະເສີດກວ່າຄົນມີປັນຍາ ແລ້ວເຂົາກໍເອົາເລື່ອງໂຄວິນ ທະເສດຖີມາເລົ່າເປັນຕົວຢ່າງ ເຈົ້າຈະແກ້ເຂົາວ່າຢ່າງໃດ ?"

ມະໂຫສົດ "ຂໍພະລາຊະທານ ເສນະກະນີ້ບໍ່ຮູ້ຫຍັງດອກ ລາວ ເຫັນແຕ່ໃກ້ໆ ເຫັນແຕ່ແກ່ໄດ້ແນວດຽວບໍ່ຄິດໜ້າຄິດຫລັງພໍປານ ກາ ເຫັນກ້ອນເຂົ້າທີ່ຄົນວາງໄວ້ ກໍມີແຕ່ຢາກກິນທ່າດຽວທໍ່ນັ້ນ ຂ້າພະ ບາດຂໍກາບທູນໃຫ້ຊົງຟັງຄືວ່າ ທຳມະດາຄົນພານຄົນໂງ່ທີ່ບໍ່ມີປັນ ຍາ ນັ້ນ ຖ້າໄດ້ລາບໄດ້ຍົດໄດ້ຄວາມສຸກແລ້ວ ກໍມັກປະໝາດລືມຕົວ ບໍ່ ຮູ້ຈັກເຫດການອັນມັນປ່ຽນແປງໝູນວຽນໄປຕາມວິຖີຂອງໂລກ ມົວ ເມົາຫລົງໄຫລຢູ່ນຳແຕ່ການະຄຸນ ບໍ່ຄິດເຖິງຄວາມຕາຍອັນຈະ ມາ ເຖິງຕົວ ພໍປານວ່າຕົນນັ້ນຈະມີອາຍຸຍືນຢູ່ຕັ້ງໝື່ນໆປີ ແລະ ຈຳພວກ ຄົນບໍ່ມີປັນຍານີ້ ເມື່ອມີເຫດໄພອັນຕະລາຍມາເຖິງຕົວແລ້ວ ກໍບໍ່ມີປັນ ຍາຄິດແກ້ໄຂ ມີແຕ່ຕົກໃຈຕົວສັ່ນງັນງົກ ຕົກສະເງີ້ເຊີ້ໄປໝົດ ແລ້ວ

ທ້າຍສຸດມາກໍໄດ້ຮັບແຕ່ຄວາມເສົ້າໂສກເສຍໃຈ ທົນທຸກທໍລະມານໄປເອງ ເພາະບໍ່ມີປັນຍາພິຈາລະນາໃຫ້ເຫັນຄວາມບໍ່ທ່ຽງແທ້ແນ່ນອນຂອງສັງຂານ ແລະ ອິດຖາຣົມຄືລາບຍົດສັນລະເສີນສຸກອັນເປັນຂອງທຳມະດາໂລກທີ່ຈະຕ້ອງປ່ຽນແປງໄປ ເມື່ອພວກພານທີ່ບໍ່ມີປັນ ຍາ ເຊື່ອມສູນຈາກອິດຖາລົມແລ້ວ ກໍມີແຕ່ຄວາມຕໍ່າຕ້ອຍນ້ອຍໃຈເສຍໃຈແລ້ວກໍເກີດຄວາມໂມໂຫໂກທາຫລົງຂ້າຫລົງຟັນຄົນອື່ນ ລາງຄົນຮອດທຳລາຍຕົນເອງກໍມີ ທັງນີ້ກໍເພາະຄວາມໂງ່ບໍ່ມີປັນຍານັ້ນເອງ ສ່ວນຄົນມີປັນຍາຮູ້ແທ້ເຫັນຈິງ ໃນສິ່ງທັງປວງແລ້ວ ເມື່ອມີໄພອັນໃດ ໆ ແລະ ເຫດການອັນໃດໆມາກະທົບ ເຂົາຍ່ອມບໍ່ສະທ້ານສະເທືອນໃຈຫນັກແຫນ້ນປານພູເຂົາຫີນ ເຖິງແມ່ນລົມມະຫາພາຍຸພັດກໍບໍ່ຫວັ່ນໄຫວໄດ້ ທ່ານຈຳພວກນີ້ຍ່ອມປັດເປົ່າໄພອັນຕະລາຍອອກຈາກຕົນແລະຄົນອື່ນໄດ້ດ້ວຍປັນຍາຂອງຕົນ ນັບວ່າເປັນທີ່ເພິ່ງຂອງຕົນ ແລະ ຄົນອື່ນໄດ້ແທ້ ທັງໃນຊາດນີ້ ແລະ ຊາດຫນ້າ ສະນັ້ນຂ້າພະບາດຈຶ່ງ ເຫັນວ່າຄົນມີປັນຍາປະເສີດກວ່າຄົນມີຊັບ ຂ້ານ້ອຍ "

ສົມເດັດພະເຈົ້າວິເທຫະລາດໄດ້ຟັງມະໂຫສົດແກ້ແລ້ວຈຶ່ງງວາກຫນ້າໄປຖາມເສນະກະອີກວ່າ " ທ່ານອາຈານເສນະກະຄຳທີ່ມະໂຫສົດແກ້ມານັ້ນ ທ່ານຈະວ່າຢ່າງໃດ ?" ເສນະກະກາບທູນ "ຂໍ ພະລາຊະທານ ພະອົງຢ່າເຊື່ອມະໂຫສົດເລີຍ ມະໂຫສົດບໍ່ຮູ້ສັງ ດອກ

ເວົ້າອ້ອມແອ້ມໄປພໍປານນັ້ນແລ້ວ ຂ້າພະບາດຈະຂໍປຽບທຽບໃຫ້ຟັງຄື ຕົ້ນໄມ້ໃຫ່ຍໃບດົກຫນາ ແລະ ຫມາກພົນສຸກເດຍລະດາດ ພວກ ປັກ ສີຊາດໃນໄພຍ່ອມມາອາໄສຕົ້ນໄມ້ນັ້ນສັນໃດ ຄົນມີຊັບກໍຍ່ອມເປັນ ທີ່ ເພິ່ງພາອາໃສຂອງຄົນທັງຫລາຍສັນນັ້ນ ຄົນມີປັນຍານັ້ນ ເຖິງແມ່ນມີ ລົ້ນຟ້າ ຖ້າບໍ່ມີຊັບແລ້ວແມ່ນໃຜເຂົາຊິນັບຖື ຢ່າເວົ້າໄປອື່ນໄປ ໄກ ເທາະເບິ່ງແຕ່ຜູ້ຊາຍທຸກວັນນີ້ ຢາກໄດ້ຜູ້ສາວງາມໆມາເປັນເມຍ ກໍ ແລ້ວກັນ ຊາຍຄົນນັ້ນເຖິງແມ່ນຈະໂງ່ຈ້າບໍ່ຮູ້ຫນັງສືຈັກໂຕ ກໍຕາມຖ້າ ວ່າມີເງິນຫລາຍໆແລ້ວບໍ່ຍາກເລີຍ ເພາະຄົນທຸກວັນນີ້ເຂົາຕ້ອງການ ແຕ່ຊັບທໍ່ນັ້ນ ມີຊັບແລ້ວເຮັດອັນໃດກໍງ່າຍ ຢາກໄດ້ອັນໃດກໍໄດ້ ສິນ ປາຖະຫນາ ດ້ວຍເຫດນີ້ຂ້າພະບາດຈຶ່ງວ່າ ຄົນມີຊັບປະເສີດກວ່າຄົນ ມີປັນຍາ.

" ເອົາ ! ມະໂຫສົດ ! ເສນະກະເຂົາວ່າຢ່າງນີ້ ເຈົ້າ ມີ ຄວາມເຫັນວ່າຢ່າງໃດ ?" ພະລາຊາຕັດ " ຂໍພະລາຊະທານ ! ຂໍ້ຄວາມທີ່ເສນະກະເວົ້ານັ້ນ ລາວເວົ້າເອົາແຕ່ສິ່ງທີ່ຕາເຫັນ ເພື່ອ ເປັນການຖະແຫລງແປງລົ້ນໃຫ້ຖືກໃຈຄົນທໍ່ນັ້ນ ແຕ່ແທ້ຈິງແລ້ວ ຄົນມີ ຊັບແຕ່ຫາກເປັນຄົນພານນັ້ນ ຊັບຂອງເຂົາບໍ່ໄດ້ເປັນປະໂຫຍດແກ່ຄົນ ອື່ນເລີຍ ຄືກັນກັບຫມາກໄມ້ເບື່ອກໍບໍ່ເປັນປະໂຫຍດແກ່ຄົນສັນນັ້ນ ຊັ້ນ ທີ່ສຸດຕົວເຂົາເອງກໍບໍ່ໄດ້ຮັບ ປະໂຫຍດຈາກຊັບຂອງເຂົາຊ້ຳ ເພາະ

ວ່າຄົນໂງ່ມີຊັບຍ່ອມບໍ່ຮູ້ຈັກໃຊ້ຊັບໃຫ້ເປັນປະໂຫຍດ ເຂົາມັກ ໃຊ້ໄປແຕ່ໃນທາງຜິດ ເຊັ່ນຫລິ້ນການພະນັນສຸລານາລີມີສອງແລ້ວຢາກ ມີສາມ ຄົນໂງ່ມີຊັບແລ້ວມັກຈອງຫອງບໍ່ຮູ້ບາບຮູ້ບຸນ ເຫັນແຕ່ແກ່ໄດ້ ໆ ແລ້ວບໍ່ຮູ້ຈັກພໍມີຄວາມໂລບທະວີຂຶ້ນຫນ້າ ເມື່ອມີຄວາມໂລບເຂົ້າ ຝັງໃຈແລ້ວ ເຂົາອາດທຳຄວາມຊົ່ວໄດ້ທຸກປະການ ແລະ ຄວາມຊົ່ວນັ້ນແຫລະຈະທຳລາຍເຂົາໃນຊາດນີ້ ຕາຍຈາກຊາດນີ້ແລ້ວມັນຍັງຈັກໄດ້ໄປຕົກນະລົກທົນທຸກທໍລະມານຢູ່ອີກ ສິ່ງດັ່ງກ່າວນີ້ແມ່ນຜົນຂອງຄວາມໂງ່ບໍ່ມີປັນຍາ ແຕ່ຫາກມີຊັບ ແລະ ຊັບນັ້ນພາໃຫ້ຫລົງກະທຳຜິດ ຈຶ່ງໄດ້ຮັບທຸກ ສະນັ້ນຂ້າພະບາດຈຶ່ງເຫັນວ່າຄົນມີປັນຍາປະເສີດກວ່າ " ພະມະຫາກະສັດງວາກໃສ່ເສນະກະ "ເອີ້ ເສນະກະ ມະໂຫ ສົດເຂົາແກ້ແລ້ວ ທ່ານຈະວ່າຢ່າງໃດ ?"

ເສນະກະ" ຂໍພະລາຊະທານ ຂ້າພະບາດຂໍປຽບທຽບໃຫ້ຟັງ ຄືບັນດາແມ່ນ້ຳນ້ອຍທັງຫລາຍທີ່ໄຫລລົງສູ່ແມ່ນ້ຳຄົງຄາ (ຫລືນ້ຳຂອງ) ແລ້ວກໍໄຫລລົງໃສ່ມະຫາສະມຸດນັ້ນ ຊື່ເດີມຂອງແມ່ນ້ຳນ້ອຍທັງຫລາຍຕະຫລອດແມ່ນ້ຳຄົງຄາ ຍ່ອມສູນຫາຍໄປທັງຫມົດ ປາກົດຊື່ແຕ່ວ່ານ້ຳມະຫາສະມຸດທີ່ນັ້ນສັນໃດ ຄົນມີປັນຍາແຕ່ບໍ່ມີຊັບ ຖ້າເຂົາໄປຫາ ຄົນມີຊັບແລ້ວ ກໍຫມົດຊື່ສຽງເຫມືອນກັນສັນນັ້ນ ດ້ວຍເຫດນີ້ ຂ້າພະບາດຈຶ່ງເຫັນວ່າ ຄົນມີຊັບປະເສີດກວ່າຄົນມີປັນຍາ "

ພະລາຊາ "ເອີ້ ! ມະໂຫສົດ ເສນະກະ ແກ້ແລ້ວເຈົ້າ ຈະເຫັນວ່າຢ່າງໃດອີກ " ພະລາຊາຕັດ - ມະໂຫສົດ " ຂໍພະລາຊະທານ ຂ້າພະບາດເຫັນວ່າເສນະກະເວົ້າບໍ່ແມ່ນ ຢ່າເຊື່ອເລີຍ ຂໍໂພດໄດ້ສະດັບ ຄືວ່າແມ່ນ້ຳນ້ອຍທັງຫລາຍໄຫລສູ່ມະຫາສະມຸດ ແລ້ວກາຍເປັນທະເລຫລວງນັ້ນກໍແມ່ນແລ້ວ ແລະ ທະເລຫລວງນັ້ນກໍເກີດເປັນຟອງນອງລະລອກ ພັດຟາດແຕກເປັນກ້ອນເປັນໂງ່ນຫນ່ອຍຮາວພູຮາວດອຍ ຊຶ່ງບໍ່ອາດຈະນັບໄດ້ວ່າມີຈັກກ້ອນຈັກໂງ່ນ ມະຫາສະມຸດມີຟອງອັນນັບບໍ່ໄດ້ພັດຟາດຝັ່ງຢູ່ດັ່ງນີ້ກໍບໍ່ເຫັນ ວ່າຈະລົ້ນຝັ່ງອອກ ໄປໄດ້ຈັກເທື່ອ ເຖິງແມ່ນຈະມີຟອງຟາດມາກະທົບຝັ່ງທໍ່ໃດກໍຕາມ ກໍຍ່ອມແຕກສະລາຍຫາຍໄປກັບຝັ່ງນັ້ນເອງ ບໍ່ເຫັນກາຍຝັ່ງອອກມາໄດ້ອັນນີ້ສັນໃດຄົນໂງ່ທີ່ມີຊັບເຖິງແມ່ນຈະມີຊັບທໍ່ໃດ ກໍບໍ່ລື່ນເຫລືອ ຄົນມີປັນຍາໄປໄດ້ ຕ້ອງອາໄສຄົນມີປັນຍາຢູ່ນັ້ນເອງ ເພາະວ່າ ເວລາເກີດຖ້ອຍຄະດີຄວາມກໍດີ ເວລາມີການໂຕ້ຖຽງສື້ຖາມແກ້ໄຂບັນ ຫາອັນຫຍຸ້ງຍາກກໍດີ ກໍຕ້ອງອາໃສຄົນມີປັນຍາວ່າກ່າວແກ້ໄຂໃຫ້ ດ້ວຍເຫດນີ້ຂ້າພະບາດຈຶ່ງວ່າຄົນມີປັນຍາດີກວ່າຄົນມີຊັບເປັນແນ່ແທ້. ພະລາຊາຕັດຖາມເສນະກະອີກ " ເປັນຢ່າງໃດອາຈານເສນະກະ ຂໍ້ຄວາມທີ່ມະໂຫສົດແກ້ມານີ້ ທ່ານເຫັນດີຫລືຍັງ ຖ້າຍັງບໍ່ເຫັນດີ ກໍຈົ່ງແກ້ໄຂໄປ "

ເສນະກະ " ໂດຍທານໂທດ ! ຂ້າພະບາດຍັງບໍ່ເຫັນດີ ນຳເລີຍ ມະໂຫສົດເດັກນ້ອຍເກີດວານນີ້ ຈະຮູ້ຈັກອີ່ຫຍັງ ? ຂ້າພະບາດຂໍກາບທູນໃຫ້ຊົງຊາບວ່າ ຄົນທີ່ມີຊັບມາກນັ້ນແມ່ນຈະເວົ້າ ຈະເຮັດແນວໃດກໍມີຄົນເຊື່ອຟັງນັບຖື ເຖິງແມ່ນຈະຕັດສິນຖ້ອຍຄວາມຜິດພາດໆ ຜູ້ຖືກໃຫ້ເປັນຜິດຜູ້ຜິດໃຫ້ຖືກ ກໍບໍ່ມີຜູ້ໃດກ້າຄັດຄ້ານໄດ້ຄົນຜູ້ມີຊັບນີ້ ເຖິງຈະເປັນຄົນຊົ່ວໆບໍ່ມີຄວາມຮູ້ອັນໃດກໍຕາມ ກໍຍັງມີຄົນນັບຖືຢ້ານກົວຢູ່ນັ້ນເອງ ບໍ່ມີຜູ້ໃດຖືຫຸ່ມເຂົາໄດ້ ສະນັ້ນຂ້າພະບາດຈຶ່ງ ວ່າຄົນມີຊັບນັ້ນແຫລະດີກວ່າຄົນມີປັນຍາ "

ມະໂຫສົດ " ຂໍພະລາຊະທານ ! ອາຈານເສນະກະນີ້ ລາວຫລິງເຫັນແຕ່ຜົນປະໂຫຍດທີ່ຕົນຈະໄດ້ໃນຊາດນີ້ທໍ່ນັ້ນ ບໍ່ໄດ້ຫລິງເຫັນໂທດອັນຈະເກີດຈາກການກະທຳຄວາມຊົ່ວນັ້ນເລີຍ ອັນການທີ່ຄົນ ມີຊັບເຮັດອັນໃດກໍໄດ້ ເວົ້າຜິດກໍມີຄົນເຊື່ອຖືນັ້ນ ມັນເຮັດໄດ້ເວົ້າ ໄດ້ພຽງຊົ່ວຄາວທໍ່ນັ້ນ ເມື່ອພາຍລຸນມາເຂົາເຫັນພົ້ນແລ້ວ ເຂົາກໍ ຍ່ອມຊົງນ້ຳຫນ້າຫມົດຄວາມນັບຖື ແລະ ຕົວເອງກໍຈະໄດ້ຮັບໂທດທັງ ໃນຊາດນີ້ ແລະ ຊາດຫນ້າ ດັ່ງຕົວຢ່າງທີ່ເສນະກະວ່າ ຄົນທີ່ມີຊັບແມ່ນຈະຕັດສິນຖ້ອຍຄວາມຜູ້ຜິດໃຫ້ເປັນຖືກ ແລະ ຜູ້ຖືກໃຫ້ເປັນຜິດ ກໍໄດ້ນັ້ນ ມັນເປັນຄວາມຊົ່ວທີ່ສຸດ ຄົນຜູ້ມີຊັບ ແລະ ອ້າງເອົາຊັບນັ້ນ ມາເປັນອຳນາດຂົ່ມເຫັງຄົນນັ້ນຈະມີໃຜວ່າ ເປັນຄົນດີ ຈະມີໃຜແດ່ ນັບ

ຖືເຊື່ອຟັງ ຈະມີໃຜຍ້ອງຫາກຈະມີຜູ້ຍ້ອງຜູ້ວ່າດີ ກໍແມ່ນແຕ່ຄົນ ຈຳພວກປະຈົບປະແຈງຖະແຫລງກິນທໍ່ນັ້ນເອງ ຄົນເຂົາບໍ່ໄດ້ກິນນຳເຂົາກໍຈະຕິສົນນິນທາວ່າບໍ່ດີ ທີ່ລຸນມາເຂົາກໍຈະຂາດລາບຂາດຍົດໄປເອງ ສະນັ້ນຂ້າພະບາດຈຶ່ງເຫັນວ່າຄົນມີຊັບ ແຕ່ບໍ່ມີປັນຍານັ້ນບໍ່ປະ ເສີດເລີຍ"

ພະລາຊາຕັດຖາມເສນະກະອີກ " ນີ້ອາຈານຈະວ່າຢ່າງໃດ?" ເສນະກະທູນ " ຂໍພະລາຊະທານ ມະໂຫສົດນີ້ຍັງນ້ອຍໂພດ ບໍ່ຮູ້ຫຍັງດອກ ! ຂໍໃຫ້ພະບາດເປັນເຈົ້າຄິດເບິ່ງ ! ທຳມະດາຊ້າງມ້າງົວຄວາຍຂ້ອຍຍິງຂ້ອຍຊາຍ ມັນກໍມີຢູ່ແຕ່ໃນຕະກູນຂອງຄົນມີຊັບ ທັງນັ້ນ ຄົນມີຊັບນັ້ນຄິດຢາກໄດ້ອັນໃດກໍໄດ້ສົມຫວັງທຸກຢ່າງ ຊັບເປັນແກ້ວສາລະພັດນຶກ ຂ້າພະບາດຈຶ່ງວ່າຄົນມີຊັບນັ້ນແຫລະປະເສີດກວ່າຄົນມີປັນຍາ.

ມະໂຫສົດ " ຂໍພະລາຊະທານ ອັນຄົນມີຊັບແຕ່ບໍ່ມີປັນ ຍານັ້ນເຖິງມີຫລາຍທໍ່ໃດກໍຕາມ ແຕ່ກໍບໍ່ສາມາດຮັກສາຊັບນັ້ນໃຫ້ໝັ້ນຄົງຖາວອນໄວ້ໄດ້ ແລະ ຊັບຂອງເຂົານັ້ນແຫລະຈະເປັນງູພິດທຳລາຍເຂົາເອງໃຫ້ເສຍຊື່ສຽງ ແລະ ເຖິງກັບຕາຍກໍມີ ເພາະບໍ່ມີປັນຍາຮັກສາຊັບ ແລະ ໃຊ້ຊັບໃຫ້ເປັນປະໂຫຍດແກ່ຕົນ ແລະ ຄົນອື່ນແຕ່ຊັບຂອງຄົນມີປັນຍາເຖິງມີນ້ອຍກໍເປັນປະໂຫຍດ ເພາະຮູ້ຈັກໃຊ້ ສະນັ້ນ ຂ້າ

ພະບາດຈຶ່ງເຫັນວ່າ ຄົນມີປັນຍານັ້ນແຫລະປະເສີດ.

ເສນະກະ ໄດ້ຟັງມະໂຫສົດຕອບ ຈຶ່ງຄິດໃນໃຈວ່າ " ເຮົາ ຈະເອົາມະໂຫສົດໃຫ້ຢູ່ຈົນ ໄດ້ໃນຄາວນີ້ " ຄິດແລ້ວຈຶ່ງກາບທູນ ພະລາຊາວ່າ " ຂໍພະລາຊະທານ ! ພວກຂ້າພະບາດທັງ 5 ຄົນນີ້ນັບວ່າເປັນຄົນມີປັນຍາ ແຕ່ພວກຂ້າພະບາດກໍຕ້ອງມາເຝົ້າຖວາຍບັງຄົມ ພະອົງທຸກວັນ ທັງນີ້ກໍຍ້ອນພະອົງມີອຳນາດມີຍົດ ແລະ ມີຊັບນັ້ນເອງມະໂຫສົດວ່າ ຄົນມີປັນຍາປະເສີດກວ່າຄົນມີຊັບແລ້ວ ເປັນຫຍັງຕົນເອງຈຶ່ງຕ້ອງມາກົ້ມຫມອບຕອບຂາບຖວາຍບັງຄົມທ່ານຜູ້ມີຊັບ ຢູ່ດັ່ງນີ້ ນີ້ແຫລະ ຂ້າພະບາດຈຶ່ງເຫັນວ່າ ຄົນມີຊັບປະເສີດກວ່າຄົນມີປັນຍາ"

ສົມເດັດພະເຈົ້າວິເທຫະລາດ ໄດ້ຟັງເສນະກະກາບທູນ ເປັນຂໍ້ຄວາມທີ່ຄົມຄາຍຍິ່ງ ຈຶ່ງພິນພະພັກມາຕັດຖາມມະໂຫສົດວ່າ ວ່າຈັ່ງໃດມະໂຫສົດເຈົ້າຍັງເຫັນວ່າຄົນມີປັນຍາປະເສີດກວ່າຄົນມີຊັບ ຫລືຈັ່ງໃດ ?" ມະໂຫສົດ " ຂໍພະລາຊະທານ ! ອາຈານເສນະ ກະນີ້ ບໍ່ໄດ້ຮູ້ຈັກຄຸນຄ່າຂອງປັນຍາເລີຍ ລາວເຫັນແຕ່ລາບແຕ່ຍົດ ທີ່ນັ້ນນັບວ່າເປັນຄົນອັນທະພານມືດແປດດ້ານເລີຍ ຂໍພະອົງຈົ່ງຊົງຟັງ ຂ້າພະບາດຈະອະທິບາຍ ຄືວ່າ ຄົນໂງ່ທີ່ບໍ່ມີປັນຍານັ້ນ ເຖິງຈະມີ ຊັບຫລາຍປານໃດກໍຕາມ ກໍເປັນຂ້ອຍຮັບໃຊ້ຄົນຜູ້ມີປັນຍາຢູ່ນັ້ນ ເອງເພາະວ່າຄົນໂງ່ທີ່ມີຊັບຫລາຍນັ້ນ ເວລາມີທຸກມີໄພອັນໃຫຍ່ຫລວງມາ

ເຖິງຕົນເອົາແລ້ວ ກໍຕ້ອງແລ່ນຫາຄົນມີປັນຍາຊ່ວຍແກ້ໄຂໃຫ້ ເວລາເກີດຖ້ອຍຄວາມ ຫລືມີບັນຫາອັນຫຍຸ້ງຍາກເກີດຂຶ້ນໃນວົງລາຊະການບ້ານເມືອງ ກໍຕ້ອງໃຫ້ຄົນມີປັນຍາຄິດແກ້ໄຂຄົນໂງ່ຄິດແກ້ໄຂບໍ່ ໄດ້ ແລະ ຈັບສິນບັດກໍແກ້ໃຫ້ບໍ່ໄດ້ ຈັບສິນບັດຈະເກີດມາກໍອາໄສປັນ ຍາຈະຫມັ້ນຄົງຖາວອນຢູ່ໄດ້ກໍອາໄສປັນຍາ ພວກຂ້າພະບາດທັງ 5 ຄົນນີ້ພະອົງເຫັນວ່າມີປັນຍາ ຈຶ່ງຕັ້ງໄວ້ໃນຕຳແຫນ່ງອັນສູງໃຫ້ລາບ ຍົດພະອົງບໍ່ໄດ້ຕັ້ງຄົນໂງ່ເລີຍ ຖ້າຫາກພວກຂ້າພະບາດເປັນຄົນໂງ່ບໍ່ ມີປັນຍາແລ້ວ ພະອົງກໍຄົງບໍ່ພະລາຊະທານລາບຍົດໃຫ້ແນ່ນອນ ປັນຍານີ້ເປັນຈັບອັນປະເສີດແທ້ໃຊ້ບໍ່ຮູ້ຈັກຫມົດ ແລະ ບໍ່ຈິບຫາຍວາຍ ວອດດ້ວຍໄຟໄຫມ້ ໂຈນລັກຫລືນ້ຳຖ້ວມປັນຍານີ້ຫມັ້ນ ເປັນແສງສະຫວ່າງທີ່ສຸດໃນໂລກ ເຖິງແມ່ນພະອາທິດຈະມີແສງສະຫວ່າງສ່ອງຕະຫລອດທົ່ວພື້ນພິພົບ ແຕ່ກໍບໍ່ສາມາດສ່ອງເອົາໄປໃນຖ້ຳມືດ ອັນມີເພດຢູ່ໃນທີ່ນັ້ນໄດ້ ສ່ວນປັນຍາສ່ອງເຫັນຫມົດ ສະນັ້ນປັນຍາຈຶ່ງເປັນແກ້ວສາລະພັດນຶກຂອງມະນຸດ ຄົນມີປັນຍາແລ້ວຈະກະທຳການສິ່ງໃດໆ ກໍສຳເລັດໄດ້ທຸກປະການ. ເຖິງແມ່ນທ່ານຜູ້ເພິ່ນໄດ້ເຖິງນັກ ພົນນິບພານຂ້າມພົ້ນຈາກໂລກສົງສານ ກໍອາໄສປັນຍານັ້ນເອງ.

ສົມເດັດພະເຈົ້າວິເທຫະລາດ ໄດ້ຊົງສະດັບຄຳບັນຍາຍອານຸພາບແຫ່ງປັນຍາຂອງມະໂຫສົດສຸດລົງແລ້ວ ຈຶ່ງພິນພະພັກໄປຕັດຖາມ ອາ

ຈານເສນະກະວ່າ " ເປັນຢ່າງໃດອາຈານ ທ່ານຍັງສາມາຈະກ່າວແກ້ມະໂຫສົດ ໄດ້ອີກຫລືປະການໃດ?"

ໃນເວລານັ້ນ ອາຈານເສນະກະໝົດປັນຍາ ບໍ່ສາມາດຈະກ່າວແກ້ຕອບຕໍ່ໄປໄດ້ອີກ ຈຶ່ງນັ່ງກົ້ມໜ້າເສີຍຢູ່ ສົມເດັດພະເຈົ້າວິເທຫະລາດ ເຫັນເສນະກະນັ່ງກົ້ມໜ້າໝົດປັນຍາແລ້ວ ກໍຊົງສັນລະ ເສີນມະໂຫສົດ ເປັນອັນມາກ ພ້ອມທັງໄດ້ພະຊາຊະທານລາງວັນ ຄື ງົວເຖິກໃຫ່ຍພັນຕົວ ຊ້າງສຳຫລັບຂີ່ຕົວໜຶ່ງ ລົດທຽມດ້ວຍມ້າອາຊາໄນ 10 ຄັນ ແລະ ບ້ານສ່ວຍອີກ 16 ບ້ານໃຫ້ແກ່ມະໂຫສົດ.

ຂັ້ນມະໂຫສົດແຕ່ງດອງ

ໃນຄາວນັ້ນ ມະໂຫສົດ ໃຫ່ຍເປັນບ່າວຂຶ້ນມາມີອາຍຸໄດ້ 16 ປີ ບໍລິບູນແລ້ວ ສົມເດັດພະນາງເຈົ້າ ອຸທຸມພອນລາຊະເທວີ ຈຶ່ງມາຊົງ ດຳລິວ່າ " ເອີ ! ດຽວນີ້ນ້ອງຊາຍຂອງເຮົາກໍໃຫ່ຍເປັນບ່າວແລ້ວ ຍົດສັກກໍສູງສົມບັດພັດສະຖານກໍມີຫລາຍ ສົມຄວນຈະມີເຮືອນຊານໄດ້ ແລ້ວ ສະນັ້ນຈຶ່ງເປັນການສົມຄວນທີ່ສຸດທີ່ເຮົາຈະຈັດຫານາງສາວຜູ້ມີ ຕະກຸນສູງ ມາປຸກແປງໃຫ້ເປັນສີລິພະລິຍາ ແກ່ນ້ອງຊາຍເຮົາ" ເມື່ອ ພະນາງເຈົ້າຊົງດຳລິດັ່ງນີ້ແລ້ວ ຈຶ່ງເຂົ້າໄປຂາບທູລອງ ພະລາ ຊະ ສາມີ ທູນຄວາມປະສົງຂອງນາງທີ່ໄດ້ດຳລິໄວ້ໃຫ້ພະລາຊະສາມີຊາບ ສົມເດັດພະເຈົ້າ ວິເທຫະລາດ ໄດ້ຟັງພະນາງເຈົ້າ ຂາບທູນຈຶ່ງຕັດ ວ່າ " ເອີ ! ເລື່ອງທີ່ນ້ອງດຳລິຢາກໃຫ້ມະໂຫສົດ ນ້ອງຊາຍຂອງ ເຈົ້າ ມີຄອບຄົວນັ້ນ ເປັນການສົມຄວນແລ້ວ ເຮົາພະອົງກໍເຫັນດີນຳ ແຕ່ວ່າ ກ່ອນນ້ອງຈະຈັດການເລື່ອງນີ້ ນ້ອງຄວນຈະບອກໃຫ້ມະ ໂຫ ສົດຊາບເສຍກ່ອນ ລາງເທື່ອເຂົາອາດຈະຍັງບໍ່ຕ້ອງການ ຫລື ຄົນທີ່

ເຮົາຫາໃຫ້ເຂົາ ເຂົາອາດຈະບໍ່ຖືກໃຈກໍເປັນໄດ້ ເພາະມະໂຫສົດ ເປັນຄົນມີປັນຍາ ລາວເຫື່ອ ເຂົາອາດຈະຊອກຫາເອົາເອງ ຕ້ອງຖາມເຂົາກ່ອນ "

ສິນເດັດ ພະນາງເຈົ້າອຸທຸມພອນໄດ້ຟັງ ພະລາຊະກະແສຮັບສັ່ງດັ່ງນີ້ ຈຶ່ງກາບທູນລາໄປພະຕຳນັກຂອງພະນາງ ແລ້ວມີຮັບສັ່ງໃຫ້ມະໂຫສົດ ເຂົ້າເຝົ້າ ຊີ້ແຈ້ງຄວາມປະສົງຂອງພະນາງ ແລະ ພະລາຊະດຳຣິຂອງພະລາຊາ ໃຫ້ມະໂຫສົດຟັງ ມະໂຫສົດ ໄດ້ຟັງພະ ດຳລັດຂອງພະນາງ ແລະ ພະມະຫາກະສັດແລ້ວ ຈຶ່ງຄິດໃນໃຈວ່າ " ອື ! ນາງສາວທີ່ພະລາຊະເທວີ ຈະຫາມາປະທານໃຫ້ເຮົານີ້ ໜ້າຕາ ຮູບຮ່າງ ແລະ ສະຕິປັນຍາ ຈະເປັນແນວໃດ ເຮົາກໍຍັງບໍ່ຮູ້ຖ້າ ເຮົາຮັບປາກ ຍອມຕາມພະປະສົງຂອງພະນາງ ໃນດຽວນີ້ແລະເມື່ອໄດ້ນາງນັ້ນມາ ຫາກນາງບໍ່ເປັນທີ່ເພິ່ງໃຈຂອງເຮົາ ການກໍຈະເສຍໄປ ເຮົາຄວນຈະຊອກຫາເອົາເອງດີກວ່າ " ຄິດດັ່ງນີ້ແລ້ວ ຈຶ່ງທູນພະນາງເຈົ້າວ່າ : " ຂ້າແຕ່ເຈົ້າເອີຍ ການທີ່ເຈົ້າເອີຍ ຈະຊອກຫານາງສາວມາໃຫ້ເປັນພະລິຍາຂອງນ້ອງນັ້ນ ຂໍໃຫ້ເຈົ້າເອີຍງົດໄວ້ກ່ອນ ຈັກສອງສາມວັນ ແລະ ຢ່າຟ້າວ ກາບທູນເລື່ອງນີ້ ໃຫ້ພະລາຊາຊາບ. ນ້ອງຂໍໄປຊອກຫານາງສາວ ຜູ້ທີ່ຖືກໃຈຂອງ ນ້ອງດ້ວຍຕົນເອງເບິ່ງກ່ອນ ເມື່ອໄດ້ເຫັນນາງສາວຜູ້ຕ້ອງໃຈແລ້ວຈຶ່ງຈະ

ກາບທູນໃຫ້ເຈົ້າເອື້ອຍຊາບ ແລ້ວຈຶ່ງຄ່ອຍຈັດການ ຕາມຮີດຄອງ ຕໍ່ໄປ ."

ສິ້ນເດັດພະນາງເຈົ້າອຸທູມພອນໄດ້ຟັງ ມະໂຫສົດຜູ້ນ້ອງທູນກໍຊົງເຫັນດີ ແລະ ອະນຸຍາດຕາມປະສົງ ດັ່ງແລ້ວມະໂຫສົດກໍລາ ເຈົ້າເອື້ອຍກັບເມືອເຮືອນຕົນ ແຈ້ງຂໍ້ຄວາມຕ່າງໆທີ່ໄດ້ຕົກລົງນຳພະນາງເຈົ້າໃຫ້ພວກເພື່ອນຝູງທັງຫລາຍຊາບທຸກຄົນ ແລະ ອະນັດສັ່ນ ຍາພວກໝູ່ເພື່ອນໃຫ້ຖືໄວ້ເປັນຄວາມລັບ ແລ້ວກໍປອມຕົວເປັນຊ່າງຫຍິບເສື້ອຜ້າ ອອກຈາກພະນະຄອນໄປແຕ່ຜູ້ດຽວ.

ມະໂຫສົດເດີນທ່ອງທ່ຽວໄປຕາມບ້ານຕ່າງໆ ໃນຖານະ ເປັນຊ່າງຫຍິບແສ່ວທ່ຽວຫາຮັບຈ້າງ ສ່ວນທາງຕານັ້ນກໍສອດສ່ອງຫານາງສາວ ຜູ້ຈະເປັນຄູ່ຊີວິດຢູ່ບໍ່ລະເວັ້ນ ຈົນໄປເຖິງບ້ານອຸຕະລະທີ່ຢູ່ທາງທິດເໜືອຂອງພະນະຄອນໃນບ້ານນັ້ນ ມີຕະກູນໜຶ່ງ ເຄີຍເປັນ ຕະກູນທີ່ຮັ່ງມີມາແຕ່ກ່ອນ ແຕ່ພາຍຫລັງມາ ເລີຍຕົກທຸກໄດ້ຍາກ ແລະຄົນໃນຕະກູນນັ້ນ ກໍມີພຽງແຕ່ສາມຄົນເທົ່ານັ້ນ ຄື ພໍ່ ແມ່ ກັບລູກສາວຊື່ນາງ ອະມະລາ.

ອະມະລາ ເປັນນາງທີ່ງາມທີ່ສຸດໃນເຂດແຂວງນະຄອນ ວິເທຫະລາດ ທັງເປັນຍິງທີ່ສະຫລາດຫລັກແຫລມ ມີປັນຍາ ນັບວ່າ ເປັນນາງງາມທີ່ຄົບຖ້ວນ ເຊິ່ງຮຽກວ່າ ປັນຈະກັນລະຍານີ ມີບຸນວາດສະ

ຫນາ ເກີດມາສຳລັບເປັນຄູ່ຂອງມະໂຫສົດ ໂພທິສັດ ໂດຍແທ້ ແຕ່ຍ້ອນພໍ່ ແມ່ຂອງນາງຕົກທຸກໄດ້ຍາກ ນາງອະມະລາ ຈຶ່ງຕ້ອງ ເຮັດວຽກຫນັກ ຕັກນ້ຳຕຳເຂົ້າ ເອົາຟືນ ດ້ວຍຕົນເອງທັງຫມົດ ຜິວ ພັນຂອງນາງຈຶ່ງພາກົດບໍ່ຄ່ອຍບາດຕາ ພໍປານໃດ ປະກອບກັບເຄື່ອງນຸ່ງທີ່ນຸ່ງກໍເສົ້າໆຫມອງໆ ຍ້ອນຄວາມຈົນນັ້ນເອງ.

ໃນວັນນັ້ນ ນາງອະມະລາໄດ້ຕື່ນເຊົ້າປຸງກສຸກແລ້ວ ກໍຈັດ ແຈງເອົາອອກໄປສົ່ງພໍ່ທີ່ອອກໄປໄຖນາກ່ອນແຕ່ເຊົ້າ ຂະນະເດີນທາງໄປຕາມທາງ ກໍໄດ້ພົບກັບ ມະໂຫສົດ ທີ່ພວມຍ່າງສວນທາງມາ ມະໂຫສົດພໍມາບເຫັນນາງອະມະລາ ກໍຕົກສະເງີ້ ແລະ ມີຄວາມພໍ ໃຈຂຶ້ນມາທັນທີ ຈຶ່ງຢຸດຢືນເບິ່ງນາງຢູ່ໄກໆ ທາງໃນໃຈກໍຄິດວ່າ "ເອີ! ນາງສາວຄົນນີ້ ງາມປະຫລາດ ຖືກວາດແທ້ໆ ເຫັນຈະເປັນຄົນດີ ມີບຸນວາດສະຫນາແນ່ນອນ ຖ້ານາງຫາກຍັງບໍ່ທັນມີຜົວ ເຮົາຕ້ອງ ຕິດຕາມເອົານາງຄົນນີ້ໃຫ້ໄດ້.

ຝ່າຍນາງ ອະມະລາ ພໍເຫລືອດແສງຕາໄປເຫັນມະໂຫສົດ ກໍຄິດມັກຂຶ້ນມາໃນທັນທີ ນາງສະແດງກິລິຍາອາຍໆ ຫນ່ອຍຫນຶ່ງ ແລ້ວຈຶ່ງຢຸດຢືນເສືອດຕາເບິ່ງ ມະໂຫສົດຄືກັນ ພ້ອມກັບຄິດຢູ່ໃນໃຈວ່າ : " ເອີ ! ຊາຍຄົນນີ້ ປະຫລາດ ຄືງເປັນຄົນສຳຄັນບໍ່ແມ່ນຫນ້ອຍຖ້າເຮົາໄດ້ຊາຍຄົນນີ້ມາເປັນຄູ່... ພາສ້າງ ພາແປງແລ້ວ ອາດ ຈະ

"ເຈົ້າມີຜົວຫລືຍັງ"

ຕັ້ງຕົວຮັ່ງມີເປັນດີ ໄດ້ເປັນແນ່ " ທັງສອງຄົນພໍໄດ້ເຫັນໜ້າ ກັນ ຕ່າງຄົນຕ່າງກໍຄຶດນັກ ຄິດແນ່ນວາດຢູ່ໃນໃຈ ຄັນແລ້ວມະໂຫສົດກໍຄຶດ ຕໍ່ໄປວ່າ " ນາງຄົນນີ້ຈະມີຜົວແລ້ວຫລືຍັງບໍ່ທັນມີ ເຮົາຈະຖາມເປັນ ປັນຫາລອງເບິ່ງ ຖ້ານາງເປັນຄົນມີປັນຍາ ສະຫລາດກໍອາດຈະຮູ້ຈັກ ປັນຫາທີ່ເຮົາຖາມໄດ້ ຄິດແລ້ວຈຶ່ງຢືນຈ້ອງຕາເບິ່ງນາງຢູ່ ພໍເຫັນ ນາງຫລຽວມາ ຈຶ່ງຢຽດແຂນອອກ ແລ້ວກຳມືເຂົ້າໄວ້ສະແດງ ອາ ການຖາມປັນຫາໃນໃຈວ່າ " ມີຜົວແລ້ວຫລືຍັງ ? "

ນາງ ອະມະລາ ພໍໄດ້ເຫັນກໍເຂົ້າໃຈໄດ້ທັນທີ ຈຶ່ງຢຽດແຂນແບ ມືອອກຮັບ ເປັນການຕອບວ່າ " ຍັງບໍ່ມີຜົວ " ມະໂຫສົດເຫັນນາງ ແບມືຕອບດັ່ງນັ້ນ ກໍເຂົ້າໃຈໄດ້ວ່າ ນາງຍັງບໍ່ທັນມີຜົວ ຈຶ່ງຄ່ອຍ ໆ ກ້າວຂາຍ່າງເຂົ້າໄປຫານາງ ແລ້ວອອກປາກຖາມວ່າ ເອີ ! ນີ້ ! ຂໍໂທດເທາະນ້ອງສາວ ນ້ອງສາວຊື່ວ່າຈັ່ງໃດ ?"

ນາງອະມະລາ ສະແດງກິລິຍາອາຍໆໜ່ອຍໜຶ່ງແລ້ວຕອບ ວ່າ " ສິ່ງໃດທີ່ບໍ່ເຄີຍມີມາແຕ່ກ່ອນ ຕໍ່ໄປຂ້າງໜ້າກໍຈະບໍ່ມີ ແລະໃນປັດ ຈຸບັນນີ້ ກໍບໍ່ມີຄືກັນ ສິ່ງນັ້ນແຫລະເປັນຊື່ຂອງນ້ອງ " ມະໂຫສົດ ໄດ້ ຟັງຄຳຕອບຂອງນາງ ກໍຄຶດສິງຫລິງຢູ່ເຫິງເຕີບ ແລະ ເຫັນວ່າ ສິ່ງ ທີ່ບໍ່ເຄີຍມີມາແຕ່ກ່ອນ ຕໍ່ໄປຂ້າງໜ້າກໍຈະບໍ່ມີ ແລະ ໃນປັດຈຸບັນ ນີ້ ກໍບໍ່ມີນັ້ນມັນຕ້ອງແມ່ນຄວາມຕາຍນີ້ແຫລະ ພໍຄຶດແລ້ວຈຶ່ງຖາມນາງວ່າ

" ນ້ອງຊື່ ອະມະລາແມ່ນບໍ ?

" ແມ່ນແລ້ວ ອ້າຍ ! " ນາງຕອບ

ມະໂຫສົດຖາມຕໍ່ວ່າ " ນ້ອງເອົາໝໍ້ເຂົ້ານີ້ໄປໃຫ້ໃຜ ?

ນາງອະມະລາ " ເອົາໄປສົ່ງໃຫ້ບຸນພະເທວະດາຂອງ ນ້ອງເອງ "

ມະໂຫສົດຟັງແລ້ວ ກໍຄິດພິຈາລະນາເຫັນວ່າ ຄຳວ່າບຸນ ພະເທວະດານີ້ຕ້ອງແມ່ນ ພໍ່ກັບແມ່ຂອງນາງນັ້ນເອງ ຈຶ່ງຖາມຄືນວ່າ: " ນ້ອງເອົາເຂົ້າໄປສົ່ງ ພໍ່ ແມ່ນບໍ ?

" ແມ່ນແລ້ວອ້າຍ " ນາງບອກ

" ພໍ່ ຂອງນ້ອງໄປເຮັດຫຍັງຢູ່ໃສ ?" ມະໂຫສົດຖາມ

" ໄປເຮັດທີ່ບ່ອນໜຶ່ງໃຫ້ເປັນສອງຈຸ້ນ " ນາງບອກ.

" ອື ! ໄປເຮັດທີ່ບ່ອນໜຶ່ງໃຫ້ເປັນສອງຈຸ້ນນັ້ນ ແມ່ນ ໄຖນາແມ່ນບໍ ?

ແມ່ນແລ້ວອ້າຍ "

ນາ ບ່ອນພໍ່ຂອງນ້ອງໄປໄຖນັ້ນ ຢູ່ໃສ ? ມະໂຫສົດຖາມ

" ຢູ່ໃກ້ບ່ອນຄົນໄປແລ້ວບໍ່ກັບຄືນມາ ຄືໄປແລ້ວກໍສູນໄປ ເລີຍ ນາຂອງນ້ອງຢູ່ໃກ້ບ່ອນຫັ້ນລະອ້າຍ

" ໝາຍຄວາມວ່າ ນາຂອງນ້ອງຢູ່ແຄມຜີປ່າຊ້າແມ່ນບໍ ? ມະ

ໂຫສິດຖາມ

" ແມ່ນລະອ້າຍ " ນາງຕອບ

" ນ້ອງໄປສົ່ງເຂົ້າພໍ່ແລ້ວ ຈະກັບມາວັນນີ້ບໍ່ ? ມະໂຫສິດຖາມ

" ຖ້າສົ່ງໜຶ່ງມາ ນ້ອງກໍຈະບໍ່ມາ ຖ້າສົ່ງໜຶ່ງບໍ່ມາ ນ້ອງກໍຈະມາ " ນາງບອກ

" ໝາຍຄວາມວ່າ ນາຂອງນ້ອງຢູ່ພາກແມ່ນ້ຳແມ່ນບໍ ? ແລະ ຖ້າຫາກວ່າ ນ້ຳຂຶ້ນມາຫລາຍ ນ້ອງກໍຄົງມາບໍ່ໄດ້ ແມ່ນບໍ ?ຖ້າຫາກວ່ານ້ຳບໍ່ຂຶ້ນມາ ນ້ອງຈຶ່ງຈະມາຊັ້ນບໍ ? "

" ແມ່ນແລ້ວອ້າຍ " ນາງບອກ

ເມື່ອທັງສອງໄດ້ລົມກັນພໍສົມຄວນແລ້ວ ແລະ ຕ່າງຄົນຕ່າງ ກໍຮູ້ບັນຫາຂອງກັນແລ້ວ ນາງອະມະລາ ຈຶ່ງເຊີນມະໂຫສິດໃຫ້ຮັບ ປະທານເຂົ້າປຽກ; ມະໂຫສິດຄິດໃນໃຈວ່າ " ຖ້າເຮົາບໍ່ຮັບກໍຈະເປັນການບໍ່ສົມຄວນ ຈະເຮັດໃຫ້ນາງອາຍ ຫລືເສຍໃຈໄປກໍໄດ້ ຕ້ອງຮັບປະທານຈັກໜ່ອຍ ພໍເປັນພິທີ " ຄິດແລ້ວຈຶ່ງຮັບປາກນາງວ່າ "ຍິນດີ " ນາງອະມະລາ ຈຶ່ງປົງໝໍ້ເຂົ້າລົງ. ມະໂຫສິດຢືນຄິດໃນ ຂະນະທີ່ນາງພວມ ປົງໝໍ້ເຂົ້າລົງຢູ່ນັ້ນວ່າ " ຖ້ານາງບໍ່ລ້າງຖ້ວຍເສຍກ່ອນ ແລະ ບໍ່ເອົານ້ຳມາໃຫ້ເຮົາລ້າງມືກ່ອນ ເຮົາຈະບໍ່ຮັບປະທານເລີຍ ແລ້ວນາງຄົນນີ້ ເຮົາກໍຈະບໍ່ຕ້ອງການ ຈະໄປຊອກຫາເອົາຄົນ

ໃຫ້ມດີກວ່ານີ້ " ໃນຂະນະທີ່ຄິດຢູ່ ແສງຕາກໍຈ້ອງເບິ່ງນາງຢູ່ບ່ອນຫວ່າງ ຝ່າຍນາງ ອະມະລາ ປິງໝີ້ເຂົ້າລີງແລ້ວ ກໍເອົາຖ້ວຍໄປລ້າງແລ້ວ ຕັກນ້ຳມາໃຫ້ມະໂຫສິດ ລ້າງມື ເສັດແລ້ວ ນາງຈຶ່ງແບ່ງເຂົ້າທີ່ ຈະເອົາໄປສົ່ງພໍ່ນັ້ນໄວ້ສ່ວນໜຶ່ງ ອີກສ່ວນໜຶ່ງ ຕັກໃສ່ຖ້ວຍ ຍົກມາ ໃຫ້ມະໂຫສິດ ມະໂຫສິດກໍຮັບປະທານ ດັບອີ່ມທນ້ຳສຳລານ ແລະ ບ້ວນປາກແລ້ວ ມະໂຫສິດ ຈຶ່ງລົມນຳນາງວ່າ

" ນີ້ ! ນ້ອງ ອະມະລາ ຍອດທີ່ຮັກຂອງອ້າຍ ນັບແຕ່ ເວລາອ້າຍໄດ້ເຫັນນ້ອງ ອ້າຍກໍຄິດແມ່ນວາດໂລດ ແລະ ພໍມາໄດ້ເວົ້າຈາປາໃສ ນຳນ້ອງກໍຍິ່ງຮູ້ສຶກວ່າ ເປັນໂຊກຊາຕາຂອງອ້າຍຢ່າງເຫລືອລົ້ນ ອ້າຍຈຶ່ງຢາກໄປຢາມນ້ອງຈົນເຖິງເຮືອນ ເຖິງຊານແຕ່ວ່າ ໃນເວລານີ້ ນ້ອງຈະໄດ້ໄປສົ່ງເຂົ້າພໍ່ສາກ່ອນ ແລະ ລາງທີກໍອາດ ຈະບໍ່ໄດ້ກັບມາໃນວັນນີ້ ກໍເປັນໄດ້ ແຕ່ອ້າຍຍັງບໍ່ຮູ້ວ່າ ເຮືອນນ້ອງ ຢູ່ບ່ອນໃດ ກະລຸນາ ບອກໃຫ້ອ້າຍຮູ້ແດ່ ອ້າຍຈະໄປລົມນຳແມ່ ຂອງນ້ອງຖ້າ "

" ນາງອະມະລາ " ຂອບໃຈອ້າຍຫລາຍທີ່ມີຄວາມຫວັງດີ ຕໍ່ນ້ອງ ນ້ອງກໍດີກັນ ແຕ່ພໍ່ຫລຽວເຫັນອ້າຍທີ່ນັ້ນ ທຳອິດນ້ອງກໍຄິດແມ່ນວາດໂລດຄືກັນ ແຕ່ວ່າຖານະຂອງນ້ອງນີ້ເປັນຄົນທຸກ ຖ້າອ້າຍ ໄປເຫັນເຮືອນຊານ ຂອງນ້ອງແລ້ວອ້າຍຄົງບໍ່ປາຖະໜາເປັນແນ່" "

ເລື່ອງຖານະຍາກຈົນບໍ່ສຳຄັນດອກ ສຳຄັນຢູ່ທີ່ຈິດໃຈ ແລະ ຄວາມຮັກຕ່າງຫາກ " ມະໂຫສົດວ່າ " ຂໍແຕ່ໃຫ້ນ້ອງບອກເຮືອນຢູ່ໃສ ? ອ້າຍຈະໄປຄອຍຖ້າຢູ່ກ່ອນ " ຈັ່ງຊັ້ນກໍ່ໄດ້ " ນາງວ່າແລ້ວກໍ ບອກທິນທາງໄປບ້ານເປັນບັນຫາວ່າ:

" ທາງໄປບ້ານນ້ອງນັ້ນ ບ່ອນທາງແຍກໄປເຮືອນມີຮ້ານ ຕະຫລາດຂາຍເຂົ້າໜົມແຕ້ງ ກັບຮ້ານຂາຍນ້ຳສົ້ມ ແລະ ຕົ້ນທອງລາງມີໃບເປັນສອງຊັ້ນ ! ນ້ອງບອກອ້າຍຢູ່ດຽວນີ້ ບອກທາງມືຖືໜໍ້ເຂົ້າ ບໍ່ແມ່ນບອກທາງມືບໍ່ໄດ້ຖື ຂໍອ້າຍຈົ່ງເຂົ້າໃຈຕາມນີ້ " ວ່າແລ້ວກໍລາມະໂຫສົດ ຫິ້ວເອົາໜໍ້ເຂົ້າໜີໄປນາ. ມະໂຫສົດໄດ້ຟັງນາງ ບອກທິນທາງໄປເຮືອນເປັນບັນຫາ ກໍເຂົ້າໃຈໄດ້ທັນທີວ່າ ທາງໄປເຮືອນຂອງນາງນັ້ນ ທຳອິດພໍເຂົ້າໄປໃນບ້ານ ຈະເຫັນຮ້ານຕະຫລາດຂາຍເຂົ້າໜົມແຕ້ງກ່ອນ ຕໍ່ໄປແມ່ນຮ້ານຂາຍສົ້ມຜັກ ຈາກນັ້ນໄປອີກ ຈະເຫັນຕົ້ນທອງຫລາງ ຢືນຢູ່ຕົ້ນທອງຫລາງນັ້ນ ຈະເຫັນທາງແຍກເປັນສອງເສັ້ນ ທາງໄປເຮືອນຂອງນາງແມ່ນ ທາງເບື້ອງຂວາ ເພາະນາງບອກວ່າ: ນາງບອກດ້ວຍມືທີ່ຖືໜໍ້ເຂົ້າ " ມະໂຫສົດຮູ້ດັ່ງ ນີ້ແລ້ວ ກໍເດີນໄປຕາມທາງນັ້ນ ຈົນເຖິງເຮືອນຂອງນາງ ອະມະ ລາເຫັນມານດາ ຂອງນາງຢູ່ເທິງເຮືອນ ກໍຂຶ້ນໄປຍໍມືໄຫວ້ ສະແດງຄວາມເຄົາລົບ ຝ່າຍມານດາຂອງນາງ ອະມະລາ ແຕ່ພໍ ຫລຽວ

ເຫັນໜ້າຂອງມະໂຫສົດ ກໍຄິດຮັກມີຄວາມເມດຕາ ຈຶ່ງຫາສາດ ມາປູໃຫ້ນັ່ງ ແລ້ວນາງກໍນັ່ງລົງສົນທະນານຳ ໄຕ່ຖາມເຖິງຄວາມປະສົງທີ່ມາ, ມະໂຫສົດ ກໍບອກຄວາມປະສົງຂອງຕົນຈົນຕະຫລອດ ໄດ້ລົມກັບນາງ ອະມະລາແລ້ວມານດາຂອງນາງ ໄດ້ຟັງກໍມີຄວາມດີໃຈ ຈຶ່ງຈັດແຈ່ງຫາເຂົ້າມາໃຫ້ມະໂຫສົດກິນ ມະໂຫສົດກໍບອກວ່າ ນາງ ອະມະລາ ໄດ້ເອົາໃຫ້ຮັບປະທານແລ້ວ ມະໂຫສົດ ນັ່ງລົມຢູ່ບຶດ ໜຶ່ງທາງຕາກໍຫລຽວໄປທົ່ວບໍລິເວນເຮືອນ ເຫັນສະພາບເຄື່ອງໃຊ້ ຂອງສອຍທີ່ມີຢູ່ໃນເຮືອນ ລ້ວນແຕ່ເປັນຂອງເກົ່າບໍ່ມີຄູນຄ່າ ກໍຮູ້ໄດ້ວ່າຕະກູນນີ້ເປັນຄົນຈົນ ຄິດຢາກຊ່ວຍສົງເຄາະ ຈຶ່ງອອກປາກບອກແມ່ຂອງນາງອະມະລາວ່າ " ເອີ ! ແມ່ ລູກນີ້ ເປັນຊ່າງຫຍິບຜ້າຜ້າເກົ່າຜ້າຂາດທີ່ມີຢູ່ໃນເຮືອນຂອງແມ່ນີ້ ມີບໍ່ ? ຖ້າມີກໍເອົາມາ ລູກຊິຕາບໃຫ້ "

" ມີຫລາຍຢູ່ ລູກ ! ແຕ່ວ່າແມ່ນີ້ເປັນຄົນທຸກ ບໍ່ມີເງິນຊິໃຫ້ຄ່າຈ້າງລູກດອກ ! "

" ລູກບໍ່ຄິດເອົາຄ່າຈ້າງດອກ ລູກຈະຕາບໃຫ້ລາງ "ມະໂຫສົດບອກແລ້ວ ມານດາຂອງນາງ ອະມະລາກໍຂົນເອົາຜ້າຂາດອອກ ມາໃຫ້ ມະໂຫສົດຕາບ ມະໂຫສົດ ນັ່ງຕາບຜ້າຢູ່ຄາວດຽວ ກໍແລ້ວໝົດເພາະເປັນຜູ້ມີປັນຍາ ຄັນໝົດຜ້າໃນເຮືອນແລ້ວຈຶ່ງເວົ້າວ່າ " ນີ້

ແມ່ ! ຄົນໃນບ້ານ ທາງປາກນ້ຳພຸນ ຖ້າຜູ້ໃດຢາກຕາຍຜ້າ ແມ່ຈຶ່ງໄປບອກເຂົາໃຫ້ເອົາມາຕາຍເນີ ! ລູກຈະຮັບຈ້າງຕາຍຜ້າຫາເງິນມາໃຫ້ໃຊ້ "

ມານດາ ນາງອະມະລາ ໄດ້ຟັງກໍດີໃຈ ຈຶ່ງໄປທ່ຽວບອກ ຊາວບ້ານໃຫ້ເອົາຜ້າມາຈ້າງຕາຍ ພວກຊາວບ້ານໄດ້ຟັງ ກໍພາກັນ ຫອບຜ້າຫລັ່ງໄຫລມາເປັນອັນມາກ ມະໂຫສົດ ຮັບຈ້າງຕາຍຜ້າໃນ ວັນດຽວນັ້ນໄດ້ເງິນເຖິງ ພັນຕຳລຶງ(1) ແລ້ວກໍເອົາມອບໃຫ້ ແມ່ຂອງນາງ ອະມະລາ ພໍເຖິງເວລາແລ້ວມານດາຂອງນາງອະມະລາຈຶ່ງຖາມ ມະໂຫສົດວ່າ " ເຈົ້າລູກ ! ມື້ນີ້ຊິໃຫ້ແມ່ຄົວກິນ ຫນ້ອຍຫລາຍປານໃດ ? "

" ເອົາແຕ່ແມ່ຊິເຮັດ ! " ມະໂຫສົດບອກ - ຄົນຢູ່ໃນເຮືອນເຮົາມີຫລາຍປານໃດ ກໍເຮັດໃຫ້ມັນພໍກິນກໍແລ້ວກັນ " ທີ່ຈິງແມ່ຂອງນາງອະມະລານັ້ນ ເຄີຍເປັນຄົນຊັ້ນຜູ້ດີມາແລ້ວ ດັ່ງນັ້ນການຄົວ ກິນລາວຈຶ່ງເຮັດເປັນທຸກຢ່າງ ຫາກແຕ່ວ່າດຽວນີ້ລາວບໍ່ສູ້ໄດ້ເຮັດ ຫຍັງກິນດີ ເພາະຄວາມທຸກຍາກ ໃນວັນນີ້ ເມື່ອໄດ້ເງິນແລ້ວ ລາວ ຈຶ່ງຈັດແຈງແຕ່ງຂອງກິນຢ່າງຊົນຊັ້ນຜູ້ດີຮັບປະທານ ແລະ ຈັດອາ ຫານອື່ນຫລາຍຢ່າງດ້ວຍ ເມື່ອເຮັດແລ້ວ ຈຶ່ງແບ່ງໃສ່ພາຫນຶ່ງຍໍມາ ໃຫ້

(1) ຕຳລຶງ ເປັນ ມາດຕາ ເງິນບູຮານ 1 ຕຳລຶງມີ 4 ບາດ

ມະໂຫສົດຮັບປະທານກ່ອນ

ພໍຕົກເຖິງຕອນບ່າຍຄ້າຍແລງມາ ນາງອະມະລາກໍກັບມາ ຈາກໄປສົ່ງເຂົ້າພໍ່ ເວລາກັບມາ ນາງໄດ້ເກັບເອົາຜັກ ແລະ ແບກເອົາຟືນມານຳ ຄັນເຖິງເຮືອນແລ້ວ ກໍເອົາມັດຟືນປົງລົງໄວ້ທາງ ຂ້າງເຮືອນດ້ານ ຕາເວັນອອກ ສ່ວນໂຕເອງໄດ້ຂຶ້ນເມືອເທິງເຮືອນທາງດ້ານຕາເວັນຕົກ ພໍຄ່ຳມາຈັກໜ່ອຍ ບິດາຂອງນາງ ກໍກັບມາ ຈາກນາ ເມື່ອບິດາມານດາ ຢູ່ພ້ອມໜ້າກັນແລ້ວ ນາງອະມະລາ ຈຶ່ງຫາພາເຂົ້າມາໃຫ້ພໍ່ແມ່ທັງສອງຮັບປະທານ ສ່ວນຕົນເອງຄອຍຖ້າ ນ້ຽມພາເຂົ້າ ແລະ ຮັບປະທານຕາມພາຍລຸນ ເມື່ອເສັດຈາກການຮັບປະທານແລ້ວ ມະໂຫສົດ ຈຶ່ງເຂົ້າມາຫາພໍ່ແມ່ທັງສອງ ທຳຄວາມ ເຄົາລົບການໄຫວ້ຕາມທຳນຽມແລ້ວ ກໍຂໍເອົານາງອະມະລາເຫືອ ເປັນສີລິພະລິຍາຂອງຕົນ ຕາມຮີດຄອງປະເພນີ ພໍ່ແມ່ທັງສອງກໍຍິນດີ ຍົກນາງໃຫ້ແກ່ມະໂຫສົດ ຕາມຄວາມປະສົງ ເຖິງເວລາຈະເຂົ້າ ບ່ອນນອນ ນາງອະມະລາ ກໍຕັກເອົານ້ຳມາລ້າງຕີນຂອງພໍ່ແມ່ ທັງສອງ ແລະ ລ້າງຕີນຂອງຜົວກ່ອນແລ້ວ ຈຶ່ງເຂົ້ານອນເປັນປົກກະຕິທຸກໆວັນ ອັນນີ້ເປັນຄອງວັດອັນດີ ຂອງຜູ້ຍິງຕາມແບບບູຮານປະເພນີ.

ມະໂຫສົດ ໄດ້ຢູ່ຮ່ວມຫລັບນອນກັບນາງ ອະມະລາຢູ່ ທີ່ເຮືອນຂອງນາງໄດ້ສອງສາມວັນແລ້ວ ມີຄວາມປະສົງຈະລອງໃຈນາງເບິ່ງ

24/VII

ວ່າ ຈະເປັນຄົນມີຄວາມອົດກັ້ນໄດ້ພໍປານໃດ ຈຶ່ງເວົ້ານຳນາງອະມະລາວ່າ:

" ເອີ ! ນ້ອງຮັກຂອງອ້າຍ ! ນ້ອງຈົ່ງເອົາເຂົ້າສານ ເຄິ່ງໂອ່ນີ້ໄປເຮັດກິນ ຄືໃຫ້ເຮັດເຂົ້າປຽກແດ່, ໜຶ້ງກິນແດ່ ແລະ ເອັດເຂົ້າໜົມນຳ. ເຂົ້າສານເຄິ່ງໂອ່ນີ້ເຮັດໃຫ້ໄດ້ສາມຢ່າງ ແລ້ວເອົາມາໃຫ້ອ້າຍ " ນາງອະມະລາໄດ້ຍິນ ຄວາມຜົວບອກກໍຮັບເຮັດດ້ວຍຄວາມດີໃຈ ຈຶ່ງເອົາເຂົ້າສານເຄິ່ງໂອ່ນັ້ນ ໄປຊ້ອນມິກ ຄັດເລືອກເອົາເຂົ້າກົກໄວ້ຕົ້ມເຂົ້າປຽກ ເຂົ້າກາງເອົາໄວ້ໜຶ້ງສ່ວນເຂົ້າປາຍເອົາໄວ້ເຮັດເຂົ້າໜົມ ເມື່ອທຳເສັດທັງສາມຢ່າງ ພ້ອມກັບຂອງກິນເຍື່ອງອື່ນແລ້ວ ກໍຍໍເຂົ້າໄປໃຫ້ສາມີຮັບປະທານ ໂດຍທີ່ເອົາ ເຂົ້າປຽກໄປໃຫ້ຮັບປະທານກ່ອນ ເຂົ້າປຽກທີ່ນາງຕົ້ມນັ້ນມີລົດແຊບເຫລືອທີ່ສຸດ ພໍແຕ່ເອົາບ່ວງຕັກວາງລົງໃສ່ປາກ ກໍມີລົດແຊບນົວ ຊຶມຊາບອາບໄປທົ່ວເສັ້ນປະສາດສຳຫລັບລົດອາຫານ ທັງເຈັດພັນເສັ້ນ, ນັບວ່າ ສີມືຄົວກິນຂອງນາງນັ້ນເປັນເລີດ ແຕ່ມະໂຫສົດມີຄວາມ ປະສົງຈະລອງໃຈນາງ ຈຶ່ງຄາຍເຂົ້າປຽກນັ້ນລົງໃສ່ດິນ ແລ້ວເວົ້າ ຕິຕຽນນາງວ່າ:

" ເອີ້ ! ເຈົ້າບໍ່ດີແທ້ເນາະ ! ຕົ້ມເຂົ້າປຽກຫນີ້ກໍບໍ່ ເປັນຕາເອົາສາເລີຍ ! ເອົາເຂົ້າສານໄປເຮັດຖິ້ມເສຍລ້າໆ" ນາງອະມະ

ລາ ໄດ້ຟັງພົວເວົ້າໃຫ້ດັ່ງນັ້ນ ກໍບໍ່ໄດ້ສະແດງຄວາມຄຽດແຕ່ຢ່າງໃດ ກັບອອກໄປ ຍໍເອົາພາເຂົ້າໜົມເຂົ້າມາໃໝ່ ແລ້ວກໍເວົ້າ ນຳພົວດ້ວຍສຳນຽງສຽງເປັນປົກກະຕິວ່າ: " ເອີ ! ນີ້ເຈົ້າອ້າຍ ! ຖ້າວ່າເຂົ້າປຽກບໍ່ແຊບ ກໍຂໍເຊີນອ້າຍຮັບປະທານເຂົ້າໜົມນີ້ລອງເບິ່ງ" ອະໂຫສິດ ບາຍເອົາເຂົ້າໜົມນັ້ນມາໃສ່ປາກ ໜ່ອຍໜຶ່ງ ແລ້ວກໍຄາຍຖິ້ມອີກບອກວ່າ-" ແມ່ນຫຍັງນີ້ ? ແຕ່ເຂົ້າໜົມທີ່ນີ້ກໍເຮັດ ບໍ່ເປັນ ເອົາເຂົ້າສານຂອງເຮົາໄປເຮັດເສຍລ້າງ ໃຊ້ການບໍ່ໄດ້ເລີຍ " ນາງອະມະລາໄດ້ຟັງພົວວ່າດັ່ງນັ້ນ ຈຶ່ງຍໍເອົາເຂົ້າໜຶ້ງກັບ ຂອງກິນເຂົ້າໄປໃໝ່ ພ້ອມກັບເວົ້າວ່າ " ຖ້າອ້າຍວ່າເຂົ້າໜົມບໍ່ ແຊບແລ້ວ ກໍເຊີນຮັບປະທານເຂົ້າກັບຂອງກິນນີ້ລອງເບິ່ງ " ມະໂຫ ສິດປັ້ນເຂົ້າໃສ່ປາກຄຳໜຶ່ງແລ້ວ ກໍຄາຍຖິ້ມພ້ອມກັບເວົ້າວ່າ:

ໂອ່ ! ເຈົ້ານີ້ ! ໜຶ້ງເຂົ້າກໍບໍ່ເປັນ ຕົ້ມເຂົ້າປຽກກໍບໍ່ ເປັນ ເຮັດເຂົ້າໜົມກິນ ກໍບໍ່ເປັນ ບໍ່ເປັນຫຍັງຈັກແນວ ເຮັດເສຍເຂົ້າລ້າ " ວ່າແລ້ວກໍເຮັດຄືຄຽດຫລາຍ ເອົາຂອງທັງສາມຢ່າງນັ້ນມາ ຄົນເຂົ້າກັນ ເອົາທາຕົນໂຕຂອງນາງຕັ້ງແຕ່ຫົວລົງມາ ແລ້ວບອກໃຫ້ໄປນັ່ງຢູ່ແຄມພັກຕູ ນາງກໍໄປນັ່ງຢູ່ ຕາມພົວບອກ ຈະຄຽດແຄ້ນເຈັບໃຈຕອບຖຽງພົວຄຳໜຶ່ງແມ່ນບໍ່ມີເລີຍ (ຕອນນີ້ ຂໍໃຫ້ຜູ້ອ່ານຄິດ ເອົາເອງວ່າ ຖ້າເປັນຜູ້ຍິງເຮົາເຈົ້າຂ້ອຍແລ້ວ ຈະເປັນຢ່າງໃດແດ່ນາງ

ອະມະລານີ້ ແມ່ນເມຍຂອງພະໂພທິສັດ ຄືກັນກັບນາງ ມະທີເມຍພະເວດສັນຕະລະນັ້ນເອງ)

ໃນຄາວນັ້ນ ມະໂຫສົດ ເຫັນວ່ານາງລະທິດຖິມານະ ໄດ້ ເປັນຢ່າງດີ ມີຂັນຕິອົດທົນບໍ່ຄຽດແຄ້ນ ຈຶ່ງຮ້ອງນາງເຂົ້າໄປໃນເຮືອນຜົວ ອອກປາກຮ້ອງຄຳຄຽວທີ່ນັ້ນ ນາງກໍຟ້າວລຸກໄປບໍ່ສະແດງທ່າທາງອິດເອື້ອນ ແລ້ວນັ່ງລົງໃກ້ໆຜົວ ມະໂຫສົດ ຈຶ່ງຈົກເອົາຜ້າກັມພົມ (1) ຢ່າງດີ ຈາກກະຫໍ່ນ້ອຍ ທີ່ເອົາໄປນຳແຕ່ເມືອງອອກໃຫ້ ນາງ ພ້ອມກັບບອກວ່າ

" ນີ້ ນ້ອງທີ່ຮັກຂອງອ້າຍ ການທີ່ອ້າຍໄດ້ເຮັດໃຫ້ນ້ອງ ຫວ່າງແລ້ວມານີ້ ກໍເພື່ອລອງນ້ຳໃຈຂອງນ້ອງເບິ່ງວ່າ ຈະເປັນຄົນອົດ ກັ້ນໄດ້ພໍສ່ຳໃດ ບັດນີ້ອ້າຍໄດ້ເຫັນແລ້ວວ່າ ນ້ອງເປັນຄົນດີ ມີຂັນຕິ ອົດທົນໄດ້ບໍ່ຄຽດແຄ້ນສະນັ້ນ ນ້ອງຈຶ່ງອອກໄປອາບນ້ຳທີ່ທ່ານ້ຳໝູ່ເພື່ອນຂອງນ້ອງ ແລະ ແຕ່ງຕົວດ້ວຍຜ້າ ກັມພົມຢ່າງດີຜືນນີ້ແລ້ວຈຶ່ງ ເຂົ້າມາຫາອ້າຍ "

ນາງ ອະມະລາກໍເຮັດຕາມບອກທຸກປະການ ມະໂຫສົດໄດ້ພັກຢູ່ນຳພໍ່ເຖົ້າ ແມ່ເຖົ້າ ມາໄດ້ 4-5 ວັນ ຈຶ່ງເອົາເງິນພັນໜຶ່ງ ທີ່ຮັບຈ້າງຫຍິບຜ້າໄດ້ ກັບອີກພັນຕຳລຶງທີ່ເອົາມານຳແຕ່ເຮືອນຂອງ ຕົນ

---

(1) ຜ້າກັມພົມ ແມນຜ້າຂົນສັດ (ປ. ກັມພະລະ)

ມອບໃຫ້ ບິດາ ມານດາ ຂອງນາງອະມະລາແລ້ວບອກວ່າ ເງິນຈຳ ນວນນີ້ໃຫ້ພໍ່ແມ່ເອົາໄວ້ໃຊ້ຊ່າຍຊາກ່ອນ ເວລານີ້ລູກຈະໄດ້ພາ ນາງ ອະມະລາກັບໄປບ້ານຂອງລູກກ່ອນແລ້ວ ລູກກໍຈະມາລ້ຽງເກືອບໍ່ ໃຫ້ ອຶດຢາກທຸກຍາກປະການໃດ ຂໍພໍ່ແມ່ຢ່າທຸກຮ້ອນເລີຍ " ວ່າແລ້ວ ກໍ ກາບລາ ພໍ່ແມ່ທັງສອງ ອອກຈາກບ້ານ ອຸຕະລະ ກັບເມືອພະ ນະ ຄອນ ເວລາຈະອອກເດີນທາງມານັ້ນ ມະໂຫສົດ ໄດ້ເອົາເກີບ ໃຫ້ ນາງໃສ່ ແລະ ເອົາຄັນຮົ່ມໃຫ້ນາງກັ້ງໃນເວລາແດດຮ້ອນເມື່ອເດີນ ທາງມານັ້ນ ຄັນເຖີງບ່ອນເປັນທົ່ງແປນງ ແລະ ແດດກໍຮ້ອນນາງໄດ້ ຫຸບຄັນຮົ່ມໄວ້ ບໍ່ກັ້ງ ຄັນເຂົ້າປ່າ ບ່ອນມີຮົ່ມໄມ້ ນາງຈຶ່ງກັ້ງຮົ່ມສ່ວນ ເກີບນັ້ນກໍຄືກັນ ເມື່ອໃດໄປເຖີງບ່ອນມີນ້ຳມີຕົມ ນາງຈຶ່ງໃສ່ຄັນຫວິດ ນ້ຳຫວິດຕົມແລ້ວ ນາງກໍຖອດອອກ ຄືເອົາມະໂຫສົດ ໄດ້ເຫັນ ນາງ ອະມະລາເຮັດແນວຕ່າງບ້ານຕ່າງເມືອງເພິ່ນ ກໍຄິດປະຫລາດໃຈຈຶ່ງ ຖາມວ່າ " ເຮີຍ ! ອະມະລາ ນ້ອງສັງມາເຮັດແນວຕ່າງ ບ້ານ ຕ່າງເມືອງເພິ່ນແທ້ ນ້ອງເຮັດຢ່າງນີ້ມີຄວາມປະສົງແນວໃດ ? " ນາງອະມະລາບອກວ່າ:

" ໂອ ! ອ້າຍ ! ນ້ອງຊິເວົ້າໃຫ້ຟັງ ຄືວ່າການເດີນ ທາງນີ້ ຖ້າເຮົາເຂົ້າໄປໃນປ່າໄມ້ ທີ່ມີຕົ້ນໄມ້ໃຫຍ່ນັ້ນ ລາງເທື່ອຫມາກໄມ້ ອາດຫລົ່ນລົງມາ ຖືກຫົວ ຫລືວ່າໄມ້ແຫ້ງ ອາດຫັກລົງມາຖືກຕົນ ຕົວ

ເຮົາ ກໍໄດ້ແລ້ວເຮົາກໍຈະໄດ້ຮັບຄວາມເຈັບປວດ ນ້ອງຄິດເຫັນ ດັ່ງນີ້ ຈຶ່ງໄດ້ກັ້ງຮົ່ມເວລາເຂົ້າປ່າ ເພາະຢ້ານໝາກໄມ້ຫລືງ່າໄມ້ ຕົກໃສ່ຫົວ ສ່ວນການທີ່ນ້ອງໃສ່ເກີບ ໃນເວລາລົງນ້ຳນັ້ນ ນ້ອງຄິດເຫັນວ່າ ຢູ່ໃນນ້ຳໃນຕົມ ຖ້າມີຕໍ ມີໜາມ ເຮົາກໍບໍ່ອາດເຫັນໄດ້ຖ້າຍ່າງໄປຕີນເປົ່າ ກໍອາດຢຽບຕໍ ຢຽບໜາມ ດ້ວຍເຫດນີ້ນ້ອງຈຶ່ງຕ້ອງໃສ່ເກີບໃນເວລາລົງນ້ຳ ແຕ່ຢູ່ເທິງບົກນັ້ນ ຕາເຮົາອາດແລເຫັນຕໍເຫັນໜາມໄດ້ ນ້ອງຈຶ່ງບໍ່ໃສ່ເກີບ ເປັນດ້ວຍເຫດນີ້ແຫລະ ອ້າຍ" ມະໂຫສົດ ໄດ້ຟັງນາງອະທິບາຍກໍມີຄວາມຊື່ນຊົມຍິນດີ ຄິດຢູ່ໃນໃຈ ວ່າ ນາງນີ້ມີປັນຍາເຫລືອເກີນ ຄວນເປັນຄູ່ຊີວິດຂອງເຮົາໄດ້ແທ້ " ຄິດແລ້ວກໍພາກັນເດີນທາງຕໍ່ໄປ.

ເຖິງບ່ອນໜຶ່ງມີຕົ້ນໝາກທັນເຊິ່ງມີໝາກສຸກເຕັມ ມະໂຫ ສົດຈຶ່ງພານາງແວະເຂົ້າໄປເຊົາຮົ່ມຕົ້ນໝາກທັນ ນາງອະມະລາ ເຫັນໝາກທັນສຸກເຕັມຕົ້ນ ກໍຄຶດຢາກຈຶ່ງບອກຜົວຂຶ້ນໃຫ້ກິນ ມະໂຫ ສົດບອກວ່າ " ອ້າຍພວມເມື່ອຍຫລາຍ ຂຶ້ນບໍ່ໄດ້ດອກຖ້ານ້ອງຢາກແລະຂຶ້ນໄດ້ ກໍຂຶ້ນກິນເອງເຖີດ. ນາງອະມະລາ ໄດ້ຍິນຜົວວ່າດັ່ງນັ້ນ ກໍຂຶ້ນເກັບເອົາໝາກທັນກິນ ເພາະນາງເຄີຍຂຶ້ນຕົ້ນໄມ້ຢູ່ສະເໝີ ຈຶ່ງບໍ່ເປັນການຍາກ ມະໂຫສົດ ເຫັນນາງຂຶ້ນໄດ້ ຈຶ່ງຮ້ອງຂຶ້ນໄປໃສ່ວ່າ

" ນີ້ ! ນ້ອງ ອະມະລາ ! ປິດຖິ້ມລົງມາໃຫ້ອ້າຍກິນນຳແດ່!"

ນາງອະມະລາ ຄິດຢາກລອງປັນຍາຂອງ ມະໂຫສົດ ເບິ່ງ ຈຶ່ງຖາມລົງມາວ່າ

" ອ້າຍຢາກກິນໝ່ວຍຮ້ອນ ຫລືໝ່ວຍເຢັນ "

ມະໂຫສົດ ໄດ້ຍິນນາງຖາມ ກໍຮູ້ປັນຍາຂອງນາງທັນທີແຕ່ທຳທ່າບໍ່ຮູ້ ຕອບຢ່າງທຳມະດາວ່າ

" ອ້າຍຢາກກິນ ໝ່ວຍຮ້ອນ "

ນາງກໍໂຍນໝາກຫັນລົງໃສ່ບ່ອນມີຂີ້ຝຸ່ນ ມະໂຫສົດ ເກັບ ເອົາໝາກຫັນນັ້ນມາເປົ່າຝຸ່ນອອກເສັຍກ່ອນ ຈຶ່ງກິນໄດ້ ດັ່ງແລ້ວຈຶ່ງຮ້ອງບອກນາງອີກວ່າ

" ອະມະລາ ເທື່ອນີ້ ອ້າຍບໍ່ຂໍກິນໝ່ວຍຮ້ອນເນີ ! ຂໍກິນໝ່ວຍເຢັນເທາະ ! "

ນາງໄດ້ຍິນກໍເກັບໝາກຫັນໂຍນລົງໃສ່ບ່ອນມີຫຍ້າຂຽວງມະໂຫສົດເກັບມາກິນ ບໍ່ຕ້ອງໄດ້ເປົ່າເນື່ອເຫັນດັ່ງນັ້ນ ມະໂຫສົດກໍຍິ່ງ ມີຄວາມຍິນດີ ຄິດຮັກນາງອະມະລາ ຕື່ມຂຶ້ນອີກຕັ້ງຫລາຍເທົ່າ ເພາະເຫັນວ່າ ນາງມີປັນຍາ ຄວນເປັນສີພະລິຍາຂອງຕົນແທ້ ດັ່ງແລ້ວຈຶ່ງຮ້ອງບອກໃຫ້ນາງລົງມາ. ເມື່ອນາງລົງມາແລ້ວ ນາງກໍເອົາຄຸນ້ອຍໄປຕັກນ້ຳໃນແມ່ນ້ຳມາໃຫ້ ມະໂຫສົດດື່ມ ແລ້ວທັງສອງກໍເດີນ ທາງມາຕາມລຳດັບ ຈົນເຖິງພະນະຄອນ ມິຖິລາ ມະໂຫສົດຈຶ່ງພາ ເອົາ

ນາງໄປຝາກໄວ້ທີ່ເຮືອນຂອງນາຍຫວາ ລະບານ (ຄົນເຝົ້າພັກໆ)
ຫັ້ນກ່ອນ ສ່ວນໂຕເອງໄດ້ກັບເມືອເຮືອນ ແລ້ວຮ້ອງຄົນໃຊ້ຜູ້ຊາຍ ທີ່
ໜ້າຕາດີມີແວວສະຫລາດມາສອງ ສາມຄົນ ເອົາເງິນໃຫ້ຄົນລະພັນ
ຕຳລຶງ ແລ້ວບອກວ່າ:

" ນີ້ ເຮີຍ ! ພວກເພື່ອນ ! ຂ້າເຈົ້າ ຂໍຮ້ອງໃຫ້ ພວກທ່ານ
ຊ່ວຍເຫລືອຂ້າເຈົ້າ ຈັກໜ່ອຍຄືວ່າ ດຽວນີ້ຂ້າເຈົ້າ ໄດ້ນຳເອົາຍິງ
ສາວຄົນໜຶ່ງມາຝາກໄວ້ທີ່ເຮືອນນາຍຫວາລະບານ ຢູ່ທາງຖະ ໜົນ
ເສັ້ນພຸ້ນ ພວກທ່ານຈຶ່ງພາກັນໄປເວົ້າ ເລົ້າໂລມລອງເບິ່ງໂດຍເອົາ
ເງິນຈຳນວນທີ່ຂ້າເຈົ້າມອບໃຫ້ນີ້ແຫລະຖິ້ມໃສ່ ຫລືຈະໃຊ້ລີ້ນ ໃຊ້ວາ
ຈາຢ່າງໃດກໍແລ້ວແຕ່ ລອງເບິ່ງວ່າ ນາງຈະມີໃຈໝັ້ນຄົງແທ້ ຢ່າງ
ໃດ ພວກອ້າຍບ່າວທັງສາມ ໄດ້ຮັບຄຳສັ່ງແລ້ວ ກໍພາກັນໄປ ເຮືອນ
ຂອງນາຍຫວາລະບານເຫັນນາງອະມະລາຢູ່ທີ່ນັ້ນ ກໍພາກັນຂຶ້ນ ໄປ
ເວົ້າກ້ຽວຕໍ່ແຍ ທ່ານັ້ນທ່ານີ້ຈົນສຸດປັນຍາ ເຖິງແມ່ນວ່າຈະເອົາເຂົ້າ
ລີ້ ໂດຍວິທີໃດໆກໍຕາມ ນາງກໍບໍ່ໄດ້ຍິນດີ ແລະ ຫລົງໄຫລນຳ ຄຳ
ຫລອກລີ້ນັ້ນເລີຍ ນາງໄດ້ຟັງຄຳເວົ້າ ແລະ ພິຈາລະນາເບິ່ງລັກສະ
ຂອງຊາຍທັງສາມ ຢ່າງຖ້ວນທີ່ແລ້ວ ເຫັນວ່າບໍ່ທໍ່ຂີ້ຕີນແຫ່ງຜົວ ຂອງ
ນາງເລີຍ ນາງຈຶ່ງບໍ່ໄດ້ຍິນດີ ແລະ ຫລົງເຊື່ອຝ່າຍຊາຍທັງສາມໄດ້
ເຫັນໃຈຂອງນາງໝັ້ນຄົງແນ່ນອນແລ້ວກໍພາກັນກັບຄືນມາບອກມະໂຫ

ສິດໆ ກໍບອກໃຫ້ຄົນໄປພຽນເວົ້າ ພຽນລົມຢູ່ອີກເຖິງສອງສາມ ເທື່ອ ນາງກໍບໍ່ໄດ້ ເອົາຫົວຊານຳເລີຍ ເຖິງເທື່ອທີ່ 4 ມະໂຫສົດຈຶ່ງ ໃຊ້ ພວກຜູ້ຊາຍຫລາຍຄົນໄປດຸມເອົາຕົວນາງມາ ນາງອະມະລາເມື່ອຖືກ ພວກຜູ້ຊາຍດຸມຕົວມາຫາ ມະໂຫສົດ ເຊິ່ງໃນຂະນະນັ້ນ ມະໂຫ ສົດ ໄດ້ປ່ຽນເພດເປັນ ອັຄຄະເສນາບໍດີ ມີຍົດສັກອັນສູງໃຫ່ຍແລ້ວ ນາງ ຈື່ບໍ່ໄດ້ ນາງອະມະລາ ຫລຽວເບິ່ງໜ້າມະໂຫສົດແລ້ວ ກໍຄືວ ມໍຫົວ ແລ້ວກໍໄຫ້ ມະໂຫສົດ ເຫັນດັ່ງນັ້ນຈຶ່ງຖາມວ່າ: ເອີ້ຍ ! ນາງເຈົ້າ ຫລຽວເບິ່ງຂ້າເຈົ້າແລ້ວເຈົ້າຫົວ ແລ້ວກໍຮ້ອງໄຫ້ ນາງໄດ້ເຫັນ ສິ່ງ ໃດໃນຕົວຂ້າເຈົ້າເປັນການປະຫລາດບໍ ?"

ນາງຕອບວ່າ

" ຂ້າເຈົ້າເຫັນທ່ານແລ້ວຫົວຂວັນນີ້ ກໍຍ້ອນຄິດເຫັນວ່າຜົນແຫ່ງ ບຸນນີ້ ເປັນໜ້າອັດສະຈັນຫລາຍເໝືອນຢ່າງຕົວທ່ານນີ້ເອງ ທ່ານ ໄດ້ເປັນຜູ້ຍິ່ງໃຫ່ຍມີສົມບັດ ເຂົ້າຂອງເງິນຄຳຫລວງຫລາຍປານນີ້ ກໍ ຍ້ອນບຸນກຸສົນທີ່ທ່ານໄດ້ເຮັດມາແລ້ວແຕ່ຊາດກ່ອນ ຖ້າທ່ານບໍ່ທຳ ບຸນ ໄວ້ກ່ອນແລ້ວ ທ່ານກໍຄົງບໍ່ໄດ້ສົມບັດ ອັນມະໂຫລານເຖິງປານນີ້ ອັນ ນີ້ກໍຍ້ອນຜົນຂອງບຸນ ຜົນຂອງບຸນນີ້ ເປັນໜ້າອັດສະຈັນຫລາຍເຫລືອ ເກີນ ຂ້າເຈົ້າຄິດເຫັນຜົນແຫ່ງບຸນຂອງທ່ານຈຶ່ງໄດ້ຫົວຂວັນແລະການ ທີ່ຂ້າເຈົ້າຮ້ອງໄຫ້ນັ້ນ ຂ້າເຈົ້າມາຄິດເຫລືອຕົນທ່ານວ່າ ທ່ານນີ້ ມາ

ບັງບຽດໃນວັດຖຸທີ່ເຈົ້າຂອງເຂົາຫວງແຫນບໍ່ຄິດວ່າເປັນລູກໃພ ເມັຍໃພ ຢາກເຮັດແນວໃດກໍຈະເຮັດໄປຕາມໃຈໂຕ ເມື່ອເປັນດັ່ງນີ້ທ່ານກໍຈະໄດ້ໄປຕົກນະລົກ ຂ້າເຈົ້າຄິດອື່ດູທ່ານດັ່ງນີ້ ຈຶ່ງໄດ້ຮ້ອງໄຫ້ "

ມະໂຫສົດໄດ້ຟັງຄວາມນາງໃຫ້ການກໍເຊື່ອໄດ້ຄັກແນ່ວ່າ ນາງອະມະລານີ້ ເປັນຄົນຕັ້ງຢູ່ໃນຄວາມຊື່ສັດ ສຸຈະລິດແທ້ ຈຶ່ງບອກໃຫ້ຄົນ ທັງຫລາຍພາເອົານາງຄືນໄປໄວ້ເຮືອນນາຍຫວາລະບານຕາມເດີມ.

ເຖິງເວລາຕໍ່ງມາ ມະໂຫສົດກໍປອມເພດ ເປັນຊ່າງຫຍິບ ຜົວເກົ່າຂອງນາງຄືນໄປຫານາງຢູ່ເຮືອນ ນາຍຫວາລະບານ (ໃນຕອນນີ້ນາງອະມະລາ ຈະເລົ່າເລື່ອງທີ່ຕົນຖືກຂົ່ມເຫງ ໃຫ້ຜົວຟັງຫລືບໍ່ ບໍ່ເຫັນກ່າວໄວ້ ໃນຄຳພີເດີມ ແຕ່ຖ້າເປັນຄົນດີເຮົາທຳມະດາກໍຄົງອົດບໍ່ໄດ້) ຕື່ນເຊົ້າມາມະໂຫສົດ ຈຶ່ງເຂົ້າໄປໃນພະລາຊະວັງທູນ ເຫດການທຸກຢ່າງແກ່ ພະນາງເຈົ້າອຸທຸມພອນເທວີ ວ່ານາງສາວຜູ້ທີ່ ຕົນນັກນັ້ນ ໄດ້ມາແລ້ວ ພະນາງອຸທຸມພອນ ກໍເຂົ້າໄປກາບທູນເລື່ອງ ນີ້ແກ່ສົມເດັດພະເຈົ້າວິເທຫະລາດ ຜູ້ເປັນພະລາຊະສາມີ ຄັນແລ້ວສົມເດັດພະນາງເຈົ້າ ອຸທຸມພອນຈຶ່ງຈັດແຈ່ງແຕ່ງເອົາເຄື່ອງປະດັບກາຍເຊິ່ງລ້ວນແລ້ວແຕ່ເພັດນິນ ຈິນດາ ອັນມີຄ່າ ແລະ ສັບພະອາ ພອນຢ່າງດີ ໃຫ້ສາວໃຊ້ນຳອອກໄປມອບໃຫ້ນາງອະມະລາໃຫ້ນາງປະດັບເຄື່ອງ ອະລັງການນັ້ນແລ້ວ ກໍໃຫ້ພວກສາວໃຊ້ເຊີນນາງຂຶ້ນຂີ່ວໍຫາມ

ແຕ່ເຂົ້າມາໃນພະນະຄອນ.

ສົມເດັດພະນາງເຈົ້າ ອຸທູມພອນຈຶ່ງຈັດການວິວາຫະມຸງຄຸນ ໃຫ້ເຈົ້າບ່າວເຈົ້າສາວທັງສອງ ເປັນການມະໂຫລານທີ່ສຸດ ສົມເດັດພະເຈົ້າວິເທຫະລາດ ເອງກໍຈຶ່ງປະທານເຄື່ອງອັນເປັນຂອງຂວັນໃຫ້ແກ່ເຈົ້າບ່າວເຈົ້າສາວ ເປັນອັນມາກ ຊາວພະນະຄອນທັງຫລາຍ ນັບແຕ່ນາຍຜັກຕູ້ອນ ໄປກໍພາກັນຈັດເອົາຂອງຂວັນສົ່ງມາເປັນບັນນາການຈົນເກືອບຈະບໍ່ມີບ່ອນໄວ້ ນາງອະມະລາໄດ້ເອົາຂອງຂວັນທີ່ພະ ລາຊາພະລາຊະທານມານັ້ນ ແບ່ງເປັນສອງສ່ວນໆໜຶ່ງເອົາໄວ້ ສ່ວນໜຶ່ງສົ່ງກັບຄືນໄປຖວາຍພະກະສັດຂອງທີ່ຊາວເມືອງສົ່ງມາຊ່ວຍ ສົມໂພດກໍແບ່ງເປັນສອງຢ່າງດຽວກັນນັ້ນ (ທຳນຽມນີ້ຄົນລາວເຮົາ ຄືບໍ່ເຄີຍໄດ້ຍິນ ຫລືອາດຈະກົງກັບທຳນຽມລາວທີ່ລູກໃພ້ຕ້ອງເອົາ ຂອງໄປສົມມາປູ່ ຍ່ານັ້ນກໍໄດ້.) ຕົວແຕ່ນັ້ນມາມະໂຫສົດກໍໄດ້ຢູ່ຮ່ວມ ກັບນາງອະມະລາ ສັ່ງສອນສິນທຳແກ່ພະມະຫາກະສັດເຈົ້າເປັນສຸກ ສືບມາ.

ບັ້ນຖືກຕູ່ຫາວ່າເປັນກະບົດຄັ້ງທີ່ໜຶ່ງ

ຢູ່ຕໍ່ມາວັນໜຶ່ງ ອາຈານ ເສນະກະ ເຫັນພວກເພື່ອນທັງ ສາມຄົນມາຫາ ຈຶ່ງປຶກສາຫາລືນຳສະຫາຍທັງສາມນັ້ນວ່າ:

" ເອີ້ ! ນີ້ ທ່ານສະຫາຍທັງສາມ ! ດຽວນີ້ມະໂຫສົດ ເດັກນ້ອຍເກີດມື້ວານນີ້ ນັ້ນໄດ້ຮັບຕຳແໜ່ງສຳຄັນ ເປັນເຖິງເສນາບໍ່ ດີ ມີຊັບສົນບັດ ຂ້ອຍຂ້າທາສາໃຊ້ເປັນອັນມາກ ລື່ນໜ້າພວກເຮົາແລ້ວ ພວກເຮົາບໍ່ທັນມັນເລີຍ ເຫິງໄປອີກຈັກໜ່ອຍ ຍິ່ງຊິຮ້າຍກວ່ານີ້ ພວກເຮົາຈະຄິດແນວໃດ ຈະເຮັດຢ່າງໃດ ຈຶ່ງຈະຍຸແຫຍ່ໃຫ້ພະມະຫາກະສັດ ຊັງມັນໄດ້ ຈົນໃຫ້ເຫັນວ່າ ມັນເປັນກະບົດຕໍ່ພະລາຊາພວກທ່ານຄິດເຫັນແນວໃດ ?"

" ພວກຂ້າເຈົ້າ ບໍ່ຮູ້ຫຍັງດອກ ເລື່ອງຢ່າງນີ້ ກໍສຸດແລ້ວແຕ່ອາຈານເປັນລະ ! ອາຈານເປັນຜູ້ເລີກເຊິ່ງກວ່າພວກຂ້າເຈົ້າ" ສະຫາຍທັງສາມຕອບ.

" ເຮົານີ້ເຫັນຢູ່ທາງໜຶ່ງ " ເສນະກະບອກ " ມີອຸບາຍຢ່າງໜຶ່ງທີ່ເຮົາໄດ້ຄິດໄວ້ແລ້ວ ພວກທ່ານບໍ່ຕ້ອງຄິດໃຫ້ຍາກ" ເສນະ ກະ

ເອົາຕໍ່.

" ອຸບາຍແນວໃດອາຈານ ! ຄວາມຄິດຂອງອາຈານ ຄິດ ວ່າ ຈະເຮັດແນວໃດ ?" ພວກທັງສາມສັ້ດວຍຄວາມສົນໃຈ.

ເສນະກະບອກວ່າ " ຄວາມຄິດຂອງເຮົາມີດັ່ງນີ້ ຄືວ່າ ເຮົາເອງຈະໄປລັກເອົາແກ້ວຈຸລາ ມະນີຂອງພະເຈົ້າແຜ່ນດິນມາໄວ້ສ່ວນທ່ານປະກຸຕະໃຫ້ໄປລັກເອົາດອກໄມ້ຄຳ, ທ່ານກາມິນໃຫ້ໄປລັກເອົາຜ້າລັດຕະນະກຳພົນ, ແລະ ທ່ານເທວິນໃຫ້ໄປລັກເອົາພະສຸວັນ ນະປາທຸກາ (ເກີບຄຳ) ມາ ເມື່ອໄດ້ຂອງທັງສີ່ຢ່າງນີ້ມາແລ້ວ ພວກເຮົາຈຶ່ງພະຍາຍາມໃຫ້ຂອງເຫລົ່ານັ້ນຕົກໄປຢູ່ໃນເຮືອນຂອງມະໂຫສົດໂດຍວິທີໃດວິທີໜຶ່ງ, ຄັນໄດ້ດັ່ງນີ້ເຮົາຈຶ່ງພ້ອມກັນເຂົ້າໄປກາບ ທູນພະລາຊາ ກ່າວຫາວ່າມະໂຫສົດ ເປັນກະບົດ ຈະຊິງເອົາລາຊະສົມບັດປະກາດຕົວຂຶ້ນເປັນກະສັດເອງ ເມື່ອເປັນດັ່ງນີ້ ພະລາຊາກໍ ຄົງພິໂລດ ໃຫ້ຈັບມະໂຫສົດເປັນແນ່ "

ເມື່ອເສນະກະສະເໜີຄວາມຄິດຂອງຕົວຕໍ່ເພື່ອນດັ່ງນີ້ ພວກອາຈານທັງສາມ ກໍເຫັນດີນຳ ແລ້ວພວກອາຈານທັງສີ່ຄົນ ກໍໄປລັກເອົາຂອງທັງສີ່ຢ່າງນັ້ນມາໄດ້ສົມປະສົງ ຄັນແລ້ວອາຈານເສນະກະກໍເອົາແກ້ວຈຸລາມະນີ ອັນເປັນເຄື່ອງປະດັບຂອງພະມະຫາກະສັດ ລົງ ໃສ່ໃນໝໍ້ນ້ຳພັນເນີຍ ບອກໃຫ້ສາວໃຊ້ຄົນສະໜິດ ທີ່ໄວ້ໃຈໄດ້ນຳເອົາ

ໄປຂາຍໃຫ້ເຮືອນ ມະໂຫສົດ ໂດຍສົ່ງເປັນຄວາມລັບວ່າ " ຖ້າຄົນ
ອື່ນໆຈັ່ງຊິກໍຢ່າຂາຍ ແຕ່ຖ້າແມ່ນຄົນໃນເຮືອນມະໂຫສົດຊິກໍຈົ່ງຂາຍ ໃຫ້
ໝົດທັງໝົ້ນເລີຍ ຫລືເຂົາບໍ່ຊື້ ເອົາໃຫ້ລ້າງເລີຍກໍຍັງໄດ້ " ສາວໃຊ້
ຮັບຄຳສັ່ງຂອງອາຈານ ເສນະກະແລ້ວ ກໍຖືໝົ້ນນ້ຳພັນເນີຍໄປທ່ຽວ
ຮ້ອງຂາຍຢູ່ຕໍ່ໜ້າເຮືອນ ມະໂຫສົດ ຍ່າງວົນໄປວຽນມາຢູ່ຝ່າຍນາງ
ອະມະລາລົງມາຢືນຫລິ້ນຢູ່ໃຕ້ພັກຕູໂຂງ ໄດ້ເຫັນກິລິຍາຂອງ ນາງ
ສາວໃຊ້ຄົນນັ້ນ ຍ່າງວົນໄປວຽນມາ ຮ້ອງຂາຍນ້ຳພັນເນີຍຢູ່ນາງ ກໍ
ເກີດຄວາມສົງໃສຄິດໃນໃຈວ່າ " ເອີ້ ! ນາງຄົນນີ້ບໍ່ໄປຮ້ອງຂາຍ
ບ່ອນອື່ນເລີຍ ຈຳເພາະວົນມາວົນໄປຢູ່ແຕ່ໜ້າເຮືອນຂອງເຮົາ ມັນ
ຄົງມີອັນໃດອັນໜຶ່ງເປັນແນ່ແທ້ " ຄິດດັ່ງນີ້ແລ້ວ ຈຶ່ງສະແດງ ອາ
ການວິກທິວ ບອກໃຫ້ສາວໃຊ້ຂອງຕົນ ຈົ່ງຢູ່ໃນທີ່ນັ້ນໜີໄປບ່ອນ ອື່ນ
ແລ້ວນາງກໍຮ້ອງຍິງຜູ້ຮ້ອງຂາຍນ້ຳພັນເນີຍນັ້ນເຂົ້າໄປຫາ ຖາມວ່າ"
ໝົ້ນນ້ຳພັນເນີຍນີ້ເຈົ້າຊິຂາຍບໍ່ ? ນ໊າ ! ເອົາມາຂ້ອຍຊິຊື້ " ນາງ
ສາວໃຊ້ຂອງເສນະກະໄດ້ຟັງກໍດີໃຈ ຖືໝົ້ນນ້ຳພັນເນີຍເຂົ້າໄປ ວາງ
ລົງໃກ້ນາງ ອະມະລາ ນາງກໍທຳເປັນພິຕິຮ້ອງສາວໃຊ້ຂອງຕົນມາ
ແຕ່ພວກສາວໃຊ້ຮູ້ຄວາມໝາຍຂອງນາຍ ດ້ວຍອາການທີ່ນາງຂະຍິບ
ຕາໃຫ້ ຈຶ່ງພາກັນຕ່າງຄົນຕ່າງໜີ ບໍ່ເຂົ້າມາໃກ້ນາງອະມະລາ ຈຶ່ງ
ບອກສາວຜູ້ຂາຍນ້ຳພັນນັ້ນວ່າ " ຂໍໂທດເທາະນ້ອງສາວ ! ກະ ລຸ

ມາໄປຮ້ອງຄົນໃຊ້ເອີ້ນມາໃຫ້ແດ່ " ນາງຜູ້ຂາຍນ້ຳມັນບໍ່ຮູ້ກົນຂອງນາງ ອະມະລາ ກໍປະໝໍ້ນ້ຳມັນໄວ້ແລ້ວນຳໄປຮ້ອງ ສາວໃຊ້ ມາ

ຝ່າຍນາງອະມະລາ ເມື່ອເຈົ້າຂອງໝໍ້ໄປຮ້ອງສາວໃຊ້ຢູ່ນາງ ຈຶ່ງເອົາມືຈົກລົງເບິ່ງໃນໝໍ້ ໄດ້ພົບຂອງສິ່ງໜຶ່ງຢູ່ໃນໝໍ້ ຈຶ່ງເອົາ ຂຶ້ນມາເບິ່ງ ເຫັນເປັນແກ້ວ ຈຸລາມະນີຂອງພະກະສັດ ນາງກໍນຶກ ຕວງເຫດການໄດ້ທັນທີ ຈຶ່ງເອົາແກ້ວມະນີໃສ່ລົງໄວ້ໃນໝໍ້ຄືເກົ່າ ທຳທ່າຢືນເສີຍຢູ່ ຄັນນາງຜູ້ຂາຍກັບມາ ນາງຈຶ່ງຖາມວ່າ " ເຈົ້າມາ ແຕ່ເຮືອນໃຜ ? " ນາງຜູ້ຂາຍບອກວ່າ "ຂ້າເຈົ້າ ເປັນສາວໃຊ້ຂອງອາຈານເສນະກະ ອາຈານເສນະກະໃຫ້ຂ້າເຈົ້າ ເອົາໝໍ້ນ້ຳມັນ ນີ້ມາຂາຍ " ນາງອະມະລາໄດ້ຟັງດັ່ງນັ້ນ ກໍຖາມຊື່ຂອງສາວໃຊ້ ຜູ້ຂາຍນ້ຳມັນ ແລະ ຊື່ພໍ່ແມ່ຂອງນາງ ເມື່ອຮູ້ແລ້ວ ຈຶ່ງກ່າວວ່າ" ໝໍ້ນ້ຳມັນຂອງເຈົ້ານີ້ ຈະຂາຍທໍ່ໃດ ?

" ຂາຍລາຄາທໍ່ກັບເຂົ້າເປືອກສີ່ທະນານ " ນາງທາສີບອກ

" ເອີ ຖ້າຢ່າງນັ້ນ ເຮົາຈະຊື້ " ນາງອະມະລາບອກ

" ຄັນຢາແມ່ຊື້ຂ້ານ້ອຍໃຫ້ຫລາຍ ບໍ່ຄິດເອົາຄ່າດອກ ໃຫ້ ໝົດໝໍ້ນີ້ແຫລະ " ນາງທາສີບອກ ວ່າແລ້ວກໍມອບໝໍ້ນ້ຳມັນເນີຍ ໃຫ້ນາງອະມະລາ ແລ້ວນາງກໍລາຄືນໄປຄອບອາຈານເສນະກະບອກວ່າ " ໝໍ້ນ້ຳມັນເນີຍນັ້ນໄດ້ເອົາໃຫ້ນາງ ອະມະລາໄວ້ແລ້ວ ໂດຍບໍ່ໄດ້

ຄິດເອົາຄ່າເລີຍ ເສນະກະໄດ້ຟັງກໍດີໃຈ ຝັນຫວານໄປເລີຍວ່າ " ເອີ ສິນຄວາມຄິດ ທີ່ເຮົາຕັ້ງໃຈໄວ້ແລ້ວ "

ຝ່າຍນາງອະມະລາ ເມື່ອສາວໃຊ້ຂອງເສນະກະກັບໄປ ແລ້ວ ນາງກໍຈັດການເຮັດບັນທຶກໄວ້ວ່າ ສາວໃຊ້ຊື່ນັ້ນລູກຂອງຜູ້ນັ້ນມາ ຂາຍໃຫ້ຄືນ " ປີນັ້ນເດືອນນັ້ນ ວັນຂຶ້ນແຮມທີ່ນັ້ນ ເວລານັ້ນ ອາຈານເສນະກະ ເອົາແກ້ວຈຸລາມະນີ ຂອງພະມະຫາກະສັດ ໃສ່ໃນໝໍ້ນ້ຳໃຫ້ສາວໃຊ້ ນາງອະມະລາໄດ້ເຮັດຈົດໝາຍບັນທຶກໄວ້ເປັນຢ່າງດີ.

ຕໍ່ຈາກນັ້ນມາ ອາຈານປະກຸຕະກໍເອົາດອກໄມ້ຄຳໃສ່ລົງໃນ ອຸບດອກຈ້ອນໃຫ້ສາວໃຊ້ເອົາໄປຂາຍທີ່ເຮືອນຂອງມະໂຫສົດ ອາ ຈານກາມິນກໍເອົາຜ້າ ລັດມະກຳພົນ ໃສ່ລົງໃນກະຕ່າຜັກ ເອົາຜັກ ປົກເທິງແລ້ວໃຫ້ສາວໃຊ້ເອົາໄປຂາຍໃຫ້ເຮືອນ ມະໂຫສົດອີກ. ສ່ວນອາຈານເທວິນກໍເອົາພະສຸວັນນະປາທຸກາ ໃສ່ໃນຟ່ອນເຂົ້າ ໜົນຊົວ ແລ້ວໃຫ້ສາວໃຊ້ເອົາໄປຂາຍທີ່ເຮືອນມະໂຫສົດ ຄືກັນນາງອະມະລາກໍຮັບຊື້ສິ່ງຂອງເຫຼົ່ານັ້ນໄວ້ໝົດ ແລະ ທຳຈົດໝາຍບັນທຶກໄວ້ທຸກໆ ຄົນ ຄັນແລ້ວນາງກໍບອກເຫດການທີ່ພວກສາວໃຊ້ຂອງອາຈານ ທັງສີ່ ເອົາຂອງນັ້ນໆມາຂາຍໃຫ້ ໃຫ້ມະໂຫສົດ ຜູ້ສາມີຊາບທຸກປະການ.

ຝ່າຍອາຈານທັງສີ່ ເມື່ອໄດ້ຈັດການເອົາຂອງທີ່ໂຕລັກມາໄປໄວ້ ທີ່ເຮືອນຂອງມະໂຫສົດ ສຳເລັດ ຕາມຄວາມປະສົງແລ້ວ ກໍພ້ອມກັນ

ໄປຟ້າພະເຈົ້າແຜ່ນດິນ ເມື່ອພະເຈົ້າ ວິເທຫະລາດສະເດັດ ອອກມາປະທັບທີ່ບັນລັງ ອາຈານທັງສີ່ກໍຖວາຍບັງຄົມ ແລ້ວເສນະກະ ຜູ້ເປັນຫົວໜ້າຈຶ່ງທູນຂຶ້ນວ່າ " ເຫດໃດ ພະອົງຈຶ່ງບໍ່ເອົາແກ້ວຈຸ ລາມະນີ ປະດັບພະສຽນຄືແຕ່ກ່ອນ " ພະເຈົ້າວິເທຫະລາດ ຈຶ່ງຕັດວ່າ " ເອີ ເຮົາລືມໄປ ທ່ານຈຶ່ງໄປເອົາມາໃຫ້ເຮົາປະດັບດຽວນີ້ກໍໄດ້" ເມື່ອຊົງຮັບສັ່ງດັ່ງນັ້ນ ພວກອາຈານທັງສີ່ ກໍພາກັນໄປເອົາແກ້ວມະນີ ພິຕິຊອກຫາຢູ່ໜ້ອຍໜຶ່ງ ແລ້ວກໍກັບມາທູນວ່າ " ເທວະ ແກ້ວມະນີເສຍໄປແລ້ວ ແລະ ບໍ່ແມ່ນເສຍແຕ່ແກ້ວມະນີຢ່າງດຽວທໍ່ນັ້ນເຄື່ອງປະດັບພະກຽດຕິຍົດຂອງພະອົງ ທີ່ສຳຄັນຄື ດອກໄມ້ທອງຄຳ ພະສຸວັນນະປາທຸກາ ແລະ ຜ້າ ລັດຕະນະກັມພົນກໍເສຍໝົດ ຂໍພະລາຊະທານໂທດ ສິ່ງຂອງທີ່ເສຍໄປທັງໝົດນີ້ ຄົງຈະບໍ່ແມ່ນຄົນອື່ນຄົນ ໃກເອົາໄປ ເພາະຄົນອື່ນໆຄົງຈະບໍ່ມີໃຜອົງອາດ ເຂົ້າມາໃນພະລາຊະສະຖານນີ້ໄດ້ງ່າຍໆ ນອກຈາກມະໂຫສົດທໍ່ນັ້ນ ພວກຂ້າພະບາດ ສົງເກດເຫັນວ່າ ເວລານີ້ມະໂຫສົດໄດ້ສະແດງ ກິລິຍາທ່າທາງອົງອາດຄົງປາຖະໜາຢາກເປັນພະເຈົ້າແຜ່ນດິນ ແລ້ວຄົງຈະຫາຊ່ອງ ທາງລັກເອົາເຄື່ອງປະດັບກຽດຕິຍົດໄປໄວ້ເປັນແມ່ "

ໃນຂະນະທີ່ພວກອາຈານທັງສີ່ທູນຫາໂທດໃສ່ ມະໂຫສົດຢູ່ ດັ່ງນີ້ຄົນສອດແນມຂອງມະໂຫສົດທີ່ ມະໂຫສົດ ໃຊ້ເຂົ້າໄປຄອຍຟັງ ເຫດ

ການໃນພະລາຊະສຳນັກຮູ້ເລື່ອງເຂົ້າ ກໍຟ້າວອອກມາບອກມະໂຫສົດ ວ່າ ພວກອາຈານທັງສີ່ ທູນພະລາຊາຢ່າງນັ້ນໆ ພໍມະໂຫສົດ ໄດ້ຟັງ ຈຶ່ງກ່າວວ່າ " ເອີ ເຮົາຈະເຂົ້າໄປເຝົ້າພະລາຊາດຽວນີ້ ຈະໄດ້ ຮູ້ເລື່ອງກັນ " ວ່າແລ້ວ ມະໂຫສົດກໍແຕ່ງຕົວເຂົ້າໄປໃນພະລາ ຊະ ວັງ ຈະເຂົ້າເຝົ້າພະລາຊາ ແຕ່ພະລາຊາ ໄດ້ຫລົບພະອົງເສຍບໍ່ໃຫ້ ມະໂຫສົດເຂົ້າເຝົ້າ ເມື່ອເປັນດັ່ງນີ້ ມະໂຫສົດ ກໍເຂົ້າໃຈໄດ້ວ່າພະ ລາຊາຊົງພິໂລດຄຽດແຄ້ນໃຫ້ຕົນ ເພາະຟັງຄຳກາບທູນສັບສໍ່ຂອງອາ ຈານທັງສີ່ ຈຶ່ງອອກຈາກພະລາຊະວັງ ກັບຄືນເມືອເຮືອນ.

ຝ່າຍພະຍາ ວິເທຫະລາດ ບໍ່ທັນຊົງພິຈາລະນາໃຫ້ລຶກແຫ້ ແນ່ ນອນຢ່າງໃດ ພໍໄດ້ຟັງຄຳສັບສໍ່ຍົວະຍົງຂອງອາຈານທັງສີ່ ກໍຊົງ ພິ ໂລດໂກດເຄືອງໃຫ້ມະໂຫສົດ ຈຶ່ງມີພະລາຊະໂອງການ ສັ່ງໃຫ້ ຈັບ ມະໂຫສົດ ໃນວັນນັ້ນທັນທີ. ສ່ວນຄົນສອດແນມຂອງມະໂຫສົດທີ່ ປະ ຈຳຢູ່ໃນພະລາຊະສຳນັກ ໄດ້ຊາບເຫດການນັ້ນແລ້ວ ກໍຟ້າວລັກລອບ ອອກມາບອກມະໂຫສົດ ກ່ອນທີ່ພວກລາຊະບູລຸດຈະມາຈັບມະໂຫ ສົດ ໄດ້ຟັງກໍຄິດກຶກກອງເບິ່ງວ່າ ເຫດການດັ່ງນີ້ ສຳຄັນ ແລະຮ້າຍແຮງ ຢູ່ ເຮົາຄວນຈະຫລົບຫນີເສຍກ່ອນ ຈະຢູ່ສູ້ຫນ້ານັ້ນ ຄົງຈະບໍ່ ເປັນ ການດີ ຄິດດັ່ງນີ້ແລ້ວກໍບອກໃຫ້ນາງ ອະມະລາຮູ້ ແລ້ວຕົນເອງ ກໍ ປອມຕົວເປັນຄົນທຸກຍາກຫນີອອກຈາກພະນະຄອນໄປທາງທິດໃຕ້ແລ້ວ

ໄປອາໃສຢູ່ນຳນາຍຊ່າງປັ້ນໝໍ້ ຊາວບ້ານພັກອິນ ຮັບຈ້າງປັ້ນໝໍ້ ຢູ່ບ້ານນັ້ນ.

ອາຈານທັງສີ່ຕົກຫລຸມລັ້ນາງອະມະລາ

ເມື່ອມະໂຫສົດ ລັກໜີຈາກພະນະຄອນໄປແລ້ວພວກຊາວເມືອງ ກໍມີການແຕກຕື່ນ ໂຈດຖາມກັນຕ່າງໆນາໆດັງຊວ່າແຊວອື້ງອຶງ ໄປໝົດທົ່ວທັງພະນະຄອນ ຝ່າຍພວກອາຈານທັງສີ່ໄດ້ຊາບຂ່າວວ່າ ມະໂຫສົດໜີໄປ ກໍພາກັນດີໃຈ ເສນະກະເປັນຜູ້ດີໃຈຫລາຍກວ່າ ໝູ່ ເພາະວ່າມະໂຫສົດໜີໄປໄດ້ ແລະ ກໍດີໃຈວ່າ ນະໂຍບາຍຂອງຕົນໄດ້ຜົນສຳເລັດແລ້ວ.

" ເຫັນບໍ່ລະ ຢ່າວ່າແຕ່ມະໂຫສົດ ມີປັນຍາຫລາຍເຮົາກໍມີຄືກັນ ແຕ່ນີ້ຕໍ່ໄປພວກເຮົາບໍ່ຕ້ອງຢ້ານໃຜເລີຍ ແລະ ເມື່ອມະໂຫສົດໜີໄປດັ່ງນີ້ ເມຍຂອງມັນຈະໄປໃສພົ້ນ ມັນຕ້ອງຕົກເປັນເມຍຂອງ ເຮົາແນ່ໆ ເສນະກະເວົ້າ ແລະ ອາຈານອີກທັງສາມ ກໍຕ່າງຄົນຕ່າງຄິດໃຝ່ຝັນມາກໝາຍ ຈະເອົາເມຍມະໂຫສົດຢູ່ຄືກັນ ໂດຍຕ່າງຄົນຕ່າງກໍຫລັກໃຈກັນ ແລ້ວຕ່າງຄົນຕ່າງກໍລັກສົ່ງຈົດໝາຍ ສະແດງ ຄວາມຮັກໄປໃຫ້ນາງ ອະມະລາ.

ຝ່າຍນາງ ອະມະລາ ໄດ້ຮັບໜັງສືສະແດງຄວາມຮັກ ຈາກອາຈານຫົວສີ່ແລ້ວ ກໍມາຄຶດໜ້າໜ່າຍວ່າ ຄົນພວກນີ້ ມັນຊ່າງຊົ່ວ ຊ້າສາມານເອົາກະດັດກະດໍ້ ມາຄິດອິດສາບັງບຽດໃຫ້ຜົວເຮົາໜີ ແລ້ວຍັງມີໜ້າມາກ້ຽວເມຍເຂົາອີກ ມັນບໍ່ມີຢາງອາຍສາເລີຍ ມັນ ເຫັນວ່າຈະໄດ້ແລ້ວບໍ ? ຈຶ່ງຫານສົ່ງໜັງສືມາ ເອີ ເທື່ອນີ້ຈະໄດ້ ເຫັນດີກັນ " ນາງຄຶດດັ່ງນີ້ແລ້ວ ຈຶ່ງຕອບຈົດໝາຍໄປ ນັດໃຫ້ມາ ຫາເທື່ອລະຄົນ ໂດຍບໍ່ໃຫ້ພວກນັ້ນຮູ້ກັນເລີຍ ນາງບອກວ່າວັນນັ້ນໃຫ້ໄປຫານາງທີ່ເຮືອນ ຄັນຂຽນຈົດໝາຍນັດໄປແລ້ວ ນາງກໍຮຽກພວກຄົນໃຊ້ມາຂຸດຫລຸມໜຶ່ງໃນບໍລິເວນເຮືອນ ກວ້າງ ແລະ ເລິກຈົນຖວມຫົວ ບ່ອນປາກຫລຸມນາງໃຫ້ຕີຮົ້ວລ້ອມຢ່າງແໜ້ນໜາ ແລ້ວໃຫ້ຄົນໃຊ້ພາກັນໄປຂົນເອົາຂີ້ ແລະ ຍ່ຽວມາໃສ່ໃນຫລຸມນັ້ນເປັນອັນມາກບ່ອນປາກຫລຸມນາງໃຫ້ເຮັດແປ້ນຍົນປູປົກໄວ້ແລ້ວກໍເອົາຂັນສາຄອນ (ຂັນນ້ຳ) ຂະໜາດໃຫຍ່ທີ່ສຸດໃສ່ນ້ຳຫອມມາຕັ້ງໄວ້ເທິງສາດບ່ອນຊື່ປາກຫລຸມນັ້ນ ຈຶ່ງເປັນຄືຫ້ອງນ້ຳຂອງຊຸນຊຸນຜູ້ດີຄົນຈັດການໄວ້ຮຽບຮ້ອຍແລ້ວ ພໍຕົກເຖິງເວລາຄ່ຳມືດເປັນເວລາທີ່ນາງນັດອາຈານເສນະກະຄົນທີ່ໜຶ່ງໃຫ້ມາຫາ ເສນະກະກໍຄຶດອອນຊອນໃຈ ຟ້າວແຕ່ງຕົວຢ່າງງາມທີ່ສຸດ ແລ້ວກໍລັກລອບມາເຮືອນນາງອະມະລາ ແຕ່ຜູ້ດຽວພໍເຖິງກໍຢຸດຢືນຢູ່ແຄມພັກຕູຮົ້ວບ້ານທີ່ໄຂແງ້ມໄວ້ ເສນະກະຈຶ່ງບອກຄົນ ໃຊ້



"ມະໂຫສົດນັ່ງປັ້ນໝໍ້ຢູ່ໃນຄາວຖືກຫາວ່າເປັນກະບົດ ເລີຍໄປ ຮັບ
ຈ້າງປັ້ນໝໍ້ເພື່ອບໍ່ໃຫ້ເຈົ້າແຜ່ນດິນສົງໃສ "

ຈຶ່ງຢູ່ໃນທີ່ນັ້ນໃຫ້ເຂົ້າໄປບອກນາງອະມະລາວ່າ ມີຄົນມາຫາເມື່ອຄືນ ໃຫ້ເຂົ້າໄປລາຍງານ ນາງກໍສັ່ງອອກມາວ່າ ໃຫ້ເຊີນເຂົ້າມາ ໄດ້ ເມື່ອເສນະກະເຂົ້າໄປແລ້ວ ນາງອະມະລາກໍເວົ້າເລົ່າໂລມ ເສນະ ກະວ່າ " ເວລານີ້ຂ້າເຈົ້າບໍ່ມີບ່ອນເພິ່ງແລ້ວ ເພາະສາມີກໍໜີ ໄປ ແລ້ວ ຂ້າເຈົ້າຈຶ່ງເປັນຜູ້ຕົກຢູ່ໃນອຳນາດຂອງທ່ານ ແລະ ທ່ານ ຈະ ຫລັບນອນນຳຂ້າເຈົ້າກໍບໍ່ອາດຂັດຂືນໄດ້ ແຕ່ວ່າກ່ອນຈະເຂົ້າ ຫລັບ ນອນ ຂໍເຊີນທ່ານເຂົ້າໄປອາບນ້ຳຊຳລະກາຍໃນຫ້ອງນ້ຳນີ້ກ່ອນແລ້ວ ຈຶ່ງຄ່ອຍເຂົ້າມານອນ ເສນະກະໄດ້ຟັງກໍຕາຕື່ຕາລານດ້ວຍຄວາມຍິນ ດີ ຄິດວ່າຈະໄດ້ຂຶ້ນສະຫວັນຊົມນາງຟ້າ ຈຶ່ງເຂົ້າໄປໃນຫ້ອງອາບນ້ຳ ປອມ ຕາມຄຳນາງບອກຢ່າງງ່າຍດາຍ ພໍເສນະກະຖ່າຍຜ້ານາງອະ ມະລາ ກໍເຂົ້າໄປທຳກິລິຍາ ຄືຈະຕັກເອົານ້ຳໃຫ້ອາບ ແລ້ວນາງ ກໍ ຢຽບແປ້ນກະດານຍົນ ພໍແປ້ນຫລຸດ ເສນະກະກໍຕົວສັກລົງໄປໃນຫລຸມ ຂີ້ ແປ້ນຍົນ ກໍອັດກົ້ນໄວ້ດັ່ງເກົ່າ.

ອີກຈັກໜ່ອຍ ພໍເຖິງເວລານັດ ອາຈານ ປະກຸຕະ ກໍແຕ່ງ ຕົວ ຢ່າງສະອາດ ຕາມຄວາມເຂົ້າໃຈຂອງຕົວເອງວ່າ ສຸດງາມຢ່າງຍຸ່ມ ເປັຍມາເຮືອນນາງ ອະມະລາ ແລ້ວນາງກໍເຊີນປະກຸຕະເຂົ້າໄປໃນ ຫ້ອງອາບນ້ຳດັ່ງດຽວກັບທີ່ສະແດງຕໍ່ ເສນະກະ.

ພໍອາຈານປະກຸຕະຂຶ້ນຢຽບເທິງສາດຄາທີ່ປູໄວ້ເທິງປາກ ຫລຸມ

ນາງອະມະລາກໍຢຽບແປ້ນກະດານຍົນໃຫ້ຫລຸດ ປະກຸຕະ ກໍຫົວສີກລີ້ງ ໄປຊື່ດໍຂອງເສນະກະ ຈົນເສນະກະຕົກໃຈ ຄິດວ່າແມ່ນຜີ ຈຶ່ງ ຮ້ອງ ຖາມດ້ວຍສຽງອັນສັ່ນວ່າ " ແມ່ນໃຜຫ່ະ ! ຄົນຫລືຜີ " ປະກຸ ຕະ ຕັ້ງສະຕິໄດ້ຈຶ່ງຖາມຄືນວ່າ " ອ໊າວ ! ເຈົ້າແມ່ນໃຜຊັ້ນ ?" ເສ ນະກະບອກວ່າ " ເຮົາເອງເສນະກະເຈົ້າເດ້ ! ແມ່ນໃຜ ? " ຂ້າເຈົ້າແມ່ນປະກຸຕະ ເອີ໋ນີ້ອາຈານໄປຈັ່ງໃດມາຈັ່ງໃດ ຈຶ່ງມາຕົກຢູ່ ໃນຫລຸມນີ້?" ປະກຸຕະຖາມ " ມັນກໍເຫັນຈະແມ່ນຄວາມຄິດອັນດຽວ ກັນກັບທ່ານນັ້ນແລ້ວ ເອີດີແລ້ວ ມາສະເຫວີຍສຸກສົມບັດຢູ່ໃນ ຫລຸມນີ້ ນຳກັນພີ້ເທາະ ! "ເສນະກະເວົ້າດ້ວຍຄວາມແຄ້ນໃຈໂຕເອງເປັນ ທີ່ສຸດ ທັງສອງອາຈານເວົ້າກັນຢູ່ໃນຫລຸມບໍ່ທັນຂາດຄຳ ພໍດີອາ ຈານ ກາມິນ ກໍຕົກຍຸບລົງໄປອີກ ແລ້ວຕໍ່ມາກໍແມ່ນອາຈານ ເທວິນມ້ວນລົງ ໄປໃນທຳນອງດຽວກັນ ຫົວຕໍ່ຫົວຕຳກັນວຸ່ນວາຍຢູ່ໃນຫລຸມອັນ ເຫມັນ ເອົາດ້ວຍຂີ້ ແລະຍ່ຽວ ແລ້ວທັງສີ່ຄົນກໍໂຈດຖາມກັນວ່າ ເຈົ້າ ແມ່ນ ໃຜ? ເຈົ້າແມ່ນໃຜ ? ເມື່ອຮູ້ຈັກວ່າເປັນພວກດຽວກັນຫມົດແລ້ວເສ ນະກະ ຜູ້ເປັນຫົວຫນ້າຈຶ່ງອອກປາກວ່າ " ຈົບແລ້ວພວກເຮົາ ບໍ່ ເຫລືອຈັກຄົນເລີຍ ມັນຊ່າງຄິດຄືກັນເອົາແທ້ " ເມື່ອເສນະກະພວມ ຈົ່ມຢູ່ ພວກທັງສາມຈຶ່ງຖາມຂຶ້ນວ່າ " ນີ້ອາຈານເມື່ອມັນເປັນດັ່ງ ນີ້ ແລ້ວ ເຮົາຈະຄິດແນວໃດລະ ?"

" ມັນຈະຄິດແນວໃດໄດ້ ! ຈົນໃຈເຕັມທີແລ້ວ ! ມີຢ່າງດຽວ ແຕ່ຈະອາຍຄົນທັງຫລາຍທີ່ນັ້ນເອງ ຕັ້ງແຕ່ນີ້ໄປ ເຮົາຈະເງີຍ ໜ້າເບິ່ງໃຜໄດ້ " ເສນະກະຈົ່ມທຸກ.

ອາຈານທັງສີ່ ໝົດປັນຍາ ຫາທາງອອກຈາກຫລຸມຂີ້ບໍ່ໄດ້ ກໍພາກັນຢືນແຊ່ຂີ້ຈົມທຸກ ທົນເຫມັນຢູ່ຕະຫລອດຄືນຈົນຮອດແຈ້ງ.

ຝ່າຍນາງ ອະມະລາ ເມື່ອໄດ້ເຮັດກົນທໍາໃຫ້ອາຈານທັງສີ່ ຕົກຫລຸມຂີ້ໝົດປັນຍາ ຫາທາງແກ້ໄຂບໍ່ໄດ້ ຕ້ອງທົນທຸກທໍລະມານຢູ່ ໃນຫລຸມຂີ້ຈົນຕະຫລອດຄືນແລ້ວ ຄັນຮຸ່ງເຊົ້າມາ ນາງຈຶ່ງໃຫ້ຄົນໃຊ້ພວກຜູ້ຊາຍ ທີ່ມີກໍາລັງແຂງແຮງ ເອົາເຊືອກລົງໄປມັດອາຈານທັງສີ່ ໄວ້ ແລະ ໃຫ້ດຶງລາກຂຶ້ນມາຈາກຫລຸມແລ້ວໃຫ້ພວກສາວໃຊ້ ຕັກນໍ້າ ມາລ້າງຕົນຕົວຂອງພວກທັງສີ່ ໃຫ້ສະອາດໝົດກິ່ນເຫມັນ ໃຫ້ເອົາ ມີດແຖມາແຖຫົວຂູດຄິ້ວອອກໃຫ້ໝົດ ຊໍ້າບໍ່ພໍ ນາງໃຫ້ສາວໃຊ້ ເອົາເຝືອງໝົ້ນມາຜັດຫູນໍາຕົນໂຕ ຂອງພວກອາຈານທັງສີ່ຈົນໜັງກໍ່າ ພັງເຫລັ້ນ ເລືອດໄຫລອອກຊິບໆ ແລ້ວນາງຈຶ່ງໃຫ້ສາວໃຊ້ເອົາ ເຂົ້າສານມາໝ່າ ຕໍາເປັນແປ້ງ ແລ້ວຕົ້ມເປັນເຂົ້າປຽກຊຸ້ນໆ ຈຶ່ງ ເອົາເຂົ້າປຽກນັ້ນມາທາ ຕາມຕົນຕົວຂອງພວກທັງສີ່ຕັ້ງແຕ່ຫົວຮອດ ຕີນແລ້ວຈຶ່ງໃຫ້ເອົາມຸ້ນມາໂຮຍໃສ່ທົ່ວຕົນຕົວ ຈົນຂາວໂກ່ນໂຕ່ນປານລິງໂທນໃຫຍ່ ນາງເຮັດໃຫ້ພວກອາຈານທັງສີ່ໄດ້ຮັບຄວາມເຈັບແສບທັງ

ໃນດ້ານຈິດໃຈ ແລະ ຮ່າງກາຍຈົນສົມໃຈແລ້ວ ຈຶ່ງໃຫ້ເອົາກະປຸ່ມທີ່ເຮັດດ້ວຍສາດຄຳມາສີ່ໜ່ວຍ ເອົາອາຈານທັງສີ່ຍັດລົງໃສ່ໃນກະປຸ່ມສາດຄຳຄົນລະໜ່ວຍ ມັດປາກກະປຸ່ມໃຫ້ແໜ້ນໜາ ຕິດຕາປະ ທັບໝົດທຸກໜ່ວຍແລ້ວ ໃຫ້ຄົນໃຊ້ຫາມກະປຸ່ມສາດຄຳທັງສີ່ໜ່ວຍ ນັ້ນເຂົ້າໄປໃນພະລາຊະວັງ ຂອງທີ່ພວກອາຈານທັງສີ່ລັກມາຂາຍໃຫ້ນັ້ນນາງກໍໃຫ້ເອົາໄປນຳ ຄັນເຖິງພະລາຊະວັງ ກໍໃຫ້ມະຫາດເລັກ ຄົນຍາມເຂົ້າໄປທູນພະລາຊາ ຂໍເຂົ້າເຝົ້າ ຖວາຍລາຊະບັນນາ ການເມື່ອໄດ້ຮັບພະລາຊະທານອະນຸຍາດແລ້ວ ນາງກໍໃຫ້ຫາມເຄື່ອງ ລາຊະບັນນາການເຂົ້າໄປວາງໄວ້ໃກ້ພະບາດຂອງພະລາຊາແລ້ວນາງກໍກາບທູນວ່າ " ໂດຍທານໂທດ ທານຊີວິດພະລາຊະອາດຍາບໍ່ ພົ້ນເກົ້າຂໍເຊີນຝ່າ ,ພະບາດຈົ່ງຮັບເອົາເຄື່ອງບໍ່ວານລາຊະມະຫາບັນນາການ ອັນຂ້າພະບາດນຳມາຖວາຍນີ້ດ້ວຍ "

ສົມເດັດພະເຈົ້າວິເທຫະລາດ ຈຶ່ງຮັບເອົາເຄື່ອງລາຊະບັນ ນາການອັນນາງອະມະລານຳມາຖວາຍນັ້ນແລ້ວ ກໍຮັບສັ່ງໃຫ້ມະ ຫາດເລັກແກ້ກະປຸ່ມນັ້ນອອກທອດພະເນດ ທັນໃດນັ້ນ ພະລາຊາກໍມືນ ພະເນດຄ້າງເພາະ ພໍແກ້ກະປຸ່ມອອກ ມັນແມ່ນພວກອາຈານທັງສີ່ ນັ້ນເອງ ຄືໜ່ວຍໜຶ່ງແມ່ນ ເສນະກະ ໜ່ວຍໜຶ່ງແມ່ນປະກຸຕະໜ່ວຍໜຶ່ງແມ່ນ ກາມິນ ແລະ ໜ່ວຍໜຶ່ງກໍແມ່ນເທວິນ ລ້ວນແຕ່ລາ ຊະ

ບັນດິດທັງນັ້ນ ເບິ່ງຫົວໂລ້ນພໍປານ ໝາກພ້າວທີ່ເອົາປອກ ເປືອກອອກແລ້ວ ນຸ່ງຕິດຂາວທົ່ວໂຕ ຕັ້ງແຕ່ຫົວເຖິງຕີນ ເບິ່ງໄປເບິ່ງມາພໍປານກັນກັບລິງເຜືອກບັກໃຫຍ່ທັງສີ່ໂຕ ພວກເສນາອາມາດລາຊະບໍລິວານທີ່ນັ່ງເຝົ້າພະລາຊາຢູ່ໃນທີ່ນັ້ນ ຄັນເຫັນອາຈານທັງສີ່ ມີອາການເປັນດັ່ງນັ້ນ ກໍພາກັນຫົວຊວ່າແຊວຂຶ້ນ ຕ່າງຄົນກໍອອກປາກວ່າ ໂອໂຫ່ ! ລິງເຜືອກໃຫຍ່ສີ່ຕົວນີ້ ລ້ວນແຕ່ຕົວງາມໆ.

ຝ່າຍພວກອາຈານທັງສີ່ໄດ້ຮັບຄວາມອາຍໜ້າຢ່າງແສນສາ ຫັດພິຍາກນຸດແຜ່ນດິນໜີ ແຕ່ກໍໜີບໍ່ໄດ້ ຈຶ່ງພາກັນກົ້ມໜ້າເບິ່ງພື້ນແປ້ນທໍ່ຫລວງຢູ່ ວ່າມັນເຂົ້າກັນແຈບດີພໍປານໃດ ຄັນແລ້ວນາງອະມະ ລາກໍເອົາແກ້ວມະນີ. ພະສຸວັນນະປາທຸກາ, ດອກໄມ້ຄຳ ແລະ ຜ້າລັດຕະນະກຳພົນ ໃສ່ຂັນເງິນຄານເຂົ້າໄປຖວາຍ ພະລາຊາ ພ້ອມ ກັບຂາບທູນວ່າ "

" ຂໍທານໂທດ ທານຊີວິດ ນະໂຫສິດສາມີຂອງຂ້າບາດ ບໍ່ໄດ້ເປັນຂະໂມຍລັກເອົາພະລາຊະຊັບເຫລົ່ານີ້ດອກ ພວກອາຈານ ທັງສີ່ຄົນນີ້ຕ່າງຫາກ ເປັນຂະໂມຍລັກເອົາຂອງເຫລົ່ານີ້ໄປຂາຍໃຫ້ຂ້າພະບາດ ຄືເສນະກະ ລັກແກ້ວມະນີ ເອົາໃສ່ໝໍ້ນ້ຳມັນເນີຍໃຫ້ສາວໃຊ້ຊື້ນາງນັ້ນ ລູກຂອງຜູ້ນັ້ນໄປຂາຍໃຫ້ຂ້າພະບາດ ໃນວັນນັ້ນເດືອນນັ້ນ ປະກຸຕະ ລັກເອົາດອກໄມ້ຄຳໃສ່ແອບດອກຊ້ອນ ໃຫ້ສາວໃຊ້ເອົາໄປ



"ພວກ 4 ຄົນນີ້ແຫລະເປັນໂຈນລັກພະລາຊະຊັບຂອງພະອົງໄປຫຼອກ
ຂາຍໃຫ້ຂ້ານ້ອຍ"

ຂາຍ, ການົນ ລັກເອົາພະສຸວັນນະປາທຸກາ ໃສ່ໃນຝ່ອນເຂົ້າເຫວີນ ລັກເອົາຜ້າກຳພົນ ແລ້ວເອົາໃສ່ກະຕ່າຜັກໃຫ້ສາວໃຊ້ເອົາໄປຂາຍທີ່ເຮືອນຂ້າພະບາດ ໃນວັນນັ້ນເດືອນນັ້ນ ຂໍພະອົງຈົ່ງທອດພະ ເນດເບິ່ງບັນທຶກທີ່ ຂ້າພະບາດໄດ້ບັນທຶກໄວ້ນີ້ເຖີ້ນ ແລະ ພະອົງຈົ່ງ ຮັບເອົາໂຈນທັງສີ່ນີ້ໄວ້ດ້ວຍ " ນາງອະມະລາ ກາບທູນດັ່ງນີ້ແລ້ວ ກໍທູນລາກັບເມືອເຮືອນຂອງຕົນ.

ຝ່າຍສົມເດັດພະເຈົ້າວິເທຫະລາດ ໄດ້ເຫັນ ແລະ ໄດ້ຊົງ ຟັງນາງອະມະລາ ກາບທູນດັ່ງນັ້ນ ກໍທົງອຶ້ງໃນພະໄທ ບໍ່ຮູ້ຈະຕັດປະການໃດໄດ້ ແລະ ໃນພະໄທຂອງພະອົງກໍຍັງຊົງສົງໃສໃນມະໂຫສົດຢູ່ບໍ່ທັນ ໄວ້ວາງພະທະລຶໄທແທ້ ຈຶ່ງບໍ່ຕັດສິ້ງໃຫ້ລົງໂທດພວກອາ ຈານທັງສີ່ຄົນນັ້ນແຕ່ຢ່າງໃດ ແລະ ເພາະຊົງເຫັນວ່າ ໂທດທີ່ນາງ ອະມະລາລົງນັ້ນ ກໍຫນັກສົມຄວນຢູ່ແລ້ວ ທັງໃນເວລານັ້ນ ມະໂຫສົດ ກໍໄດ້ຫນີໄປແລ້ວ ສະນັ້ນ ພະອົງຈຶ່ງມີແຕ່ພຽງດຳລັດ ບອກໃຫ້ພວກທັງສີ່ໄປອາບນ້ຳແລ້ວກັບໄປເຮືອນຂອງຕົນເສຍ ພວກອາຈານທັງສີ່ ກໍກົ້ມຫນ້າຂາບຖວາຍບັງຄົມລາກັບໄປເຮືອນຂອງຕົນ.

ເທວະດາຖາມບັນຫາ

ໃນຄາວນັ້ນມີເທພະເຈົ້າອົງໜຶ່ງ ສິງສະຖິດຢູ່ທີ່ພະສະເວຕະສັດ (1) ຂອງພະລາຊາແຕ່ກ່ອນມາ ເທພະເຈົ້າອົງນັ້ນເຄີຍໄດ້ຟັງທຳມະເທດສະໜາ ທີ່ມະໂຫສົດສະແດງໃຫ້ພະລາຊາຟັງ ຄັນເມື່ອມະໂຫສົດ ໜີໄປແລ້ວ ກໍຂາດການຟັງທຳ ແລະ ເທພະເຈົ້າອົງນັ້ນ ມີຄວາມປະສົງຈະຊ່ວຍເຫລືອໃຫ້ມະໂຫສົດໄດ້ກັບຄືນມາໂດຍທາງອ້ອມ ແລະ ມີກຽດຕິຍົດຍິ່ງ ຈຶ່ງເຜີຍສະເວຕະສັດອອກມາ ສະແດງຕົນໃຫ້ພະເຈົ້າວິເທຫະລາດເຫັນ ໃນເວລາຕອນທ່ວງຄ່ຳ ແລ້ວຖາມບັນ ຫາຕໍ່ພະເຈົ້າວິເທຫະລາດ ເປັນບັນຫາ ຂໍ້ດັ່ງນີ້:

ຂໍ້ 1) ບຸກຄົນຈຳພວກໜຶ່ງມັກຂົ່ມເຫງຕັ້ງເຕັກຕີບຕີກໍຍິ່ງເປັນທີ່ຮັກ (ແກ່ຜູ້ຖືກຕັ້ງເຕັກຕີບຕີ) ຄົນຈຳພວກນີ້ ຈະໄດ້ແກ່ບຸກຄົນຈຳພວກໃດ ?

---

(1) ສເວຕສັດ ແປວ່າ ຮົ່ມຂາວ (ສ. ສເວຕ ສັຕຣ, ປ.ເສຕ ສັຕຕ)

ຂໍ້ 2) ບຸກຄົນຈຳພວກໜຶ່ງອີກ ປ້ອຍດ່າສາບແຊ່ງຕ່າງໆ ນາໆ ຕາມປາຖະໜາ ແຕ່ທໍ່ວ່າ ປ້ອຍດ່າແຕ່ປາກ ສ່ວນໃຈນັ້ນບໍ່ໄດ້ ຄິດປອງຮ້າຍໝາຍເວນ ຄັນປ້ອຍດ່າຕາມໃຈແລ້ວ ກໍຍິ່ງຮັກຍິ່ງແພງຂຶ້ນໄປກວ່າເກົ່າ ຄົນຈຳພວກນີ້ຈະແມ່ນ ຈຳພວກໃດ ?

ຂໍ້ 3) ບຸກຄົນຈຳພວກໜຶ່ງເອົາຄວາມບໍ່ຈິງມາກ່າວໃສ່ໂທດໃຫ້ກັນ ແລ້ວກໍກັບຮັກກັນຍິ່ງຂຶ້ນໄປກວ່າເກົ່າ ຄົນຈຳພວກນີ້ຈະແມ່ນ ຈຳພວກໃດ ?

ຂໍ້ 4) ຄົນຈຳພວກໜຶ່ງຂົນເອົາຂອງຄົນອື່ນໄປທຸກຢ່າງສາລະພັດແຕ່ຈະເອົາໄປເປັນຕົ້ນ ເສື່ອສາດ ອາດສະໜາ ຜ້າແຜ່ນແພວາ ກໍເອົາໄປ ແຕ່ກໍຍັງເປັນທີ່ຮັກ ແລະ ເຄົາລົບຂອງເຈົ້າຊັບນັ້ນຢູ່ ຄົນຈຳພວກຂົນເອົາຂອງຜູ້ອື່ນໄປນັ້ນ ຈະແມ່ນຄົນຈຳພວກໃດ ?

ເມື່ອເທພະເຈົ້າຖາມບັນຫາດັ່ງນີ້ ສົມເດັດພະເຈົ້າ ວິເທ ຫະລາດກໍຊົງອັດອັ້ນຕັນພະໄທຕອບບໍ່ໄດ້ຈຶ່ງຕັດບອກເທພະເຈົ້າວ່າ " ດູກ່ອນ ເທພະເຈົ້າ ບັນຫານີ້ ເຫລືອປັນຍາເຮົາແລ້ວ ເຮົາເອງບໍ່ສາມາດຈະຕອບໄດ້ແຕ່ທໍ່ວ່າ ເຮົາຂໍເວລາຖາມພວກນັກປາດຂອງ ເຮົາເບິ່ງກ່ອນ " ພະເຈົ້າວິເທຫະລາດຕັດດັ່ງນີ້ ເທພະເຈົ້າກໍອະນຸຍາດຜ່ອນຜັນໃຫ້.

ຄັນຮຸ່ງເຊົ້າມາ ພະລາຊາຈຶ່ງມີຮັບສັ່ງໃຫ້ພວກອາຈານທັງສີ່ເຂົ້າ

ເຝົ້າ ເພື່ອແກ້ບັນຫາຂອງເທວະດາ ພວກອາຈານທັງສີ່ທູນຕອບ ຄືນ ໄປວ່າ " ເວລານີ້ຫົວຂອງພວກຂ້າພະບາດຍັງໂລ້ນຢູ່ ຈະເດີນ ໄປ ຕາມຖະໜົນໃນພະນະຄອນ ກໍຢ້ານຄົນທັງຫລາຍຫົວຂວັນ ພວກ ຂ້າ ພະບາດ ມີຄວາມອາຍເປັນທີ່ສຸດ ຍັງໄປບໍ່ທັນໄດ້."

ສົມເດັດພະເຈົ້າວິເທຫະລາດ ໄດ້ຊົງຟັງດັ່ງນັ້ນ ກໍຊົງປະ ທານ ໝວກມາລີບັດ (ໝວກທີ່ເຮັດດ້ວຍໃບພ້າວ ຫລືຮູບກະໂປະ ໝາກ ພ້າວ) ອອກໄປໃຫ້ພວກນັກປາດ ທັງສີ່ຄົນນັ້ນ ຄົນລະໝວກ ໃຫ້ໃສ່ ເຂົ້າໄປເຝົ້າເທຄນີ້ ໝວກມາລີບັດ (ໝວກວ່ອນຂອງແຂກ) ຈຶ່ງ ເກີດມີຂຶ້ນໃນຄັ້ງນັ້ນເປັນແລກ. ພວກນັກປາດທັງສີ່ຄົນ ໄດ້ຮັບພະລາ ຊະທານໝວກນັ້ນແລ້ວ ກໍພາກັນໃສ່ເຂົ້າໄປເຝົ້າພະລາຊາ ຄັນເຖິງ ໜ້າພະທີ່ນັ່ງກໍຖວາຍບັງຄົມ ແລ້ວນັ່ງຢູ່ຕາມລຳດັບກັນ ໂດຍແມ່ນອາ ຈານ ເສນະກະ ເປັນຫົວໜ້າ ສົມເດັດພະເຈົ້າ ວິເທຫະລາດ ຈຶ່ງ ມີພະລາຊະປາໃສຖາມ ອາຈານເສນະກະກ່ອນວ່າ " ນີ້ ! ທ່ານ ເສນະກະ ໃນຕອນກາງຄືນຂອງມື້ຄືນນີ້ ເທພະເຈົ້າຜູ້ສິງສະຖິດ ຢູ່ ສະເວຕະສັດຂອງເຮົາ ໄດ້ອອກມາຖາມບັນຫາກັບເຮົາມີ 4 ຂໍ້ ໆທີ່ ໜຶ່ງນັ້ນວ່າ " ຄົນຜູ້ຕົບຕີ ແຮ່ງເປັນທີ່ຮັກຂອງຜູ້ຖືກຕີນັ້ນເປັນ ຄົນ ພວກໃດ ? " ດັ່ງນີ້ ຂໍອາຈານຈົ່ງແກ້ ໃຫ້ເຮົາຟັງແດ່. ເສນະກະ ໄດ້ຟັງກໍມືດແປດດ້ານ ຄິດບໍ່ອອກ ບໍ່ຮູ້ຈະແກ້ຢ່າງໃດ ມີແຕ່ຈົ່ມນຸ່ມ ໆ

ນຳງໄປວ່າ ໃຜດີ ! ໃຜງດີ " ຈື່ມຢູ່ທີ່ນັ້ນ ບໍ່ສາມາດຈະກ່າວ ແກ້ໄດ້ ອາຈານປະກູຕະ, ກາມິນ, ແລະ ເທວິນ ຍືງຮ້າຍນັ່ງມິດ ຢູ່ປານດິນປາກກືກ ສິນເດັດພະເຈົ້າວິເທຫະລາດ ໄດ້ເຫັນພວກ ອາຈານທັງສີ່ ແກ້ບັນຫາບໍ່ໄດ້ດັ່ງນັ້ນ ກໍເດືອດຮ້ອນພະໄທ ລົນເຖິງ ເວລາກາງຄືນ ວັນນັ້ນເທພະດາ ກໍສະແດງຕົວໃຫ້ປາກົດອີກແລ້ວຖາມພະເຈົ້າ ວິເທຫະລາດວ່າ " ເປັນຢ່າງໃດ ມະຫາບຸນພິດເຈົ້າ ຊິງແກ້ບັນຫາໄດ້ແລ້ວ ຫລືປະການໃດ ? "

" ຂ້າເຈົ້າໄດ້ຖາມນັກປາດທັງສີ່ຄົນ ຂອງເຮົາແລ້ວ ພວກ ນັ້ນຕອບບໍ່ໄດ້ເລີຍ " ພະເຈົ້າວິເທຫະລາດບອກ.

ເມື່ອເທພະເຈົ້າ ໄດ້ຟັງ ພະວາຈາຂອງພະລາຊາດັ່ງນັ້ນຈຶ່ງກ່າວຂະໜາບ ນາບຂູ່ພະລາຊາວ່າ " ດູກ່ອນ ພະລາຊາ ພະອົງ ໄປຖາມອາຈານສີ່ຄົນນັ້ນ ຈະໄດ້ປະໂຫຍດອັນໃດ ຖາມກໍຖາມລ້າ ພວກນັ້ນຈະຮູ້ຈັກຫຍັງ ? ບັນຫາຂໍ້ນີ້ບໍ່ມີຜູ້ໃດຈະແກ້ໄດ້ດອກ ນອກຈາກມະໂຫສົດ ຜູ້ດຽວພະອົງຈຶ່ງໄປນຳເອົາມະໂຫສົດມາແກ້ ຈຶ່ງຈະໄດ້ ຖ້າພະອົງບໍ່ໄປນຳເອົາ ມະໂຫສົດມາແກ້ສູ່ເຮົາຟັງແລ້ວ ເຮົາຈະ ເອົາຄ້ອນເຫລັກອັນລຸກເປັນໄຟນີ້ ຟາດສຽນຂອງພະອົງໃຫ້ມຸ່ນທະ ລາຍເສຍບໍ່ໃຫ້ພະອົງມີຊີວິດຢູ່ຕໍ່ໄປເລີຍ " ເທພະເຈົ້າຄົນນາບຂູ່ດັ່ງ ນີ້ແລ້ວຈຶ່ງກ່າວຕໍ່ໄປວ່າ " ດູກ່ອນ ພະລາຊາອາການທີ່ພະອົງ ກະທຳ

ໃນຄາວນີ້ ຄືກັນກັບບຸກຄົນຜູ້ຕ້ອງການໄຟ ເມື່ອໄປເຫັນແມງຫິ່ງຫ້ອຍ ກໍຄິດວ່າແມ່ນໄຟ ຈຶ່ງເອົາໄມ້ແຫ້ງ ແລະ ຫຍ້າແຫ້ງມາກອງສຸມ ໃສ່ຫິ່ງຫ້ອຍ ໝາຍຈະໃຫ້ໄຟລຸກຂຶ້ນ ມັນຈະໄດ້ໄຟມາແຕ່ໃສ ບໍ່ດັ່ງ ນັ້ນກໍຄືກັນກັບຄົນຜູ້ຢາກໄດ້ນ້ຳນົມງົວ ແລ້ວໄປຣີດທີ່ເຂົາຂອງງົວ ມັນຈະໄດ້ນ້ຳນົມງົວມາແຕ່ໃສ ຫລືບໍ່ດັ່ງນັ້ນ ກໍຄືກັນກັບຄົນຈະຊັ່ງສິ່ງ ຂອງເພື່ອໃຫ້ຮູ້ນ້ຳໜັກຕາຊັ່ງ ຕາຊັ່ງ ມີຢູ່ ແຕ່ວ່າບໍ່ເອົາຊັ່ງເບິ່ງ ກັບເອົາຝ່າມືຊັ່ງ ມັນຈະເອົາຄວາມທ່ຽງຈິງໄດ້ຢ່າງໃດ ? ດູກ່ອນ ພະລາຊາ ພະກະສັດຕາ ທີ່ລາດ ເຈົ້າແຕ່ບູຮານພາບແພ້ ຂ້າເສິກ ສັດຕູໝູ່ປັດຈາມິດໄດ້ ກໍຍ້ອນເພິ່ນມີປັນຍາ ລ້ຽງເກືອບຸກຄົນຜູ້ສະຫລາດອາດຮູ້ໃນໝູ່ເສນາ ຈັດການບຳລຸງກຳລັງພົນ ຖວາຍທານບໍ່ໃຫ້ ອຶດຢາກ ເພິ່ນຈຶ່ງປົກຄອງແຜ່ນດິນຮັກສາລາຊະສົມບັດໃຫ້ໝັ້ນຄົງ ຖາວອນມາໄດ້ ເພິ່ນບໍ່ເຮັດຄືພະອົງທີ່ໄປຂອກໄຟນຳແມງຫິ່ງຫ້ອຍ ດອກເພາະວ່າມະໂຫສົດບັນດິດນັ້ນ ປຽບຄືກອງໄຟໃຫຍ່ຮຸ່ງເຮືອງໄປດ້ວຍປັນຍາຢູ່ແລ້ວ ແຕ່ພະອົງກັບໄປຖາມເອົາຄວາມຮູ້ນຳອາຈານສີ່ຄົນ ຜູ້ບໍ່ມີປັນຍານັ້ນ ມັນຈະໄດ້ຄວາມຮູ້ມາແຕ່ໃສ ເພາະພວກນັ້ນເປັນ ຄືແມງຫິ່ງຫ້ອຍນັ້ນເອງ ສະນັ້ນພະອົງຈຶ່ງໃຫ້ໄປນຳເອົາ ມະໂຫສົດມາແກ້ບັນຫານີ້ໃຫ້ຈົບໄດ້ ຖ້າພະອົງແສວງຫາຂອງເຮົານີ້ບໍ່ໄດ້ ເຮົາຈະບໍ່ໄວ້ຊີວິດຂອງພະອົງເລີຍເປັນອັນຂາດ " ເທພະເຈົ້ານາບຊູ່ ພະ

ເຈົ້າ ວິເທທະລາດດັ່ງນີ້ແລ້ວ ກໍອັນຕະທານຫາຍໄປ.

ພະລາຊາບາຊອກຫາມະໂຫສົດ

ຝ່າຍສົມເດັດພະເຈົ້າ ວິເທຫະລາດ ເມື່ອໄດ້ຊົງຟັງ ເທວະບັນຊາ ນາບຊູ້ດັ່ງນັ້ນກໍມີພະໄທສະດຸ້ງ ຫວັ່ນໄຫວເປັນທີ່ສຸດ ຈຶ່ງຈຳເປັນຕ້ອງທຳຕາມເທວະບັນຊາ ດັ່ງນັ້ນ ຄັນຮຸ່ງເຊົ້າມາ ພະອົງຈຶ່ງຮັບສັ່ງໃຫ້ ອາມາດຄົນສະໜິດທັງສີ່ຄົນ ເຂົ້າມາເຝົ້າແລ້ວສັ່ງວ່າ "ພວກທ່ານທັງສີ່ຄົນຈົ່ງຈັດເອົາລາຊະລົດ (ລົດຫລວງ) ຄົນລະຄັນອອກໄປຊອກຫາມະໂຫສົດ ຕາມໝູ່ບ້ານຕ່າງໆທັງສີ່ທິດ ເມື່ອເຫັນຢູ່ບ່ອນໃດຈົ່ງສະແດງຄວາມເຄົາລົບ ແລະ ບູຊາມະໂຫສົດດ້ວຍຊັບ ພັນຕຳລຶງແລ້ວເຊີນເຂົ້າມາໃນພະນະຄອນໂດຍດ່ວນ" ຕັດແລ້ວກໍຊົງມອບຊັບສີ່ພັນຕຳລຶງໃຫ້ອາມາດສີ່ຄົນນັ້ນໄປ.

ພວກອາມາດສີ່ຄົນຂຶ້ນລົດຄົນລະຄັນແລ້ວກໍອອກຈາກພະນະ ຄອນໄປຄົນລະທາງ. ອຳມາດສາມຄົນທີ່ອອກໄປທາງທິດອື່ນ ບໍ່ໄດ້ພົບ ພໍ້ມະໂຫສົດ ສ່ວນອຳມາດຜູ້ອອກໄປທາງທິດໃຕ້ນັ້ນ ທ່ຽວໄປຈົນ ເຖິງ

ບ້ານທັກອິນ ກໍໄດ້ພົບພໍ້ ມະໂຫສົດ ພວມນັ່ງປັ້ນຈັກປັ້ນໝໍ້ຢູ່ນຳຄູ ຜູ້ເປັນນາຍຊ່າງ. ມະໂຫສົດໄປຮັບຈ້າງປັ້ນໝໍ້ຢູ່ນຳນາຍຊ່າງ ໝໍ້ນັ້ນໄດ້ເຮັດດ້ວຍຄວາມເຕັມໃຈ ບໍ່ໄດ້ຖືເນື້ອຖືຕົວແຕ່ຢ່າງໃດ ເວລານັ້ນມະໂຫສົດ ນັ່ງຢູ່ເທິງຕັ່ງປັ້ນດິນກ້ອນໃຫຍ່ວາງໃສ່ແປ້ນແລ້ວປັ້ນ ໄປໃຫ້ນາຍຊ່າງຜູ້ເປັນຄູ ຕົນຕົວຂອງມະໂຫສົດ ແປດເປື້ອນໄປດ້ວຍດິນມູມເນົ້າ ໄປໝົດທັງຕົວ ເວລາກິນອາຫານກໍໄດ້ກິນແຕ່ເຂົ້າແດງເຊື່ງບໍ່ມີຂອງກັບເລີຍ ການທີ່ມະໂຫສົດເຮັດດັ່ງນີ້ກໍເພື່ອສະແດງໃຫ້ ພະເຈົ້າແຜ່ນດິນໝົດຄວາມສົງໃສໃນໂຕວ່າ ມະໂຫສົດນີ້ບໍ່ເປັນຂະ ບົດຖ້າມະໂຫສົດ ເປັນຂະບົດຈິງແລ້ວ ຄົງຈະໄປຕັ້ງຕົວເປັນອິດສະ ລະສະສົມໄພ່ພົນໂຍທາຢູ່ຄົງຈະບໍ່ໄປຫາຮັບຈ້າງຫົນທຸກທໍລະມານຢູ່ ຢ່າງນີ້ເປັນແນ່ ມະໂຫສົດຄິດດັ່ງນີ້ ແລະ ໃນທັນໃດພໍເຫລືອດຕາຂຶ້ນ ກໍເຫັນອຳມາດຄົນນັ້ນ ເດີນມາແຕ່ໄກ ມະໂຫສົດຈຶ່ງຄິດວ່າ "ອຳມາດຄົນນັ້ນຕ້ອງມາຫາເຮົາແນ່ ລາບຍົດຂອງເຮົາຈະຄືນມາແລ້ວ ຕັ້ງແຕ່ນີ້ຕໍ່ໄປ ເຮົາຈະໄດ້ຮັບປະທານ ອາຫານຢ່າງດີ ທີ່ນາງມະອະ ລາຕົກແຕ່ງດ້ວຍມືນາງເອງ " ເມື່ອຄິດດັ່ງນີ້ແລ້ວ ກໍວາງປັ້ນເຂົ້າແດງທີ່ພວມຈະກິນຢູ່ນັ້ນເສຍ ລຸກຈາກບ່ອນນັ່ງ ລ້າງມື ບ້ວນປາກ ແລ້ວກໍນັ່ງຄອຍຢູ່ຟ້າຍອາມາດຄົນແລເຫັນ ມະໂຫສົດ ກໍຈື່ໄດ້ ຈຶ່ງກົງເຂົ້າໄປຫາ ແຕ່ອຳມາດຄົນນີ້ ເປັນຄົນທີ່ເຫັນດີຕາມຄວາມຄິດຄວາມເຫັນ

ຂອງອາຈານ ເສນະກະ ໃນຂໍ້ທີ່ວ່າ ຊັບດີກວ່າປັນຍາ ເພາະສະນັ້ນ ເມື່ອເຫັນ ມະໂຫສົດຜູ້ມີປັນຍາ ຕົກທຸກໄດ້ຍາກທຳການງານ ດ້ວຍຄວາມລຳບາກ ເຫັນໄດ້ທ່າຈຶ່ງເວົ້າສຽດໃຫ້ ມະໂຫສົດວ່າ.

" ເອີ້ ! ທ່ານຜູ້ມີປັນຍາ ຂໍ້ຄວາມທີ່ອາຈານເສນະກະ ເວົ້າມາແຕ່ກ່ອນວ່າ ຊັບປະເສີດກວ່າປັນຍານັ້ນ ຄວນຈື່ຈຳເອົາໄວ້ ເປັນແບບຢ່າງໄດ້ແລ້ວ ຢ່າເບິ່ງຜູ້ອື່ນໄກເລີຍ ເບິ່ງແຕ່ທ່ານນີ້ກໍແລ້ວກັນ ທ່ານເປັນຄົນມີປັນຍາສູງ ແຕ່ເມື່ອປະສະຈາກຊັບສິນບັດແລ້ວ ປັນຍາອັນເລີດຂອງທ່ານ ກໍບໍ່ສາມາດທີ່ຈະພາໃຫ້ທ່ານໄດ້ຮັບຄວາມສຸກເລີຍ ທ່ານຕ້ອງມາກິນເຂົ້າແດງທີ່ບໍ່ມີຂອງກັບ ຕ້ອງມາຮັບຈ້າງທຳການອັນຕ່ຳຕ້ອຍໃຫ້ໄດ້ຮັບຄວາມລຳບາກ ຖ້າທ່ານມີຊັບທ່ານບໍ່ຕ້ອງລຳ ບາກຢ່າງນີ້ດອກ ນີ້ແຫລະ ຂ້າເຈົ້າຈຶ່ງເຫັນວ່າຄຳເວົ້າຂອງທ່ານ ເສນະກະ ຖືກຕ້ອງ"

ມະໂຫສົດ ໄດ້ຟັງຄຳເວົ້າສຽດຂອງອຳມາດຜູ້ນັ້ນ ຈຶ່ງຕອບ ວ່າ " ເຈົ້າມັນຄົນໂງ່ທີ່ສຸດ ! ໂງ່ຢ່າງອັນທະພານເລີຍ ເຈົ້າບໍ່ຮູ້ ຈັກເຫດການໃກ້ໄກສົງດອກ. ການທີ່ຂ້າເຈົ້າ ມາເຮັດວຽກຢູ່ແບບ ນີ້ເຮັດດ້ວຍປັນຍາທີ່ໄດ້ຄິດຮອບຄອບແລ້ວ ຂ້າເຈົ້າໄດ້ພິຈາລະນາເຫັນດີແລ້ວວ່າ ການເຮັດແບບນີ້ແຫລະ ລາບຍົດ ຊັບສິນບັດທັງ ຫລາຍຈະໄຫລຄືນມາຫາຂ້າເຈົ້າ ແລະ ກໍໄຫລຄືນມາຢ່າງຊອບທຳ ໂດຍ

ບໍ່ມີໄພເລີຍ ຄືຂ້າເຈົ້າ ແລເຫັນເຫດການໃນລະຍະໄກວ່າ ເວລານີ້ ເປັນເວລາທີ່ພະເຈົ້າຢູ່ຫົວຊົງພະກະລຸນາໂພດພາຍ ເຮົາກໍຕ້ອງ ປະພຶດຕົນໃຫ້ສົມກັບກຽດຕິຍົດທີ່ຊົງພະກະລຸນາ ເພື່ອໃຫ້ເປັນການ ສົມຫນ້າສົມຕາ, ເວລານີ້ເປັນເວລາທີ່ພະເຈົ້າຢູ່ຫົວບໍ່ຊົງໂພດພາຍເຮົາກໍຕ້ອງປະພຶດຕົນໃຫ້ເປັນຄົນບໍ່ມີຍົດ ເພື່ອບໍ່ໃຫ້ເປັນທີ່ສົງໃສສົນເທພະໄທ ເຮົາຈຶ່ງໄດ້ມາຮັບຈ້າງປັ້ນຫມໍ້ ກິນເຂົ້າແດງທີ່ບໍ່ມີຂອງກັບຢູ່ຢ່າງນີ້ ອັນນີ້ແມ່ນວິທີການທີ່ບໍ່ອັດພັກຕູ ຕົນປະໂຫຍດຂອງຕົນເອງ ເຮົາຈຶ່ງໄດ້ຕົກລົງໃຈທຳຢ່າງນີ້ ເມື່ອເຮົາທຳຢ່າງນີ້ໄດ້ ລາບຍົດ ຂອງເຮົາກໍຈະກັບຄືນມາຄືດັ່ງແຕ່ກ່ອນ ເມື່ອເປັນດັ່ງນັ້ນເຖິງເວລາທີ່ເຮົາຄວນຈະອົງອາດ ເຮົາກໍຈະອົງອາດຄືກັນກັບ ພະຍາລາຊະສີ ເຊິ່ງຢືນສະຫງ່າຜ່າເຜີຍຢູ່ເທິງແຜ່ນຫີນ ບໍ່ເຫິງດອກທ່ານຈະໄດ້ເຫັນເຮົາຮຸ່ງເຮືອງ ໄປດ້ວຍອິດທິລິດ ແລະ ບໍລິບູນໄປດ້ວຍອິດສະລິຍະຍົດຍິ່ງກວ່າແຕ່ກ່ອນ ".

ເມື່ອມະໂຫສົດກ່າວດັ່ງນີ້ແລ້ວ ອຳມາດຜູ້ຮັບໃຊ້ພະລາຊານັ້ນ ກໍຫມົດປັນຍາຍອມຈົນ ຈຶ່ງແຈ້ງເຫດການທັງປວງທີ່ພະລາຊາໃຊ້ຕົນມາວ່າ " ຂ້າແຕ່ທ່ານບັນດິດດຽວນີ້ ເທພະເຈົ້າຕົນສິງສະຖິດຢູ່ໃນ ພະສະເວຕະສັດຂອງພະລາຊາໄດ້ຖາມປັນຫາຕໍ່ພະມະຫາກະສັດ ເປັນເນື້ອຄວາມສີ່ຂໍ້ ພະອົງໄດ້ຕັດຖາມນັກປາດທັງສີ່ທ່ານນັ້ນແລ້ວ ແຕ່ກໍ

ບໍ່ມີຜູ້ໃດສາມາດຕອບໄດ້ຈັກຂໍ້ດຽວ ເຫດດັ່ງນີ້ພະລາຊາຈຶ່ງຕັດໃຊ້ໃຫ້ຂ້າເຈົ້າ ມາຊອກຫາທ່ານ ຈະໃຫ້ຮັບເຂົ້າໄປໃນພະນະຄອນ ໃຫ້ທັນໃນເວລາວັນນີ້ "

" ເອີ ! ນັ້ນເຫັນບໍ່ລະ ! ເຫັນອານຸພາບຂອງປັນຍາແລ້ວຫລືຍັງ " ມະໂຫສົດ ວ່າໃຫ້ອຳມາດແລ້ວເວົ້າຕໍ່ໄປວ່າ "ເຫັນແລ້ວບໍ? ເມື່ອເກີດເຫດຂຶ້ນດັ່ງນີ້ ຊັບສິນບັດມີຫລວງຫລາຍ ເປັນຫຍັງຈຶ່ງ ບໍ່ເອົາມາແກ້ບັນຫາໃຫ້ໄດ້ອິດສະລິຍະຍົດ ບ່າວໄພ່ ບໍລິວານ ແລະໂພໄຄ ມະໄຫສຸລິຍະສົມບັດ ເປັນຫຍັງຈຶ່ງບໍ່ເອົາ ? ມາເປັນທີ່ເພິ່ງພາອາໃສ ເປັນຫຍັງຈຶ່ງຕ້ອງແລ່ນມາຂໍເພິ່ງຄົນມີປັນຍາ ນີ້ທ່ານອຳມາດທ່ານຈຶ່ງເຂົ້າໃຈເສຍແຕ່ບັດນີ້ວ່າ ຄົນຜູ້ມີປັນຍານີ້ແຫລະ ເປັນທີ່ເພິ່ງຂອງຄົນທັງຫລາຍໄດ້ໃນເວລາມີເຫດເກີດຂຶ້ນ.

" ເມື່ອມະໂຫສົດ ສັນລະເສີນອານຸພາບຂອງປັນຍາໃຫ້ອຳມາດຜູ້ນັ້ນຟັງແລ້ວ ອຳມາດຜູ້ນັ້ນກໍເອົາຊັບພັນຕຳລຶງທີ່ພະລາຊາ ພະ ລາຊາທານອອກມາໃຫ້ມະໂຫສົດ ວາງລົງໃສ່ມື ມະໂຫສົດດ້ວຍ ຄວາມເຄົາລົບນອບນ້ອມເປັນອັນດີ, ຝ່າຍຊ່າງຫມໍ້ເຊິ່ງນັ່ງຟັງຢູ່ໃກ້ນັ້ນໄດ້ເຫັນ ແລະ ໄດ້ຍິນອຳມາດກັບ ມະໂຫສົດເວົ້າກັນ ຈຶ່ງຮູ້ເນື່ອວ່າ ຜູ້ທີ່ເປັນລູກແຫລ້ວຂອງຕົນນັ້ນ ແມ່ນມະໂຫສົດ ຍອດລາຊະບັນດິດ ກໍຕົກໃຈຢ້ານຈົນຂົນຫົວລຸກ ຄິດວ່າ " ເຮົາບໍ່ຮູ້ເລີຍວ່າເປັນມະໂຫສົດ

ຫລັງໃຊ້ເອົາສາພັນແຮງ " ມະໂຫສົດ ເຫັນຊ່າງຫມໍ້ ຕົກໃຈຫນ້າຫຼ່າ ຈຶ່ງເວົ້າອ່ອຍໃຈວ່າ " ທ່ານອາຈານ ! ທ່ານຢ່າຕົກໃຈຢ້ານກົວ ອີ່ສັງດອກ ທ່ານມີ ບຸນຄຸນແກ່ຂ້າເຈົ້າ ຫລວງຫລາຍ ວ່າແລ້ວກໍ ເອົາຊັບພັນຕຳລຶງນັ້ນ ມອບໃຫ້ຊ່າງຫມໍ້ ຄັນແລ້ວກໍຂຶ້ນຂີ່ລາຊະລົດ ພ້ອມທັງຕົນຕົວທີ່ແປດເປື້ອນ ໄປດ້ວຍດິນຫນຽວ ໂດຍບໍ່ໄດ້ອາບນ້ຳ ເຂົ້າໄປສູ່ພະລາຊະວັງ ເມື່ອເຖິງພະລາຊະວັງແລ້ວ ອຳມາດຜູ້ນັ້ນກໍ ໃຫ້ມະໂຫສົດ ຖ້າຢູ່ຂ້າງນອກກ່ອນ ສ່ວນໂຕເອງ ເຂົ້າໄປທູນພະລາຊາບອກວ່າ " ຂ້າພະບາດໄດ້ພາ ມະໂຫສົດມາແລ້ວ " ພະລາຊາຕັດຖາມ "

" ເຈົ້າໄປພໍ້ຢູ່ບ່ອນໃດ ? "

" ພໍ້ຢູ່ບ້ານທັກຂິນຄາມ ! ຂ້ານ້ອຍ ! ທ່ານມະໂຫສົດ ໄປຮັບຈ້າງປັ້ນຫມໍ້ ຢູ່ນຳນາຍຊ່າງຫມໍ້ ພໍຊາບວ່າມີພະລາຊະໂອງການ ໃຫ້ຫາເຂົ້າເຝົ້າ ກໍຟ້າວຂຶ້ນລົດມາທັນທີ ຍັງບໍ່ທັນໄດ້ອາບນ້ຳເລີຍ ຕົນຕົວຍັງແປດເປື້ອນໄປດ້ວຍຕົມ ຂ້ານ້ອຍ "

ພະລາຊາ ໄດ້ຊົງຟັງຄຳໃຫ້ການຂອງອຳມາດ ກໍຫມົດຄວາມ ສົງໃສໃນພະໄທ ຈຶ່ງຄິດວ່າ: " ມະໂຫສົດ ຄົງບໍ່ເປັນຂະບົດຕໍ່ເຮົາແນ່ ເພາະວ່າ ຖ້າເປັນຂະບົດຈິງແລ້ວ ຄົງບໍ່ໄປຢູ່ນຳຊ່າງປັ້ນຫມໍ້ ຄົງຈະໄປຢູ່ຢ່າງອິດສະລະ ຫອມໂຮມໄພພົນໂຍທາໄວ້ " ຊົງດຳລິແລ້ວຈຶ່ງ

ຕັດສັ່ງອຳມາດວ່າ " ໄປບອກລູກຂອງເຮົາໃຫ້ກັບໄປເຮືອນ ກ່ອນ ອາບນ້ຳຊຳລະສະສາງຕົນຕົວໃຫ້ສະອາດດີແລ້ວ ຈຶ່ງແຕ່ງຕົວ ຕາມ ກຽດຕິຍົດ ເຂົ້າມາຫາເຮົາຕາມທີ່ເຄີຍປະຕິບັດມາແຕ່ກ່ອນ " ອຳ ມາດຮັບພະລາຊະໂອງການແລ້ວ ກໍກັບອອກມາບອກ ມະໂຫສົດກໍກັບ ໄປເຮືອນຂອງຕົນ ອາບນ້ຳຊຳລະຮ່າງກາຍ ຮັບປະທານອາ ຫານ ແລ້ວ ກໍແຕ່ງຕົວເຕັມຕາມກຽດຕິຍົດ ເຂົ້າໄປເຝົ້າພະລາຊາ.

ຝ່າຍສົມເດັດພະເຈົ້າ ວິເທຫະລາດ ເມື່ອມະໂຫສົດຂາບທູນວາຍ ບັງຄົມແລ້ວ ຈຶ່ງຕັດປາໃສລອງໃຈ ມະໂຫສົດເບິ່ງວ່າ " ດູກ່ອນລູກ ມະໂຫສົດ ຄົນລາງຈຳພວກພິຈາລະນາເຫັນວ່າ ໂຕເອງມີຄວາມສຸກ ສະບາຍແລ້ວ ຈຶ່ງບໍ່ເຮັດຄວາມຊົ່ວ ລາງຈຳພວກ ຢ້ານຄົນທັງຫລາຍ ຕິຕຽນຈຶ່ງບໍ່ເຮັດ ລາງຈຳພວກນັ້ນ ປັນຍາຢູ່ບໍ່ມີຄວາມສາມາດ ຈະ ເຮັດໄດ້ ຈຶ່ງບໍ່ຊອກຫາທຳ ເພາະໂຕເອງເປັນຄົນໂງ່ ສ່ວນຕົວເຈົ້າ ນີ້ ປັນຍາກໍມີຫລາຍ ຄວາມຄິດຄວາມອ່ານກໍເປັນເລີດ ສາລະພັດທຸກ ຢ່າງ ຖ້າເຈົ້າປາຖະໜາເອົາສົມບັດ ໃນສາກົນຊົມພູທະວີບນີ້ກໍອາດ ສຳເລັດໄດ້ໂດຍສົມປະສົງທຸກປະການ ເມື່ອເປັນດັ່ງນີ້ ເຫດໃດເຈົ້າ ຈຶ່ງເສີຍເສຍ ບໍ່ຄິດທີ່ຈະທຳການປະທຸດສະຮ້າຍຕໍ່ເຮົາ ແລ້ວຂຶ້ນເປັນ ພະລາຊາເສຍເອງ.

ມະໂຫສົດທູນວ່າ " ໂດຍທານໂທດ ອັນທຳມະດາຂອງບຸກ ຄົນ

ຜູ້ເປັນນັກປາດນັ້ນ ບໍ່ທ່ອນທຳຄວາມທຸກໃຫ້ແກ່ຜູ້ອື່ນ ແລ້ວຫາ ຄວາມ
ສຸກມາໃສ່ໂຕ ຄົນຜູ້ເປັນນັກປາດ ເຖິງແມ່ນຈະພັດພາກຈາກ ເຮືອນ
ຊານ ຈາກຊັບສິນບັດ ໄດ້ຮັບຄວາມທຸກທໍລະມານ ທັງກາຍແລະ ໃຈ
ໂດຍປະການໃດໆກໍຕາມ ກໍຍັງຍິນດີປະພຶດແຕ່ໃນສິ່ງທີ່ເປັນທຳບໍ່ ໄດ້
ປະລະຄວາມສຸຈະລິດເສຍ ບໍ່ຫລົງໄປດ້ວຍອຳນາດແຫ່ງຄວາມ ຮັກ
ຄວາມຊັງ ແລະ ຄວາມບໍ່ຮູ້ ນິໃສຂອງນັກປາດເປັນດັ່ງນີ້ ຂໍພະ ອົງ
ຈົ່ງຊົງຊາບ "

ພະເຈົ້າວິເທຫະລາດໄດ້ຟັງ ມະໂຫສົດກາບທູນ ຈຶ່ງຕັດຖາມອີກ
ໂດຍທຳນອງໄວ້ທ່າທາງຢູ່ວ່າ " ນີ້ ! ທ່ານມະໂຫສົດ ທຳມະ ດາ
ຄົນຜູ້ເຄີຍມີ່ງ ມີສີສຸກໄດ້ເປັນໃຫ່ຍມາແລ້ວ ເມື່ອໄດ້ຮັບຄວາມ ລຳ
ບາກ ຕົກທຸກໄດ້ຍາກລົງແລ້ວ ຈະມິດເສີຍຢູ່ຈັ່ງໃດໄດ້ ມັນຈຳ ເປັນ
ຕ້ອງຫາທາງແກ້ໄຂເອົາຕົວອອກເສຍກ່ອນ ຄວາມຊື່ວເຖິງຈະ ແສນ
ຊົ່ວ ກໍຈຳຕ້ອງເຮັດ ພໍໃຫ້ເອົາຕົວຫລຸດພົ້ນຈາກຄວາມທຸກຍາກຄັນພົ້ນ
ແລ້ວ ໄດ້ທ່າແລ້ວຈຶ່ງປະກອບການສຸຈະລິດຕໍ່ພາຍລຸນດັ່ງນີ້ຈະບໍ່ດີກວ່າ
ຫລືປະການໃດ " -" ໂດຍທານໂທດ ນັກປາດຄົນອື່ນໆບໍ່ຊ່າງ ວ່າ
ຂ້ານ້ອຍ ! ແຕ່ສ່ວນນັກປາດຄືຂ້າພະບາດນີ້ ແມ່ນບໍ່ບັງບຽດ ປະທຸ
ສະຮ້າຍຕໍ່ທ່ານຜູ້ມີຄຸນຢ່າງເດັດຂາດ ຢ່າວ່າແຕ່ຄົນຄືກັນເລີຍ ເຖິງ
ແມ່ນຕົ້ນໄມ້ ເຊິ່ງເປັນຂອງບໍ່ມີວິນຍານ ຖ້າຂ້າພະບາດຫາກໄດ້ເພິ່ງ

ເວົ້າແລ້ວ ຂ້າພະບາດຈະບໍ່ຕັດ ບໍ່ຣານ ບໍ່ຫັກງ່າເປັນອັນຂາດ ບຸນ ຄົນຜູ້ທີ່ໄດ້ອາໃສ່ຮົ່ມເງົາຂອງຕົ້ນໄມ້ແລ້ວ ໄປຫັກກ້ານ ຣານງ່າຂອງ ມັນເສຍ ກໍນັບວ່າ ເປັນຄົນຊົ່ວ ເປັນຄົນປະທຸດສະຮ້າຍຕໍ່ມິດ ບໍ່ຕ້ອງ ເວົ້າເຖິງການຂ້າຄົນຜູ້ມີຄຸນນັ້ນດອກ ເພາະວ່າການຂ້າຄົນຜູ້ມີຄຸນ ຕໍ່ ຕົນ ເປັນການປະທຸສະຮ້າຍຕໍ່ມິດແທ້ໆນັ້ນ ເປັນບາບຢ່າງໃຫຍ່ຫລວງ ທີ່ສຸດໃນໂລກ ກໍພະອົງເປັນຜູ້ມີພະຄຸນຕໍ່ຂ້າພະບາດຢ່າງລົ້ນເຫລືອ ໄດ້ ພະລາຊະທານຍົດສັກ ແລະ ຊັບສິນບັດເປັນອັນມາກແກ່ຂ້າພະ ບາດ ຖ້າຫາກຂ້າພະບາດຄິດປະທຸດສະຮ້າຍຕໍ່ພະອົງ ຂ້າພະບາດຈະບໍ່ເປັນ ຄົນຊົ່ວ ເປັນຄົນປະທຸດສະຮ້າຍຕໍ່ມິດ ໄປຫລື ?

ມະໂຫສົດ ກາບທູນ ເປີດເຜີຍຫົວໃຈ ໃຫ້ພະລາຊາຊົງຊາບວ່າ ຕົນເອງບໍ່ໄດ້ເປັນຂະບົດບໍ່ເປັນຄົນປະທຸດສະຮ້າຍຕໍ່ມິດດັ່ງນີ້ແລ້ວ ຈຶ່ງ ກ່າວເປັນທຳນອງຕິໂທດ ພະລາຊາວ່າ " ຂໍທານໂທດ ! ທຳມະດາ ເກີດເປັນຄົນ ລູກຜູ້ຊາຍ ຖ້າໄດ້ຮຽນຮູ້ວິຊານຳອາຈານຄົນໃດ ຫລື ອາຈານໃດໄດ້ສອນຂໍ້ອັດຂໍ້ທຳ ພຽງແຕ່ບົດດຽວກໍຕາມ ອາຈານ ນັ້ນ ກໍນັບວ່າ ເປັນບຸບພະກາລີ ຄົນໄດ້ບໍ່ຄວນທີ່ຜູ້ທີ່ໄດ້ຮ່ຳຮຽນນຳນັ້ນ ຖິ້ມ ປະລະໄລເລີຍ ຢ່າງຫນ້ອຍກໍຄວນນັບຖື ເປັນສິດໄດ້ຄົນຫນຶ່ງ ເມື່ອ ກ່າວເປັນທຳນອງ ຕິໂທດພະລາຊາດັ່ງນີ້ແລ້ວ ຈຶ່ງກ່າວເປັນຄຳ ໃຫ້ ໂອວາດແກ່ພະລາຊາຕໍ່ໄປວ່າ " ໂດຍທານໂທດ ! ບຸກຄົນຜູ້ນັບວ່າ

ບໍ່ເປັນຄົນງາມ ຫລືຄົນດີນັ້ນ ມີຢູ່ສີ່ຈຳພວກ ຄືຜູ້ເປັນຄະລາວາດ ປົກຄອງເຮືອນຊານບ້ານຊ່ອງ ຖ້າເປັນຄົນບໍ່ມີຄວາມພາກພຽນເປັນຄົນຂີ້ຄ້ານແລ້ວ ກໍນັບວ່າ ບໍ່ເປັນຄົນງາມຈຳພວກຫນຶ່ງ ບຸກຄົນ ພວກ ທີ່ເປັນນັກບວດ ຖ້າບໍ່ມີສີນແລ້ວ ກໍນັບວ່າເປັນຄົນບໍ່ງາມ ຈຳພວກຫນຶ່ງ ບຸກຄົນຜູ້ອວດອ້າງຕົນວ່າ ເປັນນັກປາດ ແຕ່ຖ້າຫາກເປັນຜູ້ຕົກຢູ່ ໃຕ້ອຳນາດແຫ່ງຄວາມໂກດຄຽດ ຄືເປັນຄົນຄຽດງ່າຍນັ້ນ ກໍບໍ່ເປັນ ຄົນງາມ ຈຳພວກຫນຶ່ງ ແລະ ພະລາຊາ ຜູ້ປາສະຈາກຄວາມພິຈາ ລະນາ ເປັນຄົນຫູເບົາເຊື່ອງ່າຍ ບໍ່ຄິດໃຫ້ຖ້ວນຖີ່ ກໍບໍ່ເປັນຄົນງາມເລີຍ ຂໍພະລາຊະທານ ອະໄພໂທດ ທຳມະດາເປັນ ພະລາຊາມະຫາ ກະສັດ ນັ້ນຕ້ອງເປັນຜູ້ທີ່ມີນ້ຳພະໄທຫນັກແຫນ້ນປານແຜ່ນດິນ ຈະທຳການອັນໃດຕ້ອງພິຈາລະນາໃຫ້ຮອບຄອບກ່ອນ ຖ້າຍັງບໍ່ທັນຮື່ນຕອງ ໃຫ້ຖ່ອງແທ້ ຢ່າຟ້າວເຮັດ ເມື່ອໄດ້ພິຈາລະນາໃຫ້ຮອບຄອບແລ້ວ ຈຶ່ງເຮັດນັ້ນ ພະກຽດຕິຄຸນ ແລະ ໂພໄຄໄອສູລິຍະສົມບັດ ຈຶ່ງວັດທະນາຖາວອນ ແລະ ແຜ່ກະຈາຍໄປທົ່ວທຸກທິດ ສົມປາຖະຫນາ.

ເມື່ອພະເຈົ້າ ວິເທຫະລາດ ໄດ້ຊົງຟັງຄຳໃຫ້ໂອວາດຂອງ ມະໂຫສົດ ແລ້ວກໍຊົງປິ້ມປີຕິໃນພະໄທ ເປັນອັນມາກ ເມື່ອຈະຊົງຟັງຄຳແກ້ປັນຫາທີ່ເທວະດາ ຖາມພະອົງຈຶ່ງເຊີນ ມະໂຫສົດຂຶ້ນນັ່ງເທິງລາຊະອາດ ອັນກາງກັ້ງໄປດ້ວຍສະເວຕະສັດ ທົ່ວຈິດຈິບງາມ ສ່ວນພະ

ຈຶງໄດ້ຖອຍລົງມານັ່ງທີ່ອາດສະໜາ ບ່ອນຕ່ຳກວ່າ ດ້ວຍຄວາມເຄົາລົບໃນທຳ ແລ້ວຕັດວ່າ " ດູກ່ອນເຈົ້າມະໂຫສົດ ບັດນີ້ ເທພະເຈົ້າເຊິ່ງສິງສະຖິດຢູ່ໃນສະເວຕະສັດຂອງເຮົານີ້ ໄດ້ອອກມາຖາມ ບັນຫານຳເຮົາ ມີສີ່ຂໍ້ ເຮົາໄດຖາມພວກອາຈານທັງສີ່ຄົນນັ້ນແລ້ວກໍບໍ່ໄດ້ຄວາມວ່າຢ່າງໃດ ພາກັນຈົນປັນຍາໝົດຊູ້ຄົນ ເຮົາຈຶ່ງໄດ້ໃຫ້ ອຳມາດໄປເຊີນທ່ານມາຊ່ວຍພິຈາລະນາ ແກ້ບັນຫານີ້ "

ມະໂຫສົດທູນຖາມວ່າ " ບັນຫາທີ່ ເທວະດາ ຖາມນັ້ນວ່າຢ່າງໃດ? "

ພະເຈົ້າວິເທຫະລາດ ຕັດບອກບັນຫາທີ່ ເທວະດາຖາມນັ້ນ ວ່າ " ດູກ່ອນເຈົ້າ ມະໂຫສົດ ບັນຫາ ຂໍ້ຕົ້ນທີ່ ເທວະດາຖາມນັ້ນວ່າ " ບຸກຄົນຈຳພວກໜຶ່ງແຮ່ງຕີບ ແຮ່ງຕີ ແຮ່ງເປັນທີ່ຮັກຂອງຄົນນັ້ນ ນີ້ແມ່ນຄົນຈຳພວກໃດ ?"

ພໍພະເຈົ້າ ວິເທຫະລາດ ຕັດບອກບັນຫາ ຂອງເທວະດາ ທໍ່ນັ້ນ ມະໂຫສົດ ກໍສາມາດແລເຫັນຄວາມອະທິບາຍຂອງບັນຫານັ້ນໄດ້ ຕະຫລອດຢ່າງແຈ້ງຂາວ ພໍປານພະຈັນອັນສ່ອງແສງສະຫວ່າງຢູ່ເທິງຟ້າໃນນີ້ເດືອນເພັງຈຶ່ງທູນວ່າ " ຂໍເຊີນສະດັບ ຂ້າພະບາດຈະອະ ທິບາຍໃນບັດນີ້ ຄືບັນຫາທີ່ວ່າ ຄົນຈຳພວກໜຶ່ງແຮ່ງຕີບ ແຮ່ງຕີ ແຮ່ງເປັນທີ່ຮັກຂອງບຸກຄົນນັ້ນໄດ້ແກ່ເດັກນ້ອຍໆທີ່ນອນຢູ່ໃນຕັກຂອງ ມານ

ດານັ້ນເອງ ທຳມະດາ ເດັກນ້ອຍທີ່ນອນຢູ່ໃນຕັກແມ່ນັ້ນຍ່ອມມີຄວາມດີອົກດີໃຈ ຢອກຫຼິ້ນກັບແມ່ຂອງຕົນ ລາງເທື່ອກໍເອົາຝ່າມືຕົບ ໜ້າແມ່ ລາງເທື່ອ ກໍເອົາຕີນຖີບຕີນທຳ ລາງເທື່ອກໍເອົາມືຫຼິກຜົມ ຈົກປາກຈົກດັງແມ່, ສ່ວນແມ່ ເຫັນລູກຂອງຕົນເຮັດດັ່ງນັ້ນ ແທນທີ່ ຈະຄຽດຈະຊັງ ແຮ່ງກັບຮັກຫຼາຍຂຶ້ນກ່ວາເກົ່າ ໂດຍເອົາມືທັງ ສອງກອດອຸ້ມເອົາລູກຂຶ້ນຈູບດົມຈົມຂະໝອມ ພໍປານວ່າຈະກືນກິນ ສ່ວນພໍ່ກໍຄືກັນ. " ອັນນີ້ແຫຼະ ບັນຫາຂໍ້ຕົ້ນນີ້ແມ່ນດິນຈຳພວກອື່ນໄກ ອື່ໃດດອກ ແມ່ນເດັກນ້ອຍໆ ຢູ່ເທິງຕັກຂອງແມ່ນັ້ນເອງ "

ມະໂຫສົດ ຖະແຫຼງແກ້ບັນຫາຂໍ້ຕົ້ນນີ້ ເປັນການແຈ້ງຂາວທີ່ສຸດພໍປານກັບເທພະມະເຫສັກຜູ້ມີອານຸພາບ ຈັບເອົາປະລິມົນທົນແຫ່ງພະອາທິດຍົກຂຶ້ນໃຫ້ມີແສງສະຫວ່າງໄປທົ່ວມະພາດົນ ອາກາດສະ ນັ້ນຄາວນັ້ນ ເທພະເຈົ້າ ຜູ້ສິງຢູ່ໃນສະເວຕະສົດ ກໍເຜີຍຕົນອອກ ໃຫ້ເຫັນ ແລ້ວກ່າວສັນລະເສີນດ້ວຍສຽງອັນມ່ວນວ່າ " ໂອ ! ເຈົ້າມະໂຫສົດ ກ່າວແກ້ບັນຫານີ້ດີເຫຼືອຫຼາຍ ໜ້າອັດສະຈັນແທ້". ລົມໃຫ້ສຽງສາທຸການ ແລະ ບູຊາ ມະໂຫສົດ ດ້ວຍດອກໄມ້ຂອງ ຫອມອັນເປັນທິບແລ້ວ ກໍອັນຕະທານຫາຍໄປ.

ຝ່າຍພະເຈົ້າ ວິເທຫະລາດ ກໍທຳການບູຊາ ມະໂຫສົດ ດ້ວຍເຂົ້າຕອກດອກໄມ້ ແລະ ຂອງຫອມຕ່າງໆ ແລ້ວກໍຖາມບັນຫາຂໍ້ ທີ

ສອງຕໍ່ໄປວ່າ " ດູກ່ອນ " ມະໂຫສົດ ບຸກຄົນອີກຈຳພວກໜຶ່ງປ້ອຍ
ດ່າ ວ່າຮ້າຍຕາມປະສົງຂອງຕົນ ຫາກແຕ່ວ່າ ດ່າແຕ່ປາກໃຈບໍ່ ໄດ້
ປາຖະໜາໃຫ້ເປັນໄປຕາມທີ່ປາກວ່ານັ້ນ ຄົນປ້ອຍດ່າວ່າຮ້າຍ ແລ້ວ
ກໍກັບມີຄວາມອຶດູກູນາຂຶ້ນຫລາຍກວ່າເກົ່າ ຂໍ້ນີ້ຈະໄດ້ແກ່ບຸກຄົນ ຈຳ
ພວກໃດ?"

ມະໂຫສົດ ທູນຕອບວ່າ: " ໂດຍທານໂທດ ! ທຸກຄົນຈຳພວກ
ທີ່ວ່ານີ້ ໄດ້ແກ່ ມານດາ ປ້ອຍດ່າບຸດຂອງຕົນ ແລ້ວກໍກັບຮັກແພງບຸດ
ນັ້ນຂຶ້ນຫລາຍກວ່າເກົ່ານັ້ນເອງ ຄືຕາມທຳມະດາເດັກນ້ອຍ ອາຍຸໄດ້
ເຈັດປີ ແປດປີ ພໍໃຊ້ວຽກໄດ້ເລັກໆນ້ອຍໆແລ້ວ ແຕ່ຄັນແມ່ໃຊ້ລູກ ກໍ
ມັກແລ່ນໜີ ໄປຫລິ້ນເສຍ ແມ່ກໍມີຄວາມຄຽດ ໃນການທີ່ໃຊ້ລູກບໍ່ໄດ້
ຈຶ່ງປ້ອຍດ່າເອົາຕາມໃຈ ຄັນເຊົາຄຽດແລ້ວກໍກັບມີຄວາມຮັກລູກ ຢູ່
ຕາມເດີມ ຫລືລາງເທື່ອກໍຮັກຫລາຍຂຶ້ນກວ່າເກົ່າຊ້ຳອີກ ບຸກຄົນ ຈຳ
ພວກທີ່ສອງ ເຊິ່ງປ້ອຍດ່າຕາມໃຈແລ້ວ ຍິ່ງກັບຮັກຫລາຍກວ່າ ເກົ່າ
ນັ້ນ ແມ່ນແມ່ດ່າລູກ ນີ້ເອງ "

ເມື່ອມະໂຫສົດຖະແຫລງບັນຫາຂໍ້ທີ່ສອງນີ້ສຸດລົງ ເທພະດາ ທີ່
ສິງສະຖິດຢູ່ໃນສະເວຕະສັດ ກໍກ່າວສັນລະເສີນພະເຈົ້າວິເທຫະລາດ
ກໍຊົງພະໂສມະນັດ ທຳການສັກກາລະ ບູຊາ ມະໂຫສົດ ດ້ວຍ ຂອງ
ຫອມຕ່າງໆ ດັ່ງດຽວກັນກັບເທື່ອກ່ອນ ແລ້ວຈຶ່ງຕັດຖາມບັນຫາຂໍ້ ທີ່

ສາມຕໍ່ໄປວ່າ.

" ດູກ່ອນ ມະໂຫສົດ ບຸກຄົນ ຈຳພວກໜຶ່ງເວົ້າຕູ້ກັນຫາຄວາມບໍ່ຈິງໃສ່ກັນ ແລ້ວກໍຍິ່ງຮັກແພງກັນ ຄົນຈຳພວກນີ້ຈະໄດ້ແກ່ຄົນ ຈຳພວກໃດ ?"

ມະໂຫສົດ ຖະແຫລງວ່າ " ບຸກຄົນຈຳພວກທີ່ກ່າວນີ້ໄດ້ແກ່ ບຸກຄົນຜູ້ເປັນສາມີ ພະລິຍາ ກັນເມື່ອກ່າວວ່າ " ເຈົ້າບໍ່ຮັກຂ້ອຍດອກ! ດຽວນີ້ໃຈຂອງເຈົ້າ ໄປຢູ່ນຳຜູ້ນັ້ນໆ " ດັ່ງນີ້ເປັນຕົ້ນ ແຕ່ຄັນ ແລ້ວກໍ ເກີດຄວາມສະເໜຫາ ຮັກແພງກັນຍິ່ງຂຶ້ນກວ່າແຕ່ກ່ອນ ຕາມປະເພນີຂອງໂລກ. ນີ້ແຫລະຂ້ານ້ອຍ ຄົນຈຳພວກທີ່ກ່າວຕູ້ກັນ ດ້ວຍຄວາມບໍ່ຈິງ ແຕ່ກັບຮັກແພງກັນນັ້ນ ແມ່ນຄູ່ຜົວເມຍນັ້ນເອງ ".

ສົມເດັດ ພະເຈົ້າ ວິເທຫະລາດ ໄດ້ຊົງຟັງກໍມີພະໄທໂສມະນັດຕັດສິນລະເສີນມະໂຫສົດແລ້ວກໍຕັດຖາມບັນຫາຂໍ້ທີ່ສີ່ຕໍ່ໄປວ່າ "ດູກ່ອນມະໂຫສົດບຸກຄົນຈຳພວກໜຶ່ງ ຂົນເອົາແຜ່ນແພເສື່ອສາດອາດ ສະໜາເຂົ້າປາອາຫານ ຂອງຄົນອື່ນໄປແຮ່ງຂົນເອົາໄປກໍແຮ່ງ ເປັນທີ່ຍິນດີ ຄົນຈຳພວກນີ້ຈະໄດ້ແກ່ຄົນຈຳພວກໃດ ?"

ມະໂຫສົດ ທູນຖະແຫລງວ່າ " ຄົນຈຳພວກດັ່ງກ່າວນີ້ໄດ້ ແກ່ພວກນັກບວດ ຄືສະມະນະ ແລະ ພາມ ມີຄວາມປະພຶດດີປະພຶດຊອບ, ທຳມະດາ ພວກນັກບວດຜູ້ມີສິນ ປະພຶດດີ ປະພຶດຊອບນີ້ ຍ່ອມອາໃສ

ຢູ່ກິນ ນຸ່ງທີ່ນນຳຊາວບ້ານ, ເມື່ອພວກຊາວບ້ານເອົາແພ່ນແພ ເສື່ອ ສາດອາດສະໜານມາໃຫ້ ກໍພາກັນຂົນເອົາໄປ ແຕ່ພວກຊາວບ້ານກໍບໍ່ ໄດ້ດຸດຈ້ຽວ ກັບມີຄວາມເຫລື້ອມໃສຍິນດີເປັນອັນມາກຕື່ມເພາະ ຄິດ ວ່າ ທ່ານຜູ້ມີສິນນຸ່ງຜ້າຂອງເຮົາ ກິນອາຫານຂອງເຮົາ ໃຊ້ສອຍສິ່ງ ທີ່ເຮົາໃຫ້ ເຮົານີ້ໄດ້ບຸນຫລາຍ ຕາຍໄປແລ້ວ ຄົງຈະໄດ້ຮັບ ຄວາມ ສຸກໃນຊາດໜ້າ ເປັນແນ່ແທ້ " ດັ່ງນີ້.

ເມື່ອມະໂຫສົດ ໄດ້ຖະແຫລງບັນຫາທັງ 4 ຂໍ້ຈົບລົງ ເທພະດາ ທັງຫລາຍ ກໍພາກັນອະນຸໂມທະນາສາທຸການ ຫວ່ານເຂົ້າຕອກ ດອກ ໄມ້ລົງມາບູຊາເປັນອັນມາກ ຝ່າຍສົມເດັດ ພະເຈົ້າວິເທຫະລາດ ກໍ ຊົງພໍພະໄທ ມີຄວາມເຫລື້ອມໃສ ໂສມນະນັດຍິນດີ ຮັກແພງໃນ ມະ ໂຫສົດ ເປັນອັນຍິ່ງ ຈຶ່ງພະລາຊະທານຕຳແໜ່ງ ແຕ່ງຕັ້ງໃຫ້ ເປັນ ເສນາບໍດີ ຕັ້ງແຕ່ວັນນັ້ນມາ.

ບັ້ນຖືກຕູ່ຫາວ່າເປັນຂະບົດຄັ້ງທີ່ 2

ໃນເວລາຕໍ່ມາ ພວກອາຈານທັງສີ່ທີ່ເປັນສັດຕູເກົ່າຂອງ ມະໂຫສົດ ເຫັນມະໂຫສົດໄດ້ຮັບຕຳແໜ່ງເປັນເສນາບໍດີ ມີຍົດຖາບັນດາສັກສູງຂຶ້ນກວ່າແຕ່ກ່ອນ ແລະ ສົມເດັດພະເຈົ້າວິເທຫະລາດ ເຈົ້າແຜ່ນດິນ ກໍຊົງໂປດປະທານເປັນອັນມາກ ກໍພາກັນຄິດອິດສາຕາມສັນດານຂອງຄົນພານ ສະນັ້ນໃນວັນໜຶ່ງ ພວກອາຈານທັງສີ່ຄົນ ຈຶ່ງໄປປະຊຸມກັນລັບໆ ທີ່ເຮືອນຂອງອາຈານເສນະກະ ຜູ້ເປັນຫົວໜ້າເມື່ອໄດ້ມາພ້ອມກັນ ແລະ ນັ່ງຮຽບຮ້ອຍແລ້ວ ພວກອາຈານທັງສີ່ຊຶ່ງມີ ສີໜ້າເຄັ່ງຕຶງປານໜ້າກອງ ຍ້ອນຄວາມອິດສາ ທີ່ສຸມຢູ່ໃນຫົວໃຈ ກໍພາກັນປາລົບຂຶ້ນວ່າ " ເຮັດແນວໃດພວກເຮົາ?" ດຽວນີ້ມະໂຫສົດລູກບ້ານນອກ ມັນກັບຍິ່ງໃຫຍ່ຂຶ້ນອີກແລ້ວ ສົມເດັດພະເຈົ້າມະຫາ ຊີວິດຂອງເຮົາ ກໍຫລົງເຊື່ອລົມລີ້ນອັນຫວານຂອງມັນຊ້ຳ ເຮັດແນວໃດພວກເຮົາຈຶ່ງຈະຍົວະເຍົ້າໃຫ້ພະເຈົ້າມະຫາຊີວິດບໍ່ໄວ້ໃຈມັນໄດ້ອີກ."

ອາຈານ ເສນະກະເລີຍເອີ່ຍປາກຂຶ້ນວ່າ " ບໍ່ຍາກດອກ! ພວກ

ທ່ານຢ່າວິຕົກເລີຍ ເລື່ອງຄວາມຍິ່ງໃຫຍ່ຂອງ ມະໂຫສົດ ເຮົາມີວິທີ
ທີ່ຈະຈະທຳລາຍໃຫ້ມັນດັບສູນລົງໄດ້ ພວກທ່ານບໍ່ຕ້ອງຄິດຍາກ"

"ວິທີການ ແນວໃດອີກ ອາຈານ ? ຂ້າເຈົ້າ ບໍ່ຢາກເຊື່ອ ທ່ານ
ສາແລ້ວ ເພາະພວກເຮົາຖືກແຖຫົວ ຈົນໂລ້ນໂຫມກໂຂກ ໄດ້ຮັບ
ຄວາມອັບອາຍຂາຍໜ້າທົ່ວເມືອງ ໃນຄາວນັ້ນກໍຍ້ອນວິທີການ ຂອງ
ອາຈານນັ້ນເອງ " ປະກຸຕະເວົ້າສອດຂຶ້ນ.

" ແມ່ນ ! ແມ່ນ ! ຂ້າເຈົ້າ ກໍຫລາບປານຕອນແນວ " ອາ
ຈານ ກາມິນ ແສມແລມນຳ ເສນະກະ ໄດ້ຍິນສອງອາຈານຄັດຄ້ານ
ກໍຄຽດຈົນໜ້າແດງ ເວົ້າຂຶ້ນໜົດແຮງວ່າ: " ຟັງກ່ອນແມ້ ! ຟັງ
ກ່ອນ ! ຢ່າຟ້າວຄ້ານ ເລື່ອງທີ່ແລ້ວມານັ້ນ ມັນເປັນຄວາມຜິດຂອງ
ເຮົາທັງໜົດທີ່ໄປຫລົງ...ຮູ້ບໍ່ ? ແຕ່ຄາວນີ້ ... ຕ້ອງສຳ ເລັດ
ຄັກງ ຂ້າເຈົ້າມີວິທີການທີ່ເໝາະສົມທີ່ສຸດ ໃນເລື່ອງທີ່ຈະໃຫ້ ພະ
ເຈົ້າຢູ່ຫົວແຕກກັບ ມະໂຫສົດ.

"ເອີ ! ຟັງອາຈານສາດທະຍາຍກ່ອນແມ໊ ! ຢ່າຟ້າວຄ້ານ "
ອາຈານ ເທວິນສະໜັບສະຫນູນ " ເຊີນອາຈານ ເສນະກະ ຂັນ
ຍາຍໃຫ້ສຸດກ່ອນ ! " ທ່ານ ເທວິນເວົ້າຕໍ່. ເສນະກະ "ເອີ !
ຈັ່ງຊັ້ນຈັ່ງແມ່ນ ! ຟັງກ່ອນຕີ້ ! ຂ້າເຈົ້າ ຈະເວົ້າໃຫ້ຟັງດຽວ ນີ້
ຄືວ່າອ້າ ! ພວກເຮົາຕ້ອງໄປຫາ ມະໂຫສົດ ສະແດງກິລິຍາ ທ່າ

ທາງຄືວ່າຮັກຫອມຢ່າງຈິງໃຈ ລອບຖາມຄວາມຄິດໃນໃຈຂອງ ມະໂຫສົດ ເບິ່ງວ່າ ຄົນຜູ້ມີຄວາມຄິດຫລັກແຫລມ ມີປັນຍາສະຫລາດສະຫລຽວ ເຊິ່ງນັບວ່າເປັນຊັ້ນ ນັກປາດແທ້ນັ້ນ ຄວນຈະບອກຄວາມລັບທີ່ຕົນຄິດໄວ້ນັ້ນໃຫ້ໃຜຮູ້ບໍ່ ຫລືບໍ່ຄວນບອກເລີຍ ຖ້າມະໂຫສົດ ບອກວ່າ " ຄວາມລັບໃນໃຈນັ້ນບໍ່ຄວນບອກໃຫ້ໃຜຮູ້ນຳເລີຍ "ດັ່ງນີ້ເຮົາກໍຈະເອົາຄວາມນີ້ແຫລະ ເປັນຫລັກສຳຄັນສຳລັບທຳລາຍມະໂຫ ສົດໃຫ້ແຕກກັບພະລາຊາ ຂ້າເຈົ້າ ເຫັນວ່າ ວິທີການນີ້ເຫມາະສົມ ດີທີ່ສຸດ ຫລືພວກທ່ານຈະເຫັນຢ່າງໃດ ?

" ເອີ ! ເຂົາທ່າດີ ເຫັນຈະໄດ້ການເປັນແນ່ " ອາຈານເຫວິນ ສະຫນັບສະຫນູນ ເມື່ອນັກປາດທັງສີ່ປຶກສາຫາລືກັນ ເຫັນດີພ້ອມກັນແລ້ວ ກໍພາກັນໄປເຮືອນມະໂຫສົດ ສະແດງກິລິຍາເຄົາລົບ ນັບຖືເປັນອັນດີ ມະໂຫສົດ ກໍທຳການຕ້ອນຮັບ ຕາມຫນ້າທີ່ຂອງເຈົ້າຂອງເຮືອນ ເມື່ອໄດ້ເຈລະຈາປາໃສຖາມສຸກ ທຸກກັນຕາມທຳນຽມ ແລ້ວເສນະກະ ອາຈານຜູ້ເປັນຫົວຫນ້າ ຈຶ່ງກ່າວປາລົບຂຶ້ນວ່າ " ຂໍໂທດເທາະ ! ທ່ານ ມະໂຫສົດ ຜູ້ມີປັນຍາ ດຽວນີ້ ພວກຂ້າເຈົ້າ ທັງສີ່ເກີດຄວາມສົນໃຈ ສົງໃສໃນບັນຫາເລື່ອງຫນຶ່ງ ເຊິ່ງໄດ້ຄິດມາເຫິງແລ້ວແຕ່ກໍຄິດບໍ່ອອກ ຈຶ່ງໄດ້ພາກັນມາຫາທ່ານ ຂໍເພິ່ງຄວາມຄິດທ່ານເພາະວ່ານອກຈາກທ່ານແລ້ວ ພວກຂ້າເຈົ້າ ກໍບໍ່ເຫັນໃຜ ມີທີ່ຈະແກ້

ບັນຫາ ຄວາມຂ້ອງຄາໃຈນີ້ໄດ້ ຫວັງວ່າທ່ານຄົງມີຄວາມກະລຸນາ."

"ບັນຫາເລື່ອງອັນໃດ ທ່ານອາຈານ ?" ມະໂຫສົດຖາມຄືນ " ຖ້າເປັນເລື່ອງບໍ່ເຫລືອປັນຍາຂອງຂ້າເຈົ້າ ແລ້ວຂ້າເຈົ້າ ກໍຈະຊ່ວຍແກ້ໄຂໃຫ້ "

ເສນະກະ " ເອີ ! ນີ້ທ່ານມະໂຫສົດ ຂ້າເຈົ້າ ຄິດວ່າຂໍ້ຂ້ອງໃຈຂອງພວກຂ້າເຈົ້ານີ້ ຄົງບໍ່ເຫລືອປັນຍາຂອງທ່ານໄປໄດ້ ຄື ວ່າພວກຂ້າເຈົ້າ ສົງໃສມາດົນແລ້ວວ່າ ທຳມະດາລູກຜູ້ຊາຍທີ່ເກີດ ມາໃນໂລກນີ້ ຄວນຈະດຳເນີນວິຖີທາງແຫ່ງຊີວິດໄປໃນທຳນອງໃດ ຈຶ່ງຈະເປັນການຖືກຕ້ອງ ແລະ ເຫມາະສົມດີ ຄື ຈະຕັ້ງຫລັກການ ດຳເນີນຊີວິດໄປໃນທາງໃດ ຈຶ່ງຈະສົມຊື່ວ່າ ເປັນລູກຜູ້ຊາຍແລະ ເປັນນັກປາດແທ້ ດັ່ງຢ່າງທ່ານເອງນີ້ແຫລະ ທຸກວັນນີ້ ໃຜໆກໍຍ້ອງຍໍ ສັນລະເສີນວ່າທ່ານເປັນນັກປາດແທ້ ຂໍທ່ານໄດ້ກະລຸນາ ອະທິບາຍ ໃຫ້ພວກຂ້າເຈົ້າ ຟັງຈັກຫນ່ອຍແດ່ ?"

ມະໂຫສົດ " ເອີ ອັນນີ້ເປັນເລື່ອງສຳຄັນຢູ່ບໍ່ຫນ້ອຍເລີຍ ທ່ານອາຈານ " ມະໂຫສົດເວົ້າດ້ວຍຄວາມຈິງໃຈ "ໃນເລື່ອງການ ດຳເນີນຊີວິດ ຫລືຫລັກແຫ່ງການດຳລົງຊີບ ຂອງລູກຜູ້ຊາຍນີ້ ຂ້າ ເຈົ້າເຫັນວ່າ ໃນຂັ້ນຕົ້ນຕ້ອງຕັ້ງຄວາມສັດຈະໄວ້ໃຫ້ເປັນຫລັກ ຄືວ່າເຮົາຈະດຳເນີນຊີວິດໄປໃນທາງໃດ ກໍຕັ້ງຄວາມສັດຈະໄວ້ໃນທາງນັ້ນວ່າ

ຈະຕ້ອງເຮັດໃຫ້ສຳເລັດ ໝາຍຄວາມວ່າ ໃຫ້ມີຄວາມຈິງໃຈ ໃນທາງນັ້ນ"

" ເອີ ! ເມື່ອຕັ້ງຄວາມສັດຈະໄວ້ແລ້ວ ຄວນຈະເຮັດຈັ່ງໃດຕໍ່ໄປ ?" ເສນະກະຖາມ" ເມື່ອຕັ້ງຄວາມສັດຈະໄວ້ແລ້ວ ຕໍ່ໄປ ກໍຕ້ອງໃຫ້ມີຄວາມໝັ່ນຂະຫຍັນ ຂັນແຂງ ໃນການຊອກສະແຫວງຫາຊັບສິນບັດໄວ້ໃຫ້ພຽງພໍໃນການດຳລົງຊີວິດ " ມະໂຫສົດບອກ. " ເມື່ອໄດ້ຊັບສົມບັດພໍໃຊ້ສອຍ ສຳຫລັບການດຳລົງຊີບ ຄວນຈະ ເຮັດແນວໃດຕໍ່ໄປ ?" ເສນະກະຖາມອີກ. " ເມື່ອມີເງິນຄຳເຂົ້າຂອງພຽງພໍສຳຫລັບການດຳລົງຊີບແລ້ວ ຂັ້ນຕໍ່ໄປກໍຕ້ອງຊອກຫາຄົນມິດສະຫາຍໃຫ້ມີ ເພື່ອນຝູງໄວ້ຫລາຍໆ. " ມະໂຫສົດບອກ. "ເມື່ອ ຄົນມິດສະຫາຍ ມີເພື່ອນຝູງຫລາຍແລ້ວ ຂັ້ນຕໍ່ໄປຄວນຈະເຮັດຢ່າງໃດອີກ?" ເສນະກະຖາມຕໍ່ "

" ບາດນີ້ເຮົາກໍຕ້ອງຄອຍຖ້າຟັງຄວາມຄິດຄວາມເຫັນຂອງ ມິດສະຫາຍວ່າ ຜູ້ໃດຄິດຢ່າງໃດ ຜູ້ໃດເຫັນແນວໃດ ແລ້ວເຮົາກໍຈື່ ຈຳເອົາໄວ້ ເປັນແນວທາງພິຈາລະນາຂອງເຮົາ " ມະໂຫສົດບອກ.

" ເອີ ເມື່ອຟັງຄວາມຄິດເຫັນຂອງເພື່ອນ ແລະ ຈື່ຈຳໄວ້ ໄດ້ແລ້ວ ເຮົາຈະເຮັດແນວໃດ ຕໍ່ໄປລະ ? ເສນະກະຖາມອີກ.

" ເອີ ! ຖ້າເຮົາໄດ້ຟັງຄວາມຄິດ ຮູ້ຄວາມຄິດຂອງໝູ່ ແລ້ວ

ເຮົາກໍຕ້ອງຈຳຄວາມຄິດນັ້ນໄວ້ໃນໃຈ ເປັນຄວາມລັບ ເຖິງແມ່ນ ຄວາມຄິດຄວາມເຫັນຂອງເຮົາເອງກໍຕ້ອງຈຳໄວ້ ບໍ່ເປີດເຜີຍໃຫ້ໃຜ ຮູ້ ນີ້ແຫລະແນວທາງ ການດຳເນີນຊີວິດຂອງນັກ ປາດ ຂໍພວກທ່ານ ຈົ່ງຈື່ໄວ້ " ມະໂຫສົດວ່າ.

" ຂໍຂອບພະຄຸນ ເປັນຢ່າງສູງ ທ່ານມະໂຫສົດ ຂໍ້ຄວາມທີ່ທ່ານ ອະທິບາຍມານີ້ ປະເສີດແທ້ ພວກຂ້າເຈົ້າ ຈື່ຈຳເອົາໄວ້ ແລະ ນຳ ໄປປະຕິບັດໃນການດຳເນີນຊີວິດຕໍ່ໄປ " ວ່າແລ້ວ ພວກອາຈານທັງ ສີ່ກໍພາກັນລາ ມະໂຫສົດກັບເມືອ ຕ່າງຄົນຕ່າງກໍຄິດໃນໃຈວ່າ "ບາດ ນີ້ລະ ! ມະໂຫສົດ ຕ້ອງຖືກລົງພະລາຊະອາດຍາ ຫລືຢ່າງ ໜ້ອຍ ກໍຕ້ອງຖືກເນລະເທດໜີອອກຈາກພະນະຄອນຄັກແນ່.

ໃນວັນນັ້ນເອງ ເມື່ອຊຸມອາຈານທັງສີ່ກັບຈາກເຮືອນມະໂຫ ສົດ ແລ້ວ ກໍພາກັນເຂົ້າໄປເຝົ້າ ພະລາຊາ ທູນສັບສໍ່ຫາເລື່ອງໃສ່ ມະ ໂຫສົດວ່າ:

" ຂໍພະລາຊະທານ ອະໄພຍະໂທດ ພະລາຊະອາດຍາບໍ່ ພົ້ນ ເກົ້າ ພວກຂ້າພະບາດທັງສີ່ຄົນ ໄດ້ໄປສົນທະນາປາໃສນຳ ມະ ໂຫ ສົດແລ້ວ ເຫັນວ່າ ມະໂຫສົດນີ້ ເປັນຄົນມີລັບລົມຄົມໃນ ນ້ຳໃຈຂອງ ເຂົາທີ່ແທ້ຈິງແລ້ວ ບໍ່ໄດ້ຊື່ສັດ ສຸຈະລິດຕໍ່ພະອົງເລີຍ ຟັງຄວາມເວົ້າ ຂອງເຂົາແລ້ວ ເຫັນວ່າເຂົາຄົງມີຄວາມຄິດທີ່ບໍ່ເປັນມຸງຄຸນຕໍ່ ພະອົງ

ສາແລ້ວ.

" ເຮົາພະອົງບໍ່ເຊື່ອເລີຍວ່າ ມະໂຫສົດ ຈະມີຄວາມຄິດ ເປັນກະບົດຕໍ່ເຮົາ ພວກທ່ານໄປເອົາຄວາມໃດມາເວົ້າ " ພະລາຊາຕັດ " ຂໍພະລາຊະທານອະໄພຍະໂທດ ! " ຂ້າບໍ່ເຊື່ອຈັ່ງໃດ ຂ້ານ້ອຍ! ມະໂຫສົດ ເອງໄດ້ບອກພວກຂ້ານ້ອຍວ່າ " ຄວາມລັບທີ່ຄິດໄວ້ ໃນໃຈ ບໍ່ຄວນບອກໃຫ້ຜູ້ໃດຮູ້ນຳເລີຍ " ດັ່ງນີ້ ຖ້າບໍ່ເຊື່ອພວກຂ້ານ້ອຍແລ້ວ ມື້ອື່ນເຊົ້າເມື່ອ ມະໂຫສົດເຂົ້າມາເຝົ້າ ຂໍເຊີນພະອົງ ຖາມເອົາລອງເບິ່ງວ່າ ຄວາມລັບນັ້ນຄວນຈະບອກໃຫ້ຜູ້ໃດຮູ້ນຳໃຫ້ພະອົງຖາມເບິ່ງ ຖ້າມະໂຫສົດບອກວ່າ "" ຄວາມລັບນີ້ ບໍ່ຕ້ອງບອກ ຜູ້ໃດເລີຍດັ່ງນີ້ ກໍຂໍໃຫ້ພະອົງເຊື່ອໂລດວ່າ ມະໂຫສົດຕ້ອງຄິດ ກະບົດແນ່ໆ "

ເມື່ອ ອາຈານທັງສີ່ ທູນບັກບົ່ນໃສ່ຄວາມ ມະໂຫສົດດັ່ງນີ້ ສົມເດັດພະເຈົ້າວິເທຫະລາດ ກໍຊົງອັດອັ້ນພະໄທປາກບໍ່ອອກເພາະຕາມປົກກະຕິພະເຈົ້າ ວິເທຫະລາດ ນັ້ນເປັນຄົນມືນໃສ ເຊື່ອງ່າຍນ້ຳພະໄທບໍ່ໜັກແໜ້ນດັ່ງທີ່ ມະໂຫສົດເຄີຍໄດ້ທູນຕໍ່ວ່າ ມາແລ້ວ ສະນັ້ນເມື່ອພະອົງຊົງອົ້ງຕົງຢູ່ເຫິງເຕີບແລ້ວ ຈຶ່ງມີພະວາຈາຕັດວ່າ:

" ເອີ ເຮົາຈະລອງເບິ່ງ " ຕັດທີ່ນີ້ແລ້ວກໍສະເດັດລຸກຈາກ ທີ່ປະທັບໄປ ພວກອາຈານທັງສີ່ ກໍພາກັນກັບເມືອເຮືອນ.

ເຖິງເວລາວັນຣຸ່ງເຊົ້າມາ ເມື່ອພວກນັກປາດທັງຫ້າຄົນ ໂຣມທັງມະໂຫສົດນຳເຂົ້າ ໄປເຝົ້າກາບຖວາຍບັງຄົມພ້ອມກັນແລ້ວສົມເດັດພະເຈົ້າ ວິເທຫະລາດ ຈຶ່ງມີພະວາຈາຕັດຖາມພວກນັກປາດທັງ ຫ້ານັ້ນວ່າ " ເອີ ! ນີ້ ທ່ານທັງຫລາຍ ທີ່ເປັນນັກປາດຂອງເຮົາ ວັນນີ້ທ່ານໄດ້ມາປະຊຸມພ້ອມໜ້າພຽງຕາກັນກໍດີແລ້ວ ບັດນີ້ເຮົາມີບັນຫາຂໍ້ໜຶ່ງຊຶ່ງເຮົາຄິດພິຈາລະນາເຫັນແຈ້ງໃນໃຈຂອງເຮົາແລ້ວ ແຕ່ວ່າພວກທ່ານທັງຫ້າຄົນ ຈະຄິດ ມີຄວາມເຫັນຄືເຮົາຫລືບໍ່ ເຮົາຈຶ່ງ ຂໍຖາມພວກທ່ານ ແຕ່ລະຄົນ ຄືວ່າ ຄວາມຕິຕຽນນິນທາກໍດີຄວາມຍ້ອງຍໍສັນລະເສີນໃດໆ ກໍດີທີ່ເປັນຄວາມລັບ ອັນຄວນຈະເຊື່ອງຊ້ອນ ອຳບັງໄວ້ບໍ່ໃຫ້ຜູ້ອື່ນຮູ້ນຳ ຫລືຄວາມອຸກອັ່ງຄັ່ງແຄ້ນ ແລະ ຄວາມຄິດໄວ້ໃນໃຈ ອັນໃດກໍດີ ຖ້າເຖິງຄາວຈຳເປັນແລ້ວ ເຮົາຄວນຈະ ບອກຄວາມລັບຄັບໃຈ ແລະ ຄວາມຄິດໃນໃຈຂອງເຮົານັ້ນໃຫ້ຜູ້ໃດຮູ້ ນຳຈຶ່ງຈະເປັນການສົມຄວນ ຂໍໃຫ້ພວກທ່ານແຕ່ລະຄົນເວົ້າໃຫ້ເຮົາ ຟັງຕາມທີ່ຕົນເຫັນວ່າ ຄວນຈະບອກແກ່ຜູ້ໃດ ?"

ຂະນະນັ້ນອາຈານ ເສນະກະ ມີຄວາມປະສົງຈະຈູງໃຈ ພະລາຊາໃຫ້ໂນ້ມອຽງເຂົ້າມາທາຝ່າຍຕົນ ຈຶ່ງຂາບທູນຂຶ້ນວ່າ "ໂດຍທານໂທດ ທານຊີວິດ ພະລາຊະອາດຍາບໍ່ພົ້ນເກົ້າ ພະດຳລັດທີ່ຕັດ ຖາມນີ້ ຖືກຕ້ອງເຫມາະສົມດີທີ່ສຸດ ແຕ່ວ່າອົງພະບາດເປັນເຈົ້າເປັນຈອມ

ມີວກູດ ປະຖະພີ ມີພະເດຊານຸພາບປົກແຜ່ໄປທົ່ວປະເທດເຂດ ແດນ ຈົນບິດ ເປັນທີ່ເພິ່ງ ພາອາໃສແຫ່ງໄພ້ຟ້າຂ້າແຜ່ນດິນໃຫ້ຢູ່ເຢັນເປັນ ສຸກທົ່ວຫນ້າ ສະນັ້ນ ຂໍ້ບັນຫາທີ່ພະອົງຕັດຖາມນີ້ ຂໍເຊີນພະບາດເປັນ ເຈົ້າອົງເປັນຈອມປະຊາ ຕັດສະແດງໃຫ້ພວກຂ້າພະບາດຊາບ ກ່ອນ ຕາມທີ່ພະອົງໄດ້ ພິຈາລະນາເຫັນໃນພະໄທຂອງພະອົງແລ້ວວ່າພະ ອົງເຫັນຄວນບອກໃຫ້ຜູ້ໃດຊາບ ເມື່ອພະອົງຕັດບອກຄວາມເຫັນ ໃນ ພະໄທຂອງພະອົງແລ້ວ ພວກຂ້າພະບາດ ຈະຂໍທູນບອກຄວາມ ເຫັນ ໃນໃຈຂອງຕົນໆຄືກັນ "

ອາຈານ ເສນະກະ ທູນຈັກຈູງ ພະລາຊາໃຫ້ບອກກ່ອນດັ່ງນີ້ ກໍ ເພື່ອຫວັງວ່າທຸກໆຄົນກໍຕ້ອງບອກວ່າຄວາມລັບຂອງຕົນ ຄວນນະບອກ ໃຫ້ຜູ້ນັ້ນຮູ້ ແລະ ຖ້າມະໂຫສົດບໍ່ວ່າຄືຫມູ່ ກໍຈະກັບເອົາຄວາມ ນັ້ນ ເປັນຂໍ້ກ່າວຫາວ່າ ມະໂຫສົດ ເປັນກະບົດ ເພາະບໍ່ເພີຍຄວາມ ລັບ ຂອງຕົນ ສະນັ້ນເມື່ອເສນະກະທູນກຽວຄົນໃສ່ໃຫ້ພະລາຊາບອກກ່ອນ ດັ່ງນັ້ນ ສີນເດັດພະເຈົ້າ ວິເທຫະລາດຫລົງກົນຂອງ ເສນະກະ ຈຶ່ງ ຕັດບອກວ່າ:

" ເອີ ນີ້ທ່ານທັງຫລາຍ ບັນຫາຂໍ້ນີ້ ເຮົາເອງໄດ້ພິຈາລະ ນາ ເບິ່ງແລ້ວເຫັນວ່າ ພະລິຍາທີ່ດີ ມີຄວາມປະພຶດຮຽບຮ້ອຍ ຊື່ສັດຕໍ່ສາ ມີຂອງຕົນ ບໍ່ນອກໃຈຜົວ ມີຄວາມຮັກຜົວເຮັດຕາມໃຈຜົວໄດ້ທຸກ ປະ

ການ ເມຍທີ່ດີດັ່ງກ່າວນີ້ຄວນຈະໄວ້ໃຈໄດ້ຄວນຈະບອກຄວາມ ລັບ ໃຫ້ຮູ້ນຳດ້ວຍນອກຈາກເມຍທີ່ດີແລ້ວ ເຮົາບໍ່ເຫັນໃຜເລີຍ ສ່ວນທ່ານ ເດ ? ເຫັນວ່າຄວນຈະບອກໃຫ້ໃຜຮູ້ນຳ ?" ພະລາຊາຕັດຖາມ.

ເສນະກະຈິ່ງທູນວ່າ " ໂດຍທານໂທດ ຂ້າພະບາດນີ້ເຫັນ ວ່າ ຜູ້ໃດເປັນມິດສະຫາຍທີ່ຮັກແພງ ໄປມາຫາສູ່ໄດ້ເພິ່ງພາອາໃສໄດ້ເວ ລາມີເຫດຮ້າຍແຮງເກີດຂຶ້ນ ຫລືຕົກທຸກໄດ້ຍາກແນວໃດໆ ກໍເພິ່ງໄດ້ ມິດສະຫາຍທີ່ດີດັ່ງກ່າວນີ້ ຂ້າພະບາດເຫັນວ່າ ຄວນບອກຄວາມ ລັບ ໃຫ້ເຂົາຮູ້ນຳໄດ້ ແລະ ຄວນໄວ້ວາງໃຈໄດ້"

" ທ່ານ ປະກຸຕະ ເດ້ ?- ພະລາຊາຕັດ-ທ່ານເຫັນວ່າ ຄວນ ບອກແກ່ໃຜ ?"

ປະກຸຕະກາບທູນວ່າ " ໂດຍທານໂທດ ຂ້າພະບາດເຫັນວ່າ ພີ່ ຊາຍຫລືນ້ອງຊາຍ ຜູ້ມີຄວາມປະພຶດດີມີໃຈໜັກແໜ້ນ ເຮົາຄວນຈະ ໄວ້ເນື້ອເຊື່ອໃຈໄດ້ ຂໍພະລາຊະທານ "

ພະລາຊາຕັດຖາມທ່ານ ກາມິນວ່າ "ເຮີຍ ! ທ່ານກາມິນທ່ານ ເຫັນວ່າແນວໃດ ຄວາມລັບຄວນບອກແກ່ໃຜ?"

" ໂດຍທານໂທດ ! ລູກຊາຍຄົນໃດເປັນຄົນສະຫລາດສະຫຼຽວ ມີປັນຍາ ປະຕິບັດຕາມໃຈພໍ່ ເຮັດໃຫ້ຖືກໃຈພໍ່ ຟັງຄວາມພໍ່ ລູກຊາຍ ທີ່ດີດັ່ງກ່າວນີ້ ຄວນບອກຄວາມລັບໄດ້ "

ທ່ານເຫວີນ ! ທ່ານເຫັນວ່າ ຄວນບອກຄວາມລັບແກ່ໃຜ ?" ພະລາຊາຕັດຖາມ ຄືນຕໍ່ມາ. " ໂດຍທານໂທດ ! ຂ້າພະ ບາດ ເຫັນວ່າແມ່ຜູ້ບັງເກີດເກົ້າ ເປັນຄົນຮັກລູກປານຊີວິດຈິດໃຈ ໄດ້ລ້ຽງ ເກືອເຝືອມ່ານລູກມາ ເປັນຜູ້ຫວັງຢາກໃຫ້ລູກໄດ້ຮັບແຕ່ຄວາມ ດີ ຄວາມສຸກທຸກເວລາ ສະນັ້ນຄວາມລັບອັນໃດໆ ຈຶ່ງຄວນບອກໃຫ້ແມ່ຜູ້ ບັງເກີດເກົ້າຮູ້ນຳ ນອກຈາກແມ່ແລ້ວ ບໍ່ຄວນໄວ້ໃຈໃຜເລີຍ" ທ່ານ ເຫວີນ ທູນບອກ.

ເມື່ອອາຈານທັງສີ່ ທູນຂໍ້ຄວາມເລື່ອງການທີ່ຄວນໄຂຄວາມ ລັບ ໃຫ້ຜູ້ນັ້ນ ຜູ້ນີ້ຮູ້ນຳສຸດລົງແລ້ວ ສົມເດັດພະເຈົ້າ ວິເທຫະລາດຈຶ່ງປິ່ນ ພະພັກມາທາງ ມະໂຫສົດ ແລະ ຕັດຖາມວ່າ " ເອີ ! ນີ້ທ່ານມະ ໂຫສົດ ທ່ານໄດ້ຍິນແລ້ວແມ່ນບໍ່ ວ່າຄວາມລັບນັ້ນຄວນເວົ້າໃຫ້ຜູ້ນັ້ນໆ ຟັງ ຕາມທີ່ພວກເຮົາທັງຫາຄົນໄດ້ເວົ້າມາແລ້ວ ສ່ວນທ່ານເດ? ເຫັນ ວ່າຈັ່ງໃດ ຄວາມລັບນັ້ນ ຄວນບອກໃຫ້ໃຜຮູ້ນຳບໍ່ ?" ມະໂຫ ສົດ ກາບທູນວ່າ " ຂໍພະລາຊະທານ ພະລາຊະອາດຍາ ຂ້ນຊື່ວ່າຄວາມ ລັບແລ້ວ ຕ້ອງປົກງຳອຳບັງໄວ້ໃຫ້ມິດທີ່ສຸດ ບໍ່ຄວນຈະເປີດເຜີຍ ໃຫ້ ຟ້ງຟືວເລີຍ ບໍ່ຄວນບອກແກ່ບຸກຄົນໃດ ບຸກຄົນໜຶ່ງເລີຍ ຖ້າເປີດ ເຜີຍ ຫລືຟ້ງຟືວແລ້ວ ກໍບໍ່ແມ່ນຄວາມລັບ ການທີ່ປົກປິດຄວາມລັບໄວ້ ໄດ້ນີ້ ມີຄຸນປະໂຫຍດເປັນອັນມາກ ການເປີດເຜີຍຄວາມລັບນັ້ນ ບໍ່

ເປັນການດີເລີຍ ທຳມະດາ ຄົນຜູ້ມີປັນຍາ ມີຄວາມຄິດ ເມື່ອຍັງ ບໍ່ທັນໄດ້ເຮັດໃຫ້ສຳເລັດຕາມທີ່ຕົນຄິດໄວ້ ກໍຕ້ອງຮັກສາຄວາມລັບ ນັ້ນໄວ້ ບໍ່ໃຫ້ຟັ້ງເຟື່ອ ເມື່ອໄດ້ເຮັດສຳເລັດຕາມປະສົງແລ້ວ ຈຶ່ງຈະ ໄຂຄວາມລັບນັ້ນໄດ້ ອໍທານໂທດ ຄົນຜູ້ເປັນນັກປາດຕົວຢ່າງຂ້າເຈົ້າ ນີ້ບໍ່ໄຂຄວາມລັບໃຫ້ຜູ້ໃດຮູ້ນຳເລີຍ ເປັນເດັດຂາດ"

ເມື່ອ ມະໂຫສົດກາບທູນດັ່ງນີ້ ພະເຈົ້າວິເທຫະລາດ ກໍຊົງເສຍພະໄທປັກໃຈເຊື່ອວ່າ ມະໂຫສົດ ເປັນກະບົດຈິງ ຈຶ່ງເສືອດພະເນດຫລຽວເບິ່ງ ເສນະກະ ເສນະກະ ກໍເຫລືອດຕາໃສ່ພະເຈົ້າວິເທຫະລາດ ຕ່າງຄົນ ຕ່າງກໍເຂົ້າໃຈກັນ ມະໂຫສົດໄດ້ເຫັນກິລິຍາ ຂອງພະເຈົ້າ ວິເທຫະລາດ ແລະ ອາຈານເສນະກະດັ່ງນັ້ນ ກໍເຂົ້າ ໃຈໄດ້ ທັນທີວ່າ ພວກນີ້ຄົງຍົວະເຂົ້າສັບສໍ່ພະກະສັດໃຫ້ເຂົ້າພະໄທ ຜິດໃນຕົວເຮົາເປັນແນ່ ຄົງຈະຫາວ່າເຮົາເປັນກະບົດ ຈະຊິງເອົາ ລາຊະສົມບັດເປັນແນ່ ຂໍ້ຄວາມເປັນບັນຫາທີ່ພະກະສັດ ຕັດຖາມໃນທີ່ປະຊຸມຄຽວນີ້ ເປັນການທົດລອງຢັ່ງເບິ່ງຄວາມຄິດຂອງເຮົາແນ່ນອນໃນຂະນະທີ່ ມະໂຫສົດພວມນັ່ງຄິດຢູ່ນັ້ນ ກໍເປັນເວລາຄ່ຳມືດລົງພໍດີພວກເຈົ້າພະນັກງານພວມສາລະວົນໄຕ້ປະທີບ ໂຄມໄຟກັນຢູ່ ມະໂຫ ສົດຄິດວ່າ ໃນເວລານີ້ເຮົາຈະປະໝາດບໍ່ໄດ້ ແລະ ຍິ່ງເປັນສະ ຖານສຳນັກຂອງ ພະລາຊາເຊັ່ນນີ້ກໍຍິ່ງສຳຄັນ ເພາະບໍ່ຮູ້ວ່າໃຜເປັນ ໃຜ

ຕົວພະກະສັດເອງ ກໍມີພະໄທສົງໃສໃນຕົວເຮົາຢູ່ແລ້ວ ຈຳເປັນເຮົາຕ້ອງຟ້າວອອກຫນີໄປກ່ອນ ຄິດແລ້ວ ມະໂຫສົດ ກໍຖວາຍບັງຄົມ ລາພະກະສັດອອກໄປ ສ່ວນພວກອາຈານທັງສີ່ ຍັງຄົງເຝົ້າພະລາຊາ ຢູ່ ມະໂຫສົດອອກຈາກພະລາຊະວັງແລ້ວ ກໍຄິດໄດ້ວ່າ " ເອີ ! ທີ່ພວກອາຈານທັງສີ່ ຄົນທູນພະລາຊາວ່າ ຄວາມລັບຄວນເວົ້າໃຫ້ຜູ້ນັ້ນ ຜູ້ນີ້ຟັງນັ້ນ ເຫັນທ່າວ່າພວກເຂົາຄົງໄດ້ເຮັດມາດ້ວຍໂຕເອງແລ້ວ ແລະການທີ່ພະລາຊາສົງໃສເຮົາ ກໍຕ້ອງແມ່ນພວກນີ້ສັບສໍ່ເປັນແນ່ ເອົາເທາະ ! ເຮົາຕ້ອງລອບຟັງເອົາຄວາມລັບຈາກພວກນີ້ໃຫ້ຈົນໄດ້ " ພໍຄິດຕາກໍເຫລືອດໄປເຫັນ ກະໂຫລ່ງໄມ້ສຳຫລັບໃສ່ເຂົ້າເປືອກ ຕັ້ງຢູ່ຂ້າງພັກຕູພະລາຊະວັງ ຕາມປົກຕິ ພວກອາຈານ ສີ່ຄົນນັ້ນ ເມື່ອເລີກຈາກການເຝົ້າພະລາຊາແລ້ວ ກໍມານັ່ງລົມກັນຢູ່ເທິງຫລັງ ກະໂຫລ່ງຫນ່ວຍນີ້ສະເຫມີ ກ່ອນຈະກັບຄືນເມືອເຮືອນຂອງໃຜລາວ ມະໂຫສົດເຫັນໄດ້ການຈຶ່ງບອກຄົນສະນິດ ຜູ້ຄອຍຕິດຕາມຕົນໃຫ້ ຍົກກະໂຫລ່ງນັ້ນຂຶ້ນ ເອົາຜ້າເຂົ້າໄປປູແລ້ວກໍເຂົ້າໄປນອນຢູ່ໃນກະ ໂຫລ່ງນັ້ນ ພ້ອມກັບສັ່ງຄົນຜູ້ຄອຍອາລັກຂາ ໃຫ້ຈອບຄອຍລະວັງເຫດ ການຢູ່ໃກ້ໆນັ້ນ ແລະ ເມື່ອອາຈານທັງສີ່ ລຸກຫນີໄປແລ້ວ ຈຶ່ງໃຫ້ມາ ຮັບເອົາຕົນອອກໄປ.

ຝ່າຍ ອາຈານເສນະກະ ກັບພັກພວກ ເມື່ອເຫັນມະໂຫສົດ ລຸກ

ຫນີໄປແລ້ວ ຈຶ່ງກາບທູນເຫນັບພະລາຊາເຂົ້າອີກວ່າ " ໂດຍ ທານ ໂທດ ພະອົງເຫັນແລ້ວຫລືຍັງ ! ແຕ່ກ່ອນພະອົງບໍ່ເຊື່ອພວກຂ້າ ພະບາດວ່າ ມະໂຫສົດເປັນກະບົດ ດຽວນີ້ພະອົງເຫັນແລ້ວຫລືຍັງ ຈະເຊື່ອພວກຂ້າພະບາດຫລືບໍ່ເຊື່ອ ກໍຂໍໃຫ້ຊົງພະດໍາລິເອົາເອງ " ພະເຈົ້າ ວິເທຫະລາດ ໄດ້ຟັງຄໍາກາບທູນອັນຫນັກແຫນ້ນຂອງເສນະກະ ແລະ ໄດ້ເຫັນກິລິຍາຂອງ ມະໂຫສົດ ທີ່ຟ້າວລາຫນີໄປກ່ອນ ກໍຍິ່ງຕົກພະໄທສະທ້ານຢ້ານກົວວ່າ ມະໂຫສົດ ຈະຍາດຊິງເອົາລາຊະສົມບັດເຂົ້າພະໄທວ່າ ມະໂຫສົດ ຄິດກະບົດຕໍ່ຕົນແທ້ ຈຶ່ງຕັດປຶກສາ ນໍາເສນະກະດ້ວຍພະໄທອັນຫວາດຫວັ່ນວ່າ " ເອີ ! ເມື່ອເຫດ ການມັນເປັນດັ່ງນີ້ແລ້ວ ເຮົາຈະຄິດອ່ານແນວໃດດີ ? ທ່ານອາຈານ "

ເສນະກະເຫັນໄດ້ທ່າ ຟ້າວທູນວ່າ: " ເລື່ອງຄໍຂາດບາດຕາຍໃຫຍ່ຫລວງເຊັ່ນນີ້ ຈະປະໄວ້ບໍ່ໄດ້ ເປັນອັນຂາດ ພະອົງຕ້ອງຫາທາງກໍາຈັດ ປາບປາມໃຫ້ເດັດຂາດເສຍ ໂດຍໄວທີ່ສຸດ ຢ່າທັນໃຫ້ມະໂຫສົດຮູ້ຕົວ ແລະ ໃຜໆກໍບໍ່ຕ້ອງໃຫ້ຮູ້ເລື່ອງນີ້ ໃຫ້ຮູ້ແຕ່ພວກຂ້າພະບາດທັງສີ່ຜູ້ຈຶ່ງຮັກພັກດີຕໍ່ພະອົງທໍ່ນັ້ນ.

" ທ່ານ ອາຈານ ! " ພະລາຊາຕັດຢ່າງຟ້າວໆ " ເລື່ອງອັນນີ້ເຮົາພະອົງບໍ່ເຫັນໃຜແລ້ວທີ່ຈະຊ່ວຍເຫລືອເຮົາພະອົງໄດ້ ນອກຈາກພວກທ່ານ ເຫັນແຕ່ພວກທ່ານທໍ່ນີ້ແຫລະ ພໍຈະເປັນທີ່ໄວ້ວາງໃຈ

ໄດ້ ສະນັ້ນ ເຮົາພະອົງ ຂໍມອບພາລະນີ້ ໃຫ້ພວກທ່ານຈັດການຄື : ໃນມື້ອື່ນເຊົ້າໃຫ້ທ່ານເອົາຄົນຂອງທ່ານ ຜູ້ທີ່ແຂງແຮງ ແລະ ໄວ້ໃຈໄດ້ໄປດັກຢູ່ຝັກຕູ ພະລາຊະວັງ ເວລາມະໂຫສົດ ເຂົ້າມາພະລາຊະວັງ ທ່ານຈຶ່ງເອົາພະຂັນອາດຍາສິດຂອງເຮົານີ້ຕັດຄໍ ມະໂຫສົດເສຍຢ່າໄວ້ເລີຍ " ຕັດແລ້ວ ກໍມອບພະຂັນອາດຍາສິດນັ້ນໃຫ້ອາຈານເສນະກະ ອາຈານເສນະກະ ທູນຊ້ຳອີກວ່າ " ພະອົງບໍ່ຕ້ອງວິຕົກ ບໍ່ຕ້ອງຢ້ານ ຂ້າພະບາດ ຂໍຮັບອາສາຈັດການເອງ " ກາບທູນດັ່ງ ນີ້ແລ້ວ ກໍພາອາຈານທັງສາມກາບຖວາຍບັງຄົມລາອອກມາຈາກພະລາຊະວັງ ເວລາພວມເດີນມາ ກໍລົມກັນຊິບໆ ຊາບໆດ້ວຍຄວາມດີ ໃຈວ່າ: ເທື່ອນີ້ລະ ! ເຮົາຈະໄດ້ເບິ່ງໜ້າສັດຕູຂອງເຮົາ" ຄັນອອກມາພົ້ນຝັກຕູ ກໍຊວນກັນໄປນັ່ງລົມກັນຢູ່ເທິງຫລັງກະໂຫລ່ງຮ້າງໜ່ວຍນັ້ນ ໃນຂະນະທີ່ລົມກັນໄປລົມກັນມາ ເສນະກະ ຈຶ່ງຖາມພວກ ທັງສາມຄົນວ່າ " ເອີ ! ນີ້ ! ພວກທ່ານທັງສາມ... ມື້ອື່ນເຊົ້າ ນີ້ໃຜຈະສາມາດລົງມືຂ້າ ມະໂຫສົດໄດ້ແດ່ ?

" ໂອ໊ຍ ! ຂໍເຊີນອາຈານເອງເລີຍ ພວກຂ້າເຈົ້າ ບໍ່ກ້າຫານຊານໄຊດີ ອາຈານດອກ ຂໍເຊີນອາຈານຟັນເອງໂລດ" ອາຈານທັງສາມ ບອກປະຕິເສດ-" ເອີ ! ເມື່ອບໍ່ມີຜູ້ໃດກ້າແລ້ວ ເຮົາຂໍ ຮັບພາລະເອງ " ເສນະກະຮັບອາສາ ແລ້ວກໍເວົ້າຕໍ່ໄປວ່າ " ເລື່ອງ

ຈັດການກັບມະໂຫສົດ ບໍ່ຕ້ອງເປັນຫ່ວງ ແຕ່ວ່າດຽວນີ້ ເວລາກໍ ຍັງມີຫລາຍຢູ່ ເຮົາມາລົມກັນຫລິ້ນສາກ່ອນຄືວ່າ ເລື່ອງທີ່ພວກທ່ານ ທັງສາມ ໄດ້ກາບທູນພະລາຊາມາແລ້ວໃນວັນນີ້ ຄືຜູ້ໜຶ່ງວ່າ " ຄວາມລັບແມ່ນບອກໃຫ້ນ້ອງຊາຍຮູ້ ຜູ້ໜຶ່ງວ່າ ຄວາມລັບຄວນບອກ ໃຫ້ແມ່ຮູ້ ຜູ້ໜຶ່ງວ່າຄວນບອກໃຫ້ລູກຊາຍຮູ້ນໍາ ແມ່ນພວກທ່ານໄດ້ເຄີຍບອກໄດ້ເຄີຍບອກ ໄດ້ເຄີຍຮັດມາດ້ວຍຕົນເອງແທ້ບໍ ? ຫລືວ່າໄດ້ ຍິນແຕ່ເພິ່ນວ່າ ຊື່ໆ "

" ໄດ້ຮັດມາດ້ວຍຕົນເອງແທ້ລະ ! ທ່ານອາຈານ "ພວກທັງສາມຕອບຮັບຮອງ " ສ່ວນທ່ານອາຈານເດ ? ອາຈານບອກ ວ່າຄວາມລັບຄວນບອກແກ່ສະຫາຍນັ້ນ ທ່ານອາຈານເຄີຍໄດ້ຮັດ ມາເອງບໍ ? " " ພວກທັງສາມ ຖາມຄືນ: "ໄດ້ຮັດເອງແທ້ຈິງເລີຍ" ເສນະກະຕອບ-" ອາຈານລົງມືຮັດເອງແມ່ນຮັດເລື່ອງໃດ ? ຂໍເຊີນທ່ານອາຈານເລົ່າໃຫ້ພວກຂ້າເຈົ້າຟັງແດ່ ?

" ເລື່ອງຂອງຂ້າເຈົ້າ ນີ້ຖ້າເວົ້າໄປໄດ້ຍິນເຖິງ ພະກັນ ຂອງພະລາຊາແລ້ວ ເຮົາຕ້ອງຕາຍຄັກໆ ມັນບໍ່ແມ່ນຂອງເວົ້າຫລິ້ນ !" ບໍ່ຕ້ອງວິຕົກດອກອາຈານຢູ່ທີ່ນີ້ມີແຕ່ພວກເຮົາທັງໝົດບໍ່ມີຜູ້ໃດດອກຈະໄປເຜີຍຄວາມລັບຂອງອາຈານເອົາ ! ເຊີນເວົ້າໂລດທ່ານອາຈານໄດ້ຮັດແນວໃດ ? ພວກສາມຄົນຫນ່ຽວວອນເພາະຢາກຟັງ ເລື່ອງ

ຂອງເສນະກະທີ່ຈົ່ງອາຈານ ເສນະກະກໍເປັນຄົນສະຫລາດຢູ່ແດ່ ຄື
ກົນລາວໄດ້ເອົານິ້ວກະໂຫລ່ງບ່ອນນັ່ງຢູ່ນັ້ນສອງສາມບາດແລ້ວເວົ້າ
ຂຶ້ນວ່າ " ບໍ່ລອນວ່າມະໂຫສົດມານອນລີ້ຟັງຢູ່ໃນກະໂຫລ່ງນີ້ບໍ່ຫະ?-
" ເຮີຍ ! ເວລານີ້ມະໂຫສົດພວມນົວເນົາຫລົງໄຫລຢູ່ນຳຍົດສົກ ທີ່
ໄດ້ຮັບພະລາຊະທານຄົງບໍ່ມານອນເກືອກຂີ້ຝຸ່ນຢູ່ໃນບ່ອນຈົ່ງຊີ້ ດອກ
ປານນີ້ຄົງອອນຊອນຢອກເນຍຫລິ້ນຢູ່ບໍ່ຮູ້ ເຊີນອາຈານເວົ້າໄປໂລດ"
ອາຈານທັງສາມບອກຄວາມເຫັນແລ້ວ ເສນະກະກໍເລົ່າເລື່ອງ ຂອງ
ຕົນໃຫ້ໝູ່ຟັງວ່າ: ພວກເຈົ້າຮູ້ຈັກສາວໂສເພນີນາງນັ້ນບໍ ?" ເສ
ນະກະຖາມພວກໝູ່- " ຮູ້ ! ອາຈານເປັນຫຍັງຊິບໍ່ຮູ້ແຕ່ກ່ອນພວກ
ເຮົາຍັງເຄີຍໄປຫາຢູ່ " ອາຈານທັງສາມບອກ : " ເອີດຽວນີ້ໄດ້
ເຫັນມັນອີກບໍ ມັນໄປຢູ່ໃສແລ້ວ ! ເສນະກະຖາມຄືນ- ບໍ່ເຫັນເລີຍ
ອາຈານບໍ່ເຫັນເຫີງແລ້ວ ບໍ່ຈັກວ່າມັນໄປຢູ່ໃສ ? " ອາຈານ ທັງ
ສາມຕອບ.

" ນັ້ນ ! ນັ້ນ ! ພວກເຈົ້າຍັງບໍ່ຮູ້ " ເສນະກະວ່າແລ້ວເວົ້າ
ຕໍ່ໄປວ່າ " ມັນຕາຍແລ້ວ ຕາຍຍ້ອນມືເຮົານີ້ແຫລະ ຄືວ່າເລື່ອງມັນ
ເປັນຈັ່ງຊີ້ ຈະເວົ້າໃຫ້ຟັງ ຄືໃນຄືນໜຶ່ງເຮົາໄດ້ພາເອົາໂສ ເພນີ
ນາງນັ້ນອອກໄປຫລັບນອນນຳ ຢູ່ສວນປ່າໄມ້ຮັງ ນອກພະນະຄອນມິຖິ
ລານີ້ເອງ ພໍເສັດຣະບຽບຮ້ອຍແລ້ວ ເຮົາໄດ້ເຫັນສາຍສ້ອຍຂອງນາງ

ເປັນຂອງບູຮານ ມີລາຄາແພງຫລາຍ ທັງເປັນຂອງຫາຍາກເຮົາຄິດ ຢາກໄດ້ໄວ້ເປັນສົມບັດ ຈຶ່ງໄດ້ຂ້ານາງໂສເພນີຄົນນັ້ນເສຍ ເອົາ ເຄື່ອງເອ້ຂອງນາງໃສ່ຫໍ່ຜ້າມາເຊື່ອງໄວ້ທີ່ເຕົ້າໄມ້ນາຄະທັນ (ເຕົ້າ ໄມ້ເຮັດເປັນຮູບແຂ້ວນາກ) ຢູ່ໃນເຮືອນຂອງເຮົາເອງ ດຽວນີ້ ກໍ ຍັງຢູ່ຫັ້ນຍັງບໍ່ກ້າເອົາອອກຈຳໜ່າຍ ເລື່ອງນີ້ເຮົາບໍ່ໄດ້ບອກໃຜເລີຍ ບອກແຕ່ສ່ຽວຄົນໜຶ່ງທີ່ຮັກແພງກັນທີ່ສຸດທີ່ນັ້ນ "

ເມື່ອເສນະກະ ເພີຍຄວາມລັບຂອງຕົນໃຫ້ໝູ່ຟັງດັ່ງນີ້ແລະ ໂຫສິດ ຊຶ່ງລີ້ຢູ່ໃນກະໂຫລ່ງນັ້ນ ກໍໄດ້ຍິນຕະຫລອດແລ້ວ ເສນະກະຈຶ່ງ ຖາມ ອາຈານປະກຸຕະວ່າ:

" ນີ້ ! ທ່ານ ປະກຸຕະ ! ທ່ານໄດ້ຟັງຄວາມລັບເຮົາ ແລ້ວ ສ່ວນທ່ານລະ ? ທ່ານມີຄວາມລັບຢ່າງໃດຫລືບໍ ?" " ມີ! ທ່ານ ອາຈານຂ້າເຈົ້າມີຄວາມລັບຄືກັນ ຈະເວົ້າໃຫ້ຟັງ " ອາຈານປະ ກຸ ຕະບອກແລ້ວ ກໍເວົ້າຕໍ່ໄປວ່າ " ຂ້າເຈົ້າເປັນພະຍາດຂີ້ເຮືອນ ຢູ່ ບ່ອນກົກຂາອ່ອນມາເຖິງແລ້ວ ແລະ ເລື່ອງນີ້ຂ້າເຈົ້າໃຫ້ຮູ້ແຕ່ ແຕ່ ນ້ອງຊາຍຂອງຂ້າເຈົ້າ ຄົນດຽວທີ່ນັ້ນ ທຸກໆເຊົ້າມາ ຂ້າເຈົ້າ ໃຫ້ ນ້ອງຊາຍຕົ້ມນ້ຳມາລ້າງບາດແຜຂີ້ເຮືອນນັ້ນ ທາຢາແລ້ວເອົາ ຜ້າ ອ່ອນໆພັນທັບໄວ້ ຈຶ່ງນຸ່ງຜ້າໃຫມປົກ ເວລາຂ້າເຈົ້າເຂົ້າເຝົ້າພະເຈົ້າ ແຜ່ນດິນ ລາງເທື່ອພະອົງຮຽກຂ້າເຈົ້າ ເຂົ້າໄປໃກ້ໆແລ້ວກໍຍັບ ທີມ

ເອົາພະສຽນຫມູນຂາຂອງຂ້າເຈົ້າ ສະເຫມີ ເພາະພະອົງຊົງ ຮັບ
ສັ່ງວ່າ ຂາຂອງຂ້າພະເຈົ້າອ່ອນດີ ທີ່ແທ້ແມ່ນອ່ອນຍ້ອນຜ້າພັນ ຂໍ້
ເຮື່ອນນີ້ແຫລະ ຄວາມລັບຂອງຂ້າເຈົ້າ ແລະ ຖ້າຄວາມລັບນີ້ ຊອດ
ເຖິງພະກັນຂອງພະລາຊາແລ້ວ ຂ້າເຈົ້າ ກໍຕາຍຄືກັນ ບໍ່ແມ່ນແຕ່ອາ
ຈານດອກ " ເມື່ອປະກຸຕະ ເວົ້າສຸດລົງ ອາຈານ ເສນະກະ ຈຶ່ງ
ຖາມອາຈານ ກາມິນວ່າ " ທ່ານ ກາມິນເດ ! ມີຄວາມລັບ ຢ່າງ
ໃດ ລອງວ່າມາໃຫ້ຟັງດູ !

ອາຈານ ກາມິນບອກວ່າ " ຂ້າເຈົ້າ ມີຄວາມລັບຢູ່ຢ່າງ ຫນຶ່ງ
ຄື ຂ້າເຈົ້າເປັນບ້າຜີສິງໃນມື້ວັນສິນດັບທຸກໆວັນສິນ ຜີຕົວນັ້ນມີຊື່ວ່າ
ວານະລະເທວະ ເມື່ອມັນເຂົ້າສິງຂ້າເຈົ້າ ກໍຮ້ອງວ້ອກໆຄືກັນ ກັບ
ສຽງຫມາວໍ້ ຖ້າມີຄົນໄດ້ເຫັນ ແລະ ໄດ້ຍິນແລ້ວ ກໍເປັນຕາ ຫນ້າ
ອາຍທີ່ສຸດ ເລື່ອງນີ້ຂ້າເຈົ້າໃຫ້ຮູ້ແຕ່ລູກຊາຍຂອງຂ້າເຈົ້າຄົນດຽວເວ
ລາໃດພໍຮູ້ວ່າຜີເຂົ້າສິງຂ້າເຈົ້າແລ້ວ ລູກຊາຍຂອງຂ້າເຈົ້າ ກໍຈັບຂ້າ
ເຈົ້າຍັດເຂົ້າໄວ້ໃນສ້ວມ ອັດພັກຕູໃຫ້ດີ ແລ້ວເອົາກໍເສບດີນຕີຂຶ້ນໃຫ້
ມີສຽງຟົດສະນັ່ນ ເພື່ອລົບສຽງຫອນຂອງຂ້າເຈົ້າ ບໍ່ໃຫ້ຜູ້ໃດຮູ້ວ່າຂ້າ
ເຈົ້າ ເປັນບ້າຜີສິງເລີຍ ! ຄວາມລັບຂອງຂ້າເຈົ້າ ມີດັ່ງນີ້ " ປະ
ຫລາດ ! ເສນະກະວ່າແລ້ວກໍຖາມທ່ານ ເທວິນຕໍ່ໄປ, ທ່ານເທວິນ
ໄດ້ຖະແຫລງວ່າ " ຂ້າເຈົ້າ ມີຄວາມລັບຢູ່ຢ່າງຫນຶ່ງ ຄືວ່າຂ້າເຈົ້າ

ມີແກ້ວວິເສດຢູ່ໜ່ວຍໜຶ່ງ ຊື່ວ່າ ແກ້ວສິລິປະເວສະນະມຸງຄຸນ ແກ້ວໜ່ວຍນີ້ ເດີມເປັນສົມບັດຂອງພະເຈົ້າ ວິເທຫະລາດ ອົງເປັນ ປູ່ຂອງພະເຈົ້າມະຫາຊີວິດເຮົາດຽວນີ້ ຂ້າເຈົ້າ ລັກເອົາມາໄວ້ ເປັນສົມບັດຂອງຕົນເອງ ເວລາໃດຂ້າເຈົ້າ ເຂົ້າໄປເຝົ້າພະເຈົ້າ ມະຫາຊີວິດ ໄດ້ຖືເອົາແກ້ວໜ່ວຍນີ້ ເຊື່ອງໄປນຳ ພະເຈົ້າມະຫາຊີວິດຕ້ອງຕັດປາໃສນຳຂ້າເຈົ້າ ກ່ອນຄົນອື່ນໆ ແລະ ກໍພະລາຊະທານຊັບແກ່ຂ້າເຈົ້າ ເທື່ອລະແປດຕຳລຶງກໍມີສິບຫົກຕຳລຶງ ກໍມີ ສາມສິບສອງຕຳລຶງ ກໍມີຍ້ອນອານຸພາບຂອງແກ້ວໜ່ວຍນັ້ນ ແລະ ຄວາມລັບອັນນີ້ຂ້າເຈົ້າ ບອກໃຫ້ຮູ້ແຕ່ ມາດາຂອງຂ້າເຈົ້າທ່ານັ້ນ"

" ເອີ ! ເປັນອັນວ່າພວກເຮົາທັງສີ່ຄົນ ໄດ້ເຜີຍຄວາມ ລັບຂອງໂຕເອງໃຫ້ກັນຟັງແລ້ວ ແລະ ກໍມີແຕ່ພວກເຮົາສີ່ຄົນທໍ່ນີ້ຄວນໄວ້ວາງໃຈກັນໄດ້ ເພາະພວກເຮົາເປັນເພື່ອນກັນຢ່າງແທ້ຈິງເສນະກະມ້ວນທ້າຍຊ້ຳຍັງເວົ້າຕໍ່ໄປອີກວ່າ ແຕ່ວ່າມື້ອື່ນເຊົ້າ ແຕ່ເຊົ້າຢ່າ ລືມເປັນອັນຂາດຈື່ງມາພ້ອມກັນຢູ່ບ່ອນ ລັດຂ້າ ມະໂຫສົດ ແຕ່ເຊົ້າ ຢ່າລືມ " ເມື່ອອາຈານທັງສີ່ ໄດ້ນັດແນະກັນເປັນທີ່ເຂົ້າໃຈກັນດີ ແລ້ວກໍແຍກກັນກັບເມືອເຮືອນໃຜມັນ ຄັນອາຈານທັງສີ່ ໜີໄປແລ້ວ ພວກບ່າວຂອງມະໂຫສົດກໍອອກມາຈາກບ່ອນລີ້ ມາຮັບເອົາມະໂຫສົດ ກັບເມືອເຮືອນອາບນ້ຳ ລ້າງສ່ວນຕົນຕົວໃຫ້ສະອາດ ແລະ ຮັບປະທານ

ອາຫານຮຽບຮ້ອຍແລ້ວ ກໍອອກໄປນັ່ງນິດໆ ພິຈາລະນາຣຶນຕອງເຫັນ ວ່າ " ໃນຄືນວັນນີ້ ພະນາງເຈົ້າອຸທຸມພອນເທວີ ຄົງຈະສົ່ງ ຂ່າວ ຢ່າງໃດຢ່າງໜຶ່ງອອກມາເປັນແນ່ " ຄິດດັ່ງນີ້ແລ້ວ ກໍບອກກັບ ຄົນ ສະໜິດຂອງຕົນ ຄົນໜຶ່ງໃຫ້ຄອຍຢູ່ຜັກຕູບ້ານບອກວ່າ " ໃນຄືນ ນີ້ ຖ້າມີຜູ້ໃດຜູ້ໜຶ່ງ ອອກມາຈາກໃນວັງ ໃຫ້ພາເຂົ້າໄປຫາທັນທີ" ຄັນ ສັ່ງແລ້ວ ກໍເຂົ້າຫ້ອງນອນ ຄອຍຟັງເຫດການຕໍ່ໄປ.

ໃນຄືນນັ້ນ ສົມເດັດພະເຈົ້າ ວິເທຫະລາດ ເມື່ອສະເດັດ ເຂົ້າ ຫ້ອງບັນທົມ ລົ້ມພະກາຍລົງເໜືອຕຽງນອນ ແລ້ວກໍຊົງຄິດທົບ ທວນ ເຫດການໃນຕອນກາງເວັນ ຊຶ່ງພະອົງໄດ້ມີພະລາຊະອາຄຍາສັ່ງໄປ ແລ້ວ ຄັນຊົງຄິດທົບຄວນໄປມາ ກໍໄດ້ສະຕິ ພິຈາລະນາເຫັນວ່າ"ໂອ່ ! ມະໂຫສົດນີ້ ເປັນຜູ້ມີອຸປະກາລະຄຸນແກ່ເຮົາຫລາຍທີ່ສຸດນັບຕັ້ງແຕ່ ອາຍຸໄດ້ 7 ປີ ມາຈົນເຖິງດຽວນີ້ ບໍ່ເຫັນວ່າ ມະໂຫສົດເຮັດຜິດ ຂໍ້ ໃດຂໍ້ໜຶ່ງເລີຍ ມີແຕ່ຊ່ອຍເຫລືອເຮົາ ທຳປະໂຫຍດໃຫ້ເຮົາຄາວເທ ວະດາ ຖາມປັນຫາ ຖ້າບໍ່ໄດ້ ມະໂຫສົດແລ້ວ ເຮົາກໍຈະບໍ່ມີຊີວິດ ຢູ່ ມາໄດ້ເຖິງປານນີ້ ; ອື້ ! ເຮົາເອງກໍໄດ້ຮູ້ ມາແຕ່ຕົ້ນແລ້ວ ວ່າ ພວກອາຈານທັງ ສີ່ຄົນ ເປັນສັດຕູກັບ ມະໂຫສົດ ຄອຍຖ້າຫາຄວາມ ໃສ່ ມະໂຫສົດເປັນຫຍັງ ເຮົາຈຶ່ງມາຫລົງເຊື່ອພວກສີ່ຄົນ ມອບ ພະ ຂັນໃຫ້ໄປຂ້າ ມະໂຫສົດ ໂອ ! ເຮົານີ້ເຮັດຜິດແລ້ວ ບໍ່ຄວນ ເລີຍ

ທີ່ເຮົາສັ່ງຈັ່ງຊັ້ນ ໂອຍ ! ມະໂຫສົດ ລູກພໍ່ ຕັ້ງແຕ່ນີ້ຕໍ່ໄປ ພໍ່ຈະ ບໍ່ ໄດ້ເຫັນໜ້າເຈົ້າອີກແລ້ວ " ສົມເດັດພະເຈົ້າ ວິເທຫະລາດ ຄິດ ເຫັນຄວາມຜິດຂອງຕົນ ແລະ ຄິດເຖິງຄຳສັ່ງທີ່ໄດ້ສັ່ງໄປແລ້ວ ກໍສະ ດຸ້ງພະໄທ ຊົງພະໂສກອາດູນ ເປັນອັນມາກຈົນເຫື່ອໄຫລ ບໍ່ສາມາດ ຈະບັນທົມໃຫ້ຫລັບໄດ້ ພິກຂວໍ້ ພິຫວາຍ ຮົນຢູ່ ພະນາງເຈົ້າ ອຸທູມ ພອນລາຊະເທວີ ທີ່ບັນທົມຢູ່ຄຽງຂ້າງ ໄດ້ເຫັນພະອາການຂອງ ພະ ລາຊະສາມີ ຜິດປົກກະຕິຫລາຍ ພະນາງມີຄວາມປະຫລາດພະໄທຈຶ່ງ ທູນຖາມວ່າ " ທູນຂະໜ່ອມ ຂອງນ້ອງ ເປັນຫຍັງຂະໜ່ອມ ຈຶ່ງ ເປັນໝຸດໝິດກະວົນກະວາຍ ພະອົງບໍ່ສະບາຍດ້ວຍເລື່ອງອັນໃດຂະ ໜ່ອມ ເຫັນນ້ອງເຮັດຜິດແນວໃດ ?" " ນ້ອງບໍ່ໄດ້ເຮັດຜິດ ແນວ ໃດດອກ ! " ພະລາຊາຕັດ ອື້ ! ແຕ່ວ່າອ້າຍບໍ່ສະບາຍໃຈ ນອນ ບໍ່ຫລັບ ກົນຫວນວົນວາຍຢູ່ດຽວນີ້ ຍ້ອນເລື່ອງ ມະໂຫສົດຕ່າງຫາກ" ມະໂຫສົດ ເຮັດຜິດພະໄທ ທູນຂະໜ່ອມແນວໃດຂ້ານ້ອຍ?"

ພະລາຊາຕັດບອກວ່າ " ດຽວນີ້ ພວກອາຈານສີ່ຄົນມັນມາບອກ ວ່າ ມະໂຫສົດ ເປັນກະບົດ ຈະຊິງເອົາລາຊະສົມບັດ ອ້າຍບໍ່ທັນໄດ້ ພິຈາລະນາຄັກແນ່ ກໍຫລົງເຊື່ອ ເລີຍສັ່ງພວກອາຈານສີ່ຄົນນັ້ນໃຫ້ຂ້າ ມະໂຫສົດເສຍໃນເວລາຮຸ່ງເຊົ້າຈະມານີ້ ເມື່ອອ້າຍໄດ້ລັ່ນວາຈາສັ່ງ ໄປແລ້ວ ຈຶ່ງມາຄິດເຫັນບຸນຄຸນຂອງ ມະໂຫສົດ ຄິດເຫັນຄວາມ ດີ

ຂອງມະໂຫສົດ ທີ່ມີຕໍ່ອ້າຍ ແລະ ປະເທດຊາດບ້ານເມືອງ ມັນເປັນແນວນີ້ກໍ່ແຫນງວ່າ ໃຫ້ອ້າຍຕາຍເສັຍດີກວ່າ ທີ່ມະໂຫສົດຈະຖືກ ຂ້າຕາຍ ອ້າຍສົງສານ ເຫລືອຕົນມະໂຫສົດເຕັມທີ.

ສົມເດັດພະນາງເຈົ້າ ອຸທຸມພອນໄດ້ຟັງພະລາຊະສາມີບອກ ກໍ່ສະດຸ້ງພະໄທຕົກໃຈຫວາມພ້ອມກັບຄວາມໂສກແຫນ້ນຕຶບຂຶ້ນໃນໃຈ ພໍປານກ້ອນຫີນໃຫຍ່ກິ້ງມາເຕັງຫນ້າເອິກ ແຕ່ທີ່ວ່າ ນາງເປັນຄົນ ສະຫລາດ ມີນ້ຳໃຈຫນັກແຫນ້ນ ສະຕິວ່ອງໄວຈຶ່ງສະແດງ ກິລິຍາ ໃຫ້ເປັນປົກກະຕິ ເຮັດຄືກັບວ່າ ບໍ່ເສັຍໃຈກາບທູນວ່າ " ມະໂຫສົດຄົນນີ້ພະອົງໄດ້ອຸປະຖຳຄ້ຳຊູມາພໍແຮງແລ້ວ ຈົນຊົ່ວແຕ່ງຕັ້ງໃຫ້ເປັນເຖິງເສນາບໍດີ ມັນຄວນບໍ ຈຶ່ງມາເປັນຂະບົດຕໍ່ພະອົງ ? ຂຶ້ນຊື່ວ່າກະ ບົດແລ້ວ ມັນບໍ່ດີດອກ ການທີ່ພະອົງມີຣັບສັ່ງໃຫ້ຂ້າຖິ້ມນັ້ນ ເປັນການສົມຄວນແລ້ວທູນກະມ່ອມ ບໍ່ຕ້ອງເສັຍດາຍ ແລະ ບໍ່ຕ້ອງເສັຍໃຈ ເຊີນບັນທົມໃຫ້ຫລັບຕາມສະບາຍ " ພະນາງອຸທຸມພອນເລົ່າໂລມ ພະສາມີໃຫ້ສະບາຍ ພະໄທເບົາບາງຈາກຄວາມອຸກອັ່ງເສົ້າໂສກດັ່ງນີ້ແລ້ວ ພະເຈົ້າ ວິເທຫະລາດ ກໍ່ບັນທົມມ້ອຍຫລັບໄປ.

ເມື່ອພະເຈົ້າ ວິເທຫະລາດບັນທົມຫລັບແລ້ວ ພະນາງເຈົ້າກໍ່ສະເດັດອອກມາຈາກຫ້ອງບັນທົມຂຽນຈົດຫມາຍ ສະບັບຫນຶ່ງຢ່າງຟ້າວໆ ມີໃຈຄວາມວ່າ " ນ້ອງມະໂຫສົດ ດຽວນີ້ພວກອາຈານສີ່ຄົນທູນຍຸແຍ່

ພະກະສັດວ່າ ເຈົ້າເປັນກະບົດ ຈະຊິງເອົາລາຊະສົມບັດບໍ່ມີ ຄວາມ ຊື່ສັດກະຕັນຍູ ພະເຈົ້າມະຫາຊີວິດບໍ່ທັນພິຈາລະນາສືບສວນອີ່ສັງ ໄດ້ ສັ່ງພວກສີ່ຄົນ ຄອຍຖ້າຂ້າເຈົ້າຢູ່ພັກຕູ ລາຊະວັງໃນເວລາຮຸ່ງເຊົ້ານີ້ ສະນັ້ນມື້ອື່ນເຊົ້າ ເຈົ້າຢ່າເຂົ້າມາໃນພະລາຊະວັງເລີຍຖ້າຢາກເຂົ້າ ມາກໍ່ຈົ່ງລະວັງຕົວ ຍຶດອຳນາດເອົາພະນະຄອນມິຖິລາ ນີ້ໄວ້ໃນ ກຳ ມືເສຍກ່ອນຈຶ່ງເຂົ້າມາ " ເມື່ອຂຽນແລ້ວ ກໍພັບຈົດໝາຍນັ້ນ ສອດ ເຂົ້າໃສ່ໄວ້ໃນມັດເຂົ້າຕົ້ມ ເອົາມັດເຂົ້າຕົ້ມໃສ່ລົງໃນພາຊະນະ ອັດ ຝາຕີຕາປະທັບມອບໃຫ້ສາວໃຊ້ຜູ້ທີ່ໄວ້ໃຈໄດ້ນຳເອົາອອກໄປໃຫ້ ມະ ໂຫສົດ ໃນທັນໃດນັ້ນເອງ ໂດຍທີ່ນາຍສັກຕູບໍ່ສາມາດຈະຂັດ ຂວາງ ໄດ້ ເພາະໄດ້ຮັບອະນຸຍາດພິເສດໄວ້ແລ້ວ ພໍນາງສາວໃຊ້ໄປ ເຖິງ ປັກຕູບ້ານ ຄົນຍາມທີ່ຄອຍຮັກສາເຫດການ ກໍພາສາວໃຊ້ຄົນນັ້ນເຂົ້າ ໄປຫາມະໂຫສົດ ມະໂຫສົດກໍຮັບເອົາຫໍ່ເຂົ້າຕົ້ມແລ້ວກໍບອກສາວ ໃຊ້ ໃຫ້ກັບຄືນໄປບອກພະນາງອຸທຸມພອນວ່າ ໄດ້ຮັບແລ້ວມະໂຫສົດແກ້ ຫໍ່ ເຂົ້າຕົ້ມອອກ ໄດ້ເຫັນຈົດໝາຍຢູ່ໃນນັ້ນ ອ່ານຈາບຂໍ້ຄວາມທຸກ ປະ ການແລ້ວ ກໍຟ້າວຈັດການທຸກຢ່າງໃຫ້ແລ້ວເສັດ ໃນກາງຄືນນັ້ນເອງ (ການທີ່ຈັດນັ້ນ ກໍເຫັນຈະແມ່ນ ທຳການຍຶດພະນະຄອນເອົາທະຫານ ຂອງຕົນເຂົ້າລ້ອມໄວ້) ເສັດແລ້ວ ມະໂຫສົດກໍເຂົ້ານອນ.

ໃນວັນນັ້ນ ອາຈານທັງ 4 ຄົນຕື່ນແຕ່ເດິກແລ້ວ ກໍພາກັນ ເຂົ້າ

ໄປດົກຢູ່ພັກຕູພະລາຊະວັງແຕ່ເຊົ້າມືດ ຖືພະຂັນອາຄຍາສິດເວືອດໄວ້ ຄອຍຖ້າພົບມະໂຫສົດ ແຕ່ຄອຍຢູ່ຈົນສວາຍ ກໍບໍ່ເຫັນມະໂຫສົດ ມາ ເຫັນຜິດເວລາແລ້ວ ຈຶ່ງພາກັນເຂົ້າໄປເຝົ້າພະລາຊາ ສົມເດັດ ພະ ເຈົ້າ ວິເທຫະລາດ ໄດ້ຕັດຖາມ " ພວກທ່ານຈັດການ ອ້ານະໂຫສົດ ແລ້ວບໍ ?"

ພວກອາຈານທັງ ສີ່ ກາບທູນ " ຂໍພະລາຊະທານອະໄພໂທດ ! ພວກຂ້າພະບາດຄອຍຢູ່ເຫິງນານ ກໍບໍ່ເຫັນມະໂຫສົດມາ !" ໃນຂະ ນະທີ່ພວກອາຈານທັງ ສີ່ ກຳລັງເຝົ້າແຫນພະລາຊາຢູ່ນັ້ນເອງມະໂຫ ສົດ ບັນດິດຈຶ່ງໄດ້ຕຽມການທຸກຢ່າງໄວ້ຮຽບຮ້ອຍແຕ່ໃນກາງຄືນແລ້ວ ກໍຍົກກະບວນທັບອັນມີ ຊາວພະນະຄອນທັງຫມົດເຂົ້າຮ່ວມມືນຳ ເຂົ້າ ມາສູ່ພະລາຊະວັງ.

ຝ່າຍສົມເດັດພະເຈົ້າ ວິເທຫະລາດ ໄດ້ຍິນສຽງຄົນໂຫ່ຮ້ອງດັງ ອຶກກະທຶກ ຈຶ່ງສະເດັດລຸກຂຶ້ນທອດພະເນດອອກໄປທາງປ່ອງຢ້ຽມໄດ້ ເຫັນກະບວນປະຊາຊົນ ຊາວພະນະຄອນແຫ່ລ້ອມເຂົ້າມາໃນ ພະລາ ຊະວັງ ກໍຕົກພະໄທ ຄັນທອດພະເນດໄປມາ ກໍໄດ້ເຫັນມະໂຫສົດ ຜູ້ ເປັນຫົວຫນ້າ ກະບວນການກ້າວລົງຈາກລົດຢືນຖວາຍບັງຄົມຢູ່ແຕ່ໄກ ຈຶ່ງຕັ້ງສະຕິໄດ້ ດຳລິໃນພະໄທວ່າ ອໍ້ ! ມະໂຫສົດຄົງບໍ່ເປັນກະບົດ ຕໍ່ເຮົາຕາມທີ່ເຂົາໃຫ້ການເປັນແນ່ ເພາະຖ້າເປັນກະບົດຈິງ ແລ້ວ

ເຂົາຄົງບໍ່ຖວາຍບັງຄົມເຮົາ " ເມື່ອຊົງຄິດໄດ້ດັ່ງນີ້ ຈຶ່ງຕັ້ງສະຕິຕັດ ຮຽກໃຫ້ມະໂຫສົດ ເຂົ້າມາຫາ ມະໂຫສົດໄດ້ຍິນພະລາຊາຮຽກຮ້ອງ ໃຫ້ເຂົ້າໄປ ຈຶ່ງຂຶ້ນໄປເຖິງສ່າສາດຂາບຖວາຍບັງຄົມພະລາຊາແລ້ວ ກໍນັ່ງສະຫງົບອາລົມຢູ່ ທັນໃດນັ້ນພະລາຊາກໍຕັດຖາມວ່າ: " ເອີ ນີ້ ທ່ານມະໂຫສົດ ວານນີ້ ເຈົ້າຫນີຈາກເຮົາໄປຕັ້ງແຕ່ຫົວຄ່ຳຈົນສວາຍ ປານນີ້ຈຶ່ງເຂົ້າມາຫາເຮົາ ພ້ອມດ້ວຍປະຊາຊົນ ເປັນອັນມາກ ເຈົ້າ ມີຄວາມກິນແຫນງແຄງໃຈໃນເຮົາແນວໃດ ?" " ໂດຍທານ ໂທດ " ມະໂຫສົດທູນດ້ວຍກິລິຍາທ່າທາງສະຫງ່າຜ່າເຜີຍ " ແລງ ວານ ນີ້ ພະອົງໄດ້ມອບພະຂັນໃຫ້ອາຈານທັງສີ່ຄົນ ຄິດອ່ານເປັນຄວາມລັບ ໃຫ້ປະຫານຂ້າພະບາດເສຍທີ່ພັກຕູພະລາຊະວັງ ເມື່ອພະອົງສະເດັດ ເຂົ້ານອນ ພະອົງໄດ້ບອກຄວາມລັບນີ້ ແກ່ພະອັກຄະມະເຫສີ ອຸທຸມ ພອນ ຂ້າພະບາດຮູ້ຄວາມລັບນີ້ໂດຍຕະຫລອດ ຈຶ່ງໄດ້ຈັດການ ປ້ອງ ກັນຕົວ ພາເອົາພະບວນປະຊາຊົນຊາວພະນະຄອນເຂົ້າມາດ້ວຍ "

ສົມເດັດພະເຈົ້າວິເທຫະລາດ ໄດ້ຍິນມະໂຫສົດທູນກໍແຄ້ນພະໄທ ຊົງ ພິໂລດໃຫ້ພະມະເຫສີເປັນທີ່ສຸດ ທີ່ໄຂຄວາມລັບໃຫ້ມະໂຫສົດຮູ້ ຈຶ່ງ ງວາກຫນ້າໄປທອດພະເນດ ນາງອຸທຸມພອນດ້ວຍແສງຕາອັນ ແດງ ປານຫມາກເຜັດ ມະໂຫສົດເຫັນດັ່ງນັ້ນ ຈຶ່ງຟາວທູນພະລາຊາຂຶ້ນທັນ ໃດວ່າ " ຂໍພະລາຊະທານ ! ພະອົງຢ່າຟ້າວເສຍພະໄທ ຢ່າຟ້າວ

ພິໂລດໃຫ້ພະລາຊະເຫວີເລີຍ ຂ້າບາດນີ້ເປັນຜູ້ຮູ້ຈັກເຫດ ຮູ້ຈັກ ຜົນ ທັງໃນອະດີດ ອະນາຄົດ ແລະ ປັດຈຸບັນ ໄດ້ເປັນຢ່າງດີ ເລື່ອງ ທີ່ ພະລາຊະເຫວີບອກຄວາມລັບ ພະອົງໃຫ້ຂ້າພະບາດຮູ້ນີ້ ບໍ່ຕ້ອງເວົ້າ ບໍ່ຕ້ອງເອົາມາຄິດໃຫ້ຫຍຸ້ງພະໄທເລີຍ ກໍຄວາມລັບ ຂອງເສນະ ກະ ປະກຸຕະ ກາມິນ ແລະ ເຫວີນທັງສີ່ຄົນນີ້ ແມ່ນໃຜບອກ ຂ້າພະບາດ ຈຶ່ງຮູ້ຂໍ້ບັນຫາ ທີ່ເຫວະດາຖາມພະອົງແຕ່ກ່ອນນັ້ນ ແລະ ບັນຫາອື່ນໆ ທັງຫລາຍແມ່ນໃຜບອກຂ້າພະບາດ ມະໂຫສົດ ທູນດັ່ງນີ້ແລ້ວຈຶ່ງກ່າວ ຕໍ່ໄປວ່າ " ຄວາມລັບຂອງພວກອາຈານສີ່ຄົນນີ້ ຂ້າພະບາດຮູ້ຈັກດີຂໍ ເຊີນພະອົງຈົ່ງສະດັບ ຂ້າພະບາດ ຈະເລົ່າໃຫ້ຟັງ " ເສນະກະ ນີ້ ເປັນຄົນໃຈຂີ້ໂຫດສາມານທີ່ສຸດ ເຂົາໄດ້ກະທຳກຳອັນຊົ່ວຊ້າສາມານ ມາແລ້ວຢ່າງແສນສາຫັດ ມັນບໍ່ສົມຄວນຈະຕັ້ງຕົນເປັນອາຈານ ບອກ ສອນ ອັດທຳແກ່ພະລາຊາເລີຍ ຄືເລື່ອງມີຢູ່ວ່າ ເສນະກະຄົນນີ້ແຫຼະ ໄດ້ພາເອົານາງສາວ ນະຄອນໂສເພນີ ນາງຫນຶ່ງທີ່ຢູ່ໃນພະນະຄອນ ມິຖິລານີ້ເອງ ອອກໄປຫລັບນອນນຳກັນຢູ່ປ່າໄມ້ຮັງ ແລ້ວຂ້ານາງຄົນ ນັ້ນເສຍເກັບເອົາ ເຄື່ອງແຕ່ງຕົວຂອງນາງ ອັນເປັນສ້ອຍສັງ ວານ ບູຮານທີ່ຜ້າຂາວໄປເຊື່ອງໄວ້ທີ່ຕີນໄມ້ແຂວນາກໃນເຮືອນຂອງ ຕົນ ສິ່ງຂອງນັ້ນຍັງຢູ່ເທົ່າດຽວນີ້ ແລ້ວເສນະກະໄດ້ບອກຄວາມລັບ ອັນ ນີ້ໄວ້ນຳສະຫາຍຂອງຕົນທີ່ຮັກແພງກັນ ຖ້າຝ່າພະບາດ ມີຄວາມ ປະ

ສິງຈະຈັບຜູ້ທີ່ເປັນກະບົດ ຫລືເປັນອາຊະຍາກຳ ດາດຕະກອນ ແລ້ວ ອໍເຊີນຈັບ ເສນະກະນີ້ເອງ "

ສົມເດັດພະເຈົ້າ ວິເທຫະລາດ ໄດ້ຊົງສະດັບເລື່ອງ ຈຶ່ງງວາກ ໜ້າມາເບິ່ງເສນະກະ ພ້ອມກັບຕັດຖາມວ່າ " ແມ່ນບໍ່ຫະ ! ເສນະ ກະ ! ຈິງບໍ ?" " ໂດຍທານໂທດ ແມ່ນຂ້ານ້ອຍ" ເສນະກະຮັບ ສາລະພາບ ສົມເດັດພະເຈົ້າ ວິເທຫະລາດ ຈຶ່ງມີພະລາຊະ ໂອງ ການບອກຕຳຫລວດທີ່ຮັກສາການຢູ່ໃນທີ່ນັ້ນ ຈັບມັດເສນະກະແລ້ວໃຫ້ ເອົາໄປຂັງໄວ້ທີ່ຄຸກໃນທັນໃດນັ້ນເອງ ຕໍ່ໄປມະໂຫສົດຈຶ່ງທູນ ເລົ່າ ຄວາມລັບຂອງ ປະກຸຕະ ກາມິນ ແລະ ເທວິນ ໃຫ້ພະລາຊາຟັງວ່າ " ປະກຸຕະນີ້ ເປັນພະຍາດຂີ້ເຮື້ອນຢູ່ກົກຂາອ່ອນ ເປັນຄົນທີ່ ບໍ່ສົມ ຄວນຈະເຂົ້າມາໃນພະລາຊະວັງເລີຍ ອີຕາກາມິນນັ້ນ ກໍເປັນ ບ້າ ຜີສິງ ບໍ່ສົມຄວນຈະມາເປັນຄູພະມະຫາກະສັດ ສ່ວນເທວິນນັ້ນ ກໍ ເປັນຂະໂມຍລັກແກ້ວ ສິລິປະເວສະມະນຸງຄຸນ ອັນເປັນມູນປູ່ ຂອງ ພະອົງ ໄປເປັນສົມບັດຂອງຕົນເອງ " ມະໂຫສົດຖະແຫລງ ຄວາມ ລັບຂອງພວກອາຈານທັງສີ່ ໃຫ້ພະລາຊາຊົງສະດັບ ຢ່າງລະອຽດດັ່ງ ທີ່ໄດ້ກ່າວມາແລ້ວດັ່ງແຕ່ກ່ອນ ພະລາຊາກໍຊົງສືບສວນສອບຖາມ ໄດ້ ຄວາມເປັນຄວາມຈິງທຸກໆຄົນ ຈຶ່ງຕັດບອກໃຫ້ຕຳຫລວດຈັບອາ ຈານ ສາມຄົນນັ້ນ ຂັງໄວ້ດັ່ງດຽວກັນ ຄັນແລ້ວ ມະໂຫສົດຈຶ່ງກາບທູນ ບັນ

ຍາຍປະໂຫຍດແຫ່ງການອຳພັງຄວາມລັບໄວ້ ໃຫ້ພະເຈົ້າ ວິເທ ຫະ ລາດຟັງວ່າ " ຂໍພະລາຊະທານ ! ການອຳພັງຄວາມລັບໄວ້ໄດ້ ມີ ຄຸນປະໂຫຍດເປັນການ ປະເສີດແທ້ ນັກປາດຜູ້ມີປັນຍາຍ່ອມ ອຳພັງ ຄວາມລັບຂອງຕົນໄວ້ ຈົນກວ່າຈະໄດ້ທຳສິ່ງທີ່ຕົນຄິດໄວ້ນັ້ນໃຫ້ ສຳ ເລັດຜົນເສຍກ່ອນ ຖ້າຍັງບໍ່ສຳເລັດ ກໍຍັງບໍ່ເຜີຍຄວາມລັບໄດ້ ການ ເຜີຍຄວາມລັບໃຫ້ຜູ້ອື່ນຮູ້ກ່ອນນັ້ນ ບໍ່ເປັນການດີເລີຍ ແລະ ຂໍໃຫ້ພະ ອົງຈົ່ງເຂົ້າພະໄທໄວ້ວ່າ ບຸກຄົນປະເພດທີ່ບໍ່ຄວນໄວ້ວາງໃຈ ໃຫ້ຮູ້ ຄວາມລັບນຳເລີຍນັ້ນຄື:

1. ສະຕີ ທຳມະດາສະຕີນີ້ ຈະເປັນໃຜກໍຕາມ ຄືຈະເປັນ ແມ່ ເປັນລູກ ຫລື ເປັນນ້ອງກໍຕາມກໍບໍ່ຄວນໃຫ້ຮູ້ຄວາມລັບຂອງຕົນເລີຍ.

2. ບຸກຄົນ ປະເພດທີ່ເປັນສັດຕູກັນ ພວກນີ້ ກໍບໍ່ຄວນ ເຜີຍ ຄວາມລັບໃຫ້ຮູ້ເປັນອັນຂາດ.

3. ບຸກຄົນປະເພດທີ່ມີຄວາມໂລບຫລາຍ ເຫັນແກ່ສິນຈ້າງລາງ ວັນ ເຫັນແກ່ໄດ້ພວກນີ້ ກໍຄວນເວັ້ນຢ່າໄຂຄວາມລັບໃຫ້ຮູ້.

4. ບຸກຄົນປະເພດໃຈໂລເລບໍ່ແນ່ນອນ ເປັນຄົນບໍ່ມີສັດຈະປາກ ເວົ້າຢ່າງໜຶ່ງ ໃຈຄິດໄປອີກຢ່າງໜຶ່ງ ປາກກັບໃຈບໍ່ກົງກັນ ພວກນີ້ ກໍບໍ່ຄວນເຜີຍຄວາມລັບ ຫລືໄວ້ຄວາມລັບນຳໄດ້.

ບຸກຄົນສີ່ ປະເພດທີ່ກ່າວມານີ້ ບໍ່ຄວນໄວ້ວາງໃຈ ໄຂຄວາມລັບ

ໃຫ້ຮູ້ນຳເດັດຂາດ ແຕ່ຖ້າຫາກຈຳເປັນແທ້ ບຸກຄົນຜູ້ທີ່ເປັນນັກ ປາດ ມີປັນຍາ ເມື່ອຈະປຶກສາຫາລືເລື່ອງຄວາມລັບແລ້ວ ກໍຄວນປຶກສາຫາ ລືໄດ້ກັບນັກປາດຄືກັນ ແລະ ການທີ່ຈະປຶກສາກັນນັ້ນ ກໍຄວນຈະ ປຶກ ສາໃນທີ່ແຈ້ງ ໃນທີ່ເປີດເຜີຍ ພໍທີ່ຈະໃຫ້ຄົນອື່ນ ແລເຫັນໄດ້ຢ່າໄປ ປຶກສາໃນທີ່ລັບຕາ ຫລືໃນສະຖານທີ່ມີແນວບັງ ເພາະໃນທີ່ເຊັ່ນ ນັ້ນ ອາດມີຜູ້ໄປລີ້ຊອບຟັງໄດ້ ນິໄສຂອງນັກປາດ ຈະປຶກສາຄວາມ ລັບ ຄວນຈະປຶກສາຢ່າງນີ້ " ເມື່ອມະໂຫສົດ ຊີ້ແຈງການອຳບັງ ຄວາມ ແລະ ການທີ່ຄວນຈະໄຂຄວາມລັບສຸດລົງແລ້ວ ສົມເດັດພະເຈົ້າວິເທ ຫະລາດກໍຊົງພໍພະໄທ ຕັດຊົມ ສັນລະເສີນມະໂຫສົດ ເປັນອັນ ມາກ ແລ້ວຈຶ່ງມີພະລາຊະໂອງການຕັດສິນໃຫ້ພວກຕຳຫລວດຄຸມເອົາ ອາ ຈານທັງສີ່ຄົນນັ້ນໄປລົງ ພະລົງ ພະລາຊະອາຍາ ຂ້ຽນຫລັງຄົນລະ ຮ້ອຍບາດ ຕີໄຂ່ວກັນໃຫ້ເປັນຕາຕະລາງ ແລ້ວນຳເອົາໄປປະຫານຊີ ວິດເສຍ ຕັດເອົາຫົວມາສຽບປະຈານໄວ້ ພວກຕຳຫລວດ ເພັດ ຊະ ຄາດ ກໍຈັດການຕາມພະລາຊະໂອງການ ຈັບມັດອາຈານທັງ ສີ່ ຜູກ ສອກໄພ້ຫລັງ ຂ້ຽນຄົນລະຮ້ອຍບາດແລ້ວ ກໍນຳໄປບ່ອນຈະປະ ຫານ ຊີວິດ ມະໂຫສົດ ເຫັນດັ່ງນັ້ນ ກໍມີຄວາມສົງສານ ຈຶ່ງກາບທູນພະລາ ຊາ ຂໍພະລາຊະທານອະໄພໂທດ ພະອົງກໍຊົງປະທານໃຫ້ຕາມ ຄຳຂໍ ແຕ່ທີ່ວ່າໃຫ້ພວກອາຈານທັງສີ່ນີ້ ເປັນທາດຮັບໃຊ້ຂອງ ມະໂຫສົດນະ

ໂຫສົດ ກໍກາບທູນໄຫວ້ວອນຂໍໃຫ້ພະລາຊາ ໂຜດປະຫານຕົ້ວອາຈານ
ທັງ ສີ່ ຄົນນັ້ນໄວ້ໃນຕຳແຫນ່ງເດີມ ຂໍບໍ່ໃຫ້ເອົາໂທດແຕ່ຢ່າງໃດສົມ
ເດັດພະເຈົ້າ ວິເທຫະລາດ ໄດ້ຊົງຟັງມະໂຫສົດ ກາບທູນດັ່ງນັ້ນຈຶ່ງ
ເຂົ້າພະໄທຄັກແນ່ວ່າ ມະໂຫສົດບໍ່ໄດ້ຄິດກະບົດຕໍ່ຕົນແມ່ນແຕ່ ນ້ອຍ
ຫນຶ່ງເລີຍ ແທ້ທີ່ຈິງແລ້ວຫົວໃຈຂອງ ມະໂຫສົດນັ້ນ ເຕັມປ່ຽມ ໄປ
ດ້ວຍຄວາມເມດຕາ ມີຄວາມອີດູກູນາຕໍ່ບຸກຄົນທຸກໆຄົນ ເຖິງແມ່ນຈະ
ເປັນສັດຕູກໍຕາມ ເບິ່ງແຕ່ອາຈານທັງສີ່ຄົນນີ້ ເປັນສັດຕູຂອງ ມະໂຫ
ສົດ ມີຄວາມອາຄາດຫມາຍຫມາງປອງທຳຮ້າຍ ມະໂຫສົດມາ ແລ້ວ
ນັບເທື່ອບໍ່ໄດ້ ມະໂຫສົດ ກໍຍັງມີຄວາມເມດຕາ ບໍ່ໄດ້ຄຽດແຄ້ນຕອບ
ແທນແຕ່ປະການໃດ ສົມເດັດພະເຈົ້າ ວິເທຫະລາດເຂົ້າພະໄທ ດັ່ງ
ນີ້ ກໍຊົງໄວ້ວາງພະໄທນັບຖື ມະໂຫສົດ ເປັນຢ່າງຍິ່ງ ຊົງໂຜດຜາຍ
ປະທານອິດສະລິຍະຍົດ ມອບອຳນາດການປົກຄອງ ປະເທດ ຊາດ
ບ້ານເມືອງໃຫ້ ມະໂຫສົດ ເປັນຜູ້ເບິ່ງແຍງ ຄວບຄຸມທຸກປະ ການ
ສ່ວນພວກອາຈານທັງ ສີ່ຄົນນັ້ນ ນັບແຕ່ເວລານັ້ນມາ ກໍເປັນຄົນຫມົດ
ລິດ ຫມົດອຳນາດ ແລະ ຫມົດຄວາມພະຍົດຮ້າຍບໍ່ສາມາດ ຈະກໍ
ເລື່ອງອັນໃດຂຶ້ນໄດ້ອີກ ຈຶ່ງພໍປານກັນກັບງູເຫົ່າທີ່ເຂົາຖອນແຂ້ວອອກ
ຫມົດແລ້ວ ສະນັ້ນ.

ສາລະບານ

1. ມະໂຫສົດບັນດິດນັກປາດຜູ້ມີປັນຍາ, ຂໍ້ຄວາມເບື້ອງຕົ້ນ

ໜ້າ - 1

2. ນິທານມະໂຫສົດຜູ້ມີປັນຍາ. ບັ້ນຊີວິດເມື່ອຍັງເຍົາ

ໜ້າ 4

3. ບັນຫາແຫລວຄາບຊີ້ນ -"- 13

4. ບັນຫາຂະໂມຍລັກງົວ -"- 14

5. ບັນຫາເລື່ອງຍິງທຸກຍາກ -"- 16

6. ບັນຫາເລື່ອງກໍ້ຝ້າຍ -"- 19

7. ບັນຫາຍາດລູກກັນ -"- 21

8. ບັນຫາເລື່ອງຍາດເມຍກັນ -"- 24

9. ບັນຫາເລື່ອງລົດ -"- 29

10. ບັນຫາທ່ອນໄມ້ -"- 32

11. ບັນຫາຫົວຜີຫລ້ອນ -"- 34

12. ບັນຫາເລື່ອງງູ -"- 36

13. ບັນຫາເລື່ອງງົວອຸສູພະລາດ -"- 37

14. ບັນຫາແກ້ວມະນີ -"- 38

15. ບັນຫາວົວເຖິກອອກລູກ	-"-	40
16. ບັນຫາຫຸງເຂົ້າ	-"-	43
17. ບັນຫາຝັ້ນເຊືອກ	ໜ້າ	45
18. ບັນຫາສະໂພກຂະລະນີ	-"-	47
19. ບັ້ນມະໂຫສົດ ເຂົ້າຮັບລາຊະການ	-"-	49
20. ບັນຫາເລື່ອງ ແກ້ວຢູ່ປາຍຕານ	-"-	59
21. ບັນຫາເລື່ອງກະປອມກ່າ	-"-	62
22. ເລື່ອງນາງ ອຸທຸມພອນ	-"-	65
23. ບັນຫາເລື່ອງແກ້ບັນຫາ	-"-	71
24. ບັນຫາເລື່ອງຊັບກັຍປັນຍາ	-"-	85
25. ບັ້ນມະໂຫສົດແຕ່ງດອງ	-"-	99
26. ບັ້ນຖືກຕູ່ຫາວ່າເປັນກະບົດຄັ້ງທີ່ໜຶ່ງ	-"-	122
27. ອາຈານທັງສີ່ຕົກຫລຸມລໍ້ນາງອະມະລາ	-"-	130
28. ເທວະດາຖາມບັນຫາ	-"-	140
29. ພະລາຊານຳຊອກຫາມະໂຫສົດ	-"-	146
30. ບັ້ນຖືກຕູ່ຫາວ່າເປັນກະບົດຄັ້ງທີ 2	-"-	161